ເພັດຊະຣາດ

ຜູ້ກອບກູ້ວັດທະນະທຳລາວ



ຊີວະປະຫວັດ ເຈົ້າມະຫາອຸປະຣາດ ເພັດຊະຣາດ

ໂດຍ ມະຫາສິລາ ວີຣະວົງສ໌

ສາລະບານ

ຄຳສະເໜີຂອງສຳນັກພິມ	I
ຄຳນຳ ທ່ານ ສີຊະນະ ສີສານ	III
ຄຳຊີ້ແຈງຂອງຜູ້ຊຳຮະ	IV
ບົດນຳ	
ຊີວະປະຫວັດເຈົ້າເພັດຊະຣາດ	1
ຕົ້ນວົງຕະກູນ	6
ການສຶກສາ	15
ອຸປະນິໄສ	21
ຜາບແຜ້ໜອງແມັກ	25
ຍິງຊ້າງຮ້າຍ	31
ໝູປ່າ ອາລະວາດ	37
ຍິງເມັຍໄດ້ 5 ຕົວ	38
ການເມືອງ ແລະ ການປົກຄອງ	40
ເລື່ອງປະຕິທິນລາວ	46
ເຈົ້າເພັດຊະຣາດ ກັບການກູ້ຊາດ	48
ເຈົ້າເພັດຊະຣາດ ອົບພະຍົບເຂົ້າໄທ	64
ສະເດັດກັບຄືນປະເທດລາວ	70
ບັນທຶກບັນຫາຂໍ້ປີກຍ່ອຍ	84
ບົດມ້ວນທ້າຍ	96
ກ່ຽວກັບຜູ້ຂຽນ	106

ໂດຍ ມະຫາ ສິລາ ວີຣະວົງສ໌

ຄຳສະເໜີ ຂອງສຳນັກພິມ

ໃນປີ 2010 ນີ້ ມີການສະຫຼອງເຫດການສຳຄັນຫຼາຍຢ່າງ ຂອງປະເທດຊາດ ໃນນັ້ນ ຮວມມີການສະຫຼອງນະຄອນຫຼວງວຽງຈັນ ຄົບຮອບ 450 ປີນຳ. ພວກເຮົາມີຄວາມພາກພູມໃຈ ຈັດພິມຊີວະປະຫວັດຂອງບຸກຄົນຜູ້ໜຶ່ງ ເຊິ່ງເຄີຍສ້າງວິລະກຳ ໄວ້ໃຫ້ແກ່ລູກຫຼານລາວ ເມື່ອ 60-70 ປີກ່ອນ ສະໄໝປະເທດຊາດ ເປັນຫົວເມືອງຂຶ້ນຂອງຝຣັ່ງ. ບຸກຄົນຜູ້ນັ້ນກໍຄື ເຈົ້າເພັດຊະຣາດ ຣັດຕະນະວົງສາ ເຊິ່ງເປັນເຊື້ອສາຍເຈົ້າ ເປັນພະເຊດຖາ(ພໍ່ຕຮອກັບ)ຂອງເຈົ້າສຸພານຸວົງ ຫຼື ເຈົ້າຊາຍແດງ ອະດີດປະທານປະເທດຜູ້ທຳອິດແຫ່ງ ສ.ປ.ປ.ລາວ. ການຈັດພິມຂອງພວກເຮົາໃນຄັ້ງນີ້ ເປັນການປະກອບສ່ວນເລັກໆ ນ້ອຍ ເສີມສ້າງສີສັນໃຫ້ແກ່ອຸທິຍານອັກສອນຂອງລາວ. ດວຍວ່າ ພວກເຮົາ ຍັງມີຂອດຈຳກັດດ້ານທຶນຮອນຢູ່ ຈຶ່ງບໍ່ສາມາດປະກອບສ່ວນຍິ່ງໃຫຍ່ຫຼວງຫຼາຍກວ່ານີ້ ແຕ່ກໍພະຍາຍາມຂົນຂວາຍ ສົມທົບກັບພາກສ່ວນອື່ນ ຫາທຶນມາຈັດພິມປຶ້ມດີໆທີ່ມີສາລະປະໂຫຍດ ມີຄຸນຄ່າທາງດ້ານພາສາ ວັດທະນະທຳ ວັນນະຄະດີ ແລະອື່ນໆ.

ເຖິງວ່າ ຜົນງານເລື່ອງນີ້ຂອງ ທ່ານ ມະຫາສິລາ ວີຣະ ວົງສ໌ ໄດ້ຈັດພິມມາຫຼາຍຄັ້ງແລ້ວ ແຕ່ກໍຍັງບໍ່ປາສະຈາກຂໍ້ຂາດຕົກບົກ

ໂດຍ ມະຫາ ສິລາ ວີຣະວົງສ໌

ພ່ອງ ຂໍ້ມູນທີ່ຜິດພາດຢູ່ ດັ່ງນັ້ນຈຶ່ງໄດ້ແກ້ໄຂໄປນຳແຕ່ລະຄັ້ງ ໃນຄັ້ງ
ນີ້ໄດ້ແປງອັນທີ ເດືອນແລະປີເກີດຂອງເຈົ້າເພັດຊະຣາດໃຫ້ຖືກຕ້ອງ
ກັບເອກະສານອື່ນ.

ພວກເຮົາ ຂໍຂອບໃຈນຳບັນດາທ່ານ ທີ່ໃຫ້ຄຳທັກທ້ວງ ບອກ
ບ່ອນຜິດພາດມາ. ຫວັງເປັນຢ່າງຍິ່ງວ່າ ໃນໂອກາດໜ້າ ທາງສຳນັກ
ພິມຈະໄດ້ຮັບການຮ່ວມມືແລະສະໜັບສະໜຸນ ຈາກທ່ານຜູ້ຮູ້ຕື່ມອີກ
ເພື່ອເຮັດໃຫ້ຜົນງານແຕ່ລະຫົວຂອງພວກເຮົາ ມີຄຸນນະພາບດີຍິ່ງໆ
ຂຶ້ນ ແລະມີຄວາມຜິດພາດໜ້ອຍທີ່ສຸດ.

ພະຈິກ 2010

ດວງເດືອນ ບຸນຍາວົງ

ສຳນັກພິມ ດອກເກດ

ຄຳນຳຂອງ ທ່ານ ສີຊະນະ ສີສານ

ພິມຄັ້ງທີ 1 ປີ1996

ເຈົ້າເພັດຊະຣາດ ເປັນຜູ່ໜຶ່ງໃນຂະບວນການຕໍ່ສູ້ ເພື່ອເອກະລາດ ຂອງຊາດລາວໃນຊຸມ ປີ 1940 ຜົນງານການຕໍ່ສູ້ຂອງເຈົ້າເພັດຊະ ຣາດເປັນທີ່ຮູ້ຈັກດີໃນໝູ່ຄົນລາວແລະຊາວຕ່າງປະເທດ ສະນັ້ນການ ສະເໜີຊີວະປະຫວັດຂອງ ເຈົ້າເພັດຊະຣາດ ເຊິ່ງ ມະຫາສິລາ ວີຣະວົງສ໌ ຜູ່ເຄີຍໃກ້ຊິດຕິດແທດ ກັບເພິ່ນໄດ້ແຕ່ງໄວ້ນີ້ ຈະເປັນ ປະໂຫຍດແກ່ຜູ່ອ່ານ ແລະວົງການຄົ້ນຄວ້າທົ່ວໄປ. ຜູ່ອ່ານຫຼາຍຄົນ ຄົງຈະໄດ້ອ່ານປະຫວັດເຈົ້າສຸພານຸວົງ ໂດຍຄະນະກຳມະການ ວິທະ ຍາສາດສັງຄົມ (1990) ມາແລ້ວ, ສະນັ້ນເພື່ອຄວາມເຂົ້າໃຈຕື່ມກ່ຽວ ກັບຂະບວນການຕໍ່ສູ ເພື່ອເອກະລາດໃນຊຸມປີ 1940 ຈຶ່ງຄວນອ່ານ ຊີ ວະປະຫວັດຂອງເຈົ້າເພັດຊະຣາດນີ້ອີກ. ເຈົ້າເພັດຊະຣາດ ເປັນເຊື້ອ ເຈົ້າຮັກຊາດຜູ່ໜຶ່ງ ມີການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ໃນຮູບ ແບບທີ່ຄົນທົ່ວໄປເຂົ້າໃຈ.

ຂ້າພະເຈົ້າ ຂໍຂອບໃຈນຳ ນາງ ດວງເດືອນ ບຸນຍາວົງ ລູກ ສາວຂອງມະຫາ ສິລາ ວີຣະວົງສ໌ ທີ່ໄດ້ນຳເອົາຕົ້ນສະບັບຂອງປຶ້ມນີ້ ມາໃຫ້ຂ້າພະເຈົ້າເບິ່ງ ເພື່ອພິມເຜີຍແຜ່ຕໍ່ໄປ.

ວຽງຈັນ, ວັນທີ 20 ມີນາ 1992

ປະທານຄະນະກຳມະການການວິທະຍາສາດສັງຄົມ

ຄຳຊີ້ແຈງຂອງຜູ່ຊຳຮະ

ການຮຽນຮູ້ຊີວະປະຫວັດ ແລະຜົນງານຂອງບຸກຄົນສຳຄັນຂອງປະເທດນັ້ນ ເປັນສິ່ງຈຳເປັນສຳລັບປະຊາຊົນ ທັງນີ້ເພາະເປັນການປຸກລະດົມສະຕິຊາດ ຂອງບັນພະບຸລຸດ ເປັນແວ່ນແຍງແລະເປັນກຳລັງໃຈຂອງຮຸ່ນຄົນພາຍຊ້ອຍ ໃນການສືບທອດເຈຕະນາຣົມອັນສູງສົ່ງ ຂອງບັນດາທ່ານເຫຼົ່ານັ້ນ.

ການຈັດພິມ "ຊີວະປະຫວັດຂອງເຈົ້າເພັດຊະຣາດ" ກໍແມ່ນເພື່ອໃຫ້ຄົນຮຸ່ນໃໝ່ໃຫຍ່ລຸນ ໄດ້ເຫັນຄຸນງາມຄວາມດີຂອງລັດຖະບຸລຸດຜູ່ນີ້ ທີ່ໄດ້ເຄື່ອນໄຫວຕໍ່ສູ້ກູ້ຊາດ, ເຈົ້າເພັດຊະຣາດເປັນນັກການເມືອງອາວຸໂສ ທີ່ໄດ້ຮັບການເຄົາຣົບນັບຖືຢ່າງກວ້າງຂວາງຈາກປະຊາຊົນ. ຊີວິດຂອງທ່ານ ກາຍເປັນຕຳນານທີ່ເລົ່າສືບກັນມາ ແຕ່ເໜືອສຸດຈົນຮອດໃຕ້ສຸດຂອງປະເທດ.

ບຸກຄົນໜຶ່ງທີ່ເຄີຍໃກ້ຊິດຕິດແທດກັບທ່ານ ເພາະເປັນເຖິງເລຂາປະຈຳຕົວຂອງທ່ານ ຄື ອາຈານມະຫາສິລາ ວີຣະວົງສ໌ ເຊິ່ງເປັນນັກປະຫວັດສາດ ນັກອັກສອນສາດ-ວັນນະຄະດີ. ທ່ານຜູ່ນີ້ ໄດ້ຂຽນບັນທຶກຂໍ້ມູນກ່ຽວກັບເຈົ້າເພັດຊະຣາດໄວ້ຢ່າງລະອຽດ ແຕ່ບໍ່ເຄີຍພິມເຜີຍແຜ່ມາກ່ອນ ຜູ່ຂຽນເອງກໍລ່ວງລັບໄປແລ້ວ. ຈົນເທົ້າບັດນີ້ ຄອບຄົວຂອງ

ອາຈານມະຫາສິລາ ວິຣະວົງສ໌ ເຫັນຄວາມສຳຄັນຂອງເອກະສານ ດັ່ງກ່າວ ຈຶ່ງນຳຕົ້ນສະບັບມາສະເໜີຕໍ່ສະຖາບັນປະຫວັດສາດ - ພູມ ສາດ - ບູຮານຄະດີຂອງຄະນະກຳມະການວິທະຍາສາດສັງຄົມ ເພື່ອ ພິມເຜີຍແຜ່ ໂດຍເຫັນວ່າຈຸດປະສົງອັນນີ້ກົງກັບນະໂຍບາຍຂອງສະຖາ ບັນພວກເຮົາ ທີ່ມີແຜນຄົ້ນຄວ້າ ແລະພິມເຜີຍແຜ່ເອກະສານກ່ຽວກັບ ປະຫວັດສາດລາວ ຢູ່ແລ້ວ.

ປຶ້ມເຫຼັ້ມນີ້ ແມ່ນຜົນງານໜຶ່ງ ຂອງການຄົ້ນຄວ້າດ້ານປະຫວັດ ສາດບຸກຄົນຂອງອາຈານມະຫາສິລາວິຣະວົງສ໌ທີ່ບໍ່ທັນໄດ້ພິມເຜີຍແຜ່ ມາກ່ອນ ຄາດວ່າຈະພິມໃຫ້ທັນຄົບຮອບ 100 ປີ ຂອງເຈົ້າເພັດຊະຣາດ (1890-1990) ແຕ່ກໍຫຼ້າຊ້າໄປ ຢ່າງໃດກໍຕາມ ເມື່ອຂ້າພະເຈົ້າໄດ້ຮັບ ມອບໝາຍໃຫ້ເປັນຜູ້ຊຳຣະຕົ້ນສະບັບ ຂ້າພະເຈົ້າຈຶ່ງຍິນດີທີ່ສຸດ. ຜົນ ງານຂອງອາຈານ ມະຫາສິລາ ວິຣະວົງສ໌ ນັ້ນສ່ວນຫຼວງຫຼາຍເປັນທີ່ຮູ້ ຈັກກັນດີທັງພາຍໃນແລະຕ່າງປະເທດ ບໍ່ວ່າຈະເປັນດ້ານວັນນະຄະດີ ພາສາສາດ ອັກສອນສາດ ວັດທະນະທຳ ປະຫວັດສາດ ໂດຍສະເພາະ ທາງດ້ານປະຫວັດສາດນັ້ນ ຂ້າພະເຈົ້າເອງສົນໃຈເປັນພິເສດໄດ້ພະຍາ ຍາມຕິດຕາມຊອກຫາທຸກເລື່ອງທີ່ເພິ່ນຂຽນເທົ່າທີ່ຈະຫາໄດ້ ເພື່ອນຳ ມາສຶກສາຄົ້ນຄວ້າ. ຂ້າພະເຈົ້າເຄີຍຮ່ວມງານກັບເພິ່ນໃນຊຸມປີ 1980 ຢູ່ ຄະນະກຳມະການຄົ້ນຄວ້າວິທະຍາສາດການສຶກສາ ແລະຮຽບຮຽງ ກະຊວງສຶກສາ ຕໍ່ມາກໍໄດ້ເຂົ້າຮ່ວມສຳມະນາ "ຜົນງານຂອງ ມະຫາ ສິລາ ວິຣະວົງສ໌ ໃນທັດສະນະຂອງນັກວິຊາການ 2 ຝັ່ງຂອງ" ລະຫວ່າງ ວັນທີ 28-29 ເມສາ 1990 ແລະຂ້າພະເຈົ້າ ກໍໄດ້ຂຽນເລື່ອງມະຫາ ສິລາວິຣະວົງສ໌ກັບປະຫວັດສາດລາວລົງ ໜັງສືພິມວຽງຈັນໃໝ່ ສະບັບ

ວັນທີ 18-25/5/1990. ທັງຫມົດນີ້ ຊ່ອຍໃຫ້ຂ້າພະເຈົ້າຮູ້ຈັກຜົນງານ ຂອງອາຈານມະຫາສີລາ ດີຂຶ້ນ.

ໃນການຊໍາຮະປະຫວັດເຈົ້າເພັດຊະຣາດນີ້ ຂ້າພະເຈົ້າໄດ້ຮັກສາ ເນື້ອໃນຕົ້ນສະບັບຂອງອາຈານ ມະຫາສີລາ ວິຣະວົງສ໌ ໄວ້ຄືເກົ່າ ບໍ່ໄດ້ ປ່ຽນແປງຫຍັງເລີຍ, ມີແຕ່ປັບປຸງການຂຽນໃຫ້ສອດຄ່ອງກັບປະຈຸບັນ ເນື່ອງຈາກຕົ້ນສະບັບນັ້ນ ອາຈານ ມະຫາສີລາ ຂຽນໄວ້ແຕ່ກ່ອນປີ 1975 ໃຊ້ສະກົດຕາມແບບເກົ່າເຊັ່ນ: ພຣະຍາ ແສນສຸຣິນທ໌ ຣັຖບາລ ຜົລເສັຽ ຫາຍ ຣາຊສັມພັນທ໌ໆລໆ ເວົ້າງ່າຍໆ ກໍຄືສະກົດຕາມສຽງຮັກສາເຄົ້າ ແລະມີສະກົດກາງຄໍາ ບໍ່ແມ່ນຂຽນຕາມສຽງລ້ວນໆ ເຊິ່ງກໍຖືກຕາມ ເຄົ້າສັບທຸກຕົວ ຂ້າພະເຈົ້າໄດ້ປ່ຽນຄໍາເຫຼົ່ານັ້ນ ມາຂຽນຕາມສຽງ ເພື່ອ ໃຫ້ຄົນຮຸ່ນໃຫມ່ອ່ານເຂົ້າໃຈ.

ບາງເນື້ອໃນທີ່ ອາຈານມະຫາສີລາ ວິຣະວົງສ໌ ຂຽນໃນປຶ້ມນີ້ ເຊັ່ນຢູ່ໜ້າ 15 ເພີ່ນຂຽນວ່າ: "ການກູ້ອິດສະລະພາບຂອງເຈົ້າອະນຸໃນ ຄາວນີ້ບໍ່ເປັນຜົນດີປະການໃດແກ່ລາຊະອານາຈັກຂອງພຣະອົງແຕ່ກັບ ເປັນຜົນເສັຽຫາຍຢ່າງຍິ່ງ ເພາະວົງກະສັດວຽງຈັນຖືກທໍາລາຍເສັຽຈົນ ກ້ຽງ ແລະນະຄອນວຽງຈັນ ທີ່ເປັນເມືອງປະຫວັດສາດມີຊື່ສຽງມາແຕ່ ບູຮານນັບເປັນພັນໆປີ ກໍຖືກທໍາລາຍຈູດເຜົາຈົນເປັນເທົ່າ ແລະການກູ້ ອິດສະລະພາບຂອງເຈົ້າອະນຸໃນຄາວນີ້ ຍັງຖືກຊາດຜູ່ເປັນນາຍໜາຍ ໜ້າຂ້າຊື່ໄວ້ໃນປະຫວັດສາດວ່າ ເປັນອ້າຍຂະບົດຢ່າງຊົ່ວຊ້າທີ່ສຸດ ແຕ່ ການກູ້ອິດສະລະພາບຂອງເຈົ້າອະນຸ ຊໍ້າຜັດໄດ້ສ້າງມູນເຊື້ອອັນພິລະ ອາດຫານ ມູນເຊື້ອຮັກຊາດໄວ້ໃຫ້ຄົນລາວຮຸ່ນຫຼັງເປັນຢ່າງດີ". ອັນນີ້ກໍ

ແມ່ນທັດສະນະໜຶ່ງຂອງອາຈານມະຫາສິລາ ທີ່ຈຳແນກໄດ້ເຖິງຄວາມ ຮັກຊາດເຊື້ອອັນສູງສົ່ງຂອງພະເຈົ້າອະນຸ ແລະມັນກໍມີຄວາມໝາຍສຳ ຄັນທີ່ສຸດໃນປະຫວັດສາດແຫ່ງຊາດລາວ, ເພາະວິລະກຳໃນຄັ້ງນັ້ນ ແມ່ນວິລະກຳຍິ່ງໃຫຍ່ ສະແດງເຖິງຈິດໃຈຊາດ ບໍ່ຍອມເປັນຂ້ອຍຂ້າຜູ່ ໃດເຊິ່ງຄົນລາວທຸກຄົນ ບໍ່ມີວັນຫຼົງລືມ ຄົນລາວເຮົາໄດ້ຍົກຍ້ອງໃຫ້ເຈົ້າ ອະນຸເປັນວິລະກະສັດແລະປະຊາຊົນລາວສະໄໝ ກ່ອນກໍໄດ້ຍົກຍ້ອງທັງ ຈາຣຶກວິລະກຳ ໃນສະໄໝເຈົ້າອະນຸໄວ້ໃນໜັງສືເລື່ອງ "ພື້ນວຽງ" ແລ້ວ ພາກັນນຳມາຂັບລຳສູ່ກັນຟັງຢູ່ບໍ່ຂາດສາຍ ຄົນລາວຜູ່ໃດ ໄດ້ອ່ານໄດ້ ຟັງວິລະກຳຂອງພະອົງແລ້ວ ຈະຮູ້ສຶກສະເທືອນໃຈທັນທີ ອາຈານ ມະຫາສິລາ ວິຣະວົງສ໌ ເອງຮູ້ສຶກປະທັບໃຈໃນວິລະກຳນັ້ນ ແລະໄຝ່ຝັນ ຢາກມາວຽງຈັນ ກໍຍ້ອນໄດ້ຍິນໄດ້ຟັງສິ່ງເຫຼົ່ານີ້ມາແຕ່ນ້ອຍ ແລະຍ້ອນ ໄດ້ອ່ານໜັງສືເລື່ອງ "ປາບຂະບົດວຽງຈັນ" ສະນັ້ນ ວິລະກຳ ຂອງພຣະ ເຈົ້າອະນຸວົງ ຈຶ່ງເປັນວິລະກຳທີ່ຝັງເລິກຢູ່ໃນຈິດໃຈຂອງຄົນລາວຢ່າງ ບໍ່ມີວັນລືມ ດັ່ງທີ່ເພີ່ນວ່າໄວ້ແທ້ໆ.

ອາຈານມະຫາສິລາ ໄດ້ເວົ້າເຖິງ ເຈົ້າເພັດຊະຣາດວ່າ ເປັນນັກ ຕໍ່ສູ້ຄັດຄ້ານນະໂຍບາຍຂອງຝຣັ່ງຢູ່ສະເໝີ ກຽວກັບການປົກຄອງລາວ ເຊັ່ນ: ເລື່ອງຝຣັ່ງຢາກເອົາແຂວງຫົວພັນ ໄປຂຶ້ນກັບດິນແຄ້ວຕົງແກ ເລື່ອງແຂວງກະແຈະຊຽງແຕ ໄປຂຶ້ນກັບຂະເໝນ.

ເຈົ້າເພັດຊະຣາດ ໄດ້ພະຍາຍາມເຮັດສິ່ງທີ່ເປັນປະໂຫຍດແກ່ ຊາດຢ່າງຫຼວງຫຼາຍ ແລະມີຄົນຮັກຫອມນັບຖືຢ່າງຫຼວງຫຼາຍ ແຕ່ເພິ່ນ ກໍເປັນຄົນມີກຳ ຫຼື ມີເຄາະຮ້າຍຄອຍຂັດຂວາງການດຳເນີນງານຢູ່ສະ

ເໜີ ຄືຖືກຖອດຍົດຕຳແໜ່ງໜີໄປຢູ່ເມືອງໄທ ດັ່ງທີ່ອາຈານ ມະຫາ ສີລາ ໄດ້ຂຽນໄວ້. ເປັນທີ່ໜ້າສັງເກດວ່າ ວິລະບຸຣຸດລາວມັກປະສົບຊາ ຕາກຳແນວນີ້.ເບິ່ງຄືນຫຼັງສະໄໝເຈົ້າຟ້າງຸ່ມ ມະຫາລາດທີ່ເປັນຜູ້ທ້ອນ ໂຮມລາວ ແລະສ້າງຕັ້ງອານາຈັກລ້ານຊ້າງ ສຸດທ້າຍກໍຖືກເນລະເທດ ໄປຢູ່ ເມືອງບ່ານຈົນສະຫວັນນະຄົດຢູ່ທີ່ນັ້ນ, ພຣະເຈົ້າໄຊຍະເຊຖຖາ ທິຣາດ ຜູ້ສ້າງຕັ້ງວຽງຈັນເປັນນະຄອນຫຼວງ ແລະຕໍ່ສູ້ກັບພະມ້າ ຈົນໄດ້ໄຊຊະນະ ແຕ່ສຸດທ້າຍກໍຫາຍສາບສູນໄປໃນຄາວໄປຕີເມືອງ ໂອງການ ຫຼື ເຈົ້າອະນຸວົງ ວິລະກະສັດທີ່ຕໍ່ສູ້ ເພື່ອເອກະລາດ ເມື່ອ ບໍ່ສຳເລັດກໍຖືກຈັບໃສ່ຄຸກໃສ່ຄາຖືກທໍລະມານ. ເປັນຫຍັງບັ້ນທ້າຍຂອງ ພວກເພິ່ນຈຶ່ງເປັນ ແນວນີ້? ບາງທີ ລູກລາວຫຼານລາວ ອາດຈະຕ້ອງ ຄິດແລະວິໄຈຄົ້ນຫາສາເຫດ ເພື່ອປ້ອງກັນສະພາບໃນພາຍຄັ້ງໜ້າ.

ກ່ຽວກັບອຸປະນິໄສຂອງເຈົ້າເພັດຊະຣາດນັ້ນ ຂ້າພະເຈົ້າກໍເຫັນ ວ່າອາຈານມະຫາສີລາ ໄດ້ຂຽນເລື່ອງນີ້ຕາມຄວາມເປັນຈິງແທ້ ຄື ຂຽນຕາມທີ່ເພິ່ນຮູ້ ເພິ່ນເຫັນທໍ່ນັ້ນ ເຊັ່ນໃນອຸປະນິໄສຂອງເຈົ້າເພັດຊະ ຣາດທີ່ວ່າເພິ່ນມັກລ່າສັດຜາບແຮ້ ຍິງຊ້າງ ຍິງເມີຍ ຍິງໝູປ່າ ຜາບສິ່ງ ເຮັດຂວາງເປັນຕົ້ນ ອ່ານເບິ່ງແລ້ວຄືວ່າເພິ່ນເກັ່ງເກີນຄົນ ຫຼື ຄ້າຍໆ ກັບວ່າ ອາຈານມະຫາສີລາ ຍົກຍ້ອງຈົນເກີນໄປ ແຕ່ຂ້າພະເຈົ້າເຫັນວ່າ ເພິ່ນເວົ້າຕາມຄວາມຈິງແທ້. ທີ່ຈິງອັນທີ່ເຈົ້າເພັດຊະຣາດເກັ່ງກວ່ານັ້ນ ກໍຍັງມີອີກແຕ່ເພິ່ນບໍ່ກ່າວໄວ້. ຂ້າພະເຈົ້າເຄີຍໄດ້ອ່ານໜັງສືແຕ່ດົນມາ ແລ້ວ ກ່ຽວກັບການຜາບເງືອກຢູ່ປາກກະດິງ ຈື່ແຕ່ວ່າ ເພິ່ນຍິງເງືອກ ໂຕນັ້ນຕາຍ ໂຕມັນໃຫຍ່ແລະຍາວຊໍ່າກົກພ້າວ ແຕ່ບໍ່ເຫັນອາຈານມະຫາ ສີລາ ເວົ້າເຖິງເລີຍ ສະແດງວ່າຍັງມີອີກຫຼາຍຢ່າງທີ່ໜ້າອັດສະຈັນ

ຂອງເຈົ້າເພັດຊະຣາດ.

ການລ່າສັດຂອງເຈົ້າເພັດຊະຣາດນີ້ ຜູ່ອ່ານໃນຍາມທີ່ຕ້ອງ ອະນຸຮັກທັມມະຊາດໃນປະຈຸບັນນີ້ ອາດຄິດວ່າເປັນການທຳລາຍທັມ ມະຊາດ ແຕ່ສະພາບໃນເມື່ອກ່ອນກັບດຽວນີ້ຕ່າງກັນຫຼາຍ ໃນຄວາມ ຈິງແລ້ວ ເຈົ້າເພັດຊະຣາດໄປລ່າສັດບໍ່ແມ່ນເພື່ອລ່າສັດຢ່າງດຽວ ແຕ່ ເພື່ອປະໂຫຍດຢ່າງອື່ນທີ່ສຳຄັນກວ່ານັ້ນ ຜູ່ອ່ານຈະເຂົ້າໃຈຕາມຜູ່ ແຕ່ງ ໄດ້ຂຽນໄວ້.

ອີກອັນໜຶ່ງທີ່ຂ້າພະເຈົ້າໄດ້ແກ້ໄຂ ກໍຄືການໃຊ້ຄຳສັບວ່າ "ໄທ" ແລະສະຫຍາມ ໃນປຶ້ມນີ້ ອາຈານ ມະຫາສິລາ ມັກຈະໃຊ້ຄຳວ່າ ໄທ ເປັນ ສ່ວນຫຼາຍ ຄວາມຈິງແລ້ວໃນປີ 1939 ນັ້ນ ໄທໄດ້ປ່ຽນຊື່ປະເທດຈາກ ສະຫຍາມ ມາເປັນ "ໄທ",ສະນັ້ນ ຄຳວ່າ "ໄທ" ຫຼື ຊາດໄທ ຫຼື ປະເທດໄທ ຫຼື ລາຊະອານາຈັກໄທ ແມ່ນເລີ່ມໃຊ້ແຕ່ປີ 1939 ເປັນຕົ້ນມາ ສ່ວນແຕ່ ກ່ອນນີ້ໃຊ້ຄຳວ່າ "ສະຫຍາມ" ຫຼາຍທ່ານກໍມັກຈະສັບສົນໃນການໃຊ້ຄຳ ສອງຄຳນີ້ຢູ່ ຂ້າພະເຈົ້າເອົາປີ 1939 ເປັນຂີດໝາຍ ຄືກ່ອນປີ 1939 ໃຊ້ ຄຳວ່າ "ສະຫຍາມ" ຫຼັງປີ 1939 ໃຊ້ຄຳວ່າ ໄທ.

ພາຍຫຼັງທີ່ປ່ຽນຊື່ຈາກສະຫຍາມມາເປັນໄທ ໃນສະໄໝສົງຄາມ ໂລກຄັ້ງທີ 2 ໄດ້ມີເຫດການຄັບຂັນທີ່ສຸດເກີດຂຶ້ນກັບຊາດລາວອີກເທື່ອ ໃໝ່ ຄື ໄທ ໄດ້ທວງເອົາດິນລາວ ແລະຂະແມຈາກຝຣັ່ງ ພ້ອມໆກັບການ ຍື່ນຂໍ້ສະເໜີນີ້ຕໍ່ຝຣັ່ງ ທີ່ພວມປະລາໄຊໃຫ້ເຢຽລະມັນນັ້ນ ໄທກໍໄດ້ກຽມ ການທາງດ້ານກຳລັງທະຫານໄວ້ພ້ອມ ທີ່ຈະບຸກດິນລາວໄດ້ທຸກຍາມ

ໃນ ເວລາທີ່ປະເທດຊາດພວມຢູ່ໃນສະພາບໜ້າສິ່ວໜ້າຂວານເຊັ່ນນີ້ ຄົນລາວເຮົາໃນຍາມນັ້ນໄດ້ເຄື່ອນໄຫວແນວໃດແດ່ ຂ້າພະເຈົ້າຄຶດວ່າ ຜູ່ອ່ານຄົງຢາກຮູ້ເຫດການຕ່າງໆ ທີ່ເກີດຂຶ້ນຕໍ່ຊາດໃນຍາມນັ້ນ ຈົນໄປ ເຖິງການປະກາດເອກະລາດ 12 ຕຸລາ 1945 ທ່ານຜູ່ອ່ານກໍຈະໄດ້ ຮຽນຮູ້ສ່ວນນຶ່ງຈາກປຶ້ມນີ້.

ເພື່ອໃຫ້ຜູ່ອ່ານໄດ້ສຳຜັດກັບເນື້ອໃນເຫດການຕົວຈິງ ໃນຊີວິດ ແລະການຕໍ່ສູ້ເພື່ອເອກະລາດລາວຂອງເຈົ້າເພັດຊະຣາດຜູ່ທີ່ຄົນໃຫ້ນາ ມະຍົດວ່າ: "ບຸຮຸດເຫຼັກ ແຫ່ງລາຊະອານາຈັກລາວ" ຂ້າພະເຈົ້າຂໍເຊີນ ທ່ານຜູ່ອ່ານຫວນຄືນຫຼັງເຂົ້າສູ່ບັນຍາກາດຊີວິດຂອງເຈົ້າເພັດຊະຣາດ ໃນສະໄໝການຕໍ່ສູ້ເພື່ອປະກາດເອກະລາດ ແຫ່ງຊາດລາວ.

ສຸເນດ ໂພທິສານ
ພະແນກປະຫວັດສາດ, ສະຖາບັນປະຫວັດສາດ ພູມສາດ ບູຮານຄະດີ
ຄະນະກຳມະການວິທະຍາສາດສັງຄົມ
ມີນາ 1992

ຊີວະປະຫວັດ

ເຈົ້າມະຫາອຸປະຣາດ ເພັດຊະຣາດ



ເຈົ້າມະຫາອຸປະຣາດເພັດຊະຣາດ ເປັນບຸກຄົນສຳຄັນຄົນນຶ່ງ ຂອງລາວ ໃນຄິດຕະສັດຕະວັດທີ 20 ທັງໃນສ່ວນຕົວຂອງພຣະອົງ ແລະ ສ່ວນທີ່ກ່ຽວຂ້ອງ ກັບປະເທດຊາດ ຕະຫຼອດການກູ້ອິດສະລະພາບຂອງ ລາວ. ເຈົ້າມະຫາອຸປະ ຣາດ ເພັດຊະຣາດ ເປັນບຸກຄົນທີ່ຄົນລາວທົ່ວປະ ເທດຕັ້ງແຕ່ຊັ້ນລາສະດອນ ສາ ມັນຂຶ້ນໄປ ແລະຊາວຕ່າງປະເທດຮູ້ຈັກດີ ເພາະພຣະອົງທ່ານ ໄດ້ຄົບຫາສະມາຄົມກັບປະຊາຊົນຄົນລາວ ທົ່ວປະ ເທດ ໃນທຸກພາກທຸກແຂວງ ແລະທຸກແຫ່ງຫົນດ້ວຍການທີ່ພຣະອົງເປັນ ນັກນິຍົມໄພ ແລະເປັນນັກປົກຄອງ ທີ່ເຂົ້າເຖິງປະຊາຊົນຢ່າງແທ້ຈິງ ນອກຈາກພຣະອົງທ່ານຈະຮູ້ຈັກກັບປະຊາຊົນ ໃນທຸກພາກທຸກແຂວງ ແລ້ວ ພຣະອົງຍັງເປັນຜູ່ຮູ້ຈັກພູມປະເທດເຂດນ້ຳໜອງປາ ພູຜາປ່າໄມ້ ທີ່ມີຢູ່ໃນລາວດີກວ່າທຸກໆຄົນ ທີ່ເກີດຢູ່ໃນແຜ່ນດິນລາວ ພຣະອົງຈຶ່ງ ເປັນທີ່ຮັກແລະເຄົາຣົບນັບຖືຂອງຄົນລາວທົ່ວໄປ ສະນັ້ນ ໃນການກູ້ອິດ ສະຣະພາບຂອງລາວ ເມື່ອຄັ້ງປີ ຄ.ສ.1945 ນັ້ນພຣະອົງຈຶ່ງໄດ້ຮັບກຽດ ເປັນປະມຸກຂອງຄະນະລາວອິດສະລະ ນຳພາຄະນະດັ່ງກ່າວທຳການກູ້ ອິດສະລະພາບ.

ແທ້ຈິງ ການຕໍ່ສູ້ກູ້ອິດສະລະພາບເປັນວຽກງານອັນຍິ່ງໃຫຍ່ ຂອງມະນຸດຜູ່ມີໃຈສູງ ແລະການຕໍ່ສູ້ກູ້ອິດສະລະພາບນີ້ ບໍ່ແມ່ນວຽກ ການຂອງບຸກຄົນໃດບຸກຄົນນຶ່ງ ໂດຍຈຳເພາະ ແຕ່ຫາກແມ່ນວຽກການ ຂອງຄົນໃນຊາດນັ້ນໆ ໄດ້ກະທຳຮ່ວມກັນໂດຍຄວາມພ້ອມພຽງກັນ ຈຶ່ງ

ຈະເປັນຜົນສຳເລັດໄດ້ ແຕ່ເຖິງຢ່າງນັ້ນກໍຕາມ ໃນການຕໍ່ສູ້ກູ້ອິດສະລະພາບທຸກເທື່ອຂອງຄົນທຸກຊາດທຸກພາສາ ຍ່ອມມີຫົວໜ້າເປັນຜູ່ນຳພາດຳເນີນການ ເປັນຜູ່ພາຄຶດພາທຳ ແລະການຕໍ່ສູ້ກູ້ອິດສະລະພາບ ຂອງມະນຸດນີ້ ລາງເທື່ອກໍສຳເລັດ ລາງເທື່ອກໍບໍ່ ສຳເລັດ ອັນນີ້ກໍເປັນຂອງທຳມະດາ ແລະການກອບກູ້ອິດສະລະພາບອອກຈາກແອກຂອງຊາດຜູ່ເປັນນາຍນັ້ນ ຖ້າພວກທີ່ທຳການກູ້ເປັນຜົນສຳເລັດ ກໍຮຽກໄດ້ວ່າ ເປັນການກູ້ອິດສະລະພາບ ແລະຫົວໜ້າຜູ່ພາກູ້ກໍນັບໄດ້ວ່າເປັນ ວີລະບຸຣຸດ ແຕ່ຖ້າຫາກຜູ່ທີ່ທຳການກູ້ນັ້ນບໍ່ສຳເລັດກໍຈະຖືກຊາດຜູ່ເປັນນາຍໝາຍໜ້າວ່າ ເປັນອ້າຍຂະບົດຢ່າງຊົ່ວຊ້າ ດັ່ງດຽວກັນກັບເລື່ອງ ພຣະເຈົ້າອະນຸວົງຂອງລາວຄຶດກູ້ອິດສະລະພາບຈາກສະຫຍາມໃນອະດີດທີ່ແລ້ວມາ.

ປະເທດລາວຂອງເຮົາ ເຄີຍຖືກທຳລາຍໃຫ້ເສຽອິດສະລະພາບມາແລ້ວຫຼາຍເທື່ອ ແລະກໍເຄີຍມີຜູ່ພາກູ້ມາແລ້ວທຸກເທື່ອຄືກັນ ຂໍກ່າວຈຳເພາະແຕ່ໄລຍະເວລາ ທີ່ລາວເຮົາໄດ້ເຂົ້າມາຕັ້ງຖິ່ນຖານຢູ່ໃນດິນແດນອັນເປັນປະເທດລາວດຽວນີ້ ພວກລາວເຮົາໄດ້ເຄີຍເສຽອິດສະລະພາບມາແລ້ວສາມເທື່ອ ຄື:

- ເທື່ອທີ 1 ເສຽໃຫ້ພະມ້າ ເມື່ອ ພ.ສ. 2115 (ຄ.ສ. 1572) ໃນລັດຊະສະໄໝຂອງພຣະສຸມັງຄລະໄອຍະໂກໂພທິສັດ(ພຣະຍາແສນສຸຣິນ) ແລະກູ້ຄືນໄດ້ ໃນສະໄໝຂອງພຣະວໍຣະວົງສາ ທຳມິກຣາດ ເມື່ອ ພ.ສ. 2146 (ຄ.ສ. 1603)

- ເທື່ອທີ 2 ເສຽໃຫ້ແແກ່ປະເທດສະຫຍາມ ໃນສະໄໝລາວແຕກກັນອອກເປັນ 3 ພາກ ຄື: ຫຼວງພຣະບາງ ວຽງຈັນ ແລະ ຈຳປາສັກ ເມື່ອ ພ.ສ 2322 (ຄ.ສ 1779) ແລະເສຽລົງພ້ອມກັນທັງ 3 ນະຄອນ,

ການເສຽອິດສະລະພາບຄາວນີ້ ກໍເຄີຍໄດ້ມີຜູ່ທຳການກ້ມາແລ້ວຄືກັນ ໂດຍແມ່ນສົມເດັດພຣະເຈົ້າອະນຸ ຫຼື ອະນຸວົງ ແຫ່ງນະຄອນວຽງຈັນເປັນ ຜູ່ພາກ້ເມື່ອ ພ.ສ. 2370 (ຄ.ສ.1827) ການກ້ອິດສະລະພາບຂອງພຣະ ເຈົ້າອະນຸ ໃນຄາວນີ້ ບໍ່ເປັນຜົນດີປະການໃດແກ່ລາຊະອານາຈັກຂອງ ພຣະອົງ ແຕ່ກັບເປັນຜົນເສຽຫາຍຢ່າງຍິ່ງໃຫຍ່ ເພາະວົງກະສັດວຽງ ຈັນ ຖືກທຳລາຍເສຽຈົນກ້ຽງ ແລະພຣະນະຄອນວຽງຈັນ ທີ່ເປັນເມືອງ ປະຫວັດສາດມີຊື່ມາແຕ່ບູຮານ ນັບເປັນພັນໆປີ ກໍຖືກທຳລາຍຈູດເຜົາ ເສຽຈົນເປັນເທ່ົາ ແລະການກ້ອິດສະລະພາບຂອງພຣະເຈົ້າອະນຸ ໃນ ຄາວນີ້ ຍັງຖືກຊາດຜູ່ເປັນນາຍໝາຍໜ້າຂ້າຊື່ໄວ້ໃນປະຫວັດສາດ ວ່າ ເປັນ ອ້າຍຂະບົດ ຢ່າງຊົ່ວຊ້າທີ່ສຸດດ້ວຍ.

- ເທ່ືອທີ 3 ເສຽໃຫ້ແກ່ຝຣັ່ງ ເມ່ືອ ພ.ສ. 2436 (ຄ.ສ.1893) ແຕ່ ການເສຽໃນຄາວນີ້ ບໍ່ແມ່ນລາວເອງເປັນຜູ່ເຮັດໃຫ້ເສຽ ຫາກເປັນແຕ່ ລັດຖະບານສະຫຍາມຍອມຍົກດິນແດນຝັ່ງຊ້າຍແມ່ນ້ຳຂອງ ອັນເປັນ ເຂດແດນປະເທດລາວ ທຸກວັນນີ້ໃຫ້ແກ່ລັດຖະບານຝຣັ່ງ ເພ່ືອເປັນການ ແລກຜ່ຽນດິນແດນສ່ວນໃຫຍ່ຂອງປະເທດສະຫຍາມໄວ້ ບໍ່ດັ່ງນັ້ນລາຊະ ອານາຈັກສະຫຍາມກໍອາດຈະຖືກຝຣັ່ງເຂ້ົາຄວບຄຸມເອົາເປັນເມືອງ ຂ້ຶນດັ່ງດຽວກັນ ອັນນີ້ກໍເປັນແນວນະໂຍບາຍ ອັນດີຂອງສະຫຍາມ ທີ່ຮູ້ ຈັກຮັກສາເອົາຕົວລອດເປັນຍອດດີ ແຕ່ເປັນຜົນເສຽຫາຍແກ່ແຜ່ນດິນ ລາວເປັນອັນມາກ ເພາະແຜ່ນດິນລາວແລະຊາດລາວ ຕ້ອງຖືກແບ່ງ ແຍກອອກເປັນສອງຕອນແລະສອງຊາດ ຄ:ື ພວກລາວທ່ີຢູ່ຝັ່ງຂວາ ຂອງແມ່ນ້ຳຂອງຖືກຮຽກວ່າເປັນຊາດໄທ ແລະໂອນເຂ້ົາເປັນໄທທັງ ໝົດພ້ອມທັງດິນແດນ ສ່ວນລາວທ່ີຢູ່ຝັ່ງຊ້າຍຖືກຮຽກວ່າເປັນລາວ ແລະປະເທດລາວເຊ່ືງຝຣັ່ງເປັນຜູ່ປົກຄອງ. ການກ້ອິດສະລະພາບຄ້ັງນ້ີ

ແມ່ນກູ້ຈາກອຳນາດຂອງຝຣັ່ງ ໂດຍເຈົ້າມະຫາອຸປະຣາດເພັດຊະຣາດ ເປັນຜູ່ພາຕໍ່ສູ້ ເຊິ່ງໄດ້ແຮກກໍ່ຕັ້ງມາແຕ່ ພ.ສ. 2438 (1940) ຈົນເຖິງ ພ.ສ. 2488 (ຄ.ສ.1945) ແຕ່ການໄດ້ມາເຊິ່ງເອກະລາດໃນຄາວ ນີ້ກໍ່ບໍ່ແມ່ນວ່າໄດ້ມາຍ້ອນຄະນະລາວອິດສະລະແຕ່ຝ່າຍດຽວ ແຕ່ຫາກ ໄດ້ມາຍ້ອນຄົນລາວທັ້ງຊາດ[1] ພ້ອມພຽງກັນຮ້ອງຂໍຕໍ່ສູ້ເອົາ ແລະ ຍ້ອນເຫດການຂອງໂລກ ບັງຄັບໃຫ້ໄດ້ມາອີກທາງໜຶ່ງ ແຕ່ເຖິງຢ່າງ ນັ້ນກໍຕາມ ເຮົາບໍ່ຄວນລືມວ່າ ການທີ່ຈະໄດ້ມາເຊິ່ງເອກະລາດນັ້ນ ຂໍ້ສຳຄັນທີ່ສຸດ ແມ່ນຢູ່ນຳການຕໍ່ສູ້ເອົາຈະເປັນການຕໍ່ສູ້ໃນທາງການ ເມືອງ ຫຼື ການຮົບເຮວເອົາດ້ວຍກຳລັງ ຫຼືທັງສອງຢ່າງຄວບກັນໄປກໍ ຕາມ ແລະການຕໍ່ສູ້ທຸກໆຄັ້ງ ຕ້ອງມີຫົວໜ້າເປັນຜູ່ພາດຳເນີນການ, ການຕໍ່ສູ້ກູ້ເອກະລາດ ໃນຄັ້ງປີ 1945 ນີ້ ແມ່ນເຈົ້າມະຫາອຸປະຣາດເພັດ ຊະຣາດ ເປັນຫົວໜ້າໃນຝ່າຍຄະນະລາວອິດສະລະ ດັ່ງກ່າວແລ້ວ.

ເພາະສະນັ້ນ ເຮົາຈຶ່ງຄວນຮູ້ຈັກຊີວະປະຫວັດຂອງທ່ານຜູ່ນີ້ ເຊິ່ງ ເປັນຄົນສຳຄັນຂອງລາວຄົນໜຶ່ງ ໃນຈຳນວນຂອງຄົນສຳຄັນທັງຫຼາຍທີ່ ລ່ວງມາ ເຈົ້າເພັດຊະຣາດມີຄວາມສຳຄັນຕໍ່ປະເທດຊາດຢ່າງໃດນັ້ນ ຂໍກ່າວພຽງສັ້ນໆໄວ້ໃນທີ່ນີ້ວ່າ ພຣະອົງໄດ້ເປັນຜູ່ຕໍ່ຕ້ານຄັດຄ້ານນະໂຍ ບາຍຂອງຝຣັ່ງຢູ່ສະເໝີ ກ່ຽວກັບການປົກຄອງປະເທດລາວ ເຊິ່ງໃນ ສະໄໝນັ້ນ ຝຣັ່ງຢາກເອົາສ່ວນໜຶ່ງຂອງປະເທດລາວ ໄປຂຶ້ນກັບຫວຽດ ນາມແລະຂະເໝນ. ນອກຈາກການຕໍ່ສູ້ຕ້ານທານອິດທິພົນຂອງຝຣັ່ງ ເຊິ່ງໃຜໆໃນສະໄໝນັ້ນບໍ່ອາດຕ້ານທານໄດ້ແລ້ວ ພຣະອົງຍັງໄດ້ພະຍາ ຍາມຈະປົດແອກອອກຈາກຝຣັ່ງຢູ່ສະເໝີ ດັ່ງທ່ານຜູ່ອ່ານທັງຫຼາຍຈະ ໄດ້ຮູ້ໃນຊີວະປະຫວັດຂອງພຣະອົງ ທີ່ຈະກ່າວຕໍ່ໄປ.

ເຈົ້າເພັດຊະຣາດ ເຖິງແມ່ນພຣະອົງເປັນຄົນຮັກຊາດຢ່າງແຮງກ້າ ໄດ້ພະຍາຍາມເຮັດປະໂຫຍດໃຫ້ແກ່ຊາດລາວເປັນອັນມາກ ແລະມີປະຊາຊົນພົນລະເມືອງທົ່ວປະເທດນັບຖືຮັກຫອມພຣະອົງ ກໍຕາມ ແຕ່ພຣະອົງກໍເປັນຄົນມີກຳ ຫຼື ມີເຄາະຮ້າຍຄອຍຂັດຂວາງການດຳເນີນການຂອງພຣະອົງຢູ່ສະເໝີ ດັ່ງທ່ານຜູ່ອ່ານ ຈະໄດ້ເຫັນໃນຊີວະປະຫວັດຂອງພຣະອົງ ຕອນຖືກຖອດອອກຈາກຕຳແໜ່ງມະຫາອຸປະຣາດ ໃນຄາວກູ້ ອິດສະລະພາບເປັນຕົ້ນ ການກ່າວເຖິງຊີວະປະຫວັດ ຂອງເຈົ້າມະຫາອຸປະຣາດ ເພັດຊະຣາດ ເຊິ່ງເປັນບຸກຄົນສຳຄັນຂອງຊາດນີ້ ຂ້າພະເຈົ້າຜູ່ຂຽນ ຂໍກ່າວຕາມແຕ່ສ່ວນທີ່ຂ້າພະເຈົ້າໄດ້ຮູ້ໄດ້ເຫັນ ແລະໄດ້ຟັງພຣະອົງເລົ່າໃຫ້ຟັງເປັນລາງຕອນທ່ໍນັ້ນ ສ່ວນໃດທີ່ຂ້າພະເຈົ້າບ່ໍຮູ້ບ່ໍເຫັນ ແລະບ່ໍໄດ້ຍິນ ຂ້າພະເຈົ້າຈະບ່ໍກ່າວເຖິງ ແລະການກ່າວເຖິງປະຫວັດຂອງເຈົ້າເພັດຊະຣາດ ໃນທີ່ນີ້ ຂ້າພະເຈົ້າບ່ໍໄດ້ມີເຈດຕະນາຈະກ່າວສຽດສີຍ່ົມຢູ່ຫຼືໃສ່ຮ້າຍທ່ານຜູ່ໃດເລີຍ ສະນັ້ນຂໍ້ຄວາມໃດທີ່ຂ້າພະເຈົ້າໄດ້ກ່າວຜິດພາດໄປ ຫຼືເລື່ອງຕ່າງໆຕອນໃດຕອນໜຶ່ງ ທີ່ຂ້າພະເຈົ້າບ່ໍໄດ້ກ່າວເຖິງເພາະບ່ໍຮູ້ດີ ຫຼືເວົ້າຜິດໄປຈາກທີ່ຜູ່ອື່ນຮູ້ກໍດີ ຂ້າພະເຈົ້າ ຂໍອະໄພໄວ້ທີ່ນີ້ເປັນຢ່າງສູງ.


ສີລາ ວີຣະວົງສ໌

ວຽງຈັນ, 1958

---

[1] ໄດ້ເກີດມີຂະບວນຕ່ໍສູ້ກູ້ຊາດ.

ແຜນຜັງສະແດງວົງກະກຸນເຈົ້າເພັດຊະຣາດ ແລະເຫດການສຳຄັນ



ประวัติศาสตร์ ปกรณัมและตำนานในผู้ปกครองลาว

ຕົ້ນວົງກະກູນຂອງເຈົ້າມະຫາອຸປະຣາດ ເພັດຊະຣາດ

ເຈົ້າມະຫາອຸປະຣາດ ເພັດຊະຣາດ ເຊິ່ງມີຜູ່ຂະໜານນາມພຣະອົງວ່າ: "ບຸຣຸດເຫຼັກ" ແຫ່ງລາຊະອານາຈັກລາວ ໃນຍຸກປະລະມານູນີ້ ພຣະອົງສືບເຊື້ອ ສາຍມາຈາກວົງກະສັດແຫ່ງນະຄອນລ້ານຊ້າງ ຫຼວງພຣະບາງ ນັບແຕ່ພຣະ ເຈົ້າອະນຸຣຸດທະ ລົງມາ ເຈົ້າເພັດຊະຣາດມີສັກທາງເຈົ້າ ເປັນຊັ້ນເຈົ້າລາຊະພາຄິໄນ (ເຊິ່ງເປັນຊັ້ນທີ 4). ລຳດັບສັກຂອງຊັ້ນເຈົ້າໃນວົງກະສັດ ລາວມີຢູ່ 5 ຊັ້ນຄື:

1. ເຈົ້າລາຊະບຸດ (ທຽບຊັ້ນເຈົ້າຟ້າຂອງໄທ)
2. ເຈົ້າລາຊະວົງ (ທຽບພຣະອົງເຈົ້າ)
3. ເຈົ້າລາຊະສຳພັນ (ທຽບໝ່ອມເຈົ້າ)
4. ເຈົ້າລາຊະພາຄິໄນ (ທຽບໝ່ອມລາຊະວົງ)
5. ເຈົ້າລາຊະດາໄນ (ທຽບໝ່ອມຫຼວງ)

ເຈົ້າເພັດຊະຣາດ ເຖິງແມ່ນພຣະອົງທ່ານມີສັກເປັນພຽງເຈົ້າລາຊະພາຄິໄນ (ໝ່ອມລາດຊະວົງຂອງໄທ) ແຕ່ພຣະອົງ ກໍໄດ້ຮັບສະຖາປະນາຂຶ້ນເປັນ ເຈົ້າມະຫາອຸປະຣາດ ແຫ່ງນະຄອນຫຼວງພະບາງ ທັງນີ້ກໍຍ້ອນວົງກະກູນ ທີ່ເຄີຍໄດ້ຮັບຕຳແໜ່ງນີ້ມາແລ້ວແຕ່ບູຣານຫຼາຍຊົ່ວຄົນນັ້ນເອງ ສະນັ້ນກ່ອນແຕ່ທ່ານຜູ່ອ່ານທັງຫຼາຍ ຈະໄດ້ອ່ານຊີວະປະຫວັດຂອງເຈົ້າມະຫາອຸປະຣາດ ເພັດຊະຣາດ (ບຸຣຸດເຫຼັກ ແຫ່ງລາຊະອານາຈັກລາວນີ້) ຂ້າພະເຈົ້າຂໍກ່າວລຳດັບວົງກະສັດນະຄອນຫຼວງພຣະບາງ ຕັ້ງແຕ່ໄດ້ແຍກອອກຈາກວຽງຈັນ ມາເປັນອານາຈັກໜຶ່ງ

ຕ່າງຫາກ ພໍເປັນແນວທາງປະກອບຄວາມຮູ້ໄວ້ແດ່ຈັກໜ່ອຍ ດັ່ງຕໍ່ໄປນີ້:

ນັບແຕ່ປີ ພ.ສ. 2249 (ຄ.ສ. 1706) ຄືນໄປ ປະເທດລາວຂອງເຮົາ ອັນມີນາມແຕ່ກ່ອນວ່າ "ກຸງສີສັດຕະນາຄະນະຫຸດຫຼືປະເທດລ້ານຊ້າງ" ນັ້ນ ເປັນລາຊະອານາຈັກອັນໜຶ່ງອັນດຽວກັນ ມີເຂດນ້ຳແດນດິນກວ້າງໃຫຍ່ໄພສານກວມສອງຝັ່ງແມ່ນ້ຳຂອງ ໂດຍກຳນົດເອົາສັນພູໃຫຍ່ສອງສັນຄືສັນພູແດນ ແກວ ແລະສັນພູດົງພະຍາໄຟເປັນເຂດແດນ ແລະມີພຣະມະຫາກະສັດປົກຄອງແບບສົມບູນລະບາຍາສິດທິລາດ ແຕ່ພະອົງດຽວ ສືບຕໍ່ກັນມາຕັ້ງແຕ່ສະໄໝຂຸນລໍ- ເຈົ້າຟ້າງຸ່ມ ລົງມາຈົນເຖິງສົມເດັດພຣະເຈົ້າສຸຣິຍະວົງສາທຳມິກະຣາດ ພ.ສ. 2233 (ຄ.ສ.1690) ເຖິງວ່າລາຊະອານາຈັກລາວຂອງເຮົາ ເຄີຍມີພຣະນະຄອນຫຼວງເປັນ 2 ນະຄອນ ຄື ຫຼວງພຣະບາງ ແລະວຽງຈັນກໍຕາມ ເຮົາກໍມີນາມປະເທດເປັນອັນດຽວ ຄື ປະເທດລ້ານຊ້າງ ຫຼື ກຸງສີສັດຕະນາຄະນະຫຸດ ດັ່ງກ່າວແລ້ວ ແລະເຖິງແມ່ນສົມເດັດພຣະເຈົ້າໄຊຍະເຊດຖາທິຣາດ ໄດ້ຍ້າຍ ພຣະນະຄອນຫຼວງຈາກນະຄອນຊຽງທອງ (ຫຼວງພຣະບາງ ທຸກວັນນີ້) ລົງມາ ຕັ້ງວຽງຈັນຂຶ້ນເປັນນະຄອນຫຼວງຂອງປະເທດ ເມື່ອ ພ.ສ. 2103 (ຄ.ສ.1560) ນັ້ນແລ້ວກໍຕາມ ລາຊະອານາຈັກລາວທັງໝົດ ກໍເປັນອັນໜຶ່ງອັນດຽວກັນຢູ່ ຕັ້ງແຕ່ເໜືອສຸດຈົນຮອດໃຕ້ສຸດ ແຕ່ຫາກ ພຣະອົງໄດ້ກຳນົດເອົາວຽງຈັນໃຫ້ເປັນນະຄອນຫຼວງຂອງປະເທດ. ສ່ວນ ນະຄອນຊຽງທອງ ອັນເປັນນະຄອນຫຼວງເກົ່ານັ້ນ ພຣະອົງໄດ້ຍົກໃຫ້ເປັນນະຄອນຂອງພຣະບາງ ເພາະເວລານັ້ນ ພຣະອົງບໍ່ໄດ້ເຊີນເອົາພຣະບາງລົງມານຳ ເອົາມາແຕ່ພຣະແກ້ວມໍລະກົດ ສ່ວນພຣະບາງ ເອົາໄວ້ໃຫ້ເປັນມິ່ງຂວັນຂອງຊາວເມືອງຊຽງທອງ ສະນັ້ນ ນະຄອນຊຽງ

ທອງຈິ່ງໄດ້ປ່ຽນນາມເປັນນະຄອນຫຼວງພຣະບາງ ຄືເປັນເມືອງຫຼວງ ທີ່ພຣະບາງສະຖິດຢູ່ນັ້ນເອງ ແຕ່ເມື່ອພຣະລາຊະອານາຈັກ ລ້ານຊ້າງ ອັນກວ້າງໃຫຍ່ໄພສານຂອງເຮົາ ໄດ້ຖືກແບ່ງແຍກກັນເມື່ອ ພ.ສ. 2250 (ຄ.ສ.1707) ໃນສະໄໝ ຂອງພຣະເຈົ້າໄຊຍະເຊດຖາທິຣາດ ທີ 2 (ພຣະໄຊອົ່ງເວ້) ຜູ່ເປັນລຸງ ກັບພຣະເຈົ້າກິ່ງກິດສະຣາດ ຜູ່ເປັນຫຼານ ໂດຍທີ່ພຣະໄຊອົ່ງເວ້ ໄດ້ວຽງຈັນ ແລະເຈົ້າກິ່ງກິດສະຣາດ ໄດ້ນະຄອນ ຫຼວງພຣະບາງແລ້ວ ລາຊະອານາຈັກລ້ານຊ້າງຈິ່ງໄດ້ແຍກອອກເປັນ ສອງຊ໋ຶ ແລະເປັນສອງອານາຈັກ ຄື ລ້ານຊ້າງວຽງຈັນ ກັບລ້ານຊ້າງ ຫຼວງພຣະບາງ ແລະແຕ່ນັ້ນມາ ວົງກະສັດລາວ ກໍໄດ້ແຕກແຍກກັນ ເປັນສອງສາຍຄື: ສາຍວຽງຈັນ ກັບສາຍຫຼວງພຣະບາງ ແຕ່ປັດຈຸບັນນີ້ ສາຍວຽງຈັນໄດ້ດັບສູນໄປແລ້ວ ຍັງຄົງເຫຼືອແຕ່ສາຍຫຼວງພຣະບາງ.

ວົງກະສັດສາຍຫຼວງພຣະບາງນີ້ເອງ ເປັນຕົ້ນວົງຂອງເຈົ້າມະ ຫາອຸປະຣາດ ເພັດຊະຣາດ ດັ່ງຈະໄດ້ຮູ້ຕໍ່ໄປນີ້:

1. ພຣະເຈົ້າກິ່ງກິດສະຣາດ (ຫຼານພຣະເຈົ້າສຸຣິຍະວົງສາ ແຫ່ງ ນະຄອນວຽງຈັນ) ໄດ້ເປັນເຈົ້າແຜ່ນດິນນະຄອນຫຼວງພຣະບາງ ໂດຍ ແຍກຈາກ ວຽງຈັນ ເມື່ອ ຄ.ສ. 1707 ດັ່ງກ່າວແລ້ວ.

2. ພຣະເຈົ້າອິນທະໂສມ (ພຣະອະນຸຊາຂອງເຈົ້າກິ່ງກິດສະຣາດ) ໄດ້ເປັນ ເຈົ້າແຜ່ນດິນຫຼວງພຣະບາງ ເມື່ອ ພ.ສ. 2266 (ຄ.ສ 1723).

3. ພຣະເຈົ້າ ໂຊຕິກະ (ໂອລົດອົ່ງທີ 1ຂອງພຣະເຈົ້າອິນທະໂສມ) ໄດ້ເປັນ ເຈົ້າແຜ່ນດິນຫຼວງພຣະບາງ ປີ ພ.ສ. 2292 - 2314 (ຄ.ສ. 1749-1771).

4. ພຣະເຈົ້າສຸຣິຍະວົງ (ໂອລົດອົ່ງທີ 7ຂອງພຣະເຈົ້າອິນທະໂສມ) ໄດ້ເປັນ ພຣະເຈົ້າແຜ່ນດິນຫຼວງພຣະບາງ ເມື່ອ ພ.ສ. 2314 (ຄ.ສ 1771)

ເຖິງ ພ.ສ. 2322 (ຄ.ສ.1779) ກໍໄດ້ເສຽເອກະລາດໃຫ້ແກ່ສະຫຍາມ ພ້ອມກັນກັບວຽງຈັນ ແລະກໍຍັງໄດ້ເປັນເຈົ້າແຜ່ນດິນ ພາຍໃຕ້ການປົກຄອງຂອງສະຫຍາມຕໍ່ມາ ຈົນເຖິງ ພ.ສ. 2334 (ຄ.ສ. 1791)


5. ພຣະເຈົ້າອະນຸຣຸດທະ (ໂອລົດອົງທີ 6 ຂອງພຣະເຈົ້າອິນທະໂສມ) ໄດ້ເປັນເຈົ້າແຜ່ນດິນຫຼວງພຣະບາງ ພາຍໃຕ້ການປົກຄອງຂອງສະຫຍາມ ແຕ່ ພ.ສ. 2334 ຕະຫຼອດມາຈົນເຖິງ ພ.ສ. 2361 (ຄ.ສ. 1817)

ພຣະເຈົ້າອະນຸຣຸດທະນີ້ເອງ ເປັນຕົ້ນກະກູນດັ້ງເດີມຂອງເຈົ້າ ມະຫາອຸປະຣາດ ເພັດຊະຣາດ ຕາມລຳດັບວົງດັ່ງນີ້ ຄື ພຣະເຈົ້າອະນຸຣຸດທະມີໂອລົດ 6 ອົງ ຄື:

1. ເຈົ້າມັນທາຕຸຣາດ
2. ເຈົ້າສຸດທະຣາດ
3. ເຈົ້າໄຊຍະຣາດ
4. ເຈົ້າຣາດຊະໄຟ
5. ເຈົ້າອຸ່ນແກ້ວ (ຕົ້ນກະກູນເຈົ້າເພັດຊະຣາດ)
6. ເຈົ້າຊ້າງ.

ແຜນຜັງ ລຳດັບເຫດການ

ຂອງ ອານາຈັກລ້ານຊ້າງ ແຕ່ ຄ.ສ 1707 ມາ



ເຈົ້າມັນທາຕຸຣາດ:

ໄດ້ເປັນເຈົ້າແຜ່ນດິນ ຄ.ສ. 1817 ເຖິງ ຄ.ສ. 1836 ກໍສ້ຽງພຣະຊົນ.

1. ເຈົ້າສຸກຂະເສີມ:

ໂອລົດອົງທີ 1 ຂອງພຣະເຈົ້າມັນທາຕຸຣາດ ເປັນເຈົ້າແຜ່ນດິນຫຼວງພຣະບາງ ເມື່ອ ຄ.ສ. 1838 ແລະໄດ້ຕັ້ງ ເຈົ້າອຸ່ນແກ້ວ (ພຣະໂອລົດທີ 5 ຂອງ ພຣະເຈົ້າອະນຸຣຸດທະ) ເຊິ່ງເປັນນ້ອງຂອງພຣະເຈົ້າມັນທາຕຸຣາດ ເປັນເຈົ້າອຸປະຣາດ ຕໍ່ຈາກນີ້ໄປເຮົາຈຶ່ງລຳດັບວົງຕະກຸນຂອງເຈົ້າມະຫາອຸປະຣາດ ເພັດ ຊະຣາດ ເປັນລຳດັບ ນັບແຕ່ເຈົ້າອຸປະຣາດອຸ່ນແກ້ວ ມາດັ່ງນີ້:

1. ເຈົ້າສີວິສາ
2. ເຈົ້າສຸວັນນະພຣົມມາ
3. ເຈົ້າຄຳມ້າວ ຫຼື ເຈົ້າກ່ຳ
4. ເຈົ້າທອງຄຳ.

2. ເຈົ້າມະຫາອຸປະຣາດ ສຸວັນນະພຣົມມາ

ເຈົ້າສຸວັນນະພຣົມມາ ໂອລົດອົງທີ 2 ຂອງເຈົ້າມະຫາອຸປະຣາດ ອຸ່ນແກ້ວ ປະສູດເມື່ອວັນພຸດ ເດືອນ 3 ເພັ້ງ ຈຸນລະສັກກະຣາດ 1186 (ຄ.ສ. 1824) ທີ່ ນະຄອນຫຼວງພຣະບາງ ໄດ້ຮັບສະຖາປະນາຂຶ້ນເປັນ ເຈົ້າມະຫາອຸປະຣາດ ປີ ຄ.ສ. 1878 ເມື່ອພຣະຊົນໄດ້ 54 ປີ ໃນ ແຜ່ນດິນຂອງພຣະເຈົ້າມະຫິນທຣະເທບປະພາກອນ (ອຸ່ນຄຳ) ພຣະອົງມີພຣະຊາຍາຫຼາຍ ແລະ ມີໂອລົດ ແລະ ທິດາກໍຫຼາຍ ຄືມີໂອລົດເຖິງ

19 ອົງ ແລະ ທິດາ 31 ອົງ ປະສູດຈາກ ມານດາຕ່າງກັນ ໂອລົດ 19 ອົງນັ້ນ ມີຄື:

1. ເຈົ້າບຸນຄົງ (ໄດ້ເປັນອຸປະຣາດ ແລະ ເປັນພຣະບິດາ ຂອງ ເຈົ້າເພັດຊະຣາດ)
2. ເຈົ້າສຸວັນນະພາລົມ
3. ເຈົ້າໂສມລັກຂະນາ
4. ເຈົ້າສີທຳມາລົດ
5. ເຈົ້າທະນະອຸດົມ
6. ເຈົ້າສຸຣິນທອນ
7. ເຈົ້າສີຣິວັດທະນາຈັນ
8. ເຈົ້າສີລາວັນ
9. ເຈົ້າບຸນຍະສານ
10. ເຈົ້າທຳມະກິດຕິ
11. ເຈົ້າຈິນດາວົງ
12. ເຈົ້າລາຊະວັດ
13. ເຈົ້າຮັດຕິຍະວົງ
14. ເຈົ້າສຸດາເດດ
15. ເຈົ້າລາຊະວະດີ
16. ເຈົ້າສີທຳມະຣາດ
17. ເຈົ້າສຸຣິຍະວົງ
18. ເຈົ້າສິງຫະນາດ
19. ເຈົ້າທຳມະທາດາ

3. <u>ເຈົ້າມະຫາອຸປະຣາດບຸນຄົງ</u>

ເປັນໂອລົດອົງທີ 1 ຂອງເຈົ້າມະຫາອຸປະຣາດສຸວັນນະພຣົມມາ ປະສູດ ວັນອາທິດ ເດືອນ 7 ອອກໃໝ່ 2 ຄ່ຳ ຈຸນລະສັກກະຣາດ 1219 (ຄ.ສ. 1857) ໄດ້ຮັບຕຳແໜ່ງເປັນມະຫາອຸປະຣາດ ປີ ຄ.ສ. 1890 ເມື່ອພຣະຊົນໄດ້ 33 ປີ ສ້ຽງພຣະຊົນເມື່ອປີຄ.ສ.1921 ໂຮມພຣະຊົນໄດ້ 63 ປີ ພຣະອົງມີພຣະຊາຍາ ແລະໜ່ອມຫຼາຍຄົນ ມີໂອລົດ ແລະ ທິດາ ທີ່ເກີດຈາກມານດາຕ່າງກັນ ເປັນຊາຍ 11 ແລະ ເປັນຍິງ 13 ດັ່ງນີ້:

1. ເຈົ້າສະມຸດຊາຍຄຳ (ປະສູດຈາກເຈົ້ານາງຄຳຄີ້ມ ອັກຄະຊາຍາ)
2. ເຈົ້າຊາຍຈິດຕະຣາດ
3. ເຈົ້າຊາຍເພັດຊະຣາດ
4. ເຈົ້າຊາຍສຸວັນນະພາລົມ
5. ເຈົ້າຊາຍສຸວັນນະພູມມາ
6. ເຈົ້າຍິງສະຫງ່າຄຳ.
7. ເຈົ້າຍິງສະຫງ່ຽມຄຳ
8. ເຈົ້າຍິງຄຳຫຼ້າ

7 ອົງນີ້ ປະສູດຈາກ ເຈົ້ານາງສີທອງ ນ້ອງສາວ ເຈົ້ານາງຄຳຄີ້ມ.

9. ເຈົ້າຍິງແສງສຸຣິຈັນ (ປະສູດຈາກເຈົ້ານາງຄຳແວ່ນ)

10. ເຈົ້າຊາຍອັດຕິຍະວົງ
11. ເຈົ້າຍິງວັດທະນາ

2 ອົງນີ້ ປະສູດຈາກ ເຈົ້ານາງໂສມຣັດສະໝີ

12. ເຈົ້າຍິງພິດສະໄໝ (ປະສູດຈາກເຈົ້ານາງທອງດີ)

13. ເຈົ້າຍິງສຸນັນທາໄລ (ປະສູດຈາກເຈົ້ານາງຄຳປຸ)
14. ເຈົ້າຍິງຄຳຊາວ (ປະສູດຈາກເຈົ້າຍິງຄຳປານ)

15. ເຈົ້າຍິງສຸວັນນະນາຣີ
16. ເຈົ້າຍິງອິ່ນຄຳ
17. ເຈົ້າຊາຍສຸວັນນະຣາດ

} 3 ອົງນີ້ປະສູດຈາກ ໜ່ອມບົວໄຂ

18. ເຈົ້າຍິງສີສະຫວັດສະດີ
19. ເຈົ້າຊາຍຍັດຕິຍະຣາດ
20. ເຈົ້າຊາຍຈິນດາວົງ
21. ເຈົ້າຊາຍສິງຫະນາດ

} 4 ອົງນີ້ ປະສູດຈາກໜ່ອມທິບ


22. ເຈົ້າຍິງທະວີວັນ
23. ເຈົ້າຈິນດາຣັດສະໝີ
24. ເຈົ້າສຸພານຸວົງ

} 3 ອົງນີ້ ປະສູດຈາກໜ່ອມຄຳອ້ວນ

4. ເຈົ້າມະຫາອຸປະຣາດເພັດຊະຣາດ

ເຈົ້າມະຫາອຸປະຣາດເພັດຊະຣາດ ເປັນໂອລົດອົງທີ 3 ຂອງ ເຈົ້າມະຫາ ອຸປະຣາດບຸນຄົງ ເຊິ່ງສືບກະກູນຈາກ ເຈົ້າມະຫາອຸປະ ຣາດອຸ່ນແກ້ວ ເປັນຕົ້ນເດີມ ດັ່ງນັ້ນ ເຈົ້າເພັດຊະຣາດເມື່ອພຣະອົງພັດ ພາກບ້ານເມືອງໄປຢູ່ປະເທດໄທ ໃນຄາວກູ້ຊາດ ພຣະອົງຈຶ່ງໃສ່ນາມ

ສະກຸນຂອງພຣະອົງວ່າ ຣັດຕະນະວົງສາ ເພາະສືບເນື່ອງມາຈາກເຈົ້າ ມະຫາອຸປະຣາດອຸ່ນແກ້ວ ເຈົ້າເພັດຊະຣາດ ປະສູດ ວັນອາທິດ ເດືອນ ຍີ່ ແຮມ 14 ຄ່ຳ ປີກັດເປົ້າ ຈຸນລະສັກກະຣາດ 1251 ເວລາແຖໃກ້ທ່ຽງ (10 ໂມງ 30 ນາທີ) ກົງກັບວັນທີ 1 ກຸມພາ ພ.ສ. 2432 (ຄ.ສ. 1890) ທີ່ໂຮງວັງໜ້າ ນະຄອນຫຼວງພຣະບາງ ມີດວງພຣະຊາຕາ ເຊິ່ງໝໍໂຫນ ໄດ້ຜູກໄວ້ດັ່ງນີ້:





ເຈົ້າມະຫາອຸປະຣາດບຸນຄົງ (ພຣະບິດາ ຂອງເຈົ້າເພັດຊະຣາດ)
ເປັນໂອຣົດອົງທີ 1 ຂອງເຈົ້າມະຫາອຸປະຣາດສຸວັນນະພຣົມມາ
ປະສູດ ວັນອາທິດ ເດືອນ 7 ອອກໃໝ່ 2 ຄ່ຳ ຈຸນລະສັກກະຣາດ 1219
(ຄ.ສ. 1857) ໄດ້ຮັບຕຳແໜ່ງເປັນມະຫາອຸປະຣາດ ປີ ຄ.ສ. 1890

ภาบสึกสา

ตามปะเพนิภะภูบเจ้าบายลาอ ອັบถืสิบเมื่อງภับมาแต่ แบบย่าๆปะเพนิภะภูบภะสัดไทตั้ງแต่บูธาบ ເมื่ອบุดพ๎าบเจ้า บายใหย่อื้บมาได้ 5 ห๎ื 6 ຂอบ ภ๋จัดภาบให้ธรูบพังสึลาอ และ จำเพาะในสะไพขอๆ เจ้ามะหาอุปะธาดบุบคิๆ ผธะบิดาขอๆ เจ้าเผัดชุะธาดนี้ ภ๋ต้อๆธรูบพังสึ ไทบำอิภ เผาะเอลาบั้บ ลาอ อื้บยู่ในถอามปึภถอๆขอๆสะหยาม เมื่ออ่าบพังสึลาอ และ ไท ได้แล้วจ่ๆธรูบพังสึทำ ห๎ิ บาลิต่ำไป เพื่อให้มิ ถอามธู้ในด้าบภาบ ปึภถอๆ ภาบอับมะถะถิ อักสอบสาด เลภและอื่บๆ บั้บต้อๆธรูบ จาภวัด ห๎ิจาภตำราอับเป้บพาสาบาลิทั้ๆมอบ แต่สำหับ เจ้า เผัดชุะธาด ผธะอ๎ๆบอภว่าผธะอ๎ๆบ่ได้เฮ้าธรูบพังสึตามภำบิด บี้ ได้เฮ้าธรูบพังสึลาอต่ำเมื่ออายุได้ 7 ปีปายแล้วทั้งบี้ ภ๋ย้อบ ผธะบิดา เอลาไปภวดลาชุะภาบในแขวๆ ห๎ิ ห๊อเมื๋องต่างๆได้ เอ๊าติดต้อยห้อยตามไปบำสะเพ็.

ในถาวบึ่ๆ ข้าหูวๆใหย่ฝรั่งชื่ บูโลส ได้อื้บไปภวดลาชุะ ภาบในแขวๆพาภเหื๋อ โดยมิเจ้ามะหาอุปะธาดบุบคิๆผธะบิดา เจ้าเผัดชุะธาด เป้บผู่บำทางห๎ิผู่พาไป และในถาวบั้บ เจ้าเผัด ชุะธาดเซิ่ๆมิอายุได้ 7 ปี ภ๋ได้ติดตามไปด้อย และไปพักเซ๊า ยู่เมื๋องห้อยชาย เมื่อผธะบิดา กับข้าหูวๆฝรั่งอื้บจาภเธ๊อ ไป ภิบอาหาบยู่ที่ป้อมทะหาบ เจ้าเผัดชุะธาด กับเจ้าจิดตะธาด พี่ชายและจาบเพ๊า (ต่ำมาได้เป้บ พะยาพันทะบะลูภห้าอ) พา

ກັນຢູ່ເຮືອ ເຈົ້າເພັດຊະຣາດ ໄດ້ເອົາຂັນເງິນ ຕັກນ້ຳທີ່ແຄມເຮືອສາດ ຫຼີ້ນ ເລີຍຫ໊ວສັກລົງນ້ຳຈົມລົງເຖິງພື້ນນ້ຳຂອງ ພໍຕັ້ງສະຕິໄດ້ ກໍເອົາຕີນ ທັ້ງສອງຢັນແກ່ງແກ້ຈົ່ງດອນຂຶ້ນມາໄດ້ ແລະເດ່ມືຂຶ້ນ ເມື່ອຂຶ້ນເທິງ ເຮືອໄດ້ແລ້ວ ກໍພາກັນນັດກັນບໍ່ໃຫ້ປາກຢ້ານພຣະບິດາຈະລົງໂທດ.ເຖິງ ປີ ພ.ສ. 2439 ເມື່ອກັບເຖິງນະຄອນຫຼວງພຣະບາງ ຈົ່ງໄດ້ເຂົ້າໂຮງຮຽນ ພາສາລາວ ທີ່ອາໄສຮຽນຢູ່ຕາມລະບຽງໂຮງຫຼວງ ໂດຍແມ່ນເຈົ້າສີ ທຳມະລົດ ເປັນຄູສອນ.


ພໍເຂົ້າໂຮງຮຽນຮຽນໜັງສືລາວບໍ່ໄດ້ທໍ່ໃດເດືອນ ຝຣັ່ງກໍມາຈັດ ຕັ້ງໂຮງຮຽນຝຣັ່ງຂຶ້ນທີ່ນະຄອນຫຼວງພຣະບາງ ໂດຍເອົາສິມວັດສີເກີດ ເປັນໂຮງຮຽນ ແລ້ວພວກເຈົ້ານາຍກໍສົ່ງບຸດຫຼານຂອງຕົນໄປເຂົ້າຮຽນ ທີ່ໂຮງຮຽນ ຄູສອນພາສາຝຣັ່ງ ຊື່ໂລບີ ແລະຄູສອນພາສາລາວ ຊື່ ພຣະຍາສຣີສັດທຳ ຕໍ່ມາ ກໍແມ່ນເຈົ້າພິມ ເຊິ່ງໄດ້ຮຽນໜັງສືໄທມາ ຈາກປະເທດສະຫຍາມ ແລະເປັນຜູ່ທີ່ໄດ້ນຳເອົາລົດຖີບ ເຂົ້າມາໃນ ເມືອງລາວເປັນຄົນແຮກດ້ວຍ. ຕໍ່ມາ ເຖິງປີ ພ.ສ. 2440 ນາຍຄູຝຣັ່ງ ຖືກຍ້າຍໄປຢູ່ເມືອງໄຊງ່ອນ ບໍ່ມີຄູຈະສອນພາສາຝຣັ່ງ ຕໍ່ໄປ ໂຮງຮຽນ ຈຳຕ້ອງຢຸດ ດັ່ງນັ້ນ ພຣະບິດາຈົ່ງໃຫ້ເຈົ້າເພັດຊະຣາດ ແລະ ເຈົ້າຈິດ ຕະຣາດບວດເປັນສາມະເນນຢູ່ວັດທາດຫຼວງແລ້ວກໍໃຫ້ໄປຮຽນພາສາ ບາລີຢູ່ນຳພະຍາສຣີສັດທຳ ຕາມແບບບູຮານຈົນເຖິງປີ ພ.ສ. 2444 (ຄ.ສ. 1901) ຈົ່ງຮຽນສູດຕະສິນທິ ກັບ ສູດຕະນາມ.

ແຮກຮຽນພາສາຝຣັ່ງ

ພໍຮຽນສູດຕະນາມສຸດແລ້ວ ຈະຕັ້ງຕົ້ນຮຽນແປ ຄຳພີ (ທຳມະ ບົດ) ພໍດີຝຣັ່ງກໍມາຕັ້ງໂຮງຮຽນຂຶ້ນອີກ ໂຮງຮຽນບ່ອນໃໝ່ນີ້ ຕັ້ງໃ ສ່ວັງຫຼວງເກົ່າ ໂດຍເອົາຊັ້ນລ່າງເປັນຫ້ອງຮຽນ ຊັ້ນເທິງເປັນບ່ອນ ນອນຂອງນັກຮຽນ ຄູຝຣັ່ງ ຊື່ ນາງກະໂຣເຊ ຄູຄົນລາວຊື່ທ້າວເພົ້າ ເຊິ່ງ ໄດ້ຮຽນໜັງສືຝຣັ່ງມາຈາກໄຊ່ງ່ອນ ເມື່ອໂຮງຮຽນສອນພາສາຝຣັ່ງ ແຫ່ງນີ້ຕັ້ງຂຶ້ນແລ້ວ ເຈົ້າເພັດຊະຣາດ ພ້ອມດ້ວຍລູກຫຼານເຈົ້ານາຍ ຫຼາຍຄົນກໍໄດ້ເຂົ້າໂຮງຮຽນຢູ່ໃນໂຮງຮຽນນີ້ ຈົນເຖິງປີ ພ.ສ. 2445 (ຄ.ສ 1902) ສົມເດັດພຣະເຈົ້າສັກກະຣິນ ຈະສະເດັດ ໄປເມືອງ ຣາໂນຍ ເພື່ອຢາມຄຳນັບຂ້າຫຼວງໃຫຍ່ຝຣັ່ງ ເຈົ້າອຸປະຣາດບຸນຄົງ ຢູ່ຮັກສາ ເມືອງ ຈຶ່ງແຕ່ງໃຫ້ເຈົ້າຈິດຕະຣາດກັບເຈົ້າເພັດຊະຣາດ ສອງອ້າຍ ນ້ອງຕິດຕາມ ແຫ່ພຣະເຈົ້າສັກກະຣິນໄປເມືອງຣາໂນຍ ໂດຍທາງນ້ຳ ຂອງ ຜ່ານນະຄອນວຽງຈັນ ໄປຂຶ້ນເຮືອໄຟທີ່ປາກນ້ຳຫີນບູນ ແລ້ວລົງ ເຮືອໄປຕາມລຳນ້ຳຫີນບູນໄປຂຶ້ນບົກທີ່ແກ້ງເຈັກແລ້ວກໍມີກະບວນຊ້າງ ມາຄອຍຮັບ ເດີນທາງບົກໄປເມືອງຄຳມ່ວນ ຄຳເກີດ ຂ້າມໄປຫາ ເມືອງວິນປະເທດອານາມ ຈາກເມືອງວິນ ຈຶ່ງລົງເຮືອຕໍ່ປີໂດຝຣັ່ງ ອອກທະເລໄປຈອດທ່າໄຮຟອງ ແລ້ວຈຶ່ງຂຶ້ນລົດໄຟ ໄປເມືອງ ຣາໂນຍ ເວລາກັບຄືນມາ ໄດ້ກັບມາທາງເມືອງໄລ່ເຈົ້າ ລ່ອງຕາມຮູແມ່ນ້ຳແທ ຈາກເມືອງໄລ່ເຈົ້າ ອັນເປັນບ້ານນ້ອຍໆ ຢູ່ເທິງພູ ຜ່ານມາທາງເມືອງ ແຖງ (ຫຼືແຖມຄິດຮຽນບຮຽນຟູ) ໂດຍກະບວນມ້າຈາກເມືອງແຖງ ຈຶ່ງລົງ ເຮືອຕາມຮູ ນ້ຳຍົມ ແລະນ້ຳນາບ ມາເຖິງນ້ຳອູ ອອກປາກອູ ລ່ອງຕາມ ນ້ຳຂອງມາຫຼວງພຣະບາງ ຈົນເຖິງ ພ.ສ. 2446 ຈຶ່ງເຖິງນະຄອນ

ຫຼວງພຣະບາງ ແລ້ວຈຶ່ງເຂົ້າຮຽນໜັງສືຕໍ່ໄປອີກ ຮຽນໄດ້ພຽງປີກຽວ ໂຮງຮຽນກໍອັດອີກເພາະບໍ່ມີຄູສອນ ສະນັ້ນເມື່ອເຖິງປີ ພ.ສ. 2447 (ຄ.ສ.1904) ຂ້າຫຼວງໃຫຍ່ຝຣັ່ງຊື່ທ່ານມາເຣ ມາຢາມນະຄອນຫຼວງ ພຣະບາງ ພຣະບິດາຈຶ່ງໄດ້ຝາກເຈົ້າຈິດຕະຣາດ ກັບເຈົ້າເພັດຊະ ຣາດໃຫ້ໄປນຳທ່ານຂ້າຫຼວງ ເພື່ອໃຫ້ໄປເຂົ້າໂຮງຮຽນຢູ່ເມືອງໄຊ ງ່ອນ ເມື່ອເຖິງໄຊງ່ອນແລ້ວກໍໄດ້ເຂົ້າຮຽນ ຢູ່ໃນໂຮງຮຽນ ຊາສເຊີລູ ໂລບາ ແລະບ່ອນໜີ້ໄດ້ມີນັກຮຽນລາວເຂົ້າຮຽນຢູ່ແລ້ວຫຼາຍຄົນຄື: ທາງຫຼວງພຣະບາງ ແມ່ນເຈົ້າປັນຍາທິບ ກັບເຈົ້າ ອຸ່ນຄຳ ເມືອງ ໂຂງແມ່ນ ທ້າວຄຳຜຸຍ ທ້າວໝູ້ນ້ອຍ ແລະ ທ້າວກຸ ອະໄພ ເມືອງ ອັດຕະປື ແມ່ນທ້າວບຸນລ້ຽງ, ສະຫວັນນະເຂດ ແມ່ນທ້າວຊ່ຽນກັບ ທ້າວໜໍ່ເງິນ, ທາງຈຳປາສັກ ມີເຈົ້າອຸຍ (ເຈົ້າສັກປະເສີດ). ເຈົ້າເພັດຊະ ຣາດເຂົ້າຮຽນຢູ່ຊັ້ນປ.1 ເຊິ່ງເປັນຊັ້ນຕ່ຳກວ່ານັກຮຽນລາວທຸກຄົນ ທີ່ ຮຽນຢູ່ໃນໂຮງຮຽນນີ້ ຮຽນມາໄດ້ສອງເດືອນ ໂຮງຮຽນກໍພັກ ພາກຮຽນ ແລະໃນຂະນະທີ່ພັກເດືອນທັນວານີ້ເອງ ເຈົ້າອຸຍ ຫຼື ເຈົ້າສັກປະເສີດ ກໍລົງເຮືອໄຟ ໜີໄປກຸງເທບ ເພາະບໍ່ພໍໃຈໃນການທີ່ ນະຄອນຈຳປາສັກ ມາຕົກເປັນຂອງຝຣັ່ງ ຕາມສັນຍາລະຫວ່າງ ຝຣັ່ງກັບສະຫຍາມ ເມື່ອວັນທີ 13 ກຸມພາ ຄ.ສ. 1904.

ເຖິງປີ ຄ.ສ. 1905 ເດືອນມີຖຸນາ ມີຝຣັ່ງຄົນໜຶ່ງຊື່ ລາດຣິເຢ ໄປຈາກ ວຽງຈັນ ໄດ້ຮັບເອົາເຈົ້າຈິດຕະຣາດແລະເຈົ້າເພັດຊະຣາດ ໄປ ຮຽນໜັງສືທີ່ ປະເທດຝຣັ່ງ ແລະໄດ້ເຂົ້າຮຽນຢູ່ໂຮງຮຽນໂກໂລນີຍາລ (Colonial)ໂຮງຮຽນນີ້ລັດຖະບານຝຣັ່ງຕັ້ງຂຶ້ນສຳລັບອົບຮົມຜູ່ຈະໄປ ເປັນຂ້າລາຊະການຝ່າຍປົກຄອງໃນປະເທດຫົວເມືອງຂຶ້ນ ແບ່ງເປັນ



→ ເສັ້ນທາງ ເຈົ້າເພັດຊະຣາດ ຈາກຫລວງພະບາງ ຫາ ຣາໂນຍ ໃນປີ 1902 - 1903

2 ພາກ ຄື ພາກອິນດູຈີນ ແລະພາກອາມານິຄົມ ໃນທະວີບອາຟຣິກາ ຫຼັກສູດແມ່ນວິຊາການປົກຄອງປະເພນີສາສະໜາ ແລະພາສາພື້ນ ເມືອງທໍ່ນັ້ນ ຄືພວກຈະມາອິນດູຈີນ ຕ້ອງໄດ້ຮັບຄວາມແນະນຳກ່ຽວກັບ ພຸດທະສາສະໜາແລະຮີດຄອງປະເພນີຂອງຫວຽດນາມ ຂະເໝນ ລາວ ແລະຕ້ອງຮຽນພາສາໃດພາສາໜຶ່ງໃນສາມພາສານີ້ ນອກນັ້ນ ຍັງ ສອນພາສາໄທ ໃຫ້ຜູ່ຕ້ອງການຮຽນອີກດ້ວຍ.

ການຮຽນໜັງສືຂອງເຈົ້າເພັດຊະຣາດກັບພີ່ຊາຍ ຢູ່ທີ່ປະເທດ ຝຣັ່ງ ແມ່ນຮຽນບໍ່ທັນເຂົ້າ ເພາະທີ່ໂຮງຮຽນນັ້ນ ສອນຄວາມຮູ້ຕັ້ງ ແຕ່ມັດທະຍົມ 1 ຂຶ້ນໄປ ສ່ວນເຈົ້າເພັດຊະຣາດ ມີຄວາມຮູ້ພຽງຊັ້ນ ປ.4 ທໍ່ນັ້ນ ຈຶ່ງຮຽນໄປບໍ່ໄດ້ ແລະບໍ່ແມ່ນແຕ່ເຈົ້າເພັດຊະຣາດ ກັບ ເຈົ້າຈິດຕະຣາດ ທໍ່ນັ້ນ ພວກລູກເຈົ້າເມືອງ ເຈົ້ານາຍ ທີ່ໄປຈາກ ເມືອງ ຕ່າງໆກໍຄືກັນ ສະນັ້ນທາງການຝຣັ່ງ ຈຶ່ງໄດ້ຈັດອາຈານພິເສດມາສອນ ໃຫ້ພວກທີ່ຮຽນບໍ່ທັນນີ້ ພໍໃຫ້ມີຄວາມຮູ້ທີ່ຈະເຂົ້າຮຽນຊັ້ນມັດທະຍົມ ໄດ້ ເຈົ້າເພັດຊະຣາດ ພໍຮຽນມາໄດ້ 6 ເດືອນເຫັນວ່າ ມີຄວາມເຂົ້າໃຈ ພາສາຝຣັ່ງ ພໍຈະເຂົ້າຮຽນໃນໂຮງຮຽນມັດທະຍົມໄດ້ແລ້ວ ຈຶ່ງໄປຮ້ອງ ຂໍລັດຖະມົນຕີປະເທດອາມານິຄົມ ໃຫ້ເຂົ້າຊ່ວຍເວົ້ານຳຫົວໜ້າໂຮງ ຮຽນໃຫ້ ແຕ່ພໍກັບມາຈາກກະຊວງອາມານິຄົມ ກໍຖືກຫົວໜ້າໂຮງຮຽນ ຮ້ອງໄປທຳໂທດ ກັກບໍ່ໃຫ້ອອກທ່ຽວ ໃນເວລາຢຸດຮຽນເປັນເວລາສາມ ເດືອນຖານໄປຫາລັດຖະມົນຕີໂດຍບໍ່ຄອບຫົວໜ້າໂຮງຮຽນກ່ອນ. ເລື່ອງ ນີ້ເອງພາໃຫ້ເຈົ້າຈິດຕະຣາດ ຜູ່ເປັນພີ່ຊາຍຂອງເຈົ້າເພັດຊະຣາດຊັງ ຝຣັ່ງແລະຢ້ານຝຣັ່ງເປັນທີ່ສຸດ ຈຶ່ງໄດ້ຂໍລາກັບຄືນມາປະເທດລາວ ໃນປີ ຄ.ສ. 1907 ຕໍ່ແຕ່ນັ້ນມາ ເຈົ້າເພັດຊະຣາດຈຶ່ງໄດ້ເຂົ້າຮຽນຢູ່ໃນ ໂຮງຮຽນມັດທະຍົມມົງເຕເຢ ໃນຜະແນກວິທະຍາສາດກັບພາສາຕ່າງ

ປະເທດຄືພາສາອັງກິດ ສະນັ້ນ ເມື່ອເວລາພັກໂຮງຮຽນເຈົ້າເພັດຊະ ຣາດ ຈຶ່ງຂ້າມໄປທ່ຽວ ແລະພັກຢູ່ປະເທດອັງກິດສະເໝີເພື່ອແອບຝຶກ ພາສາອັງກິດ ແລະເຄີຍໄປເຊົ້າຢູ່ເຮືອນຂອງມິສຕີເລນິນຜູ່ເປັນອາ ຈານ ສອນວິຊາດາຣາສາດ ແລ້ວກໍເກີດຄວາມສົນໃຈໃນເລື່ອງດາຣາ ສາດ ແລະໂຫຣາສາດ ຕັ້ງແຕ່ນັ້ນມາ ເພາະໄດ້ສັງຄົມກັບອາຈານສອນ ດາຣາສາດ ແລະໄດ້ສັງເກດການເດີນຂອງດາວຕ່າງໆຈາກກ້ອງໂທ ລະທັດຂະໜາດໃຫຍ່ຂອງອາຈານນັ້ນດ້ວຍ ເພາະສະນັ້ນເຈົ້າເພັດຊະ ຣາດຈຶ່ງເປັນນັກຄົ້ນຄວ້າຫຼັກເກນຕ່າງໆ ຂອງເລກໂຫຣາສາດບູຮານ ເປັນຄົນແຮກ ແລະໄດ້ແຕ່ງຫຼັກຄຳນວນປະຕິທິນລາວໄວ້ດ້ວຍ ເຊິ່ງຢູ່ ໃນຫຼັກນັ້ນ ພຣະອົງທ່ານໄດ້ຕັ້ງພຣະໄທໄວ້ວ່າ ຈະປ່ຽນຫຼັກເກນແຫ່ງ ການຄຳນວນລາງຕອນ ແລະຈະສະເໜີຫຼັກເກນປະຕິທິນໃໝ່ນີ້ຕໍ່ລັດ ຖະບານ ເພື່ອໃຫ້ການສະໜັບສະໜູນ ຖືເປັນຫຼັກການທຳປະຕິທິນລາວ ສືບໄປ ແຕ່ອະນິຈາ ພຣະອົງກໍຟ້າວມາສະຫຼະໂລກນີ້ໄປເສຽກ່ອນທີ່ ຈະແກ້ຫຼັກເກນ ເຮັດປະຕິທິນລາວນີ້ໃຫ້ສຳເລັດຮຽບຮ້ອຍກ່ອນ ຂ້າພະ ເຈົ້າ (ຜູ່ຂຽນ) ໄດ້ຮຽນຮູ້ ຫຼັກເກນຂອງພຣະອົງທ່ານດີຢູ່ ແລະເຫັນຊອບ ດ້ວຍທຸກປະການ ແຕ່ຫາກຍັງບໍ່ສາມາດຈະນຳຫຼັກເກນນັ້ນອອກໄປປະ ຕິບັດໄດ້ເພາະເປັນການຂັດຕໍ່ຫຼັກເກນທີ່ເຄີຍປະຕິບັດມາ ແຕ່ເຖິງຢ່າງ ໃດກໍຕາມ ຂ້າພະເຈົ້າກໍຍັງຈະພະຍາຍາມຕໍ່ໄປ.

ປີ ຄ.ສ.1908 ເມື່ອກັບມາຈາກໄປພັກຢູ່ປະເທດອັງກິດແລ້ວກໍ ໄດ້ເຂົ້າຮຽນ ຢູ່ໃນໂຮງຮຽນມັດທະຍົມເຊັນຕ໌ລູຍ, ຢູ່ມາເຖິງປີ1910 ໂຮງ ຮຽນພັກເທີມໄດ້ກັບຄືນມາປະເທດລາວ ຕາມຄຳສັ່ງຂອງພຣະບິດາ ເມື່ອມາເຖິງນະຄອນຫຼວງພຣະບາງແລ້ວ ພຣະບິດາກໍຈັດການໃຫ້ອຸ

ປະສົມບົດເປັນພິກຂຸ ເຊິ່ງຢູ່ຟາກຝັ່ງຂອງ ທາງກົງກັນຂ້າມ ກັບນະຄອນ ຫຼວງພຣະບາງຢູ່ວັດໜອງສະແກ້ວ. ຄັນລາຜະໜອດແລ້ວ ກໍໄດ້ເຂົ້າ ຮັບລາຊະການ ເປັນຜູ່ແຕ່ງໜັງສືຢູ່ກອງການຄັງເງິນ ຫຼວງພຣະບາງ ແລະແລ້ວພຣະບິດາຈຶ່ງໄດ້ຈັດການໃຫ້ອະພິເສກສົມລົດ ກັບເຈົ້າຍິງຄຳ ແວ່ນພຣະເຊດຖະພະຄີນີ (ເອື້ອຍ) ຂອງສົມເດັດພຣະເຈົ້າສີສະຫວ່າງວົງ ພຣະເຈົ້າແຜ່ນດິນແຫ່ງລາຊະອານາຈັກລາວ ເຊິ່ງເວລານັ້ນເປັນ ນາງ ໜ້າຍແລະມີພະຊົນແກ່ກວ່າເຈົ້າເພັດຊະຣາດຕັ້ງຫຼາຍປີ ທັງນີ້ເພື່ອ ເປັນການປະສານຮອຍຮ້າວລະຫວ່າງກະກູນວັງໜ້າກັບ ກະກູນວັງ ຫຼວງທີ່ໄດ້ເຄີຍມີມາແຕ່ກ່ອນ. ເຈົ້າເພັດຊະຣາດ ເມື່ອອະພິເສກສົມ ລົດແລ້ວ ກໍມີໂອລົດ ແລະ ທິດາ ເກີດຈາກເຈົ້າຍິງຄຳແວ່ນ ນີ້ 3 ອົງຄື:

1. ເຈົ້າຍິງ ຄຳຜິວ (ໄດ້ກັບເຈົ້າສົມສະໝິດ ດຽວນີ້ຕາຍແລ້ວ)
2. ເຈົ້າຍິງຄຳຈັນ (ແຕ່ງດອງກັບຄົນຝຣັ່ງແລະດຳລົງຊີວິດຢູ່ ປະເທດຝະຣັ່ງ)
3. ເຈົ້າຊາຍ ສຸຣິຍະຣາດ ຫຼື ເຈົ້າສຸຣິຍະ, ແຕ່ງດອງກັບ ນາງ ສີຟອງ (ລູກຍາພໍ່ມະຫາແກ້ວ ລາຊະວົງ)

ຕໍ່ມາ ເມື່ອພຣະອົງໄດ້ຍ້າຍລົງມາຮັບຕຳແໜ່ງ ເປັນຜູ່ກວດຣາດ ຊະການ ຫົວເມືອງລາວຢູ່ທີ່ວຽງຈັນແລ້ວ ກໍໄດ້ອະນຸຊາຍາອີກຊື່ ນາງສີ ເປັນຊາວວຽງຈັນ ແລະ ມີບຸດທິດາເກີດຈາກນາງສີ ນີ້ 2 ຄົນຄື:

1. ເຈົ້າຍິງອະຣຸນາ ເພັດຊະຣາດ
2. ເຈົ້າຊາຍອຸ່ນແກ້ວ ມະໂນຣົມ ເພັດຊະຣາດ. (ທັງສອງຢູ່ໃນ ປະເທດໄທ)



24 / VII



ອຸປະນິໄສ

ເຈົ້າມະຫາອຸປະຣາດ ເພັດຊະຣາດ ເຊິ່ງມີຜູ້ຂະໜານນາມ ພຣະອົງວ່າ "ບຸຣຸດເຫຼັກແຫ່ງລາຊະອານາຈັກລາວ" ນັ້ນເຫັນວ່າມີສ່ວນ ໃກ້ຄຽງຄວາມຈິງຢູ່ເປັນອັນມາກ ຂ້າພະເຈົ້າ (ຜູ້ຂຽນ) ໄດ້ເຄີຍຕິດຕາມ ພຣະອົງ ໄປຊອກຫາຍິງສັດຕາມຮ່ອມຫ້ວຍພູເຂົາ ແລະໄປຫາປາ ຕາມລຳແມ່ນ້ຳຂອງ ເກືອບທຸກວັນເສົາວັນທິດ ຕະຫຼອດເວລາ 9 ປີ ຄື ແຕ່ປີ 1931 ເຖິງປີ 1939 ໄດ້ສັງເກດເຫັນວ່າ ພຣະອົງເປັນຄົນມີ ສະຕິ ເວົ້າໜ້ອຍ ປາກພ່ຳ ເວົ້າບໍ່ລ່ຽນໄຫຼ ແຕ່ໝັ້ນຄົງ ນ້ຳພຣະໄທອົດ ທົນກ້າຫານ, ໜັກແໜ້ນ ແກ່ນແຂງປານເຫຼັກ ເດັດຂາດ ກົງຕໍ່ເວລາ ມັກຜະຈົນໄພ ຫຼື ກິລາການລະເມີ້ອເປັນທີໜຶ່ງ ແລະມີມານະ ຖືພຣະອົງ ເປັນເຈົ້າຢູ່ສະເໝີ ຫຼືຮັກກຽດຂອງຄວາມເປັນເຈົ້າຢ່າງບໍ່ລົດລະ ໃນຂໍ້ນີ້ ຂ້າພະເຈົ້າເຄີຍໄດ້ສັງເກດເຫັນກິຣິຍາຂອງພຣະອົງ ໃນເວລາມີຄົນ ຝຣັ່ງເຂົ້າມາຫາພຣະອົງທີ່ຫ້ອງເຮັດການ ຖ້າເປັນຄົນຝຣັ່ງທຳມະ ດາບໍ່ແມ່ນເຊື້ອເຈົ້າ ເຖິງວ່າຄົນນັ້ນຈະມີຕຳແໜ່ງສູງ ຍົດສູງປານໃດ ກໍຕາມ ພຣະອົງບໍ່ເຄີຍລຸກຈາກຕັ່ງອີ້ໄປຈັບມືເລີຍ ເວັ້ນແຕ່ຜູ້ສຳເລັດ ລາຊະການຫົວເມືອງລາວທ່ໍນັ້ນ ແຕ່ຖ້າຝຣັ່ງຄົນນັ້ນ ເປັນເຊື້ອເຈົ້າ ແລ້ວ ພຣະອົງລຸກຈາກຕັ່ງອີ້ໄປຈັບມືທຸກຄົນ ສ່ວນຂ້າລາຊະການ ລາວຄົນອື່ນໆ ພໍແຕ່ຝຣັ່ງຮ້ອງຄຳດຽວທ່ໍນັ້ນ ຕ້ອງແລ່ນຫົວຕັ້ງໄປເລີຍ ເພາະສະໄໝນັ້ນ ພວກຝຣັ່ງທີ່ຢູ່ເມືອງລາວ ຖືຕົວວ່າເປັນເຈົ້າເໜືອຫົວ ຂອງຄົນລາວທຸກຄົນ.

ເຈົ້າມະຫາອຸປະຣາດເພັດຊະຣາດ ມີພຣະໄທເປັນທ່ວງນຳ ຄວາມເປັນຢູ່ຂອງປະຊາຊົນພົນລະເມືອງທີ່ສຸດ ໃນດ້ານການຢູ່ດີກິນດີ

ສະນັ້ນພຣະອົງຈຶ່ງຄອຍແນະນຳບອກສອນ ແລະຊ່ອຍເຫຼືອປະຊາຊົນ ເປັນການສ່ວນພຣະອົງຢູ່ສະເໝີ ແລະການທີ່ພຣະອົງມັກອອກໄປທ່ຽວ ປ່າຫາລະເນີ້ອຫຼືຫາປານັ້ນ ກໍເພື່ອຈະໄດ້ເຫັນສະພາບຄວາມເປັນຢູ່ ຂອງພົນລະເມືອງຕາມຄວາມເປັນຈິງ ບໍ່ແມ່ນຄອຍຖ້າອ່ານແຕ່ລາຍ ງານທີ່ເຈົ້າໜ້າທີ່ສະເໜີມາ ທັງຈະໄດ້ທຳຄວາມຄຸ້ນເຄີຍກັບປະຊາຊົນ ພົນລະເມືອງນຳອີກ ທັງຈະໄດ້ຮູ້ຈັກພູມປະເທດ ຂອງທ້ອງທີ່ນັ້ນໆຢ່າງ ແຈ່ມແຈ້ງດ້ວຍຕາຕົນເອງ ເມື່ອພຣະອົງໄດ້ເຫັນລາສະດອນບ້ານໃດ ແຂວງໃດ ໄດ້ຮັບຄວາມເດືອດຮ້ອນປະການໃດ ທີ່ພຣະອົງພໍຈະຊ່ອຍ ແກ້ໄຂໄດ້ເປັນສ່ວນຕົວ ພຣະອົງກໍຫາທາງຊ່ອຍເຫຼືອທັນທີແລະແນວ ທີ່ພຣະອົງມັກທີ່ສຸດ ນັ້ນກໍຄືຖ້າມີບ່ອນໃດລາສະດອນວ່າເຂັດຂວາງ ໜອງໃດ ຫ້ວຍໃດ ແມ່ນ້ຳໃດ ທີ່ເຂົ້າວ່າມີຜີຮ້າຍ ປະຊາຊົນລົງຫາ ກິນບໍ່ໄດ້ ພຣະອົງກໍໄປທ່ຽວຜາບໃຫ້ສະເໝີ ຫຼືວ່າບ້ານໃດ ເມືອງໃດ ມີສັດຮ້າຍ ມາຮົບກວນເຄື່ອງປູກຂອງຝັງ ເປັນຕົ້ນ ຊ້າງປ່າມາກວນ ເຂົ້າ ເສືອມາກິນງົວຄວາຍຂອງຊາວບ້ານ ພຣະອົງເປັນຕ້ອງໄປຈັດ ການທັນທີ ຕົວຢ່າງໄປຍິງເສືອທີ່ບ້ານແຊນດິນ ແລະຜາບແຂ້ໜອງ ເມັກ ທີ່ຢູ່ໃນເຂດເມືອງທຸລະຄົມແຂວງວຽງຈັນເປັນຕົ້ນ ເຊິ່ງຂ້າພະ ເຈົ້າຂໍນຳມາເລົ່າ ສູ່ຟັງຈັກໜ່ອຍດັ່ງຕໍ່ໄປນີ້:

ໃນປີ ຄ.ສ. 1932 ລາສະດອນບ້ານແຊນດິນ ໄດ້ມາລາຍງານ ວ່າມີເສືອໂຄ່ງສອງຕົວມາຢູ່ໃຕ້ບ້ານ ຄອຍຈອບກິນງົວຄວາຍໝົດໄປ ແລ້ວ 21 ໂຕ ຊາວບ້ານໄດ້ຮັບຄວາມເດືອດຮ້ອນຈະອອກໄປທ່ຽວປ່າຫາ ກິນກໍບໍ່ໄດ້ ຈຶ່ງຂໍໃຫ້ພຣະອົງໄປຜາບ ເພາະສະນັ້ນພຣະອົງຈຶ່ງໄດ້ພາ ຂ້າ ພະເຈົ້າກັບໝູ່ຂ້າລາຊະການຫຼາຍຄົນ ໄປຍິງເສືອທີ່ບ້ານແຊນດິນເຊິ່ງ ຢູ່ແຄມນ້ຳງຶ່ມແຂວງວຽງຈັນນີ້ເອງ. ເວລາທີ່ໄປນັ້ນ ພຣະອົງບໍ່ໄດ້ບອກ

ວ່າຈະພາໄປຍິງເສືອ ເປັນແຕ່ທ້າວສັ່ງວ່າ ໃຫ້ທຸກຄົນກຽມເອົາລູກປືນ ຂະໜາດໃຫຍ່ຄືລູກໂດດໄປນຳ ຜູ່ທີ່ໄປນຳໃນຄາວນັ້ນມີ ເຈົ້າຄຳໝັ້ນ ເຈົ້າຜຸຍ ທິດພຸ ທ້າວແດງ ຄົນຂັບລົດຂອງພຣະອົງ ແລະຂ້າພະເຈົ້າ ດ້ວຍລົດນັ່ງຂອງພຣະອົງເອງ ເຊິ່ງຂີ່ໄດ້ພຽງ 5-6 ຄົນ ເປັນຢ່າງຫຼາຍ (ຕື່ນເຊົ້າມາ ທ່ານປາຣິໂຊ ຂ້າຫຼວງຝຣັ່ງຈຶ່ງໄປນຳ) ພໍໄປເຖິງບ້ານ ຮ່ອງງົວເຊິ່ງຢູ່ຕີນດົງ ທີ່ຈະຂ້າມໄປບ້ານແຊນດິນກໍມີຜູ່ສາວຊາວບ້ານ ແຊນດິນສອງຄົນມາທຸລະທີ່ບ້ານຮ່ອງງົວຄືນນັ້ນເອງ ເມື່ອຈະກັບເປັນ ເວລາຄ້ຳຍຄ່ຳແລ້ວບໍ່ທ່ານກັບເພາະຢ້ານເສືອຈຶ່ງຂໍຂີ່ລົດນຳ ພຣະອົງ ອະນຸຍາດໃຫ້ເຂົາຂີ່ໄດ້ ແຕ່ໃຫ້ຂ້າພະເຈົ້າກັບທ້າວແດງຄົນຂັບລົດລົງ ຍ່າງຕາມທາງທີ່ຜ່ານດົງນັ້ນໄປ ໂດຍໃຫ້ຖືປືນຄົນລະບອກ ສ່ວນພຣະອົງ ຂັບລົດໄປເອງ ພໍໄປເຖິງໜອງຂີ້ມິດມໍ່ຈະເຂົ້າບ້ານພຣະອົງຈຶ່ງເຊົາລົດ ຖ້າຢູ່ທີ່ນັ້ນ ຂ້າພະເຈົ້າກັບທ້າວແດງບໍ່ຮູ້ວ່າພຣະອົງຈະພາໄປຍິງເສືອ ກໍພາກັນເອົາປືນຂັດງ່ອນລຳເສັຍໄປຕາມທາງ ພໍໄປທັນລົດ ພຣະອົງ ຈຶ່ງຮ້ອງໃສ່ວ່າ "ມາໄວ ເສືອຊິຂົບຫົວສູລະ!" ຂ້າພະເຈົ້າກັບທ້າວແດງ ໄດ້ຂຶ້ນໄປນັ່ງຢູ່ເທິງບັງຕົມລົດ ຄົນລະຂ້າງແລ້ວພຣະອົງຈຶ່ງບອກໃຫ້ຮູ ວ່າບ່ອນນີ້ (ໜອງຂີ້ມິດ) ເສືອເຄີຍອອກມາລັດເອົາຄວາຍສະເໝີ ເມື່ອ ຂ້າພະເຈົ້າໄດ້ຟັງດັ່ງນັ້ນ ກໍຂົນຫົວລຸກເຍືອກໃນທັນທີ ແລ້ວລົດກໍອອກ ແລ່ນໄປຈົນເຖິງບ້ານ.

ທີ່ບ້ານແຊນດິນນີ້ ເຄີຍມີເສືອໂຄ່ງມາຢູ່ສະເໝີ ແລະໃນປີນັ້ນກໍ ມີເສືອສອງຕົວຜົວເມຽມາຢູ່ປ່າຫາມແຄມບ້ານ ຄອຍຈອບກິນຄວາຍ ຂອງຊາວບ້ານ ມັນກິນຄວາຍໝົດໄປແລ້ວ 21 ຕົວ ພາຍໃນໄລຍະປີ ດຽວ ສະນັ້ນພໍຕື່ນເຊົ້າມາ ເປັນວັນອາທິດ ພຣະອົງກໍເກນໃຫ້ຊາວບ້ານ ທັງຍິງຊາຍເຂົ້າໂຫ່ເສືອ ດ້ວຍການຮ້ອງໂຫ່ຕີຄ້ອງຕີກອງເຄາະໄມ້

ເຄາະຂອນໃຫ້ດັງສະໜັ່ນໄປ ສ່ວນພຣະອົງກັບພວກຂ້າພະເຈົ້າຜູ່ເປັນ ພານອອກໄປນັ່ງດັກລັດຢູ່ທາງເສືອຈະອອກໄປ. ດອນທີ່ເຂົ້າໂທ່ທຳອິດ ບໍ່ພໍ້ເສືອ ເມື່ອພວກໂທ່ມາເຖິງໝົດແລ້ວ ມີຊາວບ້ານຄົນໜຶ່ງບອກວ່າ ເສືອອອກໄປທາງດ້ານຕາເວັນຕົກຫວິດນາຍພານເພາະເຂົາຖືກກິ່ນ ຂອງມັນ ເມື່ອໄດ້ຟັງດັ່ງນັ້ນ ພຣະອົງກໍພາພວກເຮົາແລ່ນໂຄ້ງລັດໜ້າ ທາງເສືອໄປ ແລະຕົກລົງໃຫ້ພຣະອົງນັ່ງຢູ່ສົ້ນສຸດໝູ່ທາງດ້ານຕາເວັນ ຕົກ ເຊິ່ງເປັນບ່ອນແນ່ໃຈວ່າ ເສືອຈະຕ້ອງອອກທາງນັ້ນ ພານຄົນທີ ສອງນັ່ງຕໍ່ມາແມ່ນເຈົ້າຄຳໝັ້ນທ່າງຈາກເຈົ້າເພັດຊະຣາດປະມານ15 ແມັດ ຄົນທີ 3 ແມ່ນຂ້າພະເຈົ້າ ຕໍ່ໄປແມ່ນທ້າວແດງ ເຈົ້າຜູຍແລະ ຍາພໍ່ທິດພຸກັບພານຊາວບ້ານອີກສອງສາມຄົນ ຂະນະທີ່ພວກເຮົານັ່ງ ຮຽບຮ້ອຍແລ້ວ ພວກລູກໂທ່ກໍໂທ່ມາ ຂ້າພະເຈົ້າສັງເກດເຫັນວ່າມີອາ ການປະຫຼາດເກີດຂຶ້ນ ຄືເກີດລົມພັດມາອ່ອນໆ ເປັນໜ້າອອນຊອນ ແລະກໍມີສຽງໃບໄມ້ແຫ້ງຫຼົ່ນຂອກແຂກຢູ່ທົ່ວໄປ ໃນຂະນະນັ້ນ ຂ້າພະ ເຈົ້າເກີດຫາວນອນຂຶ້ນມາທັນທີ ຢາກນອນເປັນທີ່ສຸດທົນນັ່ງຢູ່ບໍ່ໄດ້ຈຶ່ງ ຮ້ອງທ້າວແດງມາຫາ ໃຫ້ທ້າວແດງນັ່ງຢຽດຂາອອກແລ້ວຂ້າພະເຈົ້າ ກໍນອນເອົາຫົວໜູນຂາທ້າວແດງເຊືອບຫຼັບໄປ ອັນນີ້ບໍ່ທີ່ຄົນພານເວົ້າ ວ່າເສືອກ່ອມໃຫ້ຢາກນອນ ພໍດີໄດ້ຍິນສຽງປືນດັງຂຶ້ນບາດໜຶ່ງພ້ອມທັງ ສຽງໄກ່ປ່າກະຕາກປົນຂ້າມຫົວໄປ ຂ້າພະເຈົ້າຊວາດຮູ້ເມື່ອຟ້າວລຸກ ຂຶ້ນ ແລະທ້າວແດງກໍລຸກຂຶ້ນຖືປືນລໍໄວ້ ພໍໄດ້ຍິນສຽງປືນດັງຂຶ້ນອີກບາດ ໜຶ່ງ ຂ້າພະເຈົ້າຈຶ່ງຮ້ອງຖາມໄປວ່າ "ຍິງຫຍັງ ຂ້ານ້ອຍ?" "ຍິງເສືອ" ສຽງພຣະອົງຮ້ອງຕອບ ຂ້າພະເຈົ້າຮ້ອງຖາມໄປອີກວ່າ "ຕາຍຫຼືຍັງ ຂ້ານ້ອຍ?"ຕາຍແລ້ວມາໄດ້",ພຣະອົງຮ້ອງບອກທັນທີຂ້າພະເຈົ້າທ້າວ ແດງ ແລະເຈົ້າຄຳໝັ້ນກໍແລ່ນໄປຮອດກ່ອນຄົນອື່ນ ໄດ້ເຫັນເສືອໂຄ່ງ

ລາຍພາດກອນໂຕຂະໜາດມ້າຖ່າວໆ ນອນຕາຍຢູ່ຂ້າງກົກຍາງຫ່າງ ຈາກບ່ອນ ພຣະອົງຢືນພຽງສອງແມັດທໍ່ນັ້ນເອງ ພວກເຮົາພາກັນ ຕົກສະເງີ້ ແລະໜ້າຫຼ່າກັນໝົດ ພຣະອົງຈຶ່ງເລົ່າເຫດການ ໃນຂະນະ ນັ້ນໃຫ້ຟັງວ່າ ພຣະອົງນັ່ງບັງຕົ້ນຍາງຢູ່ ພໍພວກລູກໄລ່ໂຫ່ມາບຶດ ໜຶ່ງ ກໍໄດ້ຍິນສຽງເສືອຄາງຫຶດຫາດມາ ພຣະອົງຈຶ່ງສ່ອງປືນໄປຕາມ ປ່າຫ່າງໆທາງສຽງຄົນໄລ່ ກໍໄດ້ເຫັນເສືອສອງຕົວຍ່າງນຳກົ້ນກັນມາ ຊື່ຕົ້ນໄມ້ ບ່ອນພຣະອົງນັ່ງຢູ່ ໄກຈາກຕົ້ນໄມ້ໄປປະມານ 15 - 16 ແມັດ ພຣະອົງຈຶ່ງບັງຕົ້ນໄມ້ໄວ້ ຕັ້ງໃຈວ່າໃຫ້ເສືອກາຍຕົ້ນໄມ້ໄປກ່ອນແລ້ວ ຈຶ່ງຈະຍິງຕົວນຳຫຼັງນັດໜຶ່ງ ເມື່ອຍິງຕົວນຳຫຼັງແລ້ວ ຕົວຢູ່ທາງໜ້າກໍ ຕ້ອງໂດດໄປທາງໜ້າ ຄົງທັນໄດ້ຍິງອີກ ພວມຄຶດຢູ່ດັ່ງນີ້ແລະກໍເຫັງສົມ ຄວນບໍ່ເຫັນ ເສືອກາຍຕົ້ນໄມ້ໄປ ຈຶ່ງງວາກຄືນມາເບິ່ງທາງຟາກກົກໄມ້ ອີກດ້ານໜຶ່ງ ກໍເຫັນຫົວເສືອພົ້ນກົກໄມ້ອອກມາ ແລະຢູ່ຫ່າງພຣະອົງ ພຽງສອງແມັດທໍ່ນັ້ນ ພຣະອົງຈຶ່ງຈ້ຳໃສ່ກ້ານຄໍມັນເລີຍ ພຽງລູກດຽວ ທໍ່ນັ້ນ ມັນກໍໝູບກັບບ່ອນ ແຕ່ຍັງເງີຍຫົວງຶກງັກຢູ່ ພຣະອົງຈຶ່ງຊ້ຳອີກ ລູກໜຶ່ງ ສ່ວນເສືອຕົວທີສອງກໍເລີຍໂດດບັງຕົ້ນໄມ້ຕົ້ນນັ້ນ ແລະແລ່ນ ໜີໄປ ຈຶ່ງທັນໄດ້ຍິງແຕ່ຕົວດຽວທໍ່ນັ້ນ.

ຜາບແຂ້ໜອງເມັກ

ໜອງເມັກເປັນໜອງຂະໜາດໃຫຍ່ຍາວປະມານເກືອບ 1 ກິໂລ ແມັດ ແລະກ້ວາງປະມານສອງຮ້ອຍຫຼືສາມຮ້ອຍແມັດ ໜອງຕັ້ງຢູ່ໃນ ປ່າທາມ ແຄມນ້ຳງຶ່ມ ທາງດ້ານເໜືອໃຕ້ບ້ານຕານປ່ຽວລົງມາ ຢູ່ໃນ ໜອງມີແຂ້ຫຼາຍ ຊາວບ້ານຈຶ່ງບໍ່ຫານລົງຫາກິນໃນໜອງນັ້ນໄດ້ ແລະ ຍັງເຊື່ອກັນວ່າມີຜີຮ້າຍອີກ ແມ່ນແຕ່ຈະໄປຕັດຕົ້ນໄມ້ທີ່ແຄມໜອງຫຼື

ເອົາໄຂ່ນົກ ເຊິ່ງມີເຕັມຢູ່ຕາມຕົ້ນໄຄ້ໃນໜອງນັ້ນ ກໍບໍ່ກ້າ ຢູ່ຕໍ່ມາ ເຈົ້າ ເພັດຊະຣາດໄດ້ພາພວກຂ້າລາຊະການໄປຫາໂຫ່ເນື້ອ ຕາມແຖວບ້ານ ຫາດກ້ຽງທຸກໆວັນເສົາ ການໄປໂຫ່ເນື້ອນັ້ນ ລາງເທື່ອກໍໄດ້ ລາງເທື່ອ ກໍບໍ່ໄດ້ ເມື່ອໂຫ່ໄດ້ແລ້ວ ພຣະອົງກໍໃຫ້ຄົວເນື້ອນັ້ນແບ່ງປັນຊາວບ້ານທີ່ ໄປໂຫ່ ທຸກໆຄົນ ແຕ່ຖ້າວັນໃດບໍ່ໄດ້ ພຣະອົງກໍຊື້ງົວ ຫຼື ໝູຂອງຊາວບ້ານ ນັ້ນມາຂ້າ ແລ້ວແບ່ງປັນໃຫ້ຊາວບ້ານກິນຈົນທົ່ວ.

ມື້ໜຶ່ງໄປໂຫ່ເນື້ອບໍ່ໄດ້ເນື້ອ ກວານບ້ານໆຫາດກ້ຽງຈຶ່ງບອກວ່າ ກວາງ ຟານໜີໄປຢູ່ບໍລິເວນໜອງເມັກໝົດ ເພາະທີ່ນັ້ນມີຜີຮ້າຍ ບໍ່ມີ ຄົນໄປກຸກກວນ ເມື່ອພຣະອົງໄດ້ຊາບດັ່ງນັ້ນ ຈຶ່ງໃຫ້ກວານບ້ານຈັດ ເຮືອນ້ອຍໆໃຫ້ສອງເຫຼັ້ມໆ ໜຶ່ງຂີ່ໄດ້ແຕ່ສີ່ຄົນ ໃຫ້ກວານບ້ານນັ້ນເອງພາ ໄປເບິ່ງໜອງເມັກວ່າມັນຈະເປັນຄື ກວານບ້ານເວົ້າແທ້ບໍ່ ຜູ່ທີ່ຕິດຕາມ ພຣະອົງໄປສຳຫຼວດໜອງເມັກຄັ້ງແຮກນັ້ນ ມີຂ້າພະເຈົ້າ(ຜູ່ຂຽນ)ທ້າວ ບຸນນາກສຸວັນນະວົງ ທ້າວເພັງສຸວັນນະວົງ (ຍາພໍ່ຜູ່ແທນເພັງ ດຽວນີ້ ເຖິງແກ່ກຳແລ້ວ) ທ່ານເຈົ້າຜຍ ວິສຸດທິພົງ ກັບຄົນພາຍເຮືອອີກສີ່ຄົນ ເມື່ອໄປເຖິງພຽງໜອງ ພຣະອົງກໍພາຂຶ້ນຝັ່ງນ້ຳງຶ່ມ ໜ້ົນໄປຕາມປ່າ ຫາມທີ່ຣົກແສນຣົກ ຈົນໄດ້ຂຶ້ນຕົ້ນໄມ້ຜໍ່ເບິ່ງວ່າໜອງຢູ່ທາງໃດ ເພາະບໍ່ ມີທາງຄົນທຽວໄປມາ ແຕ່ພໍໄປເຖິງບໍລິເວນໃກ້ໜອງ ຈຶ່ງເຫັນຮອຍ ກວາງຮອຍຟານຫາກິນຢູ່ແຖວນັ້ນ ເກືອບພໍປານກັນກັບຮອຍງົວບ້ານ ແລະກໍມີຫົນທາງທີ່ພວກກວາງຟານລົງໄປກິນນ້ຳໃນໜອງເປັນທາງ ລົງໄປ ພຣະອົງພາພວກເຮົາເດີນໄປຕາມທາງນັ້ນ ໄປເຖິງແຄມໜອງ ໄດ້ພໍ້ແລນໃຫຍ່ໂຕໜຶ່ງຢູ່ກົກໄມ້ຕ່ຳໆ ຂ້າງທາງເດີນ ລາງທີສັດແຖວນັ້ນ ບໍ່ເຄີຍເຫັນຄົນມັນຈຶ່ງບໍ່ແລ່ນໜີທ້າວເພັງຈຶ່ງຖອດມີດອອກແທງຄໍຂອງ ມັນເຕັກໃສ່ຕົ້ນໄມ້ໄວ້ແລ້ວຈຶ່ງຈັບມັດເອົາ. ໄປເຖິງແຄມໜອງມີຂອນ

ແຄນໃຫຍ່ຂອນໜຶ່ງລົ້ມພາດລົງໄປໃນໜອງ ພຣະອົງຈຶ່ງພາພວກເຮົາ
ໄຕ່ລົງໄປຕາມຂອນນັ້ນແລ້ວ ກໍພາກັນນັ່ງເບິ່ງແຂ້ທີ່ລອຍຢູ່ໃນໜອງນັບ
ເປັນຮ້ອຍໆຢ່າງບໍ່ຢ້ານກົວໃຜເລີຍ ເພາະບໍ່ເຄີຍຖືກຮົບກວນ ຂ້າພະເຈົ້າ
ເອງໄດ້ນັບເບິ່ງແຂ້ທີ່ລອຍຢູ່ໃກ້ໆຂອນທີ່ເຮົານັ່ງນັ້ນມີເຖິງ 73 ຕົວ ສ່ວນ
ຢູ່ໄກອອກໄປບໍ່ໄດ້ນັບ ເພາະໜອງຍາວຕັ້ງເກືອບກິໂລແມັດ ຄັນແລ້ວ
ພຣະອົງກໍບອກວ່າ ຈະລອງຍິງແຂ້ເບິ່ງມີຜີຫຼືບໍ່ມີກໍໃຫ້ມັນຮູ້ ພຣະອົງ
ຈຶ່ງໃຊ້ປືນເມົາເຊີຍິງແຂ້ທີ່ລອຍຢູ່ນັ້ນເຖິງ 12 ນັດ ແຂ້ຕົວທີ່ບໍ່ຖືກຍິງ
ຈຶ່ງມຸດລົງນ້ຳແລະລອຍຫ່າງໜີໄປ ສ່ວນຕົວຖືກຍິງຄົງຕາຍຈົມຢູ່ໃນ
ນ້ຳນັ້ນ ແຕ່ບໍ່ມີຜູ່ໃດກ້າລົງໄປຢັ່ງເບິ່ງໄດ້ ແລະໃນວັນນັ້ນໄດ້ຮູ້ພຽງທ່ໍນີ້
ອາທິດລຸນມາ ພຣະອົງຈຶ່ງສັ່ງໃຫ້ເຈົ້າເມືອງທຸລະຄົມ ເກນຊາວບ້ານ
ຕານປ່ຽວມາຖາງທາງໃຫ້ ແລະເອົາເຮືອໄມ້ມາລົງໄວ້ໜອງໃຫ້ເຫຼັ້ມ
ໜຶ່ງ ຄັນເຖິງວັນກຳນົດ ພຣະອົງກໍຊັກຊວນບັນດາຂ້າລາຊະການຊາວ
ວຽງຈັນໄປເບິ່ງນຳ ເຊິ່ງໃນຖ້ຽວທີສອງນີ້ ໄດ້ມີຂ້າລາຊະການໄປຮ່ວມ
ຊົມໜອງເມັກນຳປະມານຫ້າສິບຄົນ ຕອນກາງຄືນໄປພັກນອນຢູ່ບ້ານ
ຫາດກ້ຽງ ແລະໃນຄືນນີ້ລູກແຫ້ງຂອງຍາພໍ່ໄລ່ໄປກ້ານກວາງໄດ້ຕົວ
ໜຶ່ງ ພຣະອົງມີຍາໃຫ້ເອົາໃສ່ເຮືອໄປຄົວ ເຮັດກິນຢູ່ບ່ອນຈະໄປເຊົ້າ
ແຄມໜອງ ເມື່ອເຖິງບ່ອນເຊົ້າ ພຣະອົງໄດ້ຊວນພວກຂ້າລາຊະການ
ໃຫ້ໄປເບິ່ງແຂ້ ສ່ວນພວກທີ່ຢູ່ເຝົ້າທັບນັ້ນ ໃຫ້ຈັດການຄົວກິນ ແລ້ວພຣະ
ອົງກັບຂ້າພະເຈົ້າກໍອອກເດີນນຳໜ້າໄປ ພໍເຖິງ ຂອບແຄມໜອງ ກໍບອກ
ໃຫ້ພວກຂ້າລາຊະການລົງໄປນັ່ງຢູ່ຂອນຄອຍຖ້າເບິ່ງແຂ້ພຣະອົງບອກ
ວ່າຈະໄປໄລ່ແຂ້ມາໃຫ້ເບິ່ງ ເພາະໃນຂະນະນັ້ນສຽງຄົນແຊວຫຼາຍ ແຂ້
ຈຶ່ງລອຍຫ່າງອອກໄປໄກ ແລ້ວພຣະອົງກໍບອກໃຫ້ຂ້າພະເຈົ້າຍ່າງນຳ
ຫຼັງພຣະອົງໄປ ໂດຍຂ້າພະເຈົ້າເປັນຄົນພາຍຖ້ຽເຮືອ (ເຮືອຢາງພັບ

ໃສ່ຖົງພາຍ ໄປເວລາຈະຍິ່ງສູບລົມໃສ່ເພື່ອຈະລົງຍິ່ໄລ່ແຂ້) ເມື່ອເດີນ ລຽບແຄມໜອງໄປໄກປະມານສອງຮ້ອຍແມັດທໍ່ນັ້ນ ກໍໄດ້ຍິນສຽງປືນ ດັງຂຶ້ນທາງຂອນແຄນຫຼາຍນັດ ຂ້າພະເຈົ້າແລະພຣະອົງທ່ານຕົກໃຈ ຢ້ານຈະເກີດເຫດຢ່າງໃດຢ່າງໜຶ່ງຂຶ້ນ ຈຶ່ງແລ່ນກັບຄືນມາ ກໍພໍດີສຽງ ປືນສະຫງົບລົງ ພຣະອົງຈຶ່ງຮ້ອງຖາມອອກໄປວ່າ "ຍິງຫຍັງ?" ກໍໄດ້ ຍິນສຽງທ້າວເພັງຕອບວ່າ "ຍິງກວາງ", ພຣະອົງເວົ້າກັບ ຂ້າພະເຈົ້າ ວ່າ "ສຽງປືນປານນີ້ມັນຄົງຕາຍແລ້ວ" ແລ້ວກໍພາຂ້າພະເຈົ້າກັບຄືນ ເລາະໜອງໄປອີກ ແລ້ວກໍເອົາເຮືອອອກມາສູບ ຍິ່ຂ້າມໜອງໄປເບິ່ງ ທາງຟາກພຸ້ນ ເຊິ່ງກໍເຕັມໄປດ້ວຍຮອຍກວາງຟານ. ແຕ່ເມື່ອມາເຖິງ ບ່ອນເຊົ້າຈຶ່ງຮູ້ວ່າ ກວາງຕົວນັ້ນບໍ່ຕາຍ ແຕ່ມັນໄດ້ແລ່ນຂຶ້ນມາຕາມ ທາງທີ່ຄົນລົງໄປໜອງ ແລ່ນເລີຍມາຜ່າວົງຂອງພວກພໍ່ຄົວທີ່ມີຍາພໍ່ ໄລ່ເປັນຫົວໜ້າ ຍາພໍ່ໄລ່ບໍ່ມີທາງຈະເຮັດຈຶ່ງເອົາມີດທີ່ກຳລັງຄົວກວາງ ຢູ່ນັ້ນວີໃສ່ກວາງ ແລ້ວມັນກໍເລີຍແລ່ນໜີເຂົ້າປ່າໄປ ແລະເລື່ອງທໍ່ນີ້ ເອງພວກຊາວບ້ານກໍເລີຍລືກັນ ວ່າກວາງຜີ ຖ້າເປັນກວາງ ທຳມະດາ ຕ້ອງຕາຍແນ່ນອນ ການໄປຜາບແຂ້ໜອງເມັກໃນອາທິດນີ້ຍັງບໍ່ເປັນ ຜົນສຳເລັດ ເພາະເປັນແຕ່ພຽງໄປສຳຫຼວດເບິ່ງໃຫ້ຄັກແນ່ທໍ່ນັ້ນແຕ່ເຖິງ ຢ່າງນັ້ນໃນຄາວນີ້ ພຣະອົງກໍໄດ້ປະທານແຂ້ລົງຕົວໜຶ່ງ ແລະໄດ້ເອົາ ມັນມັດໃສ່ຫຼັງຄາລົດມາເຖິງວຽງຈັນ.

ຄັນເຖິງອາທິດລຸນມາ ພຣະອົງຈຶ່ງສັ່ງໃຫ້ເຈົ້າເມືອງທຸລະຄົມ (ຍາພໍ່ ຫຼວງ ຄຳສຸກ) ປ່າວເຕີນຊາວບ້ານຕານປ່ຽວ ຫາດມ້ຽງ ແຊນ ດິນນາກຸງເປັນຕົ້ນໃຫ້ໄປລົງປາໜອງເມັກ ແລະໃຫ້ເຈົ້າເມືອງຈັດການ ເອົາເຮືອໄປໄວ້ທີ່ໜອງຫຼາຍໆລຳ ພ້ອມທັງຈັດການເຮັດແພໄວ້ດ້ວຍ ພໍເຖິງວັນເສົາ ພຣະອົງກໍພາພວກຂ້າລາຊະການໄປ ຕື່ນເຊົ້າວັນອາ

ທິດມາກໍໃຫ້ພວກຊາວບ້ານລົງຫາປາໃນໜອງ ສ່ວນພຣະອົງເອງໄປຂີ່ເຮືອເລາະຫາຍິງແຂ້ ສະເພາະໃນວັນດຽວນັ້ນ ພຣະອົງປະຫານລົງໄປເຖິງ 13 ຕົວ ແລະວັນຕໍ່ໆມາກໍປະຫານລົງເລື້ອຍໆ ຈົນໃນທີ່ສຸດແຂ້ໜອງເມັກ ນັບເປັນຮ້ອຍໆຕ້ອງແຕກພ່າຍໜີໄປໝົດ ແລະຕັ້ງແຕ່ປີນັ້ນມາ ພວກຊາວບ້ານກໍລົງຫາກິນປາໃນໜອງນັ້ນໄດ້ ສະບາຍຕະຫຼອດມາຈົນເທົ້າເຜອງທຸກວັນນີ້.

ເຈົ້າມະຫາອຸປະຣາດເຜັດຊະຣາດ ເຖິງແມ່ນຈະເກີດມາໃນຕະກູນທີ່ສູງສັກ ເປັນເຊື້ອເຈົ້າ ແຕ່ພຣະອົງທ່ານກໍຊໍານານໃນການທໍາມາຫາກິນ ຄືຕົກແຫ ຫາປາ ສານຄຸ ສານຕ່າ ສານແຫ ສານມອງ ເຮັດຈິບ ເຮັດຕ້ອນ ຕາມແບບ ສະບັບຂອງລາສະດອນລາວທົ່ວໆໄປ ຫຼື ລາງເທື່ອອາດຈະຊໍານານກວ່າລາສະດອນຊໍ້າອີກ ພຣະອົງຈຶ່ງເປັນຕົວຢ່າງໃຫ້ແກ່ລາສະດອນໄດ້. ຂ້າພະເຈົ້າເຄີຍໄປຫາປາຕາມຮູຫ້ວຍທີ່ໄຫຼຕົກນໍ້າຂອງຄືຫ້ວຍຕອນແລະຫ້ວຍສັງ ນໍາພຣະອົງ ຫຼາຍເທື່ອ ເຄື່ອງມືທີ່ຫານັ້ນຮຽກວ່າ ສະພີ ເຊິ່ງພຣະອົງສານດ້ວຍມືຂອງພຣະອົງເອງ ແລະສານດ້ວຍປ່ານໝົດປ່ານຫຼາຍສິບກິໂລ ສະພີນັ້ນມີຂະໜາດກວ້າງເມື່ອຄຶງອອກແລ້ວເຕັມປາກຫ້ວຍພໍດີ ສ່ວນລວງຍາວປະມານ 20 ແມັດເປັນຢ່າງນ້ອຍ ການຫາປາດ້ວຍສະພີນັ້ນ ຕ້ອງເອົາສະພີໄປກາງຕັນປາກຫ້ວຍປ່ອຍກົ້ນສະພີອັນມີລັກສະນະຄືຖົງກະທຽວນັ້ນ ລົງໄປຫາງໃຕ້ ປິ່ນປາກ ຂຶ້ນໄປຕາມຫ້ວຍ ຂອບປາກຫາງລຸ່ມລົງແຈບດິນແລ້ວເອົາເຮືອຂະໜາບໄວ້ທີ່ປາກສະພີຂ້າງລະລໍາ ຄົນຢູ່ຫົວເຮືອຄອຍຖ້າດຶງສາຍຊັກຂຶ້ນ ເມື່ອໄດ້ກາງສະພີຮຽບຮ້ອຍແລ້ວ ກໍໃຫ້ພວກລູກໄລ່ຂີ່ເຮືອຂຶ້ນໄປຕາມຫ້ວຍ ແລ້ວໄລ່ປາລົງມາ ດ້ວຍການເອົາໄມ້ສ້າວຫຸ້ມທັ່ງຕາມພຸ່ມໄມ້ແຄມຫ້ວຍ ເມື່ອພວກໄລ່ໆມາເຖິງແລ້ວ ພວກຢູ່ຫົວເຮືອ

ຕ້ອງສາວເຊືອກສາຍຊັກນັ້ນຂຶ້ນທັນທີ ໃຫ້ປາກສະພີຫວິດ ຈາກນ້ຳແລ້ວ ກໍໂຮບເຮືອເຂົ້າມາຫາກັນຈຶ່ງຄ່ອຍສາວສະພີຂຶ້ນໃສ່ເຮືອ ສ່ວນປາ ທີ່ຖືກ ສະພີນັ້ນຈະໄປລອຍສະບາຍຢູ່ທາງກົ້ນ ປາທີ່ຖືກສະພີສ່ວນຫຼາຍເປັນ ປາຂະໜາດໃຫຍ່ ເຊັ່ນ ປາໂຈກ ປາຫູໜາດ ປາເລີມ ປາສະງົ້ວ ເປັນຕົ້ນ ການຈັບປາເຂົ້າຂ້ອງກໍແມ່ນພຣະອົງເອງ ເພາະຜູ່ອື່ນຈັບຢ້ານ ຈະຫລູດມື ແລະໃນການໄປຫາປາຢ່າງນີ້ກໍດີ ການເດີນທາງໄປທາງ ເຮືອກໍດີ ເມື່ອຈອດເຮືອເຊົ້ານອນບ່ອນໃດ ຄົນທຸກຄົນທີ່ໄປນັ້ນ ພຣະອົງ ບ່ໃຫ້ຢູ່ລ້າ ເມື່ອຈອດເຮືອແລ້ວກໍຈັດແຈງຄົວກິນ ລາງຄົນເຂົ້າປ່າຫາ ຟືນ ລາງຄົນໃຫ້ຕັດໄມ້ມາຈັກຕອກແລ້ວ ຫັດສານຫວດສານ ຕ່ອງຊອນ ລາງຄົນກໍໃຫ້ສ້ອຍປ່ານເລັນປ່ານສານແຫເປັນຕົ້ນ ເຈົ້າເພັດຊະຣາດ ເປັນນາຍພານເອກ ເປັນນັກກິລາລະເນ້ືອອັນດັບນຶ່ງແລະເປັນນັກຍິງ ປືນແນ່ ອັນດັບນຶ່ງຂອງລາວ. ການກິລາລະເນ້ືອ ພຣະອົງມັກເປັນທີ່ສຸດ ທຸກໆວັນເສົາ ວັນອາທິດ ພຣະອົງຈະຕ້ອງພາພວກຂ້າລາຊະການໄປ ຫາໂຫ່ເນ້ືອ ຕາມປ່າໃນແຂວງວຽງຈັນສະເໝີ ແລະໃນປີໜຶ່ງໆ ພຣະ ອົງຕ້ອງຢຸດລາຊະການເດືອນໜຶ່ງ ແລ້ວກໍໄປຫາຍິງເນ້ືອໃຫຍ່ໆເຊັ່ນ: ຊ້າງເມັຍ ເສືອ ຕາມໜ້ວຍພູທີ່ຫ່າງໄກອອກໄປສະເໝີໆ. ໃນການອອກ ໄປຫາຍິງເນ້ືອຕາມພູຕ່າງໆນັ້ນພຣະອົງໄດ້ໃຫ້ເຮັດ ແຜນທີ່ປ່າດົງ ທີ່ ຜ່ານໄປນັ້ນໄວ້ນຳທຸກຄັ້ງ ສະນັ້ນ ພຣະອົງຈຶ່ງເປັນຜູ່ຊຳນານປ່າຮູ້ຈັກ ຮ່ອມຫ້ວຍພູເຂົາໃນປະເທດລາວເກືອບທຸກບ່ອນ ເຊ່ິງບ່ມີຄົນລາວຄົນ ໃດຈະຮູ້ ແລະຊຳນິຊຳນານຄືພຣະອົງ. ເຈົ້າມະຫາອຸປະຣາດເພັດຊະ ຣາດໄດ້ກ່າວໄວ້ໃນໜັງສືເລ່ືອງ: ອາວຸດປືນແລະກິລາລະເນ້ືອຂອງພຣະ ອົງ ຕອນວ່າດ້ວຍປະໂຫຍດ ທີ່ໄດ້ຈາກກິລາລະເນ້ືອວ່າ " ກິລາລະເນ້ືອ ເປັນກິລາກາງແຈ້ງປະເພດໜຶ່ງ ເຊ່ິງຜູ່ບ່ເຄີຍໄດ້ເຫັນຫຼືໄດ້ລອງມາກ່ອນ

ຈະຮູ້ສຶກບໍ່ມັກແລະຊັງກິລາປະເພດນີ້ ເປັນ ທີ່ສຸດ ເພາະມອງເຫັນແຕ່ໃນ ແງ່ຮ້າຍຢ່າງດຽວ ເປັນຕົ້ນວ່າການທຳລາຍຊີວິດສັດ ການຈຳຕ້ອງ ທໍລະຫົດອົດທົນຕ້ອງນອນກັບດິນກິນກັບຫຍ້າ ສູ້ທົນຮົ້ນຍຸງອົບ ກັດໄຕ່ ຕອມເປັນຕົ້ນ ແຕ່ທໍ່ວ່າເມື່ອໄດ້ ແບກປືນເຂົ້າປ່າໄປນຳໝູ່ຈັກ 4-5 ເທື່ອ ຮູ້ລົດຊາດຂອງມັນແລ້ວ ຈະຮູ້ສຶກມັກແລະຢາກເຂົ້າປ່າສະເໝີ, ເຮົາ ເຂົ້າໄປໃນປ່າໄມ້ ບໍ່ແມ່ນວ່າປະສົງຈະຍິງແຕ່ສັດຢ່າງດຽວ ເຮົາຍັງ ໄດ້ຄວາມຮູ້ນານາປະການ ໃນປ່າດົງພົງໄພອັນໄພສານ ເຊິ່ງເຕັມໄປ ດ້ວຍພຶກສາຊາດນານາພັນ ທີ່ເຮົາບໍ່ເຄີຍໄດ້ເຫັນ ໂຮມທັງສັດນ້ອຍສັດ ໃຫຍ່ ທີ່ດຳລົງຊີວິດຂອງມັນຢູ່ຢ່າງເລິກລັບໃນປ່າເຫຼົ່ານັ້ນ ທັງເຮົາຈະ ໄດ້ເຫັນໂງ່ນຫິນພູຜາ ທ້ວຍຮ່ອງທີ່ໄຫຼ ຜ່ານພະລານຫິນ ໄດ້ຮູ້ຈັກຂະນົບ ທຳນຽມປະເພນີຂອງຊາວປ່າຊາວດອຍ ເຊິ່ງອາດຈະເວົ້າໄດ້ວ່າພວກ ເຮົາບໍ່ຮູ້ເລີຍຈັກດີ ຖ້າບໍ່ໄດ້ໄປເຫັນມາ ນອກນີ້ກິລາລະເມີ້ອ ຍັງອາດ ພາໃຫ້ເຮົາໄດ້ຮູ້ຄວາມເບີກບານ ຖ່າຍເທອາລົມອັນມົວເມົາ ໝົກໝອກ ຢູ່ດ້ວຍຄວາມຄຶດ ຄວາມອ່ານຮ້ອຍແປດ ແລະປັດເປົ່າຄວາມໝຸດໝັດ ໃຈໄດ້ຊື່ອຂະນະ. ກິລາປະເພດລະເມີ້ອ ເປັນການຝຶກຝົນ ກ່ຽວແກ່ກຳ ລັງກາຍໃຫ້ແຂງແຮງຂຶ້ນ ທັງຝຶກຝົນກຳລັງຄວາມຄຶດຄວາມແໜ້ນ ແນ່ແກ່ໃຈຄວາມລະມັດລະວັງອົດທົນ ເຊິ່ງພ້ອມສະເໝີທີ່ຈະຜະຈົນໄພ ກັບທຳມະຊາດເຫຼົ່ານັ້ນໄດ້ທຸກເວລາທີ່ເຮົາເດີນປ່າ".

ໃນການອອກທ່ຽວປ່າຫາລະເມີ້ອຂອງເຈົ້າເພັດຊະຣາດນັ້ນ ມີ ຫຼາຍຄັ້ງຫຼາຍຫົນທີ່ພຣະອົງໄດ້ຜະຈົນໄພຕໍ່ສູ້ກັບສັດຮ້າຍຖືກສັດຮ້າຍ ໄລ່ ຄືຖືກ ຊ້າງ ໄລ່ 3 ເທື່ອ ເມີຍ 2 ເທື່ອ ແລະໝູປ່າອີກເທື່ອໜຶ່ງ ດັ່ງ ຈະນຳເລື່ອງມາເລົ່າສູ່ຟັງຕໍ່ໄປນີ້:

ຍິງຊ້າງຮ້າຍເທື່ອທີ 1

ເມື່ອປີ ຄ.ສ. 1925 ພຣະອົງໃຫ້ພວກໝໍຊ້າງນຳເອົາຊ້າງຕໍ່ຂອງພຣະອົງ ຈຳນວນ 4 ຕົວ ໄປທ່ຽວຫາຄ້ອງຊ້າງ ຢູ່ຕາມບໍລິເວນຫ້ວຍຈັນທາງທິດເໜືອຂອງນະຄອນວຽງຈັນປະມານ 100 ກິໂລແມັດ ພວກໝໍຊ້າງພະຍາຍາມຫາຄ້ອງຊ້າງຢູ່ເຖິງສອງເດືອນ ກໍບໍ່ໄດ້ຊ້າງຈັກຕົວ ທັງນີ້ເພາະມີຊ້າງຮ້າຍໝູ່ໜຶ່ງ ຄອຍກຸກກວນຊ້າງຕໍ່ຢູ່ສະເໝີ ລັກສະນະຂອງຊ້າງປ່າທີ່ເປັນຊ້າງຮ້າຍນັ້ນຂີ້ຂອງມັນເປັນສີດຳ ຖ້າກ້ອນຂີ້ເປັນສີເຫຼືອງໆເປັນຊ້າງທຳມະດາຄືບໍ່ຮ້າຍ ເມື່ອພຣະອົງໄດ້ຂ່າວ ດັ່ງນັ້ນຈຶ່ງລາພັກການອອກໄປຍິງຊ້າງ ໃນລະຫວ່າງເດືອນກໍລະກົດ ແລະໄປທັນຊ້າງໝູ່ມັນຮ້າຍນັ້ນ ໃນຂະນະທີ່ພວກມັນພວມຂຶ້ນພູໜ່ວຍໜຶ່ງ ພໍພຣະອົງນຳຂຶ້ນໄປຈະເຖິງຈອມພູ ພວກຊ້າງກໍຂ້າມພູໜ່ວຍນັ້ນລົງໄປແລ້ວ ເຫຼືອຢູ່ຕົວດຽວທີ່ເປັນຕົວຄອຍລະວັງຫຼັງ ເຊິ່ງເປັນຊ້າງພາຍຂະໜາດໃຫຍ່ ພຣະອົງນຳກົ້ນມັນເຂົ້າໄປໃກ້ໆປະມານ 25 ແມັດ ຈຶ່ງຫຼີກອອກໄປທາງຊ້າງເພື່ອຈະເບິ່ງວ່າມັນມີງາຫຼືບໍ່? ພໍຍ່າງຫຼີກອອກໄປທາງຊ້າງໄດ້ປະມານ 3-4 ບາດຍ່າງທ່ໍນັ້ນ ຊ້າງຕົວນັ້ນກໍປົ່ນໜ້າມາທາງພຣະອົງ ເພາະມັນຄົງໄດ້ຍິນສຽງຫຼືຖືກກິ່ນຄົນ ພໍມັນຫຼຽວເຫັນພຣະອົງທ່ານມັນກໍປ້ອມມືເຂົ້າແລະກາງຫູອອກ ຕັ້ງທ່າຈະແລ່ນເຂົ້າໃສ່ທັນທີ ພຣະອົງເຫັນທ່າບໍ່ດີຈຶ່ງຟ້າວຍິງມັນກ່ອນ ແນໃສ່ບ່ອນກົກງາພໍດີ ເຊິ່ງກໍເປັນຜົນໃຫ້ມັນລົ້ມລົງແລະຂາດໃຈຕາຍກັບບ່ອນ ແຕ່ເນື່ອງຈາກບ່ອນຊ້າງລົ້ມຕາຍນັ້ນເປັນໂນນສູງ ມັນຈຶ່ງກິ້ງລົງມາຊື່ພຣະອົງທີ່ຢືນຢູ່ທາງກ້ອງ ພຣະອົງຢ້ານຊ້າງກິ້ງລົງມາຕັງຈຶ່ງໂດດຫຼີກອອກທັນທີໂດຍບໍ່ໄດ້ລະວັງ ຈຶ່ງຖືກສ້ອນໄມ້ໄຜ່ແທງສົ້ນບ່ອງຂ້າງຊ້າຍຈົນລຸກບໍ່ຂຶ້ນ ໂຊກດີຊ້າງຕົວນັ້ນກິ້ງລົງມາຄາຕົ້ນໄມ້ຕົ້ນໜຶ່ງຈຶ່ງບໍ່ທັບພຣະອົງ.

ຊ້າງໄລ່ຄັ້ງທີ 2

ປີ ຄ.ສ. 1927 ພຣະອົງຢຸດລາຊະການ ໄປເຊົາພັກຮ້ອນຢູ່ສວນ ຂອງພຣະອົງ ທີ່ບ້ານນາກາຍແຂວງຄຳມ່ວນ ວັນໜຶ່ງອອກໄປທ່ຽວ ຫາຍິງເມີຍ ຄັນໄປຮອດໂປ່ງບ່ອນໜຶ່ງ ໄດ້ເຫັນຮອຍຊ້າງ ເອົາງາແທງ ດິນໄວ້ໃໝ່ໆຫຼາຍຮອຍ ພຣະອົງປ່ຽນໃຈບໍ່ໄປຫາຍິງເມີຍ ແຕ່ຈະໄປນຳ ຍິງຊ້າງເພື່ອເອົາງາ ພໍເດີນນຳຮອຍມັນໄປປະມານ 2 ຊົ່ວໂມງ ກໍທັນ ໝູ່ຊ້າງເຊິ່ງພວມຫັກງ່ຳໄມ້ກິນຢູ່ ພຣະອົງຈຶ່ງນັ່ງລົງເພື່ອສັງເກດເບິ່ງ ທິດທາງຂອງລົມ ເມື່ອຮູ້ແລ້ວຈຶ່ງເຂົ້າໄປຫາມັນທາງໃຕ້ລົມ ເພື່ອຊອກ ຫາເບິ່ງຕົວທີ່ມີງາ ຄັນເຂົ້າໄປໃກ້ໝູ່ຊ້າງຈຶ່ງໄດ້ຍິນສຽງຊ້າງຕົວໜຶ່ງ ຫັກງ່ຳໄມ້ທ່າງໝູ່ ພຣະອົງເຂົ້າໄປຫາຕົວທີ່ຢູ່ທ່າງໝູ່ນັ້ນ ເພາະທຳມະ ດາຊ້າງພາຍທີ່ມີງາບໍ່ມັກຢູ່ປົນໝູ່ ພໍເຂົ້າໄປໃກ້ປະມານ 20ແມັດກໍເຫັນ ເປັນຊ້າງພາຍ ງາຍາວລ່າງຊ່າງ ສົມຄວາມຄຶດ ຈຶ່ງຍິງເຂົ້າໃສ່ກົກຫູ ຂອງມັນດ້ວຍປືນເມົາເຊ 10-70 ມັນລົ້ມລົງ ຂາດໃຈຕາຍທັນທີ ແຕ່ພໍ ສຽງປືນດັງຂຶ້ນ ຝູງຊ້າງທັງຫຼາຍທີ່ພວມຫັກງ່ຳໄມ້ກິນຢູ່ ກໍແລ່ນໜີ ປ່າມາຫາພຣະອົງໃນທຸກທິດທຸກທາງ ໂດຍມີຊ້າງພັງໃຫຍ່ 4-5 ຕົວນຳ ໜ້າມາ ພໍພວກມັນເຫັນຊ້າງພາຍລົ້ມຄຸກເຂົ່າຕາຍຢູ່ ພວກມັນກໍຕົກ ສະເງີ ແລ້ວພາກັນເອົາຫົວຍູ້ດັນໃຫ້ຊ້າງພາຍຕົວນັ້ນລຸກຂຶ້ນ ແຕ່ມັນ ລຸກບໍ່ໄດ້ເພາະມັນຕາຍແລ້ວແລະທັນໃດນັ້ນຊ້າງພັງແມ່ຕ່ຳແຫ້ຕົວໜຶ່ງ ຫຼຽວມາເຫັນພຣະອົງເຂົ້າ ມັນຈຶ່ງເງີຍຫົວຂຶ້ນປ້ອມມີ ແລະກາງຫູ ແລ່ນເຂົ້າໃສ່ພຣະອົງທັນທີ ຊ້າງຕົວອື່ນໆເຫັນດັ່ງນັ້ນ ກໍແລ່ນຕາມຕົວ ນັ້ນມາ ພຣະອົງຈຶ່ງຍິ່ງໃສ່ໜ້າໂນຂອງຕົວແລ່ນມາກ່ອນ ມັນກໍລົ້ມລົງ ເມື່ອຕົວທີ 1 ລົ້ມລົງແລ້ວ ຕົວທີ່ສອງກໍຫລູບເຂົ້າມາອີກ ພຣະອົງຈຶ່ງ ເລງໃສ່ກະໂບງຫົວຂອງມັນ ເຮັດໃຫ້ມັນເອົາຫົວສັກລົງດິນແລະຮ້ອງ

ດັ່ງສະໜັ່ນແຕ່ບໍ່ລົ້ມ ຄັນມັນລຸກຂຶ້ນໄດ້ກໍຫັນຫຼັງກັບແລ່ນໜີໄປພ້ອມທັງໝູ່ຂອງມັນ.

ຄັ້ງທີ 3

ເມື່ອເດືອນທັນວາ ຄ.ສ. 1927 ນັ້ນເອງ ເຈົ້າເພັດຊະຣາດກັບຄົນຝຣັ່ງ ຜູ່ໜຶ່ງຊື່ ເລີເກເນດັນ ເຊິ່ງເປັນໝູ່ນາຍພານນຳກັນກັບພຣະອົງ ໄດ້ພາກັນໄປທ່ຽວຫາຍິງສັດເທິງພູເຂົາຄວາຍ ໂດຍຂຶ້ນທາງບ້ານນາໄຊແລ້ວຈະໄຕ່ສັນພູໄປຫາໂນນສາວເອ້ອັນເປັນສະຖານທີ່ພັກລະດູຮ້ອນຂອງຂ້າລາຊະການຊາວອຽງຈັນ ພໍອອກເດີນຈາກບ້ານນາໄຊໄປໄດ້ຫ້າວັນ ກໍເຫັນຮອຍແຮດຢູ່ໜອງນ້ຳໜຶ່ງເທິງຫຼັງພູ ພວກຊາວບ້ານທີ່ເປັນຄົນຫາບຂອງກິນບອກວ່າແຮດສອງຕົວນີ້ ເຖິງລະດູຝົນມັກຈະລົງໄປຫາກິນໃກ້ໆບ້ານນາໄຊທຸກປີ ແຕ່ບໍ່ມີຜູ່ໃດຫານມາຊອກຍິງ ພໍເຖິງວັນຖ້ວນຫົກ ຕອນບ່າຍໄດ້ພາກັນເຊົ້າພັກເອົາແຮງຢູ່ປ່າໃຫຍ່ແຫ່ງໜຶ່ງທີ່ຮົ່ມເຢັນດີ ເມື່ອປົງຫາບປົງຂອງແລ້ວຕ່າງຄົນກໍໄປຫາຖ່າຍ ຍັງຢູ່ບ່ອນພັກແຕ່ເຈົ້າເພັດຊະຣາດກັບຄົນໃຊ້ສອຍສອງສາມຄົນ ຂະນະທີ່ພຣະອົງນັ່ງດູດຢາຢູ່ນັ້ນ ກໍໄດ້ຍິນສຽງວ່າໄມ້ຫັກສອງສາມບາດຢູ່ທາງຂ້າງໜ້າບ່ອນຈະໄປ ພຣະອົງສົງໄສວ່າ ຄົງເປັນສຽງສັດຂະໜາດໃຫຍ່ບໍ່ແມ່ນຊ້າງກໍຄົງແມ່ນເມີຍ ຈຶ່ງຈັບເອົາປືນວິນເຊັສເຕີ້ແລ້ວຈອບໆໄປຫາສຽງນັ້ນ ໂດຍບໍ່ໄດ້ບອກໃຫ້ຜູ່ໃດຮູ້ ພໍເດີນໄປໄດ້ປະມານ 40 ແມັດ ກໍເຫັນຂີ້ຊ້າງແນວສີດຳ ທັງໄດ້ຍິນສຽງຊ້າງວີຫູນຳອີກ ຈຶ່ງເຂົ້າໄປຫາໝູ່ຊ້າງນັ້ນທາງໃຕ້ລົມເພື່ອເລືອກຫາເບິ່ງໂຕມີງາ ທັນໄດ້ເບິ່ງຊ້າງພຽງ 3-4 ຕົວທ່ໍນັ້ນ ກໍມີຊ້າງນ້ອຍຕົວໜຶ່ງຍ່າງມາຫາພຣະອົງໂດຍຍົກມືຂຶ້ນສູງ ເພື່ອສູດດົມຫາກິ່ນຄົນ ແຕ່ພໍມັນຫຼຽວເຫັນພຣະອົງທ່ານ

ມັນກໍຕົກໃຈຮ້ອງຂຶ້ນໝົດແຮງ ພວກຊ້າງພັງຊ້າງພາຍທັງຫຼາຍໄດ້ຍິນ ສຽງຊ້າງນ້ອຍຮ້ອງ ແລະ ຫຼຽວເຫັນອົງເຈົ້າເພັດຊະຣາດ ມັນກໍປ້ອມ ງວງກາງໃບຫູແລ່ນເຂົ້າໃສ່ພຣະອົງທັນທີ ພຣະອົງຈຶ່ງຍິງປ້ອງກັນໂຕ ໂດຍເລງໃສ່ກະໂບງຫົວ 3 ຕົວ ທີ່ແລ່ນເຂົ້າມາໃກ້ໆສາມນັດຕິດໆກັນ ຊ້າງທີ່ຖືກຍິງທຸກຕົວລົ້ມຫົວສັກລົງແລ້ວກໍຮ້ອງ ພໍເງີຍຫົວຂຶ້ນໄດ້ຈຶ່ງ ແລ່ນໜີໄປ.

ສະນັ້ນ ພວກທີ່ພວມໄປຖ່າຍບໍ່ທັນສຸດ ລາງຄົນໄດ້ຍິນສຽງຊ້າງ ແລ່ນປາບດົງຊິແຕກແລະບໍ່ຮູ້ຕົ້ນປາຍສາຍເຫດຈຶ່ງຫຼົງຫອບໂສ້ງແລ່ນ ມາບ່ອນເຊົ່າເພື່ອຈັບເອົາປືນ ພວກທີ່ຖ່າຍມາແລ້ວກໍຕື່ນຫຼົງສະຕິພາ ກັນແລ່ນຫາບ່ອນເພິ່ງ ໂດຍຊິ່ງກັນໂອບຂຶ້ນຕົ້ນໄມ້ຕົ້ນດຽວກັນເຖິງ 3 ຄົນ ແຕ່ກໍຂຶ້ນບໍ່ທັນຈັກຄົນ ສ່ວນພະຍານາໃຕ້(ທອງດີ) ກັບພໍ່ຄົວຄົນໜຶ່ງຂອງ ພຣະອົງ ກໍຍາດກັນໜີ້ນເຂົ້າໃນໂກນຕົ້ນແປກໂກນດຽວກັນ ແຕ່ກໍເຂົ້າບໍ່ ໄດ້ ຈົນຊ້າງແລ່ນໜີໝົດແລ້ວກໍຍັງບໍ່ໄດ້ເຂົ້າຈັກຄົນ.

ຖືກເມີຍ ອາລະວາດ 2 ເທື່ອ

ເທື່ອທີ 1 ຢູ່ບ້ານນາກາຍ ເລື່ອງມີດັ່ງນີ້ ວັນໜຶ່ງ ເຈົ້າເພັດຊະຣາດ ກັບ ທ້າວຈຸລາ ຄົນເຝົ້າສວນສັດຂອງພຣະອົງ ຢູ່ບ້ານນາກາຍ ອອກໄປ ຊອກຫາຍິງເມີຍ ພໍໄດ້ເຫັນຮອຍເມີຍ ຈຶ່ງນຳຮອຍນັ້ນໄປປະມານສາມ ຊົ່ວໂມງ ກໍໄປທັນມັນໃນຂະນະທີ່ມັນຍ່າງໄປຢ່າງຊ້າໆ ແຕ່ຈະຍິງທາງ ກົ້ນຂອງມັນເຫັນບໍ່ເໝາະ ພຣະອົງຈຶ່ງໝອບໄປທາງຊ້າງເພື່ອຈະຍິງ ໃຫ້ຖືກກ້ານຄໍ ຫຼື ຊີ່ບ່ອນໝາກຫົວໃຈຂອງມັນ ແຕ່ພໍພຣະອົງໝອບໄປ ໄດ້ໜ້ອຍໜຶ່ງ ມັນກໍງວາກໜ້າຄືນມາທາງພຣະອົງ ເພາະມັນໄດ້ຍິນ ສຽງຄົນ ຫຼືຖືກກິ່ນກໍອາດເປັນໄດ້ ພຣະອົງຈຶ່ງຟ້າວຍິງ ມັນກ່ອນໂດຍແນ

ໃສ່ກ້ານຄໍ ຫວັງຈະໃຫ້ມັນລົ້ມກັບບ່ອນ ແຕ່ພໍປືນລັ່ນໄປແລ້ວ ກໍເຫັນເມີຍ ໂດດແລ່ນຕໍ່ໄປເລີຍບໍ່ລົ້ມ ພຣະອົງຈຶ່ງເຂົ້າໄປເບິ່ງບ່ອນຍິງເຫັນມີຟອງ ຫຼອດລົ່ມຕົກຢູ່ກັບເລືອດ ກໍເຂົ້າໃຈວ່າຍິງຖືກຫຼອດລົ່ມບ່ອນໂຕກະດູກຄໍ ນັ້ນ ມັນຈຶ່ງບໍ່ລົ້ມກັບບ່ອນ ແຕ່ກໍແນ່ໃຈວ່າມັນຄົງໄປບໍ່ໄດ້ໄກພໍທໍ່ໃດກໍ ຄົງລົ້ມ ຈຶ່ງນຳຮອຍເລືອດໄປ ດ້ວຍຄວາມລະມັດລະວັງທີ່ສຸດ ປະມານ 15 ນາທີ ກໍເຫັນມັນນອນ ມິດງຽບຢູ່ໃນປ່າຕຶບ ເມື່ອເຫັນດັ່ງນັ້ນ ພຣະອົງ ກັບລູກແຫ້ງ ຄືທ້າວຈຸລາ ກໍຍິ່ງ ລະວັງ ຈະຖືກຂາແຕ່ລະບາດຕ້ອງຫຼຽວ ຊ້າຍຫຼຽວຂວາ ເບິ່ງໃຫ້ຄັກໆເສຽກ່ອນ ຂະນະທີ່ພວມຫຼຽວຊ້າຍຫຼຽວ ຂວາຢູ່ນັ້ນ ກໍໄດ້ຍິນສຽງດັງພຶບຂຶ້ນຊື່ທາງໜ້າ ທັນທີທີ່ໄດ້ຍິນສຽງ ພຶບພຣະອົງກໍໂດດບັງຕົ້ນໄມ້ໃຫຍ່ຕົ້ນໜຶ່ງ ແລະທ້າວຈຸລາກໍໂດດຕາມ ແຕ່ປານນັ້ນເມີຍຍັງທັນໄດ້ຂວິດທ້າວຈຸລາ ຖືກເສື້ອສີກາກີທີ່ເຂົ້ານຸ່ງ ຢູ່ນັ້ນຂາດຕິດເຂົ້າເມີຍໄປເຄິ່ງຜືນ ພໍເມີຍກາຍໄປແລ້ວ ພຣະອົງຈຶ່ງຍິງ ຕາມຫຼັງມັນໄປຖືກຂາຫຼັງຫັກ ມັນຈຶ່ງລົ້ມລົງຍິງຊ້ຳອີກບາດໜຶ່ງມັນ ຈຶ່ງຂາດໃຈຕາຍ ເມື່ອຮູ້ວ່າເມີຍຕາຍແລ້ວຈຶ່ງຮູ້ເມື່ອຄືງວ່າເຫື່ອອອກ ເຕັມຕົວສ່ວນທ້າວຈຸລານັ້ນໜ້າເຫຼືອງປານປູ່ຈີ່ ແລະເກີດເປັນໄຂ້ຂຶ້ນກັບ ບ່ອນ ຕ້ອງນັ່ງເຊົາແຮງຢູ່ ຫຼາຍຊົ່ວໂມງຈຶ່ງເຊົາໄຂ້.

ເທື່ອທີສອງ ເມີຍແມ່ຊົນລູກນ້ອງຂອງພຣະອົງໃນຄາວໜີໄປລີ້ ໄພການເມືອງຢູ່ທີ່ປະເທດໄທ ເມື່ອປີ ຄ.ສ.1952 ນີ້ເອງ. ເລື່ອງນີ້ມີຢູ່ ວ່າ ຄາວນັ້ນພຣະອົງໄປທ່ຽວຫາຍິງສັດໃຫຍ່ທາງກົ່ງອຳເພີອັງໂພຈັງ ຫວັດການຈະນະບູລີ ອັນຢູ່ທາງ ແດນພະມ້າ ກັບພວກນາຍພານໄທ ໄປ ຕັ້ງທັບເຊົາຢູ່ທົ່ງສາງແລ້ວ ຕ່າງຄົນກໍອອກໄປທ່ຽວຫາຍິງ ພ້ອມກັບ ລູກນ້ອງຂອງໃຜລາວ ເຈົ້າເພັດຊະຣາດໄດ້ລູກນ້ອງຄົນໄທໄປນຳສອງ ຄົນຄື ນາຍແກ້ວ ກັບ ນາຍປ໋ວ ນາຍແກ້ວຖືປືນເມົ້າເຊ 19.3 ສ່ວນ

ນາຍປ໋ອຖືປືນທະຫານຍີ່ປຸ່ນ ພໍເດີນໄປໄດ້ປະມານ 1 ຊົ່ວໂມງ ກໍໄດ້ເຫັນ ຮອຍເມັຍໝູ່ໜຶ່ງອອກມາຫາກິນຕາມທົ່ງ ໃນຕອນເຊົ້ານັ້ນເອງ ພຣະອົງ ຈົ່ງນຳຮອຍມັນໄປພ້ອງຂີ້ຂອງມັນ ເມື່ອເອົານິ້ວມືແຫງເບິ່ງກໍຮູ້ສຶກ ອຸ່ນໆ ສະແດງວ່າມັນຫາກໍຕົກດິນເມື່ອບໍ່ຈັກນາທີມານີ້ເອງ ພຣະອົງ ຈົ່ງງວາກໜ້າຄືນຫຼັງ ເພື່ອເຕືອນລູກນ້ອງທັງສອງຄົນໃຫ້ລະມັດລະວັງ ແຕ່ບໍ່ເຫັນນາຍແກ້ວ ຄັນຊິຄອຍຖ້າກໍຢ້ານ ບໍ່ທັນເມັຍ ຄັນຊິຮ້ອງກໍຢ້ານ ເມັຍຕື່ນແລ່ນໜີໄປເສຽ ພຣະອົງຈົ່ງເປົ່ານົກຫວີດຄ່ອຍໆຮ້ອງນາຍ ແກ້ວ ພໍສຽງນົກຫວີດດັງຂຶ້ນກໍໄດ້ຍິນສຽງສັດ ແລ່ນຢຽບໄມ້ຫັກດັງໂຄບ ແຄບ ຈາກຂ້າງທາງຊື່ໜ້າພຣະອົງໄປ ພຣະອົງຈົ່ງໄປທາງສຽງນັ້ນ ແລະບອກໃຫ້ນາຍປ໋ອແລ່ນໄປລັດທາງຂ້າງຂວາ ຄັນແລ່ນໄປໄດ້ ປະ ມານ 50 ແມັດກໍຫຼຽວເຫັນເມັຍ 3-4 ຕົວພວມແລ່ນຂຶ້ນພູຕໍ່າໆໜ່ອຍ ໜຶ່ງໄກຈາກພຣະອົງ ປະມານ 40 ແມັດ ພຣະອົງຈົ່ງຍິງໃສ່ກົ້ນຕົວທີ່ ສູງກວ່າໝູ່ ແລ້ວກໍຍິງໃສ່ອີກຕົວໜຶ່ງ ໃນຂະນະດຽວກັນ ພໍລັ່ນປືນນັດ ທີສອງໄປກໍເຫັນເມັຍຕົວທີ່ຍິງນັດທຳອິດ ຫັນໜ້າລົງພູໄປທາງດ້ານ ຂວາ ສະແດງວ່າມັນຖືກປືນແລ້ວ ພໍຈະຍິງຊ້ຳ ກໍໄດ້ຍິນສຽງປືນຂອງ ນາຍປ໋ອດັງຂຶ້ນ ແລ້ວກໍໄດ້ຍິນສຽງຮ້ອງຂຶ້ນອີກວ່າ "ທ່ານ! ໂອ້ ຍ...ຍ! ຊ່ອຍແດ່ຕາຍແລ້ວໆ" ເຈົ້າເພັດຊະຣາດ ກໍຮ້ອງຕອບໄປວ່າພວມໄປ ຢູ່ນີ້ແລ້ວ ແລ້ວກໍຫຼຽວໄປທາງສຽງຮ້ອງຂອງນາຍປ໋ອ ແຕ່ບໍ່ເຫັນນາຍ ປ໋ອ ເຫັນແຕ່ເມັຍ ຄັນຊິຍິງກໍຢ້ານຖືກຄົນ ພຣະອົງຈົ່ງແລ່ນໄປທາງຂ້າງ ເຖິງແຄມຫ້ວຍ ພໍດີເຫັນນາຍແກ້ວແລ່ນມາຈົ່ງບອກນາຍແກ້ວວ່າ "ແກ້ວໄປ ຊ່ອຍນາຍປ໋ອໄວ ລະວັງຢ່າຍິງໃຫ້ຖືກຄົນ"; ພໍນາຍແກ້ວກາຍ ໄປ ກໍໄດ້ຍິນສຽງ ປືນຂອງເອົາດັງຂຶ້ນ ບາດໜຶ່ງ ແລະເມື່ອພຣະອົງທ່ານ ແລ່ນໄປພວມຊິເຖິງເອົາ ກໍຍິງອີກນັດໜຶ່ງ ແລະຮ້ອງບອກນາຍປ໋ອວ່າ:

ປ໋ວລຸກໄດ້ແລ້ວ" ນາຍປ໋ວກໍຄູ້ຂາຂຶ້ນເພື່ອຈະລຸກນັ່ງ ພໍເມີຍເຫັນນາຍ ປ໋ວເໜັງຂາມັນກໍຊຶນເອົາອີກ ເຈົ້າເພັດຊະຣາດຈຶ່ງຮ້ອງຂຶ້ນແຮງໆວ່າ "ປ໋ວ ! ຢ່າລຸກ" ຄັນເມື່ອມັນໄດ້ຍິນສຽງຂອງ ພຣະອົງ ມັນກໍຫັນໜ້າມາ ໃສ່ ແລະພໍມັນຂະຫຍັບອອກຈາກນາຍປ໋ວທໍ່ນັ້ນ ພຣະອົງກໍເລງໃສ່ກ້ານ ຄໍຂອງມັນລົ້ມລົງຂາດໃຈຕາຍໃນທັນໃດ ນາຍປ໋ວຜູ່ຖືກເມີຍຊຶນໃນຄາວ ນີ້ທາງບ່າຍັງພາຍເຕົ່າໃຫຍ່ສອງຕົວຢູ່ ເຂົາບອກວ່າພໍເຂົາເຫັນມັນ ຖືກປືນຂອງເຈົ້າເພັດຊະຣາດແລ້ວ ຈຶ່ງຍິງຢັບຢັ້ງໄວ້ ແຕ່ບໍ່ຖືກບ່ອນສຳ ຄັນ ມັນເລີຍຫລູບເຂົ້າຊຶນ ໂຊກດີ ນາຍປ໋ວລົ້ມນອນລົງບັງກົກໄມ້ໄຜ່ ນ້ອຍໆສາມກົກ ຈຶ່ງບໍ່ເຈັບຫຼາຍ ແຕ່ປານນັ້ນ ກໍຍັງຖືກກົກເຂົ້າຂອງມັນ ຖຸຍຂະໜັບໂນໄປທັງສອງຂ້າງ ແລະເປັນໄຂ້ຢູ່ສອງວັນຈຶ່ງເຊົ້າໄຂ້.

ເມີຍຮ້າຍທີ່ຊຶນຄົນໃນເວລາມັນຖືກເຈັບຫຼືບໍ່ຖືກເຈັບກໍຕາມ ແມ່ນ ເມີຍຊະນິດຂົນແຄ່ງກັບຂົນໜ້າຜາກເປັນສີເຫຼືອງ ສ່ວນເມີຍຊະນິດຂົນ ແຄ່ງຂົນໜ້າ ຜາກເປັນສີຂາວນັ້ນ ບໍ່ຮ້າຍທໍ່ແນວຂົນແຄ່ງເຫຼືອງ.

ຖືກໝູປ່າອາລະວາດຫຼາຍເທື່ອ

ໝູປ່າເປັນສັດທີ່ມີນິໄສຮ້າຍຫຼາຍໃນເວລາມັນເຈັບແລ້ວ ລາງ ເທື່ອອາດຮ້າຍກວ່າເສືອ ຂ້າພະເຈົ້າຜູ່ຂຽນເຄີຍໄດ້ຍິງໝູປ່ານຳເຈົ້າ ເພັດຊະຣາດຫຼາຍເທື່ອແລະເຄີຍຍິງໄດ້ໂຕຂະໜາດໃຫຍ່ທີ່ສຸດ ເຊິ່ງມີ ນ້ຳໜັກເຖິງ 160 ກິໂລ ຢູ່ບ້ານຫາດກ້ຽງໂຕໜຶ່ງ ແຕ່ບໍ່ເຫັນຄວາມຮ້າຍ ກາດຂອງມັນ ເພາະມັນຖືກປືນຂອງ ພຣະອົງທ່ານແລະຂາດໃຈຕາຍ ກ່ອນທີ່ຈະອາລະວາດໄດ້ ສ່ວນໝູປ່າຕົວທີ່ອາລະວາດພຣະອົງທ່ານ ຄັ້ງຫຼ້າສຸດນີ້ ຂ້າພະເຈົ້າໄດ້ຊາບຈາກບົດຂຽນຂອງພຣະອົງເອງທີ່ເລົ່າ ໄວ້ ໃນໜັງສືເລື່ອງ "ອາວຸດປືນ" ຂອງພຣະອົງ ດັ່ງຈະນຳມາເລົ່າສູ່ຟັງ

ຕໍ່ໄປນີ້.

ເມື່ອປີ ຄ.ສ. 1957 ເວລາພຣະອົງປະທັບຢູ່ປະເທດໄທ ຄາວໜີ ໄພການເມືອງ ພຣະອົງໄດ້ໄປທ່ຽວລະເມີ້ອນຳພວກເຈົ້ານາຍໄທ ແລະ ຂ້າລາຊະການໄທ ຜູ່ນິຍົມໄພຄີ ພຣະອົງເຈົ້າພານຸພັນຍຸຄົນ ກັບພຣະອົງ ເຈົ້າສະເຫຼີມພົນທິຄຳພອນ ນາຍແພດບຸນສົງເລຂະກູນ ໃນປ່າແມ່ວົງ ໃນຈັງຫວັດນະຄອນສະຫວັນ. ມື້ນັ້ນນາຍພານສອນໄດ້ພາພຣະອົງໄປ ຫາຍິງງົວແດງ (ງົວປ່າທຳມະດາ) ພໍນຳຮອຍໄປໄດ້ປະມານຊົ່ວໂມງ ໜຶ່ງ ຮອຍນັ້ນກໍໄປປົນເຂົ້າກັບຮອຍງົວໜູ່ ຈຶ່ງຕ່າງຄົນຕ່າງກໍກົ້ມຊອກ ຫາຮອຍງົວຕົວທີ່ນຳມາແຕ່ເຄົ້າຢູ່ໃນປ່າໄມ້ຈິກໄມ້ຮັງຫ່າງໆ ພໍພຣະອົງ ຫຼຽວໄປທາງປ່າ ທີ່ເປັນດົງຕຶບເຊິ່ງໄກຈາກ ພຣະອົງໄປປະມານ 150 ແມັດ ກໍເຫັນສັດໃຫຍ່ຕົວໜຶ່ງສີດຳໆພົ້ນອອກຈາກດົງ ຍ່າງມາຫາປ່າ ຮັງ ທຳອິດ ພຣະອົງຄຶດວ່າແມ່ນເມີຍ ແຕ່ເມື່ອໄດ້ສັງເກດເບິ່ງຄັກແລ້ວ ຈຶ່ງຮູ້ວ່າມັນແມ່ນໝູທອກຂະໜາດໃຫຍ່ທີ່ສຸດ ພຣະອົງຈຶ່ງບັງຕົ້ນໄມ້ ເຂົ້າໄປຫາມັນ ຄັນໄດ້ໄລຍະພໍດີສຳລັບຈະຍິງໃຫ້ມັນຢູ່ກັບບ່ອນດ້ວຍປືນ ນັດດຽວຂອງເມົາເຊ 0.75. ໝູນັ້ນຍ່າງຊ້າໆງວາກຊ້າຍງວາກຂວາ ເພື່ອຊອກຫາອາຫານຜ່ານໜ້າພຣະອົງໄປໃນລະຍະປະມານ 35 ຫຼື 40 ແມັດ ພຣະອົງກໍເລງໃສ່ຂີ້ແຮ້ແດງ ຫວັງໃຫ້ລູກປືນຊອດໃສ່ໜາກ ຫົວໃຈໃຫ້ມັນຕາຍບາດດຽວ ພໍປືນລັ່ນປ້າງ ໝູຕົວນັ້ນກໍລົ້ມກິ້ງຢູ່ກັບ ບ່ອນມັນກິ້ງຢູ່ບຶດໜຶ່ງກໍລຸກຂຶ້ນໄດ້ຫຼຽວຊ້າຍຫຼຽວຂວາ ພໍມັນເຫັນພຣະ ອົງທ່ານ ກໍແລ່ນເຂົ້າໃສ່ທັນທີ ພຣະອົງຍິງອີກນັດໜຶ່ງຖືກບ່າມັນກໍລົ້ມ ລົງອີກ ແຕ່ກໍຍັງສາມາດລຸກຂຶ້ນໄດ້ແລະຫລູບເຂົ້າມາຫາພຣະອົງອີກ ພຣະອົງຈຶ່ງຍິງອີກນັດທີສາມ ພໍດີຖືກຫົວມັນຈຶ່ງລົ້ມລົງຕາຍ ຢູ່ບໍ່ໄກ ຈາກ ພຣະອົງພໍທ່ໃດ.

ນັ່ງບ່ອນດຮອຍິງເມີຍໄດ້ 5 ຕົວ

ເຈົ້າເພັດຊະຣາດ ເປັນນາຍພານຍິງປືນແນ່ພໍປານໃດນັ້ນ ຂ້າພະເຈົ້າ ຂໍເລົ່າເລື່ອງທີ່ພຣະອົງນັ່ງຢູ່ບ່ອນດຮອຍິງເມີຍ 5 ຕົວຕາຍລຽນກັນເປັນແຖວ ດ້ວຍລູກປືນພຽງ 6 ລູກດັ່ງຕໍ່ໄປນີ້:

ເມື່ອປີ ຄ.ສ.1927 ເຈົ້າເພັດຊະຣາດອອກໄປພັກຜ່ອນຢູ່ສວນຂອງພຣະອົງ ທີ່ບ້ານນາກາຍແຂວງທ່າແຂກ ວັນໜຶ່ງພຣະອົງທ່ານ ກັບນາຍພານຍອດ ຊາວບ້ານນາກາຍກາງພາກັນອອກໄປຫາຍິງເມີຍ ແລະໄດ້ນຳຮອຍເມີຍໝູ່ໜຶ່ງໄປແຕ່ເຊົ້າ ໄປທັນໃນລະຫວ່າງແປດໂມງໃນຂະນະທີ່ພວກມັນພວມກິນຫຍ້າຢູ່ໃນທົ່ງນ້ອຍໆທົ່ງໜຶ່ງ ເຊິ່ງກວ້າງປະມານ 250 ແມັດ ແລະຍາວປະມານ 350 ແມັດທໍ່ນັ້ນ ໃກ້ໆກັບທົ່ງຄາງມ້າ ເມີຍໝູ່ນັ້ນມີທັງໝົດ 5 ຕົວ ແລະເປັນເມີຍຂະໜາດໃຫຍ່ເຕັມສານແລ້ວ ທັງໝົດກິນຢູ່ໄກຈາກຕີນປ່າປະມານ 70-80 ແມັດ ພໍຫຼຽວເຫັນເມີຍ ກໍພາກັນຍ່າງບັງຕົ້ນໄມ້ໄປຕາມຕີນປ່າແຄມທົ່ງ ພໍໄປໃກ້ເມີຍປະມານ 100 ແມັດ ກໍໝົດບ່ອນບັງ ຈຶ່ງຢຸດເພື່ອລົງມືຍິງ ໂດຍເລັງໃສ່ຕົວເຖິກໃຫຍ່ທີ່ສຸດຊື່ ບ່ອນຂີ້ແຮ້ແດງ ພໍຍິງໄປເມີຍຕົວນັ້ນກໍລົ້ມລົງຂາດໃຈຕາຍກັບບ່ອນ ສ່ວນເມີຍອີກ 4 ຕົວ ພໍໄດ້ຍິນສຽງປືນ ກໍແລ່ນຂ້າມທົ່ງໄປທາງປ່າທີ່ຢູ່ຊື່ໜ້າ ແຕ່ມັນບໍ່ແລ່ນຕັດຊື່ໄປມັນແລ່ນເວັ້ງໄປທາງຂ້າງຂວາຈັກໜ່ອຍ ພຣະອົງຈຶ່ງຍິງໃສ່ກະດູກສັນຫຼັງຂອງມັນທຸກໆຕົວໆລະນັດ ພໍຍິງນັດໃດເມີຍກໍລົ້ມລົງກັບບ່ອນທຸກນັດ ເວັ້ນແຕ່ນັດທີ 5 ແລະເມີຍຕົວທີ 5 ບໍ່ລົ້ມ ເພາະເວລາຍິງນັ້ນ ມັນແລ່ນໄປຮອດແຈປ່າແລ້ວລູກປືນແທນທີ່ຈະໄປຖືກສັນຫຼັງຂອງມັນ ກໍເລີຍຖືກເອົາແຄ່ງຫັກໄປຂ້າງໜຶ່ງທໍ່ນັ້ນ ມັນຈຶ່ງເຕັ້ນສາມຂາໄປຊ້າໆ ພຣະອົງຈຶ່ງທັນໄດ້ຍັດລູກປືນແລະຍິງຊ້ຳ ລູກທີ 6 ມັນຈຶ່ງລົ້ມຕາຍຢູ່ບ່ອນແຄມປ່ານັ້ນເອງ.

ภาบเมืองๆ ແລະ ภาบปົกຄອງ

ເຈົ້າມະຫາອຸປະຣາດ ເພັດຊະຣາດ ນອກຈາກຈະເປັນນາຍພາບ ເອກ ຫຼື ນັກໂທ່ເນື້ອທີ່ຍິງປືນແມ່ນັບດັບໜຶ່ງຂອງລາວ ເຄີຍປະຫານສັດ ຮ້າຍເຊັ່ນ: ເສືອ ບໍ່ໜ້ອຍກວ່າ 20-30 ຕົວ, ຊ້າງບໍ່ໜ້ອຍກວ່າ 10 ຕົວ, ເມີຍບໍ່ໜ້ອຍກວ່າ 100-110 ຕົວ ແລະແຮ້ບໍ່ຕ່ຳກວ່າ 300-400 ຕົວ ມາແລ້ວ ພຣະອົງຍັງເປັນນັກภาบเมืองๆและนักภาบปกครองผู้มีสายตาไกอีกด้วย ນອກຈາກນັ້ນ ພຣະອົງຍັງສາມາດຄັດຄ້ານລະ ບຽບภาบปกครองของฝรั่งที่ใช้ปกครองลาว ก้าต่อว่า ต่ำรงฝรั่ง ผู้เป็นนาย ເຊິ່ງຖືຕົວປານເຈົ້າໃນເວລາທີ່ພວກເຂົ້າปกครองอยู่นั้นด้วย ดังตัวอย่างที่มีมาแล้วแต่ปี 1914 ถึสะไหมนั้น ฝรั่งได้จัดละบຽบ ภาบปกครองประเทดลาวเป็นสองประเพดถึ ประเพดหัวเมืองขึ้น ແລະປະເພດເมืองอยู่ในความอารักขา.

ลาซะอาบาจักหลวงพระบาง เข้าจัดเป็นเมืองอยู่ในความ อารักขา ของลัดถะบาบฝรั่ง ส่วบแขวงทางพากใต้นับแต่ยอง จันลงไปจัดเป็นอาบานิคม ถึเมืองขึ้นโดยกง แล้วเข้าวางละ บຽบสำลับข้าลาซะภาบที่อยู่ในเมืองอาบานิคมนี้ว่า ข้าลาซะ ภาบที่กำเนิดอยู่เมืองใด กให้เธัดภาบอยู่แต่ในเมืองนั้นแขวงนั้น จะโยกย้ายไปเมืองอื่นบ่ได้ ละบຽบภาบแบบนี้ เธัดให้ข้าลาซะ ภาบลาวเป็นคบมีความรู้แลบ ถีรู้จักแต่เหดภาบที่มีอยู่ในเมืองๆ ของตบและพาให้ปะชาชบที่อยู่ในแขวงนั้นๆเข้าใจว่า แขวงๆ ของตบเป็นประเทดหึ่งบ่ก่ยวข้องกับแขวงอื่นๆ ตันต่มาเถิงปี

ຄ.ສ. 1917 ເຈົ້າເພັດຊະຣາດ ຈຶ່ງໄດ້ຕໍ່ວ່າຂໍໃຫ້ແກ້ໄຂລະບຽບນີ້ ໂດຍຂໍໃຫ້ຂ້າລາຊະການ ທີ່ຢູ່ໃນເມືອງຕ່າງໆຂອງແຂວງ ຍ້າຍໄປຮັບລາຊະການໃນເມືອງອື່ນໆ ທີ່ຢູ່ໃນແຂວງນັ້ນໄດ້.

ຕໍ່ມາເຖິງປີ ຄ.ສ.1920. ກໍໄດ້ຂໍໃຫ້ແກ້ໄຂອີກ ໂດຍຂະຫຍາຍວົງກວ້າງອອກໄປກວ່າເກົ່າ ຄືໃຫ້ຂ້າລາຊະການຢູ່ໃນແຂວງໜຶ່ງ ຍ້າຍໄປຢູ່ແຂວງອື່ນໄດ້ແລະໃຫ້ຈັດໃຫ້ມີລະບຽບ ສອບເສັງເອົາຄົນເຂົ້າເຮັດການຂຶ້ນທັງນີ້ກໍເພື່ອປະສົງຈະໃຫ້ຂ້າລາຊະການຄົນລາວໄດ້ມີຫູກວ້າງຕາໄກ ແລະໄດ້ທຳການປະສານກັນທັງພາກກາງພາກເໜືອ ແລະພາກໃຕ້ ອັນເປັນເຫດໃຫ້ເກີດຄວາມສາມັກຄີຄຸ້ນເຄີຍ ລົ້ງແກ່ວນກັນ ແລະໃຫ້ຄົນລາວທັງປະເທດ ເກີດຄວາມຮູ້ສຶກຕົວເອງວ່າເປັນຄົນລາວຢູ່ໃນປະເທດລາວອັນດຽວກັນ ບໍ່ແມ່ນຢູ່ຄົນລະປະເທດຄືຄວາມເຂົ້າໃຈກັນມາແຕ່ກ່ອນ ດັ່ງນັ້ນຕັ້ງແຕ່ນັ້ນມາ ການປົກຄອງຈຶ່ງຄ່ອຍເປັນລະບຽບຮຽບຮ້ອຍຕໍ່ໆມາ ຄັນມາເຖິງ ຄ.ສ.1928 ລັດຖະບານຝຣັ່ງໄດ້ລົ້ງຄວາມເຫັນໂຮມເອົາແຂວງຫຼວງພຣະບາງ ອັນເປັນອານາຈັກສ່ວນໜຶ່ງຂອງພຣະເຈົ້າແຜ່ນດິນເຂົ້າເປັນປະເທດອານານິຄົມ ຄືກັນກັບແຂວງພາກໃຕ້ ເຊິ່ງໝາຍຄວາມວ່າປະເທດ ລາວທັງໝົດເປັນອານານິຄົມຂອງຝຣັ່ງ ໂຮມທັງອານາຈັກຫຼວງພຣະບາງນຳ ເລື່ອງນີ້ເຈົ້າເພັດຊະຣາດ ກໍໄດ້ຕໍ່ສູ້ຄັດຄ້ານຂໍໃຫ້ຍົກແຂວງຫຼວງພຣະບາງ ໄວ້ເປັນລາຊະອານາຈັກຫຼວງພຣະບາງຄືເກົ່າ ແລະຍ້ອນເຫດນີ້ ເຈົ້າແຜ່ນດິນຫຼວງພຣະບາງຈຶ່ງໄດ້ໂອກາດທວງເອົາແຂວງຫົວພັນ (ຊຳເໜືອ) ເຊິ່ງຝຣັ່ງຈັດໃຫ້ໄປຂຶ້ນກັບປະເທດທອຽດນາແຕ່ປີ 1895 ນັ້ນມາຂຶ້ນກັບລາຊະອານາຈັກຫຼວງພຣະບາງໄດ້ໃນ ປີ1931 ຫຼື 1932. ຕາມທີ່ກ່າວມານີ້ແມ່ນ

ນະໂຍບາຍການເມືອງຂອງເຈົ້າເພັດຊະຣາດໃນຂັ້ນຕົ້ນ ເຊິ່ງພຣະອົງ ໄດ້ບັນຍາຍໃຫ້ຄະນະຜູ່ແທນລາວ ທີ່ໄປເຊີນພຣະອົງກັບຄືນປະເທດ ລາວຟັງໃນປີ 1956 (ພ.ສ 2499).

ດ້ານເສດຖະກິດ ແລະສາສະໜາ

ເຈົ້າມະຫາອຸປະຣາດເພັດຊະຣາດ ເຖິງແມ່ນພຣະອົງຈະເປັນ ນັກໂທ່ເນື້ອເປັນນາຍພານເຂົ້າປ່າຫາຍິງສັດ ມາເປັນເວລາຕັ້ງ 40 ກວ່າປີກໍຕາມ ແຕ່ພຣະອົງກໍບໍ່ໄດ້ເປັນຄົນໃຈດຳອຳມະຫິດ ຄິດຈະທຳ ແຕ່ປານາຕິບາດຢ່າງດຽວ ການເຂົ້າປ່າຫາລະເນື້ອແລະການຕົກແຫ ຫາປານັ້ນ ພຣະອົງຖືເປັນແຕ່ພຽງການກິລາ ແລະເປັນການຊ່ອຍເຫຼືອ ປະຊາຊົນພົນລະເມືອງ ໃນດ້ານພາບສັດຮ້າຍທີ່ມາບຽດບຽນປະຊາຊົນ ແລະຊຸກຍູ້ໃຫ້ລາສະດອນຮູ້ຈັກທຳມາຫາກິນອີກດ້ວຍ ນອກນັ້ນພຣະອົງ ກໍມີປະສົງຈະທຳຄວາມຄຸ້ນເຄີຍກັບລາສະດອນ ເພື່ອໃຫ້ຮູ້ຈັກຄວາມ ເປັນຢູ່ຂອງພົນລະເມືອງ ທັງປະສົງຈະສຳຫຼວດກວດກາເບິ່ງພູມປະ ເທດຂອງແຜ່ນດິນລາວໃຫ້ຮູ້ທົ່ວເຖິງທຸກຈອກທຸກແຈວ່າ ບ່ອນໃດມີອັນ ໃດ ແລະຄວນຈະເປັນປະໂຫຍດອັນໃດຈາກພູມປະເທດນັ້ນໆ ດັ່ງຕົວ ຢ່າງ ເມື່ອພະອົງພາພວກຂ້າລາຊະການໄປທ່ຽວຍິງເນື້ອຕາມປ່າຫາມ ນ້ຳງຶ່ມໄດ້ເຫັນຊາວບ້ານເອົາປ໋ລົມປົມຫຼືປ໋ປ່ານນ້ຳມາໃຊ້ປະໂຫຍດເຮັດ ເຊືອກ ແລະສິ່ງຕ່າງໆ ແລະປ໋ຊະນິດນີ້ ມີມາກຫຼາຍຕາມປ່າຫາມພຣະ ອົງກໍສົ່ງປ໋ນີ້ໄປໃຫ້ບໍລິສັດການຟາ ໃນປະເທດຝຣັ່ງພິສູດເບິ່ງວ່າຈະໃຊ້ປະ ໂຫຍດໄດ້ແນວໃດແດ່ ບໍລິສັດການຟາໄດ້ພິສູດເຫັນວ່າປ໋ລົມປົມເປັນປ໋ທີ່ ດີ ນອກຈາກເຮັດເຊືອກແລ້ວກໍເຮັດເປັນແຜ່ນແຜໄດ້. ສະນັ້ນ ພຣະອົງ

ຈ່ຶງໄດ້ຊັກຊວນບໍລິສັດນີ້ ມາລົງທຶນຕັ້ງໂຮງງານກາຟາຂຶ້ນໃນນະຄອນ ວຽງຈັນອັນເປັນເຫດໃຫ້ຊາວບ້ານແຖວງຶ່ມ ສິ່ງປົ່ມາເຂົ້າໂຮງງານ ແລະໄດ້ເງິນເປັນອັນມາກ ໂຮງງານເຮັດປ໋ອງບໍລິສັດກາຟາຍັງໄດ້ ຕົກມາເປັນຄ້າຍທະຫານຂອງລາວ ເຊ່ຶງເຮົາຮຽກວ່າຄ້າຍກາຟາຢູ່ ຄຸ້ມຂົວຫຼວງທຸກວັນນີ້ [2] ແລະອີກເລ່ຶອງໜ່ຶງ ເມ່ຶອພຣະອົງໄປເຫັນຮ່ອມ ທ້ອຍເຫວຫີນບ່ອນໃດ ທ່ີລາສະຄອນບອກວ່າມີຄຳ ຫຼ ເປັນບ່ໍຄຳພຣະອົງ ກໍພະຍາຍາມສ່ິງແຮ່ທາດ ຫຼ ກ້ອນຫີນ ໃນສະຖານທ່ີນັ້ນໆໄປເມ່ືອງຝຣ່ັງ ໃຫ້ພວກນັກທໍລະນີພ່ິສູດເບ່ິງ ເມ່ຶອເຫັນວ່າມີຄຳແທ້ ກໍຊັກຊວນໃຫ້ບໍລິ ສັດຫຼອມຄຳ ມາຕ້ັງລົງທຶນທົດລອງ ດ່ັງບ່ໍຄຳ ທ່ີທ້ອຍນ້ຳສ່ັງ ບ້ານຊ້ ອັນຢ່ໃກ້ເຂດສາມໝ່ືນເມ່ືອງເຟ່ືອງທ່ີຊາວບ້ານແຖວນ້ັນ ຖ່ືວ່າເປັນບ່ໍ ຄຳໃຫຍ່ເປັນຜາສາດຂອງຍັກກຸມພັນ ແລະບ່ໍຄຳເຊ່ຶງຢ່ທ່ີບ້ານຫຼວງໂຕ່ງ ທ້ອຍຫ້ໃນເຂດເມ່ືອງປາກແບ່ງ ແຂວງຫຼວງພຣະບາງເປັນຕ້ົນ ບ່ໍຄຳ ທ້ັງສອງແຫ່ງນ້ີ ຂ້າພະເຈ້ົາຜ່ຽນ ກໍເຄ່ີຍຕ່ິດຕາມພຣະອົງໄປສຳຫຼວດ ດ້ວຍ ຈ່ຶງກ້າກ່າວໄດ້ວ່າ ການທ່ີພຣະອົງມັກເຂ້ົາປ່າຫາລະເນ້ືອນ້ັນ ບ່ໍແມ່ນປະສົງແຕ່ຈະທຳລາຍຊ່ີວ່ິດສັດເພ່ືອຄວາມສະໜຸກຢ່າງດຽວ ແຕ່ແມ່ນເພ່ືອປະໂຫຍດຂອງປະເທດຊາດບ້ານເມ່ືອງ ແລະຂອງປະຊາ ຊ່ິນພ່ິນລະເມ່ືອງທ່ົວໄປອ່ິກດ້ວຍ ດ່ັງໄດ້ກ່າວມາແລ້ວ.

ສ່ວນໃນດ້ານການພຣະພຸດທະສາສະໜານ້ັນ ພຣະອົງກໍບ່ໍໄດ້ ຫຼ້ົງລ່ືມຖ່ິມປະລະເລ່ີຍ ໃນຂ້ໍນ່ີ້ຈະເຫັນໄດ້ວ່າພຣະອົງໄດ້ກະທຳຫຼາຍສ່ິງ ຫຼາຍຢ່າງອັນ ເປັນປະໂຫຍດໃນທາງພຣະສາສະໜາຢ່ບ່ໍໜ້ອຍ ຕ໊ວຢ່າງ ໃນລະຫວ່າງປ ຄ.ສ. 1930 ພຣະອົງໄດ້ຈັດຕ້ັງພຸດທະບັນດ່ິດສະພາລາວ ຂ້ຶນ ໂດຍພຣະອົງເອງເປັນນາຍົກ ພຸດທະບັນດ່ິດສະພາ ແລ້ວໄດ້ຫ້ົງທ້ອນ ໂຮມໜ້ັງສ່ືໃບລານອັນເປັນໜ້ັງສ່ືເກ່ົາຂອງລາວ ໄດ້ຈັດເປັນຫໍສະໝຸດ

[2] ຖ່ືກດຸດມ້າງໄປ ໃນລະຫວ່າງປ 1995 ນ່ີເອງ ເພ່ືອສ້າງໂຮງງານ

ຂຶ້ນຢູ່ສິມວັດຈັນ ເຊິ່ງໄດ້ເປັນມໍລະດົກຕໍ່ມາເທົ້າທຸກວັນນີ້ ປີຕໍ່ມາກໍໄດ້ຈັດແຈງລະບຽບໂຮງຮຽນປະຣິຍັດຕິທຳ ຫຼື ໂຮງຮຽນປາລີຂຶ້ນ ໂດຍມອບໃຫ້ຂ້າພະເຈົ້າ(ຜູ່ຂຽນ)ເປັນຄູສອນ ແລະດຳເນີນການດັດແປງຫຼັກສູດຮຽນພ້ອມກັບແຕ່ງແບບຮຽນນັກທຳແບບຮຽນປາລີຂຶ້ນ ພ້ອມກັນນີ້ ພຣະອົງໄດ້ຈັດຕັ້ງໂຮງຮຽນສິລະປະກຳລາວຂຶ້ນອີກ ໂດຍແມ່ນຍາພໍ່ທິດພຸເປັນຄູສອນ ແລະຍ້ອນໂຮງຮຽນສິລະປະກຳລາວນີ້ເອງຈຶ່ງໄດ້ເກີດມີກົມສິລະປາກອນ ສືບມາໃນທຸກວັນນີ້ ໃນຂະນະດຽວກັນນີ້ ພຣະອົງກໍໄດ້ຕັ້ງກຳມະການຂຶ້ນຄະນະໜຶ່ງ ເຊິ່ງພຣະອົງເອງເປັນປະທານ ປະກອບດ້ວຍກຳມະການອື່ນໆຄື: ຍາພໍ່ມະຫາແກ້ວ ຍາພໍ່ເມືອງ ໂຂງ ຍາພໍ່ພິມມະສອນ ທ່ານສຸພັນ ທ່ານຫຍຸຍ ທ່ານເລກິເຮືອງແລະ ຂ້າພະເຈົ້າ ໃຫ້ດັດແປງຕົວອັກສອນລາວ ໂດຍທີ່ທົ່ງເຫັນວ່າການຮຽນນັກທຳແລະປາລີຂອງພຣະສົງສາມະເນນນັ້ນ ຈະໃຊ້ອັກສອນລາວຕາມທີ່ມີມາແຕ່ເດີມນັ້ນ ບໍ່ສະດວກ ເພາະຕົວໜັງສືລາວບໍ່ຄົບຈຳນວນຕາມອັກສອນປາລີ ແຕ່ຖ້າຈະໃຊ້ອັກສອນທຳຕາມທີ່ເຄີຍຮຽນມາແຕ່ບູຮານ ກໍເຫັນວ່າມີຄວາມຍັດຂ້ອງໃນດ້ານການພິມ ເພາະຕົວທຳເຮັດແມ່ພິມໄດ້ຍາກແລະທັ່ງເຫັນວ່າ ປະຊາຊົນລາວທັ່ງຝ່າຍສາສະໜາແລະຝ່າຍໂລກຄວນຈະໃຊ້ຕົວໜັງສືແບບດຽວກັນຄືຕົວລາວ ທັ່ງນີ້ເພື່ອໃຫ້ຄວາມຮູ້ຂອງທາງວັດແລະທາງບ້ານ ໄດ້ປະສານກັນດ້ວຍການໃຊ້ອັກສອນຢ່າງດຽວກັນ ຄືຕົວລາວກໍໃຫ້ຂຽນພາສາປາລີແລະປຶ້ມຮຽນທາງທຳໄດ້ ໂດຍບໍ່ຕ້ອງໃຊ້ຕົວທຳ ເມື່ອໃຊ້ອັກສອນລາວຂຽນຄວາມທຳໄດ້ ຂຽນຄວາມປາລີໄດ້ ພວກຊາວບ້ານ ນັກຮຽນຂ້າລາຊະການຜູ່ບໍ່ໄດ້ບວດບໍ່ໄດ້ຮຽນຕົວທຳ ກໍສາມາດຈະຮູ້ຫຼັກທາງສາສະໜາ ຄຳສອນໃນສາສະໜາໄດ້ຕາມສົມຄວນດ້ວຍ ການອ່ານໜັງສືລາວ

ເຊິ່ງບັນທຶກຄຳສອນທາງສາສະໜາ ແລະເລື່ອງນີ້ບັນດາປະເທດເພື່ອນ
ບ້ານຄື ໄທ ຂະເໝນ ແລະພະມ້າ ກໍໄດ້ປ່ຽນແປງມາແລ້ວ ແລະກໍໄດ້
ຮັບຜົນດີ ຄືປະເທດໄທ ແຕ່ກ່ອນຝ່າຍພຣະສົງໃຊ້ຕົວອັກສອນຂອມເປັນ
ຫຼັກ ໃນການຮຽນພາສາປາລີ ແລະນັກທຳ ສ່ວນທາງລາຊະການໃຊ້
ອັກສອນໄທ ປະເທດຂະເໝນກໍດັ່ງດຽວກັນ ແຕ່ກ່ອນທາງວັດໃຊ້ຕົວ
ອັກສອນຂອມສ່ວນທາງໂລກໃຊ້ຕົວອັກສອນຈຮຽງ[3] ແຕ່ດຽວນີ້ທັງສອງ
ປະເທດໄດ້ໃຊ້ຕົວອັກສອນແບບດຽວກັນ ທັງທາງໂລກແລະທາງທຳ
ສຳລັບປະເທດລາວເຮົາ ກໍຄວນດຳເນີນຕາມຫຼັກອັນນັ້ນ ເພື່ອຄວາມ
ສະດວກແລະໄດ້ປະໂຫຍດຮ່ວມກັນທັງສອງຝ່າຍ ດັ່ງກ່າວແລ້ວ ສະນັ້ນ
ຄະນະກຳມະການໃນຄາວນັ້ນ ຈຶ່ງໄດ້ລົງມະຕິໃຫ້ຕື່ມຕົວອັກສອນລາວທີ່
ຍັງບໍ່ຄົບຕາມອັກສອນປາລີນັ້ນເຂົ້າອີກ ໂດຍຄັດເລືອກເອົາຈາກຕົວອັກ
ສອນທຳນັ້ນເອງ ການຄັດເລືອກເອົາຕົວອັກສອນທຳ ເຂົ້າຕື່ມອັກສອນ
ລາວນີ້ ແຕ່ກ່ອນໆຄືແຕ່ສະໄໝ ສົມເດັດພຣະເຈົ້າໄຊຍະເຊດຖາທິຣາດ
ຕະຫຼອດມາຈົນເຖິງສະໄໝພຣະເຈົ້າອະນຸ ກໍໄດ້ເຄີຍຕື່ມມາແລ້ວ ດັ່ງຈະ
ເຫັນໄດ້ຈາກສິລາເລກຢູ່ຜັກຕູວັດສີສະເກດທຸກວັນນີ້ ແລະການຕື່ມຕົວ
ອັກສອນລາວຂຶ້ນໃນຄັ້ງນັ້ນ ກໍບໍ່ແມ່ນວ່າ ເປັນຄວາມຄຶດຂອງຄະນະກຳ
ມະການ ຫຼື ເຈົ້າເພັດຊະຣາດແຕ່ຜູ້ດຽວ ເຖິງແມ່ນນັກປຣາດຝຣັ່ງ ຜູ້ມີ
ຄວາມຮູ້ໃນດ້ານນີ້ເປັນຢ່າງດີ ຄື ທ່ານ ຫລຸຍ ຟີໂນ (Louis Finot)
ແລະທ່ານ ຍ້ອຊ ເຊເດສ໌ (George Çoedés) ກໍໄດ້ສະແດງ
ຄວາມຄິດເຫັນແບບນີ້ໄວ້ແລ້ວ ເມື່ອຄະນະກຳມະການຕົກລົງເຫັນດີ
ດັ່ງນີ້ແລ້ວ ເຈົ້າເພັດຊະຣາດຈຶ່ງໄດ້ມອບພາຣະໃຫ້ຂ້າພະເຈົ້າຈັດແຕ່ງ
ໄວຍາກອນລາວຂຶ້ນ ຕາມແບບອັກສອນໃໝ່ ແລະຈັດການຫຼໍ່ອັກສອນ

---

[3] ໃຊ້ຕົວອັກສອນຈຮຽງ ແຕ່ດຽວນີ້ ທັງສອງປະເທດໄດ້ໃຊ້ຕົວອັກສອນ ແບບດຽວ ທັງທາງໂລກ ແລະທາງທັມ

ລາວຂຶ້ນຕາມແບບໄວຍາກອນລາວສະບັບນີ້ ຈົນເປັນຜົນສຳເລັດແລ້ວ ກໍໄດ້ຈັດພິມປຶ້ມແບບຮຽນທາງນັກທຳແລະປາລີຂຶ້ນ ເຊິ່ງຍັງໄດ້ໃຊ້ຢູ່ ໃນໂຮງຮຽນປາລີຕໍ່ມາຈົນເທົ້າທຸກວັນນີ້ ນອກຈາກນີ້ແລ້ວພຣະອົງກໍ ໄດ້ຈັດການໃຫ້ມີລະບຽບສອບເສັງໂຮງຮຽນປາລີ ຈັດການໃຫ້ມີໃບປະ ກາດສະນິຍະບັດແລະຕາລະບັດຍົກຂອງມະຫາຂຶ້ນເປັນຊັ້ນໆ ພ້ອມທັງ ຕື່ມວິຊາທາງໂລກຄື ເລກ ຂຽນທວາຍແລະໂຫຣາສາດເຂົ້າໃນຫຼັກສູດ ນັກທຳອີກດ້ວຍ ເພື່ອໃຫ້ພວກນັກບວດໄດ້ມີຄວາມຮູ້ກວ້າງຂວາງສຳ ລັບຈະໄດ້ໃຊ້ເປັນວິຊາອາຊີບຕໍ່ໄປ ໃນເມື່ອລາສິກຂາແລ້ວດ້ວຍ.

ນອກຈາກພຣະອົງໄດ້ຈັດຕັ້ງຫໍສະໝຸດພຸດທະບັນດິດສະພາ ລະ ບຽບໂຮງຮຽນປາລີແລະໄວຍາກອນລາວທີ່ຄົບຖ້ວນ ດ້ວຍຕົວອັກສອນ ຂຶ້ນເປັນຜົນສຳເລັດແລ້ວ ພຣະອົງຍັງໄດ້ຄິດໃຫ້ມີກອງທະຫານລາວ ຂຶ້ນຢູ່ທີ່ບໍຣິເວນຄຸກເກົ່າ ຄືບ່ອນຕັ້ງໂຮງໝໍທະຫານທຸກວັນນີ້ ເພາະແຕ່ ກ່ອນ ກອງທະຫານລາວບໍ່ທັນມີ ມີແຕ່ກອງທະຫານທວຽດນາມ ຕຳ ຫຼວດທວຽດນາມ ຢູ່ໃຕ້ບັງຄັບນາຍທະຫານຝຣັ່ງ ເມື່ອຕັ້ງຂຶ້ນແລ້ວ ພຣະອົງກໍໄດ້ແຕ່ງຕັ້ງໃຫ້ຂ້າພະເຈົ້າເປັນອະນຸສາສະນາຈານຄົນທຳ ອິດໄປອົບຮົມສິລະທຳໃຫ້ທະຫານລາວ ໂດຍຄຳແນະນຳຂອງນາງ ສາວ ກາເປີແຣັສ ຫົວໜ້າສະມາຄົມຝ່າຍພຸດທະສາສະໜາ ໃນພາກ ບົວຣະພາປະເທດ ນອກຈາກນີ້ອີກ ໃນເວລາຖືນ້ຳແຕ່ສະໄໝກ່ອນ ເຂົ້າ ໄປຮັບນ້ຳຢູ່ໃນສິມວັດສີສະເກດ ພວກຝຣັ່ງຜູ່ເປັນນາຍ ເວລາເຂົ້າໄປໃນ ສິມທັງຜູ່ຍິງ ແລະຜູ່ຊາຍຕ້ອງນັ່ງຕັ່ງອີ້ ແລະລາງຄົນກໍເອົາຂາໄຂ່ ຫ້າງ ສ່ວນພຣະສົງທີ່ມາສູດປະຣິຕະມຸງຄົນ ນັ່ງກັບສາດ ຈົ່ງຜາກົດວ່າ ໜ້າຜາກຂອງພຣະສົງຢູ່ພຽງກັບຕີນຂອງຝຣັ່ງ ພຣະອົງເຫັນດັ່ງນັ້ນ ຈົ່ງໄດ້ເຮັດຮ້ານມ້າ ຂຶ້ນໃຫ້ພຣະສົງນັ່ງພຽງກັນກັບຕັ່ງອີ້ ເພື່ອບໍ່ໃຫ້

ເປັນການເສຽປຽບຝຣັ່ງເລື່ອງເຫຼົ່ານີ້ ແມ່ນເປັນເລື່ອງເລັກນ້ອຍຍ່ອຍ ກໍຕາມ ແຕ່ໃນສະໄໝນັ້ນບໍ່ມີຜູ່ໃດຈະຄຶດອອກ ເພາະຢ້ານອຳນາດ ຂອງຝຣັ່ງນັ້ນເອງ ຕໍ່ມາ ເຖິງປີ ພ.ສ. 2479 (ຄ.ສ. 1936) ໄດ້ທຳການ ສ້ອມແປງຫໍພຣະແກ້ວ ທີ່ໂປດເພຫັກພັງມາແຕ່ສະໄໝສົງຄາມ ລາວ-ສະຫຍາມນັ້ນ ໃຫ້ມີສະພາບດີຄືນຕາມຮູບລັກສະນະເກົ່າ ໂດຍແມ່ນ ສະເດັດເຈົ້າສຸວັນນະພູມມາເອງ ເປັນນາຍຊ່າງສ້ອມແປງ.

ປະຕິຫິນລາວ

ປະຕິຫິນລາວ ກໍແມ່ນອີກເລື່ອງສຳຄັນອີກເລື່ອງໜຶ່ງ ທີ່ເຈົ້າເພັດຊະຣາດ ໄດ້ເປັນຜູ່ພາເຮັດຂຶ້ນກ່ອນ ຄືເລື່ອງມີຢູ່ວ່າ:

ແຕ່ກ່ອນໆມາ ການໃຊ້ປະຕິຫິນຢູ່ໃນລາຊະອານາຈັກລາວຂອງເຮົາຕ້ອງ ຄອຍຖ້າປະຕິຫິນໄທ ແລະຂະເໜນອອກເສຽກ່ອນຈຶ່ງຄັດກ່າຍເອົາມາພິມ ປະຕິຫິນໄທວ່າຢ່າງໃດ ກໍວ່າຕາມນັ້ນໂລດ ເພາະລາວເຮົາບໍ່ມີຜູ່ເຮັດໄດ້ ຄັນມາເຖິງ ປີ1932 ພຣະອົງໄດ້ພາຂ້າພະເຈົ້າ ຂຶ້ນໄປພັກຜ່ອນທີ່ນະຄອນຫຼວງພຣະບາງ ແລະໄດ້ເລີຍສຳຫຼວດບໍ່ຄຳຫາງຫ້ວຍຫໍ່ ເມືອງປາກແບ່ງນັ້ນດ້ວຍ ເວລາພັກຢູ່ຫຼວງພຣະບາງ ພຣະອົງໄດ້ເອົາໜັງສືຕຳຣາເລກເກົ່າໆເຫຼັ້ມ ໜຶ່ງມາໃຫ້ຂ້າພະເຈົ້າເບິ່ງ ໜັງສືເຫຼັ້ມນັ້ນຮຽກຊື່ວ່າ: ຄຳພີພຣະສຸຣິຍະຍາດ ເປັນອັກສອນໄທນ້ອຍ ຢູ່ໃນນັ້ນ ມີບອກຕຳຣາຄູນສີ່ງການດ້ວຍ ພຣະອົງຈຶ່ງມີຍາຖາມຂ້າພະເຈົ້າວ່າ: "ເຮັດປະຕິຫິນເປັນບໍ? ຂ້າພະເຈົ້າທູນຕອບວ່າ" ບໍ່ເຄີຍເຮັດຈັກເທື່ອ ແຕ່ຫາກເຄີຍໄດ້ຮຽນວິທີເຮັດ" ພຣະອົງຈຶ່ງຮັບສັ່ງວ່າ ເອົາຕຳຣາເຫຼັ້ມນີ້ລອງເຮັດເບິ່ງ ດັ່ງນັ້ນເມື່ອກັບຄືນມາວຽງຈັນ ພຣະອົງຈຶ່ງໄດ້ຮຽກຂ້າພະເຈົ້າເຂົ້າໄປຄຳນວນເລກເຮັດປະຕິຫິນຢູ່ຮ່ວມໂຕະກັບພຣະອົງ ເຊິ່ງແຕ່ກ່ອນນັ້ນ ພຣະອົງບໍ່ໄດ້ມີຄວາມສົນໃຈໃນເລື່ອງນີ້ພໍປະມານ ທັງບໍ່ເຂົ້າໃຈໃນການທຳມັດທະຍົມ ແລະສົມຜຸດ ດາວພຣະເຄາະຕ່າງໆດ້ວຍ ຕໍ່ແຕ່ນັ້ນມາ ຈຶ່ງໄດ້ມີການເຮັດປະຕິຫິນລາວຂຶ້ນໃຊ້ເອງຕະຫຼອດມາ ໂດຍບໍ່ຕ້ອງຄອຍຖ້າກ່າຍເອົາຂອງໄທ ຄັນຕໍ່ມາພາຍລຸນ ພຣະອົງກັບມີຄວາມເຂົ້າໃຈແລະຮູ້ແຈ້ງແຫ່ງຊອດ ຕະຫຼອດໃນ



ຖ່າຍໃນໂອກາດ ບາສີປີໃຫມ່ລາວ ໃນຊຸມປີ 1930 ຢູ່ໂຮງຂອງເຈົ້າເພັດຊະຣາດ ຂ້າງຫໍພະແກ້ວ (ດຽວນີ້ ມ້າງອອກແລ້ວ).
ແຖວນັ່ງຕັ່ງ ແຕ່ຂວາຫາຊ້າຍ ຜູ້ທີ 8 ເຈົ້າສຸວັນນະພູມມາ, ຜູ້ທີ 9 ເຈົ້າເພັດຊະຣາດ. ສ່ວນແຖວຫລັງສຸດ ຢືນແຕ່ຂວາຫາຊ້າຍ ຜູ້ທີ 2 ແມ່ນມະຫາສິລາ ວິຣະວົງສ໌

ຫຼັກເກນຕ່າງໆຂອງເລກໂທຣາສາດດີກວ່າໂທນໄທ ໂທນຂະເໝນ ອີກ ດ້ວຍ ດັ່ງນັ້ນເມື່ອ ພຣະອົງໄປປະທັບຢູ່ປະເທດໄທ ໃນຄາວໜີໄພການ ເມືອງນັ້ນ ພຣະອົງຈຶ່ງໄດ້ແຕ່ງຕຳຣາໂທຣາສາດລາວຂຶ້ນໄວ້ ໃຫ້ເປັນ ຫຼັກຂອງການທຳປະຕິທິນລາວສືບຕໍ່ໄປ ແລະຢູ່ໃນໜັງສືນີ້ເອງ ພຣະອົງ ກໍໄດ້ປາຣົບໄວ້ວ່າຈະສະເໜີແກ້ຫຼັກເກນການຄູນສົງການໃໝ່ ເພື່ອໃຫ້ ວັນສົງການບໍ່ຕ້ອງເຄື່ອນຍ້າຍຈາກວັນທີ 15 ເມສາໄປໄດ້ ແລະເພື່ອບໍ່ ໃຫ້ວັນສົງການຜິດຈາກຈຸດຕັ້ງຕົ້ນລະດູຕາມແບບ ປະຕິທິນຝຣັ່ງໄດ້ຕໍ່ ໄປ ເພາະດຽວນີ້ຜິດມາຕັ້ງ 23-24 ວັນແລ້ວ ແຕ່ຍັງບໍ່ທັນມີຜູ່ໃດຮູ້ ທັງ ສົນໃຈນຳຫຼັກການອັນນີ້ດ້ວຍ ພຣະອົງກໍຟ້າວລາໂລກຈາກພວກເຮົາ ໄປເສຽ ເຊິ່ງເປັນສິ່ງທີ່ໜ້າເສຽດາຍທີ່ສຸດ ເພາະຈະຫາຜູ່ໃດຄືພຣະອົງ ທ່ານບໍ່ໄດ້ອີກແລ້ວ ເຖິງຢ່າງໃດກໍຕາມ ໜັງສືຕຳລາໂທຣາສາດ ທີ່ ພຣະອົງທ່ານຂຽນຂຶ້ນໄວ້ນີ້ ຈະເປັນມໍລະດົກອັນມີຄຸນຄ່າສູງຍິ່ງ ສຳລັບ ຄົນລາວທັງຊາດ ເພາະເປັນໜັງສືທີ່ຄົນລາວ ເປັນຜູ່ຄົ້ນຄວ້າຫາຫຼັກ ເກນໄດ້ ຂ້າພະເຈົ້າຜູ່ໄດ້ຮັບມໍລະດົກອັນນີ້ຄົນໜຶ່ງຂໍທູນ ພຣະກຽດຂອງ ພຣະອົງໄວ້ເປັນຢ່າງສູງແລະດ້ວຍຄວາມເຄົາຣົບຢ່າງຍິ່ງອີກດ້ວຍ.



ເຈົ້າ ເພັດຊະຣາດ ໄປຢ້ຽມຢາມເຈົ້າສຸພານຸວົງ ທີ່ຊຳເໜືອ ໃນວັນທີ 13-14 ເມສາ 1957 (ວັນຂຶ້ນປີໃໝ່)
ສັງເກດ ເຈົ້າເພັດຊະຣາດ ນຸ່ງຜ້າແບບບູຮານ

ເຈົ້າເພັດຊະຣາດກັບການກູ້ຊາດ

ຂ້າພະເຈົ້າໄດ້ເລົ່າຊີວະປະຫວັດຂອງ ເຈົ້າມະຫາອຸປະຣາດ ເພັດຊະຣາດ ໃນດ້ານສ່ວນພຣະອົງທ່ານ ແລະສ່ວນລາຊະການແດ່ເລັກນ້ອຍ ສູ່ທ່ານຜູ່ອ່ານ ຟັງມາພໍສົມຄວນ ບົດຕໍ່ໄປນີ້ ຂ້າພະເຈົ້າຈະເລົ່າຊີວະປະຫວັດຂອງພຣະອົງ ອັນກ່ຽວກັບການກູ້ເອກະລາດຂອງລາວ ສູ່ທ່ານທັງຫຼາຍຟັງ ຕາມແຕ່ທໍ່ທີ່ ຂ້າພະເຈົ້າຮູ້ເຫັນແລະໄດ້ປະຕິບັດການຮ່ວມພຣະອົງມາ ກັບຂໍ້ຄວາມທີ່ພຣະອົງຕັດເລົ່າໄວ້ເປັນບາງຕອນທໍ່ນັ້ນ ແຕ່ຕອນໃດທີ່ອາດພາໃຫ້ເກີດການກະທົບກະເທືອນໃຈຂອງຜູ່ອື່ນຫຼາຍ ຂ້າພະເຈົ້າຈະໄດ້ງົດໄວ້ບໍ່ກ່າວ ຫຼື ກ່າວ ກໍຈະກ່າວແຕ່ພໍ ເປັນໄນຍະທໍ່ນັ້ນ ແຕ່ວ່າກ່ອນທ່ານຜູ່ອ່ານທັງຫຼາຍຈະໄດ້ຮູ້ຊີວະປະຫວັດຂອງ ເຈົ້າເພັດຊະຣາດຕອນກ່ຽວກັບການກູ້ເອກະລາດນີ້ ຂ້າພະເຈົ້າຂໍລື້ມປະຫວັດສາດລາວຢ່າງຫຍໍ້ໆ ແລະລັກສະນະການປົກຄອງປະເທດລາວ ຕັ້ງແຕ່ສະໄໝລາວແຕກກັນນັ້ນ ມາໃຫ້ຟັງກ່ອນ ຍ້ອນວ່າສ່ວນທີ່ເລົ່າມາແລ້ວນັ້ນ ຍັງບໍ່ແຈ່ມແຈ້ງດີ ເພາະເລົ່າຕາມພຣະດຳລັດຂອງເຈົ້າເພັດຊະຣາດ ທີ່ເລົ່າໄວ້ຫຍໍ້ໆໃນຕອນທີ່ຄະນະຜູ່ແທນລາວໄປເຊີນພຣະອົງກັບຄືນປະເທດລາວ.

ປະຫວັດສາດຫຍໍ້ໆຂອງລາວຕອນແຕກກັນນັ້ນມີຢູ່ວ່າ ເມື່ອ ຄ.ສ. 1707 ລາຊະອານາຈັກລ້ານຊ້າງ ໄດ້ແຕກກັນອອກເປັນ 3 ກົກ ຄື ຫຼວງພຣະບາງ ວຽງຈັນ ແລະຈຳປາສັກ ແຕ່ລະກົກກໍມີເຈົ້າແຜ່ນດິນຂອງໃຜລາວ ຄັນຕໍ່ມາ ເຖິງປີ ຄ.ສ 1779 ລາຊະອານາຈັກລາວທັງ 3 ເຈົ້າເສຽໃຫ້ແກ່ປະເທດສະຫຍາມລົງພ້ອມກັນ ແຕ່ສະຫຍາມກໍຍັງຈັດ

ໃຫ້ມີເຈົ້າແຜ່ນດິນຂອງໃຜລາວ ຢູ່ຕາມເດີມ ເວັ້ນແຕ່ນະຄອນຈຳປາສັກ ໃຫ້ມີແຕ່ພຽງເຈົ້າຄອງນະຄອນທ່ໍນັ້ນ ຄັນເຖິງປີ ຄ.ສ. 1827 ພຣະເຈົ້າ ອະນຸແຫ່ງນະຄອນວຽງຈັນ ໄດ້ທຳການກູ້ອິດສະລະພາບ ຈາກສະ ຫຍາມແຕ່ບໍ່ສຳເລັດ ນະຄອນວຽງຈັນຈິ່ງຖືກທຳລາຍ ວົງຕະກູນເຈົ້າ ວຽງຈັນກໍຖືກທຳລາຍສູນເສຽຈົນໝົດ ອານາຈັກລ້ານຊ້າງວຽງຈັນ ຈິ່ງຂາດເຈົ້າ ບໍ່ມີເຈົ້າປົກຄອງຕັ້ງແຕ່ນັ້ນມາ ສ່ວນອານາຈັກຫຼວງພຣະ ບາງຍັງຄົງມີກະສັດປົກຄອງຢູ່ຕາມເດີມ ແຕ່ຢູ່ໃຕ້ອຳນາດຂອງລາຊະ ອານາຈັກສະຫຍາມ ລັດຖະບານສະຫຍາມໄດ້ໃຫ້ກຽດເປັນເຈົ້າປະ ເທດສະຣາດ ທ່ໍກັນກັບ ນະຄອນຊຽງໃໝ່ ຝ່າຍນະຄອນຈຳປາສັກ ກໍຄົງ ມີເຈົ້າຢູ່ຄືກັນແຕ່ສະຫຍາມໃຫ້ກຽດເປັນແຕ່ພຽງ "ເຈົ້າຜູ້ຄອງນະຄອນ" ບໍ່ແມ່ນ "ເຈົ້າປະເທດສະຣາດ" ດັ່ງນັ້ນ ລັກສະນະການປົກຄອງຂອງ ສະຫຍາມຈິ່ງໄດ້ແຕກຕ່າງກັນ ຄືນັບແຕ່ ແຂວງວຽງຈັນລົງໄປ ຂຶ້ນຢູ່ໃນ ຄວາມປົກຄອງຂອງຂ້າຫຼວງເທສາພິບານ ທີ່ໄດ້ແບ່ງອອກເປັນມົນທົນ ສ່ວນຫຼວງພຣະບາງຍັງເປັນຂອງເຈົ້າແຜ່ນດິນຫຼວງພຣະບາງຢູ່ ແຕ່ ສະຫຍາມສົ່ງຂ້າຫຼວງສະຫຍາມ ມາເບິ່ງແຍງນຳທ່ໍນັ້ນ.

ຄັນຕ່ໍມາ ເມື່ອຝຣັ່ງມາໄດ້ລາວ (ຄ.ສ.1893) ຝຣັ່ງກໍດຳເນີນນະ ໂຍບາຍ ຢ່າງດຽວກັນກັບສະຫຍາມ ຄື ນະຄອນຫຼວງພຣະບາງ ຍົກໄວ້ ເປັນເມືອງມີພຣະເຈົ້າແຜ່ນດິນ ແຕ່ໃຫ້ຢູ່ໃນຄວາມອາຮັກຂາຂອງຝຣັ່ງ ຮຽກວ່າລັດອາຮັກຂາ ນະຄອນຫຼວງພຣະບາງມີແຂວງຂຶ້ນນຳສອງ ແຂວງ ຄືແຂວງຫົວຂອງ ແລະ ຫົວພັນ ສ່ວນຫົວເມືອງທາງພາກໃຕ້ເປັນ ເມືອງຂຶ້ນຂອງຝຣັ່ງ ໂດຍກົງຮຽກວ່າ Colonie ທາງພາກໃຕ້ມີ ແຂວງຕ່າງໆຄື ແຂວງວຽງຈັນ ແຂວງພອນ ແຂວງຄຳມ່ວນ ແຂວງ ສະຫວັນນະເຂດ ແຂວງສາຣະວັນ ແລະ ແຂວງຈຳປາສັກ ແຕ່ລະ

ແຂວງທີ່ກ່າວນີ້ ແມ່ນຄືນຝຣັ່ງເປັນເຈົ້າແຂວງ ຫຼື ຂ້າຫຼວງ.

ຄັນຢູ່ມາເຖິງປີ ຄ.ສ. 1940 ເກີດມະຫາສົງຄາມໂລກຄັ້ງທີສອງ ຂຶ້ນ ແລະປະເທດຝຣັ່ງໄດ້ເສຍອິດສະລະພາບໃຫ້ແກ່ປະເທດເຢຍລະມັນ ໄປ ດັ່ງນັ້ນປະເທດໄທເຊິ່ງໄດ້ເຂົ້າຮ່ວມເປັນພັກຝ່າຍຂອງເຢຍລະມັນ ແລະຍີ່ປຸ່ນ ໂດຍການນຳ ຂອງຈອມພົນແປກ (ຫຼວງພິບູນສົງຄາມ ເຊິ່ງ ເວລານັ້ນ ເປັນພຽງນາຍພົນຕີ) ຈຶ່ງໄດ້ສະແດງຄວາມປະສົງ ທີ່ຈະ ທວງເອົາດິນແດນຂອງລາວ ແລະຂະເໝນ ທີ່ໄທເຄີຍປົກຄອງມາແຕ່ ກ່ອນນັ້ນຄືນໄປ ໂດຍໄທໄດ້ຍື່ນຂໍ້ສະເໜີຕໍ່ຝຣັ່ງວ່າ "ຖ້າຫາກລັດຖະບານ ຝຣັ່ງບໍ່ສາມາດຈະຮັກສາດິນແດນລາວແລະຂະເໝນໄວ້ໄດ້ແລ້ວ ກໍຂໍ ໃຫ້ສົ່ງຄືນໃຫ້ລັດຖະບານໄທ ດັ່ງນັ້ນ ແລະພ້ອມກັບຍື່ນຂໍ້ສະເໜີນີ້ ລັດ ຖະບານໄທກໍໄດ້ກຽມການໃນການທີ່ຈະເອົາດິນແດນລາວຄືນໃຫ້ໄດ້ບໍ່ ທາງໃດກໍທາງໜຶ່ງ ເຈົ້າມະຫາອຸປະຣາດເພັດຊະຣາດ ໄດ້ຊາບນະໂຍ ບາຍຂອງໄທຢ່າງນັ້ນ ຈຶ່ງທຳການຕິດຕໍ່ກັບລັດຖະບານໄທເປັນທາງ ລັບ ໂດຍທີ່ທາງຝ່າຍໄທ ໄດ້ສົ່ງນາຍພົນເອກສະໄຫວ ແສນຍາກອນ ເຊິ່ງເວລານັ້ນເປັນພຽງນາຍພັນຕີ ມາເປັນປະຫຼັດຈັງຫວັດ (ຮອງ ເຈົ້າແຂວງ) ໜອງຄາຍ ແລະໃຫ້ມາຕິດຕໍ່ກັບເຈົ້າເພັດຊະຣາດ ຂຸນສະ ໄຫວເປັນພີ່ນ້ອງກັນກັບເຈົ້າເພັດຊະຣາດ ຂ້າພະເຈົ້າຜູ່ຂຽນເປັນຄົນທຳ ການຕິດຕໍ່ລະຫວ່າງເຈົ້າທັງສອງອົງນີ້ ແລະເຈົ້າເພັດຊະຣາດໄດ້ຮ້ອງ ຂໍຕໍ່ລັດຖະບານໄທໄວ້ວ່າ "ຖ້າໄທໄດ້ດິນແດນລາວຄືນໄປແລ້ວ ຂໍຢ່າໃຫ້ ລັດຖະບານໄທໂຮມເອົາດິນແດນລາວເຂົ້າເປັນອານາຈັກໄທ ແລະຂຶ້ນ ສຳມະໂນເອົາຄົນລາວ ເປັນຄົນໄທ ດັ່ງທີ່ໄດ້ທຳມາແລ້ວກັບຄົນລາວ ໃນ ພາກອີສານ ຫາກແຕ່ວ່າໃຫ້ຍົກ ລາຊະອານາຈັກລາວໄວ້ໃຫ້ເປັນສະຫະ ພັນທະລັດກັບໄທ ຖ້າໄດ້ດັ່ງນີ້ ລາວຈະມີ ຄວາມຍິນດີເປັນທີ່ສຸດ".

ຄຳສະເໜີນີ້ ລັດຖະບານໄທຈະຮັບຮອງເອົາຫຼືບໍ່ນັ້ນ ຂ້າພະເຈົ້າ ບໍ່ຮູ້ນຳເລີຍ ແຕ່ຄັນລັດຖະບານໄທແຈ້ງຄວາມຈຳນົງຂອງຕົນດັ່ງກ່າວ ຕໍ່ລັດຖະບານຝຣັ່ງໆກໍບໍ່ໄດ້ຕອບປະການໃດ ຈຶ່ງເກີດກໍລະນີພິພາດກັນ ຂຶ້ນ ລະຫວ່າງໄທກັບຝຣັ່ງ ແລະໄທເຂົ້າຍຶດຈັງຫວັດພຣະຕະບອງຂອງ ຂະເໝນໄວ້ໄດ້ ຜົນສຸດທ້າຍ ຍີ່ປຸ່ນເຊິ່ງກຳລັງຂະຫຍາຍແສນຍານຸພາບ ເພື່ອຈະທ້ອນໂຮມເອົາທະວີບອາຊີ ເປັນປະເທດມະຫາອາເຊຽບົວຣະ ພາເຂົ້າຢູ່ໃນອ້ອມແຂນຂອງຕົນ ກໍໄດ້ເຂົ້າມາເປັນຄົນກາງ ກ້ຽວກ່ອມ ໃຫ້ໄທກັບຝຣັ່ງປັກປັນເຂດແດນກັນໃໝ່ ໂດຍໃຫ້ຝຣັ່ງຍົກດິນລາວທີ່ຢູ່ ທາງຝັ່ງຂວາແມ່ນ້ຳຂອງ ຄື ແຂວງປາກລາຍ ຫຼື ໄຊຍະບູລີ ແລະ ແຂວງຈຳປາສັກໃຫ້ເປັນຂອງໄທ ຕະຫຼອດຈົນເກາະດອນຕ່າງໆທີ່ຢູ່ໃນ ແມ່ນ້ຳຂອງກໍໃຫ້ຖືເອົາສາຍນ້ຳເລິກເປັນເຂດແດນຄືເກາະດອນຢູ່ຟາກ ນ້ຳເລິກໄປທາງໃດໃຫ້ເປັນຂອງທາງນັ້ນ ຝຣັ່ງກໍຈຳເປັນໄດ້ຍິນຍອມ ປະຕິບັດຕາມ ເພາະຢ້ານ ຫຼື ຈຽມອຳນາດຂອງຍີ່ປຸ່ນ.

ເມື່ອຝຣັ່ງເສຽດິນແດນຝັ່ງຂວາແມ່ນ້ຳຂອງ ໄປໃຫ້ລັດຖະບານ ໄທແລ້ວ ຝຣັ່ງຈຶ່ງຈັດລະບຽບການປົກຄອງແຜ່ນດິນລາວ ທີ່ຍັງເຫຼືອຢູ່ ໃນອຳນາດຂອງຕົນນັ້ນໃໝ່ ຄືເອົາແຂວງວຽງຈັນ ແລະແຂວງພວນ (ຊຽງຂວາງ) ໄປຂຶ້ນກັບ ຫຼວງພຣະບາງ ທັງນີ້ເພື່ອເປັນການທົດແທນ ດິນຂອງອານາຈັກຫຼວງພຣະບາງທີ່ເສຽໄປໃຫ້ແກ່ໄທ ທັງເພື່ອບໍ່ໃຫ້ ສົມເດັດພຣະເຈົ້າສີສະຫວ່າງວົງ ເສຽພຣະໄທດ້ວຍ ແລະພ້ອມກັນນີ້ ພຣະເຈົ້າສີສະຫວ່າງວົງ ຈຶ່ງໄດ້ປະທານຕຳແໜ່ງເຈົ້າມະຫາອຸປະຣາດ ເພັດຊະຣາດໃຫ້ແກ່ເຈົ້າລາຊະພາຄີໄນເພັດຊະຣາດ ຕາມລາຊະປະເພ ນີ ເຊິ່ງແຕ່ກ່ອນພຣະອົງຕັ້ງພຣະໄທໄວ້ວ່າ ຈະບໍ່ໃຫ້ມີຕຳແໜ່ງມະຫາອຸ ປະຣາດອີກຕໍ່ໄປ.

ຝ່າຍນະຄອນຈຳປາສັກ ເມື່ອແຂວງຈຳປາສັກຕົກໄປເປັນຂອງ ໄທ ແລະ ເຈົ້າລາຊະດາໄນ (ຫຍຸຍ) ພຣະບິດາ ຂອງສະເດັດເຈົ້າບຸນອຸ້ມ ກໍຕົກໄປຢູ່ນຳຝ່າຍໄທ ຕາມດິນແດນແລ້ວ ຝຣັ່ງຈຶ່ງໄດ້ກ້ຽວກ່ອມເອົາ ໃຈເຈົ້າບຸນອຸ້ມໄວ້ ໂດຍສັນຍາວ່າ ຈະໃຫ້ເຈົ້າບຸນອຸ້ມ ເປັນເຈົ້າຄອງນະ ຄອນແທນພຣະບິດາຕໍ່ໄປ.

ຂໍກ່າວເຖິງຕຳແໜ່ງມະຫາອຸປະຣາດອີກຈັກໜ່ອຍ ເພາະຕຳ ແໜ່ງນີ້ ເປັນຕຳແໜ່ງສຳຄັນ ຕາມຫຼັກການປົກຄອງແບບມີພຣະເຈົ້າ ແຜ່ນດິນຄື: ຄຳວ່າ ອຸປະຣາດ ແປວ່າ ພຣະຣາຊາຮອງ ໝາຍຄວາມວ່າ ເຈົ້າແຜ່ນດິນ ຜູ່ທີສອງ ຄຳວ່າ ອຸປະຣາດ ຫຼື ມະຫາອຸປະຣາດນີ້ ລາວ ເຮົາຫາກໃຊ້ມາ ແຕ່ລັດຊະສະໄໝຂອງ ສົມເດັດພຣະເຈົ້າໄຊຍະເຊດຖາ ທິຣາດມານີ້ເອງ ເພາະໄດ້ແບບຢ່າງມາຈາກພະມ້າ ແຕ່ກ່ອນນັ້ນລາວ ເຮົາຮຽກຕຳແໜ່ງມະຫາ ອຸປະຣາດນີ້ວ່າ "ແສນເມືອງ" (ບໍ່ແມ່ນເມືອງ ແສນ) ຕຳແໜ່ງ ແສນເມືອງ ຫຼື ມະຫາອຸປະຣາດນີ້ ເປັນຕຳແໜ່ງທີ່ ມີອຳນາດຫຼາຍ ເປັນທີສອງຮອງຈາກເຈົ້າແຜ່ນດິນ ແຕ່ວ່າໃນສະໄໝ ໃດ ຫາກພຣະເຈົ້າແຜ່ນດິນເປັນຜູ່ອ່ອນແອ ເຈົ້າມະຫາອຸປະຣາດກໍຈະ ຢຶດເອົາອຳນາດຂອງພຣະເຈົ້າແຜ່ນດິນ ໄວ້ໃນກຳມືຂອງຕົນເສຽ ດັ່ງ ເລື່ອງສາມກົກຂອງຈີນ ໃນລັດຖະບານຂອງພຣະເຈົ້າຮ້ຽນເຕ້ເຊິ່ງເປັນ ກະສັດທີ່ຍັງໜຸ່ມນ້ອຍ ບໍ່ຮູ້ພາສາອັນໃດ ໂຈໂສ ຜູ່ເປັນມະຫາອຸປະຣາດ ຫຼື ແສນເມືອງ ຈຶ່ງມີອຳນາດສູງກວ່າເຈົ້າແຜ່ນດິນ ເລື່ອງທຳນອງນີ້ໃນ ລາຊະອານາຈັກລາວຂອງເຮົາ ກໍເຄີຍມີມາແລ້ວຄືກັນ ດັ່ງເລື່ອງນາງ ແກ້ວພິມພາມີອຳນາດ ປົດພຣະເຈົ້າແຜ່ນດິນຫຼວງພຣະບາງອອກ ແລະຂ້າຖິ້ມຫຼາຍໆອົງນັ້ນ ກໍຍ້ອນນາງໄດ້ຜົວເປັນລູກຊາຍຂອງແສນ ເມືອງ (ມະຫາອຸປະຣາດ) ແລ້ວນາງກໍໃຊ້ອຳນາດຂອງແສນເມືອງນັ້ນ

ຄວບຄຸມພຣະເຈົ້າແຜ່ນດິນໄດ້ຕາມໃຈຂອງນາງ ອີກປະການໜຶ່ງ ຕາມ ທຳນຽມແຕ່ບູຮານນັ້ນ ບຸກຄົນຜູ່ຈະໄດ້ດຳລົງຕຳແໜ່ງເປັນມະຫາອຸ ປະຣາດ ຫຼື ແສນເມືອງນັ້ນ ກໍຕ້ອງແມ່ນພຣະລາຊະໂອລົດອົງໃຫຍ່ຜູ່ທີ່ ຈະໄດ້ສືບລາຊະສົມບັດແທນ ຫຼື ບໍ່ດັ່ງນັ້ນກໍຕ້ອງແມ່ນພຣະອະນຸຊາຂອງ ພຣະເຈົ້າແຜ່ນດິນນັ້ນເອງ ດັ່ງໃນສະໄໝຂອງພຣະເຈົ້າໄຊຍະເຊດຖາທິ ຣາດ ພຣະເຈົ້າໄຊເຊດຖາທິຣາດພຣະອົງບໍ່ມີພຣະລາຊະໂອລົດທີ່ເກີດ ຈາກເອກອັກຄະມະເຫສີ ເຊິ່ງຈະເປັນຜູ່ສືບລາຊະສົມບັດແທນພຣະອົງ ຈົ່ງຕັ້ງເຈົ້າວໍຣະວັງໂສ ພຣະອະນຸຊາ ເປັນເຈົ້າມະຫາອຸປະຣາດ ແລະ ຕຳແໜ່ງ ມະຫາອຸປະຣາດນີ້ພາຍລຸນມາປ່ຽນຊື່ເປັນພຣະອຸປະເຍົ້າວະ ຣາດ ຫຼື ພຣະຍຸພຣະຣາດກໍມີເນື່ອງຈາກຕຳແໜ່ງເຈົ້າມະຫາອຸປະຣາດ ຫຼືພຣະອຸປະເຍົ້າວະຣາດນີ້ ເປັນຕຳແໜ່ງທີ່ຈະຕ້ອງສືບລາຊະສົມບັດ ແທນພຣະເຈົ້າແຜ່ນດິນ ເຈົ້າມະຫາອຸປະຣາດຈົ່ງເປັນຜູ່ມີອຳນາດ ຫຼາຍແລະກໍມີຫວັງຈະໄດ້ເປັນພຣະເຈົ້າແຜ່ນດິນຢູ່ ຈົ່ງບໍ່ຄ່ອຍຈະຖືກ ຕ້ອງຄ່ອງກັນດີກັບພຣະເຈົ້າແຜ່ນດິນ ເລື່ອງເຈົ້າມະຫາອຸປະຣາດ ຫຼື ເຈົ້າວັງໜ້າບໍ່ຄ່ອຍຖືກຕ້ອງລ່ອງຊ່ອງກັນກັບເຈົ້າວັງຫຼວງ ຄືພຣະເຈົ້າ ແຜ່ນດິນນັ້ນ ໃນພຣະລາຊະອານາຈັກສະຫຍາມ ກໍເຄີຍມີມາແລ້ວຫຼາຍ ຄັ້ງຫຼາຍຫົນ ຈົນມາເຖິງສະໄໝຂອງພຣະເຈົ້າແຜ່ນດິນອົງທີ 4 ຂອງ ສະຫຍາມ ຄືພຣະຈຸລະຈອມເກົ້າ ຫຼື ພຣະປິຍະມະຫາຣາດພຣະອົງ ໄດ້ຫາທາງຕັດຣອນອຳນາດຂອງ ເຈົ້າມະຫາອຸປະຣາດລົງ ບໍ່ໃຫ້ມີອຳ ນາດທ່ຽມພຣະເຈົ້າແຜ່ນດິນ ເຊິ່ງໃນເວລານັ້ນ ແມ່ນກົມພຣະຣາ ຊະວັງບໍວອນວິເສດໄຊຊານເປັນເຈົ້າມະຫາອຸປະຣາດ ແລະເມື່ອກົມ ພຣະລາຊະວັງບໍວອນວິເສດໄຊຊານ (ເປັນເຈົ້າມະຫາອຸປະຣາດ) ໄດ້ ສ້ຽງພຣະຊົນລົງໃນປີ ພ.ສ. 2422 (ຄ.ສ1879)ນັ້ນແລ້ວ ພຣະອົງ

ກໍປະກາດໃຫ້ຍົກເລີກ ຕຳແໜ່ງມະຫາອຸປະຣາດເສຽ ໃນລາຊະອາ ນາຈັກສະຫຍາມ ຈຶ່ງບໍ່ມີຕຳແໜ່ງເຈົ້າມະຫາອຸປະຣາດຕັ້ງແຕ່ນັ້ນມາ ຈົນເຖິງທຸກວັນນີ້ ສ່ວນໃນລາຊະອານາຈັກລາວຂອງເຮົາ ເຖິງແມ່ນ ຈະເຄີຍຕົກເປັນປະເທດສະຣາດຂອງໄທ ແລະຕໍ່ມາຕົກຢູ່ພາຍໃຕ້ຄວາມ ປົກຄອງຂອງຝຣັ່ງກໍຕາມ ກໍຍັງບໍ່ໄດ້ປະກາດຍົກເລີກຕຳແໜ່ງເຈົ້າ ມະຫາອຸປະຣາດນີ້ເທື່ອ ທັງບຸກຄົນຜູ່ຈະດຳຣົງຕຳແໜ່ງເປັນເຈົ້າມະ ຫາອຸປະຣາດນີ້ ກໍບໍ່ແມ່ນພຣະລາຊະໂອລົດຂອງພຣະເຈົ້າແຜ່ນດິນ ຄືແຕ່ກ່ອນ ເພາະພຣະລາຊະໂອລົດອົງ ຈະໄດ້ສືບລາຊະສົມບັດນັ້ນ ໄດ້ປ່ຽນມາເປັນ"ມົງກຸດລາຊະກຸມານ"ເສຽແລ້ວ ບຸກຄົນຜູ່ຈະໄດ້ດຳລົງ ຕຳແໜ່ງເຈົ້າມະຫາອຸປະຣາດນັ້ນ ຈຶ່ງແມ່ນພຣະໂອລົດຂອງເຈົ້າ ມະຫາອຸປະຣາດອົງກ່ອນຕ່ໆກັນມາ. ສະນັ້ນ ເຈົ້າລາຊະພາຄິໄນ ເພັດ ຊະຣາດ ຈຶ່ງໄດ້ດຳລົງຕຳແໜ່ງເປັນເຈົ້າມະຫາອຸປະຣາດ ຕາມສາຍ ພຣະບິດາ ດັ່ງກ່າວມາແລ້ວ.

ເຈົ້າລາຊະພາຄິໄນເພັດຊະຣາດ ເມື່ອໄດ້ຮັບຕຳແໜ່ງເປັນເຈົ້າ ມະຫາອຸປະຣາດ ປະຈຳລາຊະສຳນັກຂອງພຣະເຈົ້າແຜ່ນດິນຫຼວງພຣະ ບາງຕາມລາຊະປະເພນີ ແລະເມື່ອໄດ້ໂຮມເອົາແຂວງວຽງຈັນກັບ ແຂວງພວນໄປເຂົ້າໃນອຳນາດຂອງລາຊະອານາຈັກຫຼວງພຣະບາງ ແລ້ວ ພຣະອົງກໍໄດ້ຈັດລະບຽບການປົກຄອງຂຶ້ນ ເປັນຮູບລັດຖະບານ ຢູ່ພາຍໃຕ້ພຣະລາຊະອຳນາດ ຂອງພຣະເຈົ້າແຜ່ນດິນຫຼວງພຣະບາງ ໂດຍແມ່ນພຣະອົງເອງດຳລົງຕຳແໜ່ງເປັນອັກຄະມະຫາເສນາບໍດີຫຼື ນາຍົກລັດຖະມົນຕີນັ້ນເອງ ລັດຖະບານທີ່ເຈົ້າມະຫາອຸປະຣາດ ເພັດຊະ ຣາດຈັດຕັ້ງຂຶ້ນໃນສະໄໝນັ້ນ ປະກອບດ້ວຍເສນາບໍດີ ຫຼື ລັດຖະມົນຕີ 4

ທ່ານ ຄື:

- ເຈົ້າເສດຖາ ເປັນເສນາບໍດີ ກະຊວງມະຫາດໄທ.
- ເຈົ້າສຸວັນນະຣາດ ເປັນເສນາບໍດີ ກະຊວງໂຍທາ ແລະ ເສດ ຖະກິດ
- ທ້າວ ອູ່ທອງ ສຸວັນນະວົງ ເປັນເສນາບໍດີ ກະຊວງການຄັງ
- ທ່ານ ຜຸຍ ປັນຍາ ເປັນເສນາບໍດີ ກະຊວງທຳມະການ.

ກອງທັບລູກພຣະອາທິດບຸກອິນດູຈີນ

ໃນຂະນະທີ່ມະຫາສົງຄາມໂລກຄັ້ງທີ 2 ພວມຂະໜາບຍ່ຳຍີ່ກັນ ຢູ່ໃນດ້ານ ຍຸໂຣບຢ່າງບໍ່ຢຸດບໍ່ຢ່ອນນັ້ນ ຝ່າຍທະວີບອາຊີ ຍີ່ປຸ່ນຜູ່ທີ່ພວມ ກ້າວຂຶ້ນເປັນມະຫາອຳນາດໃນຄາວນັ້ນ ກໍໄດ້ປະກາດສົງຄາມຕໍ່ສະ ຫະລັດອາເມຣິກາ ແລະ ອັງກິດ ຮ່ວມກັບປະເທດເຢຍລະມັນ ແລະອິຕາ ລີ ຜູ່ເປັນເພື່ອນມິດ ໃນປີ ພ.ສ 2484 (ຄ.ສ. 1941) ແລ້ວກອງທັບ ລູກພຣະອາທິດ ອັນມີຈຳນວນພົນນັບເປັນລ້ານໆກໍຍົກພົນ ຂໍຜ່ານເຂົ້າ ປະເທດໄທ ຫວຽດນາມ ແລະ ຂະເໝນ ເພື່ອຈະໄປຂັບໄລ່ອັງກິດ ແລະ ອາເມຣິກາ ທີ່ຍຶດຄອງພະມ້າ ມະລາຢູ ອິນເດຽ ສົງຄະໂປ ອິນໂດເນ ເຊຽ ຟີລິບປິນ ໃຫ້ຖອຍໜີກັບຄືນໄປປະເທດບ້ານເມືອງຂອງຕົນ ເຊິ່ງ ໃນຂັ້ນຕົ້ນໆ ກອງທັບລູກພຣະອາທິດກໍບຸກໄປໄດ້ໃນທຸກໆຈຸດ ຈົນຕະຫຼອດ ເຖິງອິນເດຽ ແລະ ອິນໂດເນເຊຽ ແຕ່ເມື່ອໄດ້ຢຽດກຳປັ້ນອັນແກ່ນປານ ເຫຼັກຊົກອອກໄປຈົນສຸດເຂດກຳລັງແຮງຂອງຊົ່ວໄລຍະແຂນ ທີ່ຈະຊົກ ເຖິງໄດ້ແລ້ວ ຄວາມແຮງຫຼືອຳນາດ ຂອງກຳປັ້ນນັ້ນກໍອ່ອນລົງ ດັ່ງນັ້ນ ກອງທັບລູກພຣະອາທິດ ເມື່ອບໍ່ມີທາງທີ່ຈະບຸກຄືບໜ້າຕໍ່ໄປໄດ້ເພາະ ປະເທດເພື່ອນມິດຂອງຕົນຄືເຢຍລະມັນ ກັບອິຕາລີ ໄດ້ອ່ອນກຳລັງລົງ

ແລະອ່ອນຍອມຕໍ່ປະເທດສຳພັນທະມິດແລ້ວ ຍີ່ປຸ່ນກໍຈຳເປັນຕ້ອງຕີ ຖອຍ ເພື່ອຖອນທະຫານຂອງຕົນກັບຄືນບ້ານເມືອງແລະເພື່ອເປັນຖານ ທັບສຳລັບຍັບຍັ້ງໃນການຖອຍດ້ວຍ ດັ່ງນັ້ນ ຄັນເຖິງວັນທີ 9 ເດືອນ ມີນາ ພ.ສ. 2488 (ຄ.ສ.1945) ຍີ່ປຸ່ນກໍບຸກເຂົ້າມາໃນປະເທດລາວ ໃນຕອນກາງຄືນ ແລະເຂົ້າຍຶດວຽງຈັນໃນວັນທີ 10 ມີນາ 1945. ຂະນະ ທີ່ຍີ່ປຸ່ນເຂົ້າຍຶດເອົາອິນດູຈີນນີ້ ພວກຝຣັ່ງທີ່ຢູ່ໃນອິນດູຈີນໄດ້ແຕກກັນ ອອກເປັນສອງພວກ ຄື ພວກຈອມພົນເປແຕງ (général Petin) ແລະ ພວກນາຍພົນເດີໂກລ (général Degaule) ສະນັ້ນເມື່ອຍີ່ປຸ່ນເຂົ້າຍຶດ ພວກຝຣັ່ງທີ່ເປັນພົນລະເຮືອນ ເຊິ່ງເປັນຝ່າຍຂອງຈອມພົນເປແຕງ ກໍຍິນຍອມໃຫ້ຍຶດແຕ່ໂດຍດີສ່ວນພວກທະຫານເຊິ່ງເປັນພວກຂອງນາຍ ພົນເດີໂກລ ພາກັນຕໍ່ສູ້ ແຕ່ກໍ່ສູ້ແບບຖອຍຫຼັງເຂົ້າປ່ານັ້ນເອງ. ໃນເວລາ ທີ່ຍີ່ປຸ່ນເຂົ້າບຸກວຽງຈັນ ເຈົ້າມະຫາອຸປະຮາດເພັດຊະຮາດ ກໍໄດ້ລົງມາ ປະທັບຢູ່ທີ່ວຽງຈັນ ແລະຂ້າພະເຈົ້າຜູ້ຂຽນເອງ ກໍຢູ່ເມືອງໜອງຄາຍ ຈຶ່ງໄດ້ຮູ້ເຫັນເຫດການໃນ ຕອນນີ້ໄດ້ພໍສົມຄວນ ຄື ໃນຕອນແລງຂອງ ວັນທີ 9 ມີນານັ້ນ ໄດ້ເຫັນກອງທະຫານຍີ່ປຸ່ນຫຼັ່ງໄຫຼເຂົ້າມາເຕັມຢູ່ໃນ ເມືອງໜອງຄາຍ ແຕ່ເຖິງຢ່າງໃດກໍຕາມ ເຫດການໃນຕອນທີ່ຍີ່ປຸ່ນ ເຂົ້າຍຶດວຽງຈັນນີ້ ຂ້າພະເຈົ້າຂໍເລົ່າຕາມບັນທຶກຂອງເຈົ້າເພັດຊະຮາດ ທີ່ພຣະອົງໄດ້ບັນທຶກໄວ້ ແລະ ໄດ້ລົງພິມໄວ້ໃນໜັງສື "ບຸຣຸດເຫຼັກ..." ໜ້າ 92-118 ດັ່ງຕໍ່ໄປນີ້:

- ວັນທີ 6 ມີນາ ພ.ສ. 2488 (1945) ເຈົ້າເພັດຊະຮາດ ຈາກ ນະຄອນຫຼວງພຣະບາງລົງມາວຽງຈັນ ໂດຍລົດຍົນ ວັນທີ 8 ມາເຖິງ ວຽງຈັນ ເວລາ 21. 00ໂມງ, ເວລາ 22.00 ໂມງໄດ້ພົບພໍ້ສົນທະນາກັນ ກັບທ່ານບຣາໄຊ ຂ້າຫຼວງໃຫຍ່ຝຣັ່ງປະຈຳປະເທດລາວ ຂ້າຫຼວງຝຣັ່ງ

ໄດ້ບອກກັບເຈົ້າເພັດຊະຣາດວ່າ ມື້ອື່ນ (ວັນທີ9) ນາຍພົນຕຣູແກ່ງຜູ່ບັນ ຊາການທະຫານຝຣັ່ງ ປະຈຳປະເທດຫວຽດນາມແລະລາວຈະມາເຖິງ ວຽງຈັນ ເພື່ອກວດກາກອງພັນທະຫານທີ່ປະຈຳຢູ່ວຽງຈັນ ດັ່ງນັ້ນໃນ ຕອນທ່ຽງຂອງວັນທີ 10 ມີນານີ້ ຈະໄດ້ຈັດງານລ້ຽງຮັບຕ້ອນນາຍພົນ ຕຣູແກ່ງ ຈຶ່ງຂໍເຊີນເຈົ້າເພັດຊະຣາດໄປຮ່ວມນຳ.

- ຄັນເຖິງເວລາ 18.00 ໂມງຂອງວັນທີ 9 ນາຍພົນຕຣູແກ່ງ ກໍມາເຖິງ ແລະຈັດການຮັບຕ້ອນກັນຢູ່ທີ່ສຳນັກຂອງຂ້າຫຼວງໃຫຍ່ (ສຳ ນັກພຣະລາຊະວັງ ຫໍຄຳດຽວນີ້) ເມື່ອທ່ານນາຍພົນໄດ້ກວດແຖວທະ ຫານກອງກຽດຕິຍົດແລ້ວກໍໄດ້ ຖາມນາຍພັນຕີ ຜູ່ບັງຄັບກອງພັນທະ ຫານທີ່ວຽງຈັນວ່າ:

"ທ່ານໄດ້ ຈັດການອັນໃດໄວ້ ສຳຫຼັບໃຫ້ຂ້າພະເຈົ້າເບິ່ງ ໃນມື້ອື່ນ ເຊົ້າ"

"ຈະມີການຍິງເປົ້າໃຫ້ທ່ານສັງເກດເບິ່ງສີມືທະຫານໂດຍຕັ້ງຕົ້ນ ແຕ່ເວລາ 6 ໂມງໄປ "ທ່ານນາຍພັນຕອບ.

"ດີແລ້ວ! ຂໍໃຫ້ມາຮັບຂ້າພະເຈົ້າຕາມເວລາອັນຄວນ" ທ່ານ ນາຍພົນບອກແລ້ວທ່ານນາຍພົນກໍເຂົ້າໄປໃນເຮືອນຂອງ ຂ້າຫຼວງເຈົ້າ ເພັດຊະຣາດຊົງ ເລົ່າຕໍ່ໄປວ່າ ພໍເວລາ 6 ໂມງເຊົ້າຂອງວັນທີ 10 ກໍໄດ້ ຍິນສຽງປືນດັງຂຶ້ນທາງສະໜາມເປົ້າ ເຊິ່ງຢູ່ຫ່າງຈາກວຽງຈັນອອກ ໄປທາງໄປໜອງຄາຍ ພຽງ 6 ກິໂລແມັດ (ບ່ອນໂຮງບົ່ມໃບຢາດຽວນີ້) ແຕ່ສຽງປືນນັ້ນ ດັງສະໜັ່ນຜິດປົກກະຕິ ພໍເວລາ 7 ໂມງ ກໍເຫັນທະ ຫານມ້າຄົນໜຶ່ງຄວບມ້າມາ ຢ່າງສາຍຟ້າແມບ ໂດຍທີ່ປາກຂອງເຂົາ ຄາບເຈ້ຽແຜ່ນໜຶ່ງຢູ່ ເພາະມືຂອງເຂົາບໍ່ຫວ່າງ ຍ້ອນວ່າມືຊ້າຍຖື

ບ້ງຫຽນມ້າສ່ວນມືຂວາຖືປືນ ອາກາບຂອງທະຫານມ້າຄົນ ນັ້ນເຮັດ ໃຫ້ຂ້າພະເຈົ້າເກີດຄວາມສົງໄສຂຶ້ນວ່າ ຄົງຈະມີເຫດ ແນວໃດແນວໜຶ່ງ ເກີດຂຶ້ນທາງສະໜາມເປ້າ ຈຶ່ງກັບເຂົ້າໄປໃນຫ້ອງຮັບແຂກ ເພື່ອຈະໃຫ້ ຄົນໄປສືບສວນເບິ່ງທາງສະໜາມເປ້າ ທັນໃດນັ້ນກໍເຫັນ ເຈົ້າສຸວັນ ນະພູມາ (ອົງນາຍົກ ປັດຈຸບັນ) ເຂົ້າມາພໍດີແລະເຫັນສີໜ້າຜິດປົກກະຕິ ແລ້ວເຈົ້າສຸວັນນະພູມມາກໍທູນວ່າ " ເມື່ອກີ້ນີ້ ວິທະຍຸໄຊງ່ອນປະກາດວ່າ ຍີ່ປຸ່ນໄດ້ຈັບນາຍພົນເອກເດີຮູ ຂ້າຫຼວງໃຫຍ່ຝຣັ່ງປະຈຳອິນດູຈີນ ພ້ອມ ດ້ວຍນາຍທະຫານຊັ້ນຜູ່ໃຫຍ່ ແລະຂ້າລາຊະການຊັ້ນຫົວໜ້າໄວ້ໄດ້ໝົດ ແລ້ວ ແລະໄດ້ຍຶດອຳນາດຂອງຝຣັ່ງໄດ້ສຳເລັດແລ້ວ ສະນັ້ນ ຈຶ່ງໃຫ້ທະ ຫານ ແລະຂ້າລາຊະການຕາມຫົວເມືອງຕ່າງໆຈົ່ງຍອມ ເຂົ້າຫາຍີ່ປຸ່ນ ໂດຍດີ ເພາະການຈະຕໍ່ຕ້ານໄປອີກນັ້ນບໍ່ມີປະໂຫຍດອັນໃດ ພ້ອມກັນນັ້ນ ທ່ານຕຣູໄຕ ຮອງຫົວໜ້າຄັງທີ່ວຽງຈັນກໍເຂົ້າໄປ ແລ້ວທັງສອງຄົນໄດ້ ທູນຖາມຂ້າພະເຈົ້າວ່າ:

"ສະເດັດ ຈະເຮັດແນວໃດ ?".

ຂ້າພະເຈົ້າຕອບວ່າ " ຂ້າພະເຈົ້າຈຳຕ້ອງກັບໄປຫຼວງພຣະບາງ ເພື່ອຢູ່ກັບພຣະເຈົ້າແຜ່ນດິນ ສ່ວນທາງວຽງຈັນນີ້ ຈະມອບໃຫ້ເຈົ້າ ແຂວງພະຍາຄຳມ້າວເປັນຜູ່ເບິ່ງແຍງ ແຕ່ຈະຕ້ອງຖາມທາງຂ້າຫຼວງ ໃຫຍ່ຝຣັ່ງເບິ່ງກ່ອນວ່າ ແຜນການຂອງຝຣັ່ງຈະເຮັດຢ່າງໃດ" ແລ້ວກໍ ໄດ້ໂທລະສັບໄປຖາມທ່ານຂ້າຫຼວງ ທ່ານຂ້າຫຼວງຕອບມາວ່າໄດ້ຊາບ ຂ່າວນັ້ນແລ້ວ ແລະດຽວນີ້ ພວມປະຊຸມຫົວໜ້າຜະແນກການຕ່າງໆຢູ່ ແລະຂໍເຊີນສະເດັດໄປຫາທີ່ທຳການດ້ວຍ ຂ້າພະເຈົ້າຕອບວ່າຈະໄປ ເວລາ 10 ໂມງ.

ໃນຂະນະທີ່ກຳລັງສົນທະນາ ຢູ່ກັບເຈົ້າສຸວັນນະພູມານັ້ນ ກໍໄດ້ຍິນ ສຽງ ຣະເບີດດັງຂຶ້ນທາງໂຮງການຄັງເງິນ ແລະສຽງຣະເບີດທາງ ບ້ານໂພນເຄັງອີກຫຼາຍເທື່ອ ໃນຂະນະນັ້ນເປັນເວລາ 9 ໂມງ ຕໍ່ຈາກ ນັ້ນກໍມີຄົນມາບອກວ່າ ຝຣັ່ງລະເບີດໂຮງລົດຍົນທີ່ຢູ່ຂ້າງຄັງເງິນ ສ່ວນ ສຽງທາງບ້ານໂພນເຄັງ ນັ້ນແມ່ນສຽງລະເບີດຄັງອາວຸດ ແລະເວລາ ນີ້ພວກຝຣັ່ງພວມອົບພະຍົບອອກຈາກວຽງຈັນ ໄປທາງເມືອງວັງວຽງ ໂດຍລົດຍົນ. ພໍເຖິງເວລາ 10 ໂມງ ຂ້າພະເຈົ້າກໍໄປຫາທ່ານຂ້າຫຼວງ ທີ່ສຳນັກງານ ໄດ້ເຫັນພວກຂ້າລາຊະການຝຣັ່ງ ແລະລາວພວມຈູດ ເຜົາເອກະສານຕ່າງໆຢູ່ແລ້ວ ຂ້າພະເຈົ້າໄດ້ຖາມທ່ານຂ້າຫຼວງວ່າ: "ເຫດການຄັ້ງນີ້ ທາງດ້ານເຮົາໄດ້ວາງແຜນການໄວ້ຢ່າງໃດ?" ທ່ານ ຂ້າຫຼວງບອກວ່າ: "ການຈະປ້ອງກັນວຽງຈັນນັ້ນ ບໍ່ມີທາງແລ້ວ ເພາະ ເຮົາບໍ່ຮູ້ສຶກຕົວກ່ອນ ສະນັ້ນທາງທະຫານຈຶ່ງກະກັນວ່າຈະຕໍ່ສູ້ຢູ່ນອກ ເມືອງຕາມເສັ້ນທາງຕ່າງໆ ສ່ວນຕົວຂ້າພະເຈົ້ານັ້ນ ບໍ່ທັນເຖິງໜ້າທີ່ ຈະໄປ ຖ້າຍີ່ປຸ່ນເຂົ້າມາເວລາໃດ ກໍສຸດແລ້ວແຕ່ເຂົາຈະດຳເນີນການ ກັບຂ້າພະເຈົ້າ" ແລ້ວຂ້າຫຼວງ ກໍຖາມຂ້າພະເຈົ້າວ່າ: "ສະເດັດເດ ຈະ ເຮັດແນວໃດ" ຂ້າພະເຈົ້າບອກວ່າ: "ຂ້າພະເຈົ້າຈະໄປຫຼວງພຣະບາງ ໂດຍດ່ວນ ແຕ່ລົດຂອງຂ້າພະເຈົ້າພວມສ້ອມແປງຢູ່ ຈຶ່ງຂໍຢືມລົດຂອງ ທ່ານ ຍີ່ໄປເຖິງເມືອງກາສີ ແລ້ວຈະສົ່ງຄືນ ແລະຂໍໃຫ້ທ່ານໂທລະເລກ ບອກຂ້າຫຼວງແຂວງຫຼວງພຣະບາງ ສົ່ງລົດມາຮັບຂ້າພະເຈົ້າທີ່ເມືອງ ກາສີໃນມື້ອື່ນເຊົ້າ" ທ່ານຂ້າຫຼວງຕອບວ່າ: "ໄດ້", ແລ້ວຖາມຂ້າພະ ເຈົ້າວ່າ: "ການໄປຫຼວງພຣະບາງນີ້ຈະໄປໄດ້ຢ່າງໃດ ເພາະຍີ່ປຸ່ນ ຄົງ ຍຶດທາງໄວ້ໝົດແລ້ວ" ຂ້າພະເຈົ້າຕອບວ່າ:

"ບໍ່ເປັນຫຍັງຂ້າພະເຈົ້າສາມາດເດີນທາງລັດ ໄປຕາມພູເຂົາ

ກໍໄດ້". ໃນຂະນະທີ່ລົມກັນຢູ່ນັ້ນ ຂ້າຫຼວງໃຫຍ່ໄດ້ຂໍໂອກາດໂທລະສັບໄປ ບອກຄົນໃຊ້ຂອງທ່ານໃຫ້ເອົາເຄື່ອງແບບມາໃຫ້ຂ້າພະເຈົ້າໄດ້ຖາມວ່າ: "ເອົາມາເຮັດຫຍັງ?", ທ່ານບອກວ່າ: "ເອົາມານຸ່ງຮັບຍີ່ປຸ່ນ ຕາມຖານະທີ່ຂ້າພະເຈົ້າເປັນຂ້າຫຼວງໃຫຍ່".

ໃນໂອກາດສົນທະນາກັນນີ້ ຂ້າພະເຈົ້າເລີຍຖືໂອກາດຂໍເອົາຫີບພຣະພຸດ ທະຮູບທອງຄຳ ກັບຂອງສິ່ງທີ່ຂ້າພະເຈົ້າຝາກໄວ້ ໃນຕູ້ເຊັບຂອງທ່ານໄດ້ຫຼາຍປີມາແລ້ວນັ້ນໄປນຳດ້ວຍ ທ່ານກໍຈັດການໃຫ້ເລຂາ ນຸການຂອງທ່ານໄຂເອົາໃຫ້ ແລ້ວຂ້າພະເຈົ້າກໍສົ່ງໃບຮັບຄືນໃຫ້ທ່ານ. ທ່ານຂ້າຫຼວງໃຫຍ່ໄດ້ຖາມຂ້າພະເຈົ້າວ່າ: "ຈະໄປຫຼວງພຣະບາງ ເວລາໃດແນ່ ເພາະຈະໄດ້ສົ່ງລົດ ມາໃຫ້ທັນກັບເວລາ ແລະຕອນທ່ຽງນີ້ ຈະໄປກິນລ້ຽງທີ່ເຮືອນຂອງຂ້າພະເຈົ້າບໍ່?" ຂ້າພະເຈົ້າບອກວ່າ: "ໄດ້ຮັບຄຳແຕ່ຕົ້ນແລ້ວ ວ່າຈະມາກິນລ້ຽງຮັບຕ້ອນທ່ານນາຍພົນຕຣູແກງ ດັ່ງນັ້ນ ຂ້າພະເຈົ້າຕ້ອງມາແນ່".

"ຢ້ານວ່າ ບັນດາຜູ່ທີ່ຖືກເຊີນຄົງຈະບໍ່ມາຄົບ" ທ່ານຂ້າຫຼວງຈົ່ມ ຂ້າພະເຈົ້າບອກວ່າ: "ບໍ່ເປັນຫຍັງ ແຕ່ຂ້າພະເຈົ້າຈະບໍ່ຂາດ ແລະເຮົາ ຍັງຈະໄດ້ມີເວລາສົນທະນາກັນອີກໃນເວລາກິນອາຫານ".

ໃນຕອນນີ້ ເຈົ້າເພັດຊະຣາດໄດ້ເລົ່າເລື່ອງພຣະພຸດທະຮູບທອງຄຳ ແລະຂອງອື່ນໆໄວ້ດັ່ງນີ້: "ຂອງເຫຼົ່ານີ້ເປັນຂອງບູຮານທັງສິ້ນ ນອກຈາກພຣະພຸດທະຮູບຄຳຕັນໜັກກວ່າ 6 ກິໂລກຣາມອົງນຶ່ງ ແລ້ວຍັງມີພຣະພຸດທະຮູບ ໂອບຄຳຈຳນວນມາກ ທັງແຜ່ນທອງຄຳ ແລະຮູບທາດຈຳລອງເຊິ່ງເປັນທອງຄຳສອງອັນ ແລະຂອງອື່ນໆຫຼາຍສິ່ງທີ່ເຈົ້າ

ເມືອງທ້າວຄຳຜາ ສຸວັນນະວົງ ພຣະພິກຸ ຂ້າລາຊະການ ແລະຂ້າ ພະເຈົ້າເອງໄດ້ມ້ຽນໄວ້ ຕັ້ງແຕ່ປີ 1917 (ພ.ສ. 2460) ເປັນຕົ້ນມາ ເພື່ອໄວ້ສຳລັບພິທະພັນໃນເບື້ອງໜ້າ ເຊິ່ງຂ້າພະເຈົ້າໄດ້ຮັບມອບໃຫ້ ເປັນຜູ້ຮັກສາມາແຕ່ຊັ້ນຕົ້ນ ດັ່ງນັ້ນ ເມື່ອເກີດກໍລະນີພິພາດລະຫວ່າງ ໄທກັບປະເທດອິນດູຈີນປີ 1940 ສຳຫຼັບການປອດໄພ ຂ້າພະເຈົ້າຈຶ່ງ ໄດ້ນຳເອົາຂອງ ດັ່ງກ່າວຂຶ້ນເຮືອບິນໄປເມືອງໄຊ່ງ່ອນ ເພື່ອຝາກໄວ້ ໃນທະນາຄານຝຣັ່ງ ໂດຍເອົາພຣະຄູຫຼັກຄຳແກ້ວ ໄປນຳເພື່ອເປັນພະ ຍານໃນການຝາກຂອງນັ້ນ ແຕ່ທະນາຄານໃດກໍບໍ່ຮັບເພາະຢ້ານວ່າຈະ ບໍ່ເປັນການປອດໄພ ເນື່ອງຈາກການສົງຄາມຈຳຕ້ອງເອົາກັບຄືນວຽງ ຈັນ ແຕ່ເພື່ອບໍ່ໃຫ້ຄົນຮູ້ວ່າເອົາຂອງທີ່ມີລາຄາເຫຼົ່ານັ້ນກັບຄືນມາ ຂ້າ ພະເຈົ້າຈຶ່ງຊື້ກະເປົ໋າໜັງສຳຫຼັບໃສ່ເສື້ອຂະໜາດພໍດີກັບຫີບໃສ່ພຣະພຸດ ທະຮູບແລະຂອງດັ່ງກ່າວແລ້ວ ກໍເອົາຫີບນັ້ນໃສ່ໃນກະເປົ໋າໜ່ວຍນັ້ນ ຂຶ້ນເຄື່ອງບິນມາວຽງຈັນ ແລະເມື່ອລົງຈາກເຄື່ອງບິນກໍໄດ້ຕອບຄຳ ຖາມຂອງພວກທີ່ໄປຮັບວ່າ ໄດ້ຝາກຂອງເຫຼົ່ານັ້ນໄວ້ຮຽບຮ້ອຍ ແລະ ປອດໄພແລ້ວທຸກໆຄົນກໍເຊື່ອ ສະນັ້ນເມື່ອອົບພະຍົບຈາກວຽງຈັນ ໄປຢູ່ ບ້ານຫາດມ້ຽງເຊິ່ງຫ່າງຈາກວຽງຈັນອອກໄປ 32 ກິໂລແມັດ ເພື່ອເປັນ ການ ປອດໄພຈາກການໂຈມຕີໂດຍ ເຄື່ອງບິນ ແລະປືນໃຫຍ່(ຂອງໄທ) ຂ້າພະເຈົ້າຈຶ່ງໄດ້ເອົາຫີບຂອງຄະນະສົງໄປໄວ້ນຳ ໂດຍບໍ່ມີຜູ້ໃດຮູ້ເລີຍ ເມື່ອສະຖານະການບ້ານເມືອງ ເປັນປົກກະຕິແລ້ວ ຂ້າພະເຈົ້າຈຶ່ງເຜີຍ ຄວາມ ຈຶ່ງໃຫ້ຄົນທັງຫຼາຍຮູ້ແລ້ວ ຈຶ່ງເອົາໄປຝາກໄວ້ທີ່ຕູ້ເຊັຟຂອງ ທ່ານຂ້າຫຼວງໃຫຍ່ ດັ່ງກ່າວແລ້ວ.

ທີ່ນີ້ ຈະໄດ້ກ່າວເຖິງເຫດການ ໃນວັນເສົາທີ 10 ມີນາ ຕໍ່ໄປຕາມ

ລຳດັບເວລາ:

ຄັນລາຂ້າຫຼວງໃຫຍ່ແລ້ວ ຂ້າພະເຈົ້າກໍໃຫ້ສະໜຽນຄົນໜຶ່ງ ແບກຫີບພຣະພຸດທະຮູບ ຕາມຂ້າພະເຈົ້າໄປທີ່ໂຮງຂອງຂ້າພະເຈົ້າ ເຊິ່ງພາໃຫ້ຂ້າລາຊະການທີ່ມາຄອຍເຝົ້າຢູ່ແລ້ວນັ້ນ ມີຄວາມຊື່ນຊົມ ທຸກໆຄົນ ເພາະບໍ່ມີຜູ່ໃດຄຶດເຖິງຂອງເຫຼົ່ານັ້ນມາກ່ອນ ແລ້ວຂ້າພະເຈົ້າ ກໍສົ່ງໃຫ້ເຈົ້າແຂວງ. ພະຍາຄຳມ້າວ ຮຽກຂ້າລາຊະການທັງຫຼາຍມາ ຄອຍຟັງຄຳສັ່ງຂອງຂ້າພະເຈົ້າ ໃນເວລາ 13.30 ນ, ລຸນຫຼັງຈາກຮັບປະ ທານອາຫານແລ້ວ, ຕາມເວລານັດ 12 ນ. ຂ້າພະເຈົ້າກໍໄປເຮືອນ ຂ້າ ຫຼວງໃຫຍ່ ທ່ານຂ້າຫຼວງ ກ່າວຂຶ້ນທັນທີວ່າ:

"ການກິນລ້ຽງວັນນີ້ ເຫັນຈະບໍ່ມີຄົນມາພໍ່ທໍ່ໃດ ເພາະເຫດທີ່ຍີ່ ປຸ່ນຮຸກຮານ".

ທີ່ຈິງການຍິງກັນກໍຍັງດຳເນີນຢູ່ສະເໝີແລະຜາກົດວ່າ ສຽງ ປືນໃກ້ເຂົ້າມາກວ່າຕອນເຊົ້ານີ້ຫຼາຍຂຶ້ນ. ການກິນລ້ຽງຮ່ວມກັນ ໃນວັນ ນັ້ນມີພຽງແຕ່ຂ້າຫຼວງໃຫຍ່ ຂ້າພະເຈົ້າ ເລຂາແລະພັນຣະຍາຂອງເລ ຂາພຽງ 4 ຄົນທໍ່ນັ້ນ ສ່ວນນາຍພົນແລະນາຍທະຫານທີ່ຮັບເຊີນແລ້ວ ບໍ່ມາເລີຍແມ່ນແຕ່ຄົນດຽວ ແລະພະຍາຄຳມ້າວເອງກໍຄາວຮຸກຮຽກ ຂ້າລາຊະການມາປະຊຸມ.

ເຖິງແມ່ນວ່າມີແຕ່ 4 ຄົນ ຮ່ວມກິນລ້ຽງນຳກໍດີ ກໍຍັງໄດ້ລົມກັນ ມ່ວນຊື່ນ ຕະຫຼອດເວລາ.

"ຖ້າຍີ່ປຸ່ນເຂົ້າໃນເວລາເຮົາກິນລ້ຽງກັນຢູ່ດັ່ງນີ້ເຫັນຈະບໍ່ເໝາະ". ຂ້າຫຼວງຝຣັ່ງວ່າ, "ເຮົາເຊີນເຂົ້າຮ່ວມໂຕະນຳກໍແລ້ວກັນ", ຂ້າພະເຈົ້າ

ຕອບ, "ເຂົ້າເຫັນຈະບໍ່ປະຕິເສດ ເພາະຄົງຈະຫິວຫຼາຍດ້ວຍວ່າສູ້ຣົບມາ ແຕ່ເຊົ້າຕະຫຼອດເວລາ".

"ຖ້າເຂົ້າມາເວລານີ້ ຈະເສຽດາຍເຫຼົ້າອະງຸ່ນ (ເຫຼົ້າແວງ) ຢ່າງ ດີທີ່ເຮົາດື່ມກັນນີ້ ເພາະເຂົ້າບໍ່ຊາບລົດຂອງດີຢ່າງນີ້", ຂ້າຫຼວງກ່າວ ອີກ.

"ເຮົາຟ້າວດື່ມໃຫ້ໝົດດີກວ່າ ທີ່ຈະໃຫ້ຄົນທີ່ບໍ່ຮູ້ລົດດື່ມ" ຂ້າພະ ເຈົ້າຕອບພໍດີຂະນະນັ້ນຫົວໜ້າສະຖານີວິທະຍຸກໍເຂົ້າມາບອກວ່າ: "ໄດ້ ຮຽກສະຖານີຫຼວງພຣະບາງເທິງນານກໍບໍ່ຕອບ ດັ່ງນັ້ນໂທລະເລກທີ່ ຈະສົ່ງບອກໃຫ້ລົດຍົນມາຮັບ ສະເດັດທີ່ເມືອງກາສີ ຈົ່ງບໍ່ໄດ້ຈົນດຽວນີ້". "ຫຼວງພຣະບາງ ຈະເສຽໃຫ້ຍີ່ປຸ່ນ ແລ້ວຫຼື?", ທ່ານຂ້າຫຼວງໃຫຍ່ວ່າ "ບໍ່ ໄດ້ລົດຈາກຫຼວງພຣະບາງກໍບໍ່ເປັນຫຍັງ", ຂ້າພະເຈົ້າບອກ "ເຖິງ ເມືອງກາສີແລ້ວ ຂ້າພະເຈົ້າຈະໄປທາງລັດກັບບ້ານມົ້ງປອດໄພດີກວ່າ ໄປລົດຍົນ ເພາະຍີ່ປຸ່ນອາດດັກທາງໄວ້ແລ້ວກໍເປັນໄດ້". ຂະນະນັ້ນ ເບິ່ງ ໂມງໄດ້ 13.30 ມ. ແລ້ວຂ້າພະເຈົ້າຈົ່ງລາຂ້າຫຼວງໃຫຍ່ ກັບໂຮງປະຊຸມ ຂ້າລາຊະການລາວ ບອກສັ່ງທຸກຢ່າງແລ້ວ ເວລາ 15.20 ໂມງ. ຂ້າພະ ເຈົ້າກໍອອກຈາກວຽງຈັນ ໂດຍມີທ້າວແດງເປັນຄົນຂັບລົດໄປສົ່ງ ຂະ ນະນັ້ນສຽງປືນໄດ້ໃກ້ເຂົ້າມາທຸກທີ ຂ້າພະເຈົ້າຄິດວ່າຍີ່ປຸ່ນຄົງຍຶດທາງ ໄປຫຼວງພຣະບາງເສຽແລ້ວແຕ່ ພໍກາຍສະໜາມບິນວັດໄຕໄປແລ້ວ ບໍ່ ເຫັນອັນໃດຜິດປົກກະຕິ ຈົ່ງຮູ້ໄດ້ວ່າບໍ່ມີຂ້າເສິກ ໃນດ້ານນີ້ພໍຂ້າມນ້ຳລີກ ໄປເຖິງກິໂລແມັດທີ 103 ກໍເຫັນຄົນຖືປືນຂ້າມທາງຈາກດ້ານຊ້າຍ ໄປດ້ານຂວາເຊິ່ງພາໃຫ້ຂ້າພະເຈົ້າຄິດວ່າແມ່ນທະຫານ ຍີ່ປຸ່ນຈົ່ງ ບອກໃຫ້ທ້າວແດງ ຂັບລົດໄປຊ້າໆກ່ອນ ແລ້ວກໍຢຸດລົດໄວ້ ພໍດີກໍເຫັນ ຝຣັ່ງ 4 ຄົນ ໂພ້ໂວ້ ອອກມາຈາກປ່າແຄມທາງ ຂ້າພະເຈົ້າເຫັນ

ກໍຈີ່ໜ້າໄດ້ຄົນໜຶ່ງ ຄື ທ່ານປາຣິໂຊ ສາລະວັດລາຊະການຝຣັ່ງປະຈຳປະເທດລາວ ຂ້າພະເຈົ້າຈຶ່ງປ່ອນໜ້າອອກໄປ ພໍເຂົາເຫັນ ກໍໂບກມື ແລະຮ້ອງບອກພັກພວກຂອງເຂົາວ່າ: " ບໍ່ແມ່ນຍີ່ປຸ່ນ ຢ່າຍິງ " ແລ້ວກໍເຫັນຝຣັ່ງ 4-5 ຄົນ ອອກມາຈາກປ່າ ຄົນໜຶ່ງມີຍົດເປັນນາຍພັນຕີ ເບິ່ງໜ້າຈົດບໍ່ມີເລືອດຈັກຄົນ ເມື່ອເຂົາເຫັນຂ້າພະເຈົ້າຈຶ່ງພາກັນຖາມວ່າ:

"ຍີ່ປຸ່ນຍຶດ ວຽງຈັນ ແລ້ວບໍ ?"

"ຍັງບໍ່ເຫັນເຂົ້າມາໃນເມືອງເລີຍ" ຂ້າພະເຈົ້າບອກ: " ສະເດັດ ອອກຈາກ ວຽງຈັນຈັກໂມງ? "ເຂົາຖາມອີກ", ເວລາ 15.20 ນ ແຕ່ຂະ ນະນັ້ນ ສຽງປືນໃກ້ເຂົ້າມາແລ້ວ" ຂ້າພະເຈົ້າຕອບ.

"ສະເດັດຈະໄປໃສ ?" ເຂົາຖາມອີກ "ຈະໄປຫາພຣະເຈົ້າແຜ່ນດິນ ທີ່ຫຼວງພຣະບາງ" ຂ້າພະເຈົ້າບອກ.

"ດັ່ງນັ້ນ ຂໍເຊີນແວະເມືອງວັງວຽງ ບອກຂ່າວທາງວຽງຈັນໃຫ້ ທ່ານ ນາຍພົນຕຣູແກງຊາບດ້ວຍ" ເຂົາສັ່ງ ຂ້າພະເຈົ້າກໍຮັບຄຳແລ້ວ ນາຍພັນຕີ ຄົນນັ້ນຈຶ່ງສັ່ງຄົນຂັບລົດຍົນ 3 ຄັນທີ່ຂວາງທາງຢູ່ອອກ ໃຫ້ລົດຂ້າພະເຈົ້າຜ່ານໄປໄດ້.

ຂ້າພະເຈົ້າໄປເຖິງເມືອງວັງວຽງ ເວລາ 22.00 ນ ແວະທີ່ບັງ ກາໂລ ເພື່ອບອກຂ່າວທາງວຽງຈັນ ໃຫ້ນາຍພົນຕຣູແກງຊາບ ຈຶ່ງເຫັນ ຊາວຝຣັ່ງ ເປັນອັນມາກອັ່ງອໍກັນຢູ່ເຕັມຕາມບັງກາໂລ ແລ້ວຂ້າພະ ເຈົ້າກໍເລີຍໄປເຮືອນເຈົ້າເມືອງ ທ້າວໄລ່ (ຍ່າພໍ່ໄລ່) ກິນອາຫານທີ່ນັ້ນ ແລະບອກຂ່າວທາງວຽງຈັນໃຫ້ຊາບ ທັງຕັກເຕືອນຂ້າລາຊະການໃຫ້ ປະຕິບັດໜ້າທີ່ໄປຕາມເດີມ ພໍເສັດທຸລະແລ້ວ ກໍອອກລົດໄປເມືອງກາສີ ເຖິງກາສີ ເວລາ 02.00 ໂມງກາງຄືນ ສັ່ງໃຫ້ຈົນດາວົງຮຽກຂ້າລາ

ຊະການມາຮັບຄຳສັ່ງໃນທັນທີແລະໃຫ້ຫາມ້າໃຫ້ 1 ຕົວ ກັບຄົນຫາບ ຂອງ 8 ຄົນ, ຕື່ນເຊົ້າເວລາ 5.00 ໂມງ ຂອງວັນທີ 11 ຂ້າພະເຈົ້າ ກໍສັ່ງໃຫ້ຫ້າວແດງເອົາລົດກັບຄົນວຽງຈັນໃນວັນນັ້ນ ແລ້ວຂ້າພະເຈົ້າ ກໍອອກເດີນທາງ ໃນເວລາ 6.00 ໂມງ ໂດຍພາຫາມະມ້າ.

ທີ່ກ່າວມານີ້ແມ່ນ ຂຽນຕາມບັນທຶກຂອງເຈົ້າມະຫາອຸປະຣາດ ເພັດຊະຣາດ ທີ່ລົງພິມໄວ້ໃນໜັງສື "ບູຮຸດເຫຼັກແຫ່ງລາຊະອານາຈັກ ລາວ"

ຕໍ່ຈາກນັ້ນ ພຣະອົງກັບຄົນຫາບເຄື່ອງ 8 ຄົນກໍເດີນຍ່າງຕັດລັດ ຂ້າມພູຂ້າມຜານອນແຮມໄປຕາມປ່າຈົນເຖິງວັນທີ 14 ຈຶ່ງເຖິງນະຄອນ ຫຼວງພຣະບາງ ແລ້ວກໍໄດ້ເຊີນບັນດາຄະນະເສນາບໍດີເຂົ້າມາປະຊຸມ ຮັບຮູ້ສະຖານະການໃນຄືນວັນນັ້ນດ້ວຍ, ຮຸ່ງເຊົ້າມາເປັນວັນທີ 15 ມີນາ ຍີ່ປຸ່ນຈຶ່ງເຂົ້າເຖິງນະຄອນຫຼວງພຣະບາງ ຄັນເມື່ອຍີ່ປຸ່ນເຂົ້າຍຶດເອົາ ຫົວເມືອງລາວໄດ້ໝົດທຸກແຂວງແລ້ວ ຍີ່ປຸ່ນກໍໄດ້ອອກຖະແຫຼງການ ປະກາດໃຫ້ລາຊະອານາຈັກລາວຫຼວງພຣະບາງ ເປັນເອກະລາດຮ່ວມ ຢູ່ໃນວົງໄພບູນຂອງປະເທດມະຫາເອເຊຍບົວຣະພາ ຮ່ວມກັບປະເທດ ທັງຫຼາຍໃນອິນດູຈີນ ແຕ່ການປະກາດໃຫ້ເອກະລາດແກ່ລາວນັ້ນ ຍີ່ປຸ່ນ ໄດ້ປະກາດຍົກໃຫ້ຈຳເພາະອານາຈັກຫຼວງພຣະບາງ ສ່ວນແຂວງທາງ ພາກໃຕ້ ຄົງໃຫ້ເປັນໄປຕາມແບບຝຣັ່ງປົກຄອງມາແຕ່ກ່ອນ ແລ້ວເຈົ້າ ມະຫາອຸປະຣາດເພັດຊະຣາດ ກໍປະທັບຢູ່ທີ່ນະຄອນຫຼວງພຣະບາງທົ່ງ ປະກອບພາລະກິດ ດຳລົງຕຳແໜ່ງເປັນອັກຄະມະຫາເສນາບໍດີ ຫຼື ນາ ຍົກລັດຖະມົນຕີແຫ່ງລັດຖະບານ ຫຼວງພຣະບາງໄປຕາມເດີມ ພາຍໃຕ້ ການປົກຄອງຂອງຍີ່ປຸ່ນ ດັ່ງດຽວກັນກັບຝຣັ່ງປົກຄອງ.

ຄັນເຖິງເດືອນພຶດສະພາ ປີ 1945 ເມື່ອຍີ່ປຸ່ນຜ່າຍແພ້ສົງຄາມ ແລ້ວພຣະອົງຈົ່ງໄດ້ລົງມາປະທັບຢູ່ທີ່ວຽງຈັນແລະໄດ້ຮ່ວມມືກັບຄະນະ ລາວອິດສະລະ ທຳການກູ້ອິດສະລະພາບ ດັ່ງຈະກ່າວຕໍ່ໄປ.

ເຈົ້າເພັດຊະຣາດ ອົບພະຍົບເຂົ້າເມືອງໄທ

ດັ່ງໄດ້ກ່າວມາແລ້ວ ໃນບົດກ່ອນນັ້ນວ່າ ເມື່ອຄະນະລັດຖະບານ ລາວ ອິດສະລະເລັງເຫັນວ່າຈະຮັກສາເອກະລາດໄວ້ບໍ່ໄດ້ແລ້ວ ແລະກໍ ບໍ່ຍອມຈຳນົນຕໍ່ກອງທັບຂອງຝຣັ່ງ ຍັງຫວັງຈະຕໍ່ສູ້ກູ້ອິດສະລະພາບຢູ່ ຕໍ່ໄປຈົນໃຫ້ໄດ້ຜົນສົມປະສົງ ດັ່ງນັ້ນຄະນະລັດຖະບານຈົ່ງຕົກລົງຍ້າຍ ສຳນັກງານຂອງລັດຖະບານ ຂຶ້ນໄປຢູ່ນະຄອນຫຼວງພຣະບາງ ຕັ້ງແຕ່ ວັນທີ 2 ເມສາ ພ.ສ. 2489 ແລະໄດ້ທູນເຊີນສົມເດັດພຣະເຈົ້າສີສະ ຫວ່າງວົງ ຂຶ້ນຄອງລາຊະສົມບັດ ຕາມເດີມແຕ່ວັນທີ 15 ເມສາ ຕໍ່ ມາເຖິງວັນທີ 24 ເມສານະຄອນວຽງຈັນກໍໄດ້ເສຍໃຫ້ແກ່ກອງທັບຝຣັ່ງ ຄະນະລັດຖະມົນຕີລາງທ່ານ ແລະຂ້າລາຊະການທະຫານຕຳຫຼວດ ປະຊາຊົນພົນລະເມືອງສ່ວນຫຼາຍ ໄດ້ພາກັນອ້າມໄປປະເທດໄທຈົນ ເກືອບໝົດເມືອງ ເມື່ອຂ່າວແຂວງທາງໃຕ້ເສຍໃຫ້ແກ່ຝຣັ່ງໝົດແລ້ວ ແລະກອງທະຫານຝຣັ່ງ ພວມບຸກໄລ່ຕິດຕາມທະຫານລາວອິດສະລະ ຂຶ້ນໄປຢູ່ນັ້ນ ສົມເດັດເຈົ້າເພັດຊະຣາດຈົ່ງໄດ້ອົບພະຍົບອອກຈາກນະ ຄອນຫຼວງພຣະບາງ ແຕ່ໃນວັນທີ 3 ພຶດສະພາ ຄ.ສ. 1946 ພ້ອມດ້ວຍ ພະຍາຕິວົງແລະຜູ່ຕິດຕາມປະມານ 40 ຄົນ ໂດຍທາງບົກ ຂ້າມພູເຂົາ ເລົາກາພັກນອນຮັ້ງແຮມໄປຕາມບ້ານຕ່າງໆ ລາງວັນກໍພັກນອນຢູ່ ຕາມປ່າຕາມພູຈົນ ເຖິງວັນທີ 13 ພຶດສະພາຈົ່ງພົ້ນເຂດພຣະລາຊະອາ

ນາຈັກຫຼວງພຣະບາງ ໄປເຖິງອຳເພີໄຊຍະບູຣີອັນເປັນດິນແດນປະເທດ ໄທ. ໃນໄລຍະເດີນທາງ10 ວັນນີ້ ຝຣັ່ງໄດ້ເອົາເຮືອບິນໆນຳຊອກຫາ ພຣະອົງຫຼາຍຫຼົບຫຼາຍຖ້ຽວ ເມື່ອພັກເຊົາຢູ່ທີ່ອຳເພີໄຊຍະບູຣີນັ້ນໄດ້ ພັກຢູ່ສະໂມສອນ ຂ້າລາຊະການ ນາຍຕຳຫຼວດໄທໄດ້ມາທຳການສອບ ສວນຈົດບັນທຶກໄວ້. ໃນເວລາພັກຢູ່ທີ່ນັ້ນເອງ ເຈົ້າບຸນຍະວັດ ແລະນາຍ ພົນອ້ວນ (ເວລານັ້ນເປັນພຽງ ນາຍຮ້ອຍຕີ) ໄດ້ໄປເຖິງ ວັນທີ 16 ພຶດສະ ພາ ອອກຈາກອຳເພີໄຊຍະບູຣີ ເດີນທາງບຶກຮົ້ງແຮມໄປຕາມປ່າຕາມ ດົງ ລາງມື້ພັກນອນວັດ ລາງມື້ກໍນອນປ່າ, ເຖິງວັນທີ 20 ໄປພັກ ນອນຢູ່ປ່າ ເວລາຂ້ອນແຈ້ງ ເສືອໂຄດໃສ່ທິດມ້າວ ທີ່ນອນຢູ່ໃນມຸ້ງ ແຕ່ບໍ່ເປັນອັນຕະລາຍ, ວັນທີ 23 ໄດ້ໄປເຖິງປາກລາຍ ຢູ່ທີ່ນີ້ ຂ້າຫຼວງ ໄທຊື່ ຫຼວງນະເຣນ ໄດ້ມາຮັບຕ້ອນແລະຈັດບ່ອນພັກໃຫ້, ວັນທີ 26 ພຶດສະພາ ອອກຈາກປາກລາຍ ພັກແຮມໄປຕາມບ້ານຕ່າງໆ ຈົນເຖິງ ວັນທີ 12 ມິຖຸນາຈຶ່ງໄປເຖິງອຳເພີແສນຕໍ ຂຸນລາດມັງຄະລາ ອະນຸຮັກ ນາຍອຳເພີ ໄດ້ທຳການຮັບຕ້ອນເປັນຢ່າງດີ, ວັນທີ 15 ມິຖຸນາ ອອກ ຈາກອຳເພີແສນຕໍ ໄປເຖິງບ້ານສິບນ້ຳປາດຈຶ່ງໄດ້ຂີ່ເຮືອຫາງຍາວ ລ່ອງໄປຕາມລຳນ້ຳປາດຈົນເຖິງ ວັນທີ 17 ຈຶ່ງໄປເຖິງຈັງຫວັດອຸດຕຣະ ດິດ ແລ້ວໄປພັກເຊົາຢູ່ສະໂມສອນຂ້າລາຊະການ ເຊິ່ງຢູ່ຫ່າງຈາກຫົວ ເມືອງອອກໄປເຖິງ 2 ກິໂລແມັດ ເວລາພັກຢູ່ຈັງຫວັດ ອຸດຕຣະດິດນີ້ ພຣະອົງໄດ້ພົບກັບຫຼວງຊະເວງ ສັກສົງຄາມ ລັດຖະມົນຕີກະຊວງມະ ຫາດໄທແຫ່ງລາຊະອານາຈັກໄທ ແລະພຣະອົງໄດ້ຢືມເງິນ 600 ບາດ ຈາກຂ້າຫຼວງອຸດຕຣະດິດເພື່ອເດີນທາງໄປກຸງເທບ ເພາະເວລານັ້ນ ເງິນຄຳທີ່ມີ ຕິດຕົວໄປໄດ້ໝົດແລ້ວ ແມ່ນແຕ່ເຄື່ອງນຸ່ງຫົ່ມກໍພຽງ 2 ຊຸດ ອັນເປັນເຄື່ອງນຸ່ງ ເດີນປ່າທ່ໍນັ້ນ ເວລາພັກຢູ່ທີ່ນີ້ ເຈົ້າສົມສະໝົດ ຈຶ່ງໄດ້


ນຳເອົາເຄື່ອງນຸ່ງໄປໃຫ້ຫຼາຍຊຸດ ຈາກຈັງຫວັດອຸດຕຣະດິດເດີນທາງໄປ ເຖິງຈັງຫວັດພິດສະນຸໂລກ ໄດ້ປະທັບເຊົ້າຢູ່ເຮືອນ ນາຍພົນສູດ ສຸຄົນ ຂ້າຫຼວງຈັງຫວັດພິດສະນຸໂລກ ເຊິ່ງເປັນຄົນຄຸ້ນເຄີຍກັນມາແຕ່ກ່ອນ ຈາກນັ້ນຈຶ່ງໄດ້ເດີນທາງເຂົ້າໄປກຸງເທບແລະຫຼວງຊະເວງສັກສິງຄາມ ລັດຖະມົນຕີກະຊວງມະຫາດໄທ ໄດ້ເປັນຜູ້ເອື້ອເຟື້ອ ຈັດຫາບ່ອນພັກເຊົ້າ ໃຫ້ ໂດຍໄດ້ມອບໃຫ້ໜ່ອມອະພິນພອນ ແມ່ໜ້າຍເປັນ ຜູ້ແລ່ນເຕັ້ນ ເບິ່ງ ແຍງບ່ອນຢູ່ບ່ອນເຊົ້າໃຫ້ ຕໍ່ມາພຣະອົງກໍໄດ້ອະພິເສກສົມລົດກັບໜ່ອມ ອະພິນພອນ ຕາມແບບຢ່າງຂອງຄັນທັບພະວິວາຫະ ເພາະຄວາມຢູ່ ໃກ້ ແລະສະໜິດສະໜົມກັນນັ້ນເອງ.

ເຈົ້າເພັດຊະຣາດ ໄດ້ສະເດັດພັດພາກຈາກຜືນແຜ່ນດິນລາວອັນ ເປັນທີ່ຮັກແລະຫວງແຫນຂອງພຣະອົງ ໄປປະທັບຢູ່ປະເທດໄທໃນຖານະ ບຸກຄົນຜູ້ລີ້ໄພທາງການເມືອງ ພ້ອມດ້ວຍຄະນະລັດຖະບານລາວອິດ ສະຣະ ແລະປະຊາຊົນພົນລະເມືອງລາວຜູ້ຮັກຫອມອິດສະລະພາບຫຼາຍ ພັນຄົນ ເປັນເວລາເທິງນານ ເຖິງ 11 ປີ.

ໃນຂະນະທີ່ຄະນະລາວອິດສະລະ ຈັດຕັ້ງລັດຖະບານລາວອິດສະ ຣະ ແລະຕໍ່ຕ້ານກັບຝຣັ່ງຢູ່ທີ່ນະຄອນວຽງຈັນ ເມື່ອວັນທີ 12 ຕຸລາ ຄ.ສ. 1945 ນັ້ນ ເຈົ້າມະຫາອຸປະຣາດເພັດຊະຣາດ ພຣະອົງບໍ່ໄດ້ມີຕຳແໜ່ງ ບັນຊາການໃນຄະນະລັດຖະບານແຕ່ຢ່າງໃດເລີຍ ແຕ່ຫາກຄະນະລັດ ຖະບານລາວອິດສະລະ ພ້ອມດ້ວຍປະຊາຊົນທົ່ວປະເທດໄດ້ຍົກຍ້ອງ ພຣະອົງຂຶ້ນໃຫ້ເປັນປະມຸກ ຫຼື ຫົວໜ້າຄະນະກູ້ຊາດໂດຍເຫດທີ່ພຣະອົງ ເປັນຕົ້ນເຄົ້າມາແຕ່ດັ້ງເດີມເຖິງແມ່ນພຣະອົງ ໄດ້ປະກາດວ່າ "ບໍ່ຂໍກ່ຽວ

ຂ້ອງກັບວຽກບ້ານການເມືອງອີກຕໍ່ໄປ ໃນເມື່ອພຣະອົງຖືກສັ່ງປົດອອກ ຈາກຕຳແໜ່ງມະຫາອຸປະຣາດແຫ່ງລາຊະອານາຈັກ ຫຼວງພຣະບາງ ໂດຍພຣະບໍຣົມລາຊະໂອງການຂອງ ສົມເດັດພຣະເຈົ້າສຣິສະຫວ່າງ ວົງ ໃນຂໍ້ຫາວ່າພຣະອົງທ່ານກະທຳຜິດຕໍ່ພຣະລາຊະອາຍາ ເລື່ອງປະ ກາດໂຮມແຜ່ນດິນລາວເຂົ້າເປັນອັນໜຶ່ງອັນດຽວກັນ ດັ່ງກ່າວມາແລ້ວ ແຕ່ຫຼັງນັ້ນກໍຕາມ ແຕ່ປະຊາຊົນພົນລະເມືອງທັງຫຼາຍທົ່ວປະເທດ ມີ ຄວາມເຄົາຣົບນັບຖືຮັກແພງ ແລະເຊື່ອຟັງພຣະອົງເປັນຊີວິດຈິດໃຈ ດັ່ງ ນັ້ນພຣະອົງຈຶ່ງຈຳຕ້ອງໄດ້ຊັດເຊພະເນຈອນ ໜີຈາກປະເທດໄປ ພ້ອມ ກັບຄະນະລັດຖະບານລາວອິດສະລະ ແລະເມື່ອພຣະອົງໄດ້ໄປປະທັບຢູ່ ປະເທດໄທດັ່ງນີ້ແລ້ວ ຄະນະລັດຖະບານລາວອິດສະລະ ໂດຍແມ່ນພະ ຍາຄຳມ້າວເປັນນາຍຍົກລັດຖະມົນຕີນັ້ນ ຈຶ່ງໄດ້ປະຊຸມກັນປັບປຸງຄະນະ ລັດຖະມົນຕີໃໝ່ໃນການປັບປຸງນີ້ ຄະນະລັດຖະບານລາວອິດສະລະໄດ້ ທູນເຊີນ ຂໍໃຫ້ພຣະອົງ ເປັນປະມຸກຂອງຄະນະໃນການກູ້ຊາດເປັນທາງ ການຢ່າງແທ້ຈິງ ຕັ້ງແຕ່ວັນທີ 1 ທັນວາ ປີ 1946 ເປັນຕົ້ນມາ ສະນັ້ນ ເມື່ອພຣະອົງໄດ້ຮັບເປັນປະມຸກ ຢ່າງແທ້ຈິງຕາມທາງການຂອງຄະນະ ລັດຖະບານລາວອິດສະລະແລ້ວ ພຣະອົງໄດ້ດຳເນີນການຕໍ່ສູ້ກູ້ອິດສະ ລະພາບຂອງລາວມາເປັນລຳດັບ ໂດຍຈັດຕັ້ງໃຫ້ເຈົ້າສຸພານຸວົງເປັນຜູ່ ບັນຊາການທະຫານສູງສຸດ ແລະຈັດສິ່ງທະຫານເປັນກອງຫຼອນຂ້າມ ມາປະຕິບັດການຮົບກວນຝຣັ່ງຢູ່ຕະຫຼອດມາ ແລະໃນລະຫວ່າງນີ້ ພຣະ ອົງໄດ້ມີອາດຍາໃຫ້ສະເດັດເຈົ້າສຸວັນນະພູມາ ໄປຕິດຕໍ່ຂໍຄວາມຊ່ວຍ ເຫຼືອຈາກທ່ານສະແຕນຕັນ ເອກອັກຄະລັດຖະທູດອາເມຣິກາປະຈຳປະ ເທດໄທ ຂໍໃຫ້ເປັນຜູ່ໂອ້ລົມປະຕິໂລມໃຫ້ຝຣັ່ງຍິນຍອມຄືນເອກະລາດໃຫ້ ແກ່ຊາດລາວ ແຕ່ກໍຍັງບໍ່ໄດ້ຜົນ ຕໍ່ມາທ່ານໂດໂນແວນ ໄດ້ມາເປັນເອກ

ອັກຄະລັດຖະທູດ ໃນປະເທດໄທ ພຣະອົງກໍໃຫ້ເຈົ້າສຸພານຸວົງໄປຕິດຕໍ່ອີກ ກໍເຫັນວ່າມີທາງພໍຈະເຈລະຈາກັນໄດ້ ຄັນຕໍ່ມາລັດຖະບານໄທຂອງ ຫຼວງທຳຣົງນາວາສະຫວັດ ຖືກຍຸບແລະຫຼວງພິບູນສົງຄາມ ເຂົ້າມາ ແທນ ສະຖານະການທາງປະເທດໄທກໍປ່ຽນແປງໄປ. ເຖິງປີ ຄ.ສ. 1947 ລັດຖະບານຝຣັ່ງໄດ້ຍິນຍອມໃຫ້ປະເທດລາວເປັນເອກະລາດຢູ່ໃນເຄືອ ສະຫະພັນຝຣັ່ງ ຕາມຄວາມຮ້ອງຂໍຂອງ ສົມເດັດພຣະເຈົ້າ ສີສະຫວ່າງ ວົງ ແຫ່ງນະຄອນຫຼວງພຣະບາງ ໂດຍມີເຈົ້າບຸນອຸ້ມເປັນນາຍົກລັດ ຖະມົນຕີ, ລັດຖະບານໄທ ແລະອາເມຣິກາໄດ້ຮັບຮອງລັດຖະບານ ຂອງເຈົ້າບຸນອຸ້ມ ສະນັ້ນລັດຖະບານລາວອິດສະລະ ອັນມີພະຍາຄໍາມ້າວ ເປັນ ນາຍົກລັດຖະມົນຕີພ້ອມດ້ວຍສະເດັດເຈົ້າສຸວັນນະພູມມາ ແລະ ທ້າວກະຕ່າຍ ຈຶ່ງໄດ້ທຳການຕິດຕໍ່ກັບລັດຖະບານຝຣັ່ງ ຂໍກັບຄືນມາ ປະເທດລາວ ໂດຍເຫັນວ່າ ປະເທດຝຣັ່ງ ໃຫ້ປະເທດລາວເປັນເອກະລາດ ແລ້ວ. ລັດຖະບານຝຣັ່ງກໍຍິນຍອມ ດັ່ງນັ້ນ ຄະນະລັດຖະບານລາວອິດ ສະຣະຈຶ່ງປະກາດຍຸບຕົວເອງ ເມື່ອເດືອນຕຸລາ 1949 ແລ້ວພາກັນກັບ ຄືນມາປະເທດລາວ ໃນການປະກາດຍຸບຕົວເອງ ແລະຂໍກັບຄືນມາ ປະເທດລາວຂອງຄະນະລັດຖະບານລາວອິດສະລະນີ້ ເຈົ້າເພັດຊະຣາດ ແລະເຈົ້າສຸພານຸວົງບໍ່ໄດ້ເຫັນດີນຳ ເພາະເຫັນວ່າເອກະລາດທີ່ຝຣັ່ງໃຫ້ ນັ້ນ ເປັນເອກະລາດທີ່ບໍ່ສົມບູນ ເນື່ອງຈາກວ່າໜ້າທີ່ການອັນສຳຄັນໆ ຄື ການເສດຖະກິດ ການທະຫານ ການຄ້າຕ່າງປະເທດເປັນຕົ້ນຍັງຢູ່ ໃນກຳມືຂອງຝຣັ່ງ ນອກຈາກນີ້ ໃນດ້ານການປົກຄອງພາຍໃນແຂວງ ທຸກແຂວງ ແລະເມືອງທຸກເມືອງ ຝຣັ່ງຍັງຕັ້ງທີ່ປຶກສາ ເຊິ່ງແທ້ຈິງ ແລ້ວເປັນຜູ່ມີອຳນາດເໜືອເຈົ້າແຂວງເຈົ້າເມືອງ ໄວ້ທຸກແຂວງແລະ ທຸກເມືອງ ປະກອບກັບເວລານັ້ນ ປະເທດໄທ ອັນເປັນບ່ອນທີ່ຄະນະ


ເສັ້ນທາງ ອົບພະຍົບ ເຂົ້າ ສະຫຍາມ
ແຕ່ເດືອນ ພຶດສະພາ - ມິຖຸນາ 1946
ຈີນ
ນ້ຳຂອງ
ນ້ຳຂອງ
ຫລວງພະບາງ
ຫວຽດນາມ
ນ່ານ
ໄຊຍະບູຣີ
ລາວ
ປາກລາຍ
ວຽງຈັນ
ຈ. ອຸຕຣະດິດ
ສະຫຍາມ
(ປະເທດໄທ)
ຈ. ພິດສະນຸໂລກ
ກຸງເທບ
ຂະເໝນ

ລາວອິດສະລະໄດ້ພັກພາອາໄສທຳການກູ້ຊາດຕໍ່ຕ້ານຝຣັ່ງໄດ້ປ່ຽນລັດ ຖະບານໃໝ່ ໂດຍແມ່ນຈອມພົນ ປ.ພິບູນສົງຄາມເປັນນາຍົກລັດຖະມົນຕີ ລັດຖະບານໃໝ່ຂອງໄທໄດ້ຫັນໜ້າເຂົ້າຫາ ແລະດີກັບລັດຖະບານຝຣັ່ງ ຕາມນະໂຍບາຍການເມືອງທີ່ຈຳເປັນໃນເວລານັ້ນ ລັດຖະບານໄທ ຈຶ່ງ ໃຫ້ຄວາມຄຸ້ມຄອງຄະນະລັດຖະບານລາວອິດສະລະບໍ່ໄດ້ເຕັມມື ສະນັ້ນ ເຈົ້າສຸພານຸວົງ ກັບຄະນະທະຫານອີກສ່ວນໜຶ່ງ ເຊິ່ງບໍ່ເຫັນດີຕາມແນວ ນະໂຍບາຍຂອງຄະນະລັດຖະບານລາວອິດສະລະ ຈຶ່ງໄດ້ພາທະຫານ ຂ້າມຄືນມາ ແລ້ວໜີເຂົ້າປ່າຈັດຕັ້ງເປັນກອງຫຼອນຮ່ວມມືກັບທ້ອງ ນາມເໜືອ ຕໍ່ສູ້ຝຣັ່ງຕໍ່ໆມາ.

ເມື່ອເຫດການເປັນດັ່ງນີ້ ເຈົ້າເພັດຊະຣາດ ຜູ່ເປັນປະມຸກຂອງ ຄະນະຈຶ່ງບໍ່ຮູ້ຈະເຮັດແນວໃດບໍ່ຊ່າງຈະຕັດສິນໃຈພ້ອມຝ່າຍໃດ ເພາະ ເຈົ້າສຸວັນນະພູມາ ພຣະອະນຸຊາອົງທີໜຶ່ງເຂົ້າກັບຝຣັ່ງ ສ່ວນເຈົ້າສຸພາ ນຸວົງ ພຣະອະນຸຊາ ອົງທີສອງ ເຂົ້າກັບທ້ອງນາມເໜືອ ສະນັ້ນພຣະອົງ ຈຶ່ງຕັ້ງຕົວເປັນກາງ ປະທັບຢູ່ປະເທດໄທຕໍ່ມາ ປະກອບກັບເວລານັ້ນ ພຣະອົງກໍບໍ່ສະບາຍເປັນພະຍາດກະເພາະອາຫານຈຳເປັນຕ້ອງໄດ້ຜ່າ ຕັດ ພຣະອົງຈຶ່ງໄດ້ວາງມືຈາກການເມືອງ ອີກຄັ້ງໜຶ່ງ.

ໃນເວລາທີ່ພຣະອົງປະທັບຢູ່ປະເທດໄທ ນັບແຕ່ປີທີ່ໄດ້ວາງມື ຈາກການ ເມືອງມາຄື ແຕ່ປີ 1949 ເປັນຕົ້ນມາ ແລະເມື່ອພຣະອົງຫາຍ ຈາກພະຍາດແລ້ວ ພຣະອົງຈຶ່ງໄດ້ຫັນໜ້າເຂົ້າປ່າລະເມີ້ອກັບບັນດາ ເຈົ້ານາຍໄທແລະຂ້າລາຊະການໄທ ຜູ່ມີນິໄສມັກການກິລາລະເມີ້ອຄື ກັນ ຈົນເປັນທີ່ຮູ້ຈັກຄຸ້ນເຄີຍ ແລະຮັກແພງນຳໝູ່ເຈົ້ານາຍໄທເປັນອັນ ມາກ ນອກຈາກການລະເມີ້ອແລ້ວ ໃນເວລາຫວ່າງ ພຣະອົງກໍໃຊ້ເວລາ ຄົ້ນຄວ້າຈັດແຕ່ງຕຳຣາໂຫຣາສາດລາວຂຶ້ນ ຈົນເປັນຜົນສຳເລັດ ດັ່ງໄດ້

ກ່າວມາແລ້ວແຕ່ຫົນຫຼັງ ນອກຈາກຕຳຣາໂທຣາສາດ ດັ່ງກ່າວ ແລ້ວ ອາໄສຄວາມຊຳນິຊຳນານຂອງພຣະອົງ ໃນການລະເນື້ອ ພຣະອົງຈຶ່ງ ໄດ້ປະພັນໜັງສືຂຶ້ນເຫຼັ້ມໜຶ່ງຮຽກວ່າ: "ອາວຸດປືນ ແລະ ກິລາລະເນື້ອ" ອັນເປັນ ໜັງສືສຳຄັນອີກເຫຼັ້ມໜຶ່ງ ເພາະໃນໜັງສືນີ້ພຣະອົງໄດ້ກ່າວປະ ຫວັດຄວາມເປັນມາຂອງປືນຕ່າງໆ ລັກສະນະຂອງປືນລະເນື້ອ ທີ່ໄດ້ ຜົນດີ ການລະເນື້ອດ້ວຍວິທີຕ່າງໆ ຕະຫຼອດຈົນອຸປະນິໄສຂອງສັດ ຖິ່ນ ທີ່ຢູ່ຂອງສັດ ແລະປະເພດສັດຕ່າງໆ ນັບແຕ່ຊ້າງ ແຮດ ເສືອ ເປັນຕົ້ນ ອັນເປັນຄວາມຮູ້ປະເພດໜຶ່ງທີ່ຄວນຈະສຶກສາເປັນຢ່າງຍິ່ງດ້ວຍ.

ເຈົ້າເພັດຊະຣາດ ສະເດັດກັບຄືນປະເທດລາວ

ຝ່າຍຄະນະລັດຖະບານລາວອິດສະລະ ອັນມີພະຍາຄຳມ້າວເປັນ ນາຍົກ ພ້ອມດ້ວຍບຸກຄົນສຳຄັນໃນຄະນະ ອັນມີສະເດັດເຈົ້າສຸວັນນະພູມ ມາແລະທ້າວກະຕ່າຍເປັນຕົ້ນ ເມື່ອໄດ້ປະກາດຍຸບຕົວເອງແລະກັບຄືນ ມາປະເທດລາວແລ້ວ ກໍໄດ້ເຂົ້າຮ່ວມມືກັບລັດຖະບານລາວ ຂອງສົມ ເດັດພຣະເຈົ້າສີສະຫວ່າງວົງ ໂດຍໄດ້ຮັບຕຳແໜ່ງເປັນລັດຖະມົນຕີໃນ ກະຊວງຕ່າງໆ ຈົນໃນລາງສະໄໝ ກໍໄດ້ຮັບແຕ່ງຕັ້ງເປັນນາຍົກລັດຖະ ມົນຕີຜັດປ່ຽນກັນມາ ຄັນມາເຖິງ ປີ ຄ.ສ. 1956 (ພ.ສ.2499) ສະເດັດ ເຈົ້າສຸວັນນະພູມາ ໄດ້ຂຶ້ນດຳລົງຕຳແໜ່ງເປັນນາຍົກລັດຖະມຸນຕີແລະ ໃນເວລານັ້ນລັດຖະບານຝຣັ່ງ ໄດ້ປະວາງໃຫ້ປະເທດລາວເປັນເອກະ ຣາດຢ່າງສົມບູນໃນທຸກດ້ານ ພ້ອມທັງປະເທດລາວກໍໄດ້ເຂົ້າເປັນສະ ມາຊິກຂອງອົງການສະຫະປະຊາຊາດແລ້ວ ມີຫຼາຍປະເທດໃນໂລກໄດ້ ຮັບຮອງຄວາມເປັນເອກະລາດຂອງລາວຢ່າງສົມບູນ ປະກອບກັບ



ການປົກຄອງພາຍໃນຂອງປະເທດ ໃນເວລານັ້ນ ກໍເກີດຄວາມອຸຍະລຸກ ອຸກເອົ້າປັ່ນປ່ວນຮ່ວນເຮເປັນອັນມາກ ດ້ານພາຍນອກ ເຈົ້າສຸພານຸວົງ ໂດຍການສະໜັບສະໜູນຂອງທອຽດນາມເໜືອສາມາດບຸກຍຶດເອົາ ດິນແດນປະເທດລາວໄດ້ຫຼາຍບ່ອນ ຈົນທະຫານຂອງລັດຖະບານຕ້ອງ ໄດ້ຖອຍຫຼີ້ແຕກທະລາຍໄປຫຼາຍຈຸດ ແລະເວລານັ້ນສຽງປະຊາຊົນພົນ ລະເມືອງທັ້ງຫຼາຍຜູ່ມັກສັນຕິ ທັ້ງມີຄວາມເຄົາຣົບຮັກພັກດີຕໍ່ ເຈົ້າເພັດ ຊະຣາດ ກໍພາກັນຈົ່ມຊັບໆແຊັບໆໄປທຸກຈອກທຸກແຈວ່າ ຄວນຈະໄປອັນ ເຊີນເຈົ້າເພັດຊະຣາດ ໃຫ້ກັບຄືນມາລະງັບຄວາມອຸ່ນອາຍ ບ້ານເມືອງ ຈົ່ງຈະສະຫງົບຢູ່ເຢັນເປັນສຸກ ເພາະຄົນອື່ນໆ ນອກຈາກເຈົ້າເພັດຊະ ຣາດ ໄປແລ້ວຄົງບໍ່ມີຜູ່ໃດສາມາດລະງັບໄດ້.

ສະນັ້ນ ໃນປີ ຄ.ສ.1956 (ພ.ສ. 2499) ລັດຖະບານແຫ່ງລາຊະ ອານາຈັກລາວ ອັນມີສະເດັດເຈົ້າສຸວັນນະພູມາເປັນນາຍົກລັດຖະມົນຕີ ຈົ່ງໄດ້ສົ່ງບຸກຄົນສຳຄັນຄື ທ່ານພະຍາຄຳມ້າວ ກັບເຈົ້າພະຍາເມືອງ ແສນໄປທູນເຊີນເຈົ້າເພັດຊະຣາດໃຫ້ສະເດັດກັບຄືນປະເທດລາວ ເພື່ອ ມາຊ່ອຍແກ້ໄຂບັນຫາຫຍຸ້ງຍາກຂອງປະເທດຊາດຕໍ່ໄປ ແຕ່ພຣະອົງ ໄດ້ປະຕິເສດບໍ່ຍອມກັບຄືນໃນເວລານັ້ນ ເຫດຜົນທີ່ພຣະອົງປະຕິເສດບໍ່ ຍອມກັບຄືນນັ້ນ ເນື່ອງຈາກພຣະອົງເຫັນວ່າການທີ່ ພະຍາຄຳມ້າວ ກັບເຈົ້າພະຍາເມືອງແສນໄປທູນເຊີນນັ້ນ ເປັນພຽງຄວາມເຫັນຂອງ ບຸກຄົນໃນຄະນະລັດຖະບານທ່ໍນັ້ນ ບໍ່ແມ່ນຄວາມເຫັນຂອງປະຊາຊົນ ທົ່ວໄປ.

ຄັນຕໍ່ມາທ່ານບົງສຸວັນນະວົງ ຜູ່ແທນລາສະດອນແຂວງວຽງຈັນ ຈົ່ງໄດ້ ສະເໜີເລື່ອງທີ່ຈະເຊີນເຈົ້າເພັດຊະຣາດ ກັບຄືນມາປະເທດລາວ ເຂົ້າສູ່ສະພາ ຂໍໃຫ້ສະພາລົງມະຕິ ເມື່ອວັນທີ 11 ກໍລະກະດາ ພ.ສ.

2499. ສະພາລົງມະຕິເຫັນຊອບດ້ວຍ ແລະຕັ້ງກຳມະການຂອງສະພາ ຜູ່ແທນລາສະດອນຂຶ້ນຄະນະໜຶ່ງ ມີ 9 ຄົນ ໃຫ້ໄປເຊີນເຈົ້າເພັດຊະ ຣາດ ກຳມະການ 9 ຄົນ ນັ້ນຄື:

1. ພະຍາບໍລິຫານສຶກສາ (ບົງສຸວັນນະວົງ)
2. ພະຍາປັດຈະນຶກວິຈິດ (ປາວ ວັນທານຸວົງ)
3. ຜູ່ແທນ ຈຳປາ ພົມມະຈັນ
4. ຜູ່ແທນ ບຸນທົງ ວໍຣະວົງ
5. ຜູ່ແທນ ອ້ອນ ບຸນທຳ
6. ຜູ່ແທນ ຄຳເພົ້າ ບຸບຜາ
7. ຜູ່ແທນ ມະຫາກຸ ສຸວັນນະເມທີ
8. ຜູ່ແທນ ອອນ ວິໄນຍາ
9. ຜູ່ແທນ ສຸຄຳທັດ ຈຸລາມະນີ.

ຝ່າຍລັດຖະບານ ກໍໄດ້ຈັດສົ່ງບຸກຄົນໃນຄະນະລັດຖະບານ 4 ທ່ານ ໄປເຊີນຄື:

1. ທ່ານ ໂງ່ນ ຊະນະນິກອນ
2. ເຈົ້າສົມສະໜິດ ໜໍ່ຄຳ
3. ທ່ານ ທົງ ສຸດທິວົງນໍຣາດ
4. ທ່ານ ພະຍາຄຳມ້າວ.

ນອກຈາກນີ້ ກໍມີສານຂອງປະທານສະພາ ສານຂອງສົມເດັດ ພຣະສັງຄະນາຍົກ (ພຣະຄູຄູນ ມະນີວົງ) ຖວາຍທູນເຊີນໃຫ້ກັບຄືນປະ ເທດອີກ.

ຄະນະຜູ່ແທນລາສະດອນ ແລະຄະນະຜູ່ແທນລັດຖະບານໄປເຖິງ ກຸງເທບ ເມື່ອວັນທີ 15 ກໍລະກົດ ພ.ສ. 2499 ແລ້ວ ພະນະທ່ານ ໂງ່ນ ຊະນະນິກອນ ຜູ່ແທນຝ່າຍລັດຖະບານ ເຊິ່ງເປັນຫົວໜ້າຄະນະທັງ ສອງຄະນະຈຶ່ງໄດ້ເຂົ້າຖວາຍສານ ແລະທູນວ່າ.

"ພວກຂ້າພຣະບາດທັງສອງຄະນະນີ້ ເປັນຕົວແທນຂອງລັດຖະ ບານ ແລະປະຊາຊົນ ຂໍຂາບທູນເຊີນພຣະອົງກັບຄືນສູ່ປະເທດລາວດັ່ງ ເດີມດ້ວຍວ່າ ຕາມພຣະປະສົງຂອງພຣະອົງ ແລະປະຊາຊົນປາຖະໜາ ຈະໃຫ້ປະເທດລາວ ເປັນເອກະລາດແລະເອກະພາບນັ້ນ ເວລານີ້ ກໍໄດ້ ຮັບຜົນບັນລຸເຖິງຄວາມສຳເລັດທຸກປະການແລ້ວ ຄື:

1. ເອກະພາບ: ປະເທດລາວໄດ້ທ້ອນໂຮມເປັນພຣະລາຊະອານາ ຈັກອັນໜຶ່ງອັນດຽວກັນ ມີພຣະບາດສົມເດັດພຣະເຈົ້າມະຫາຊີວິດເປັນ ປະມຸກສູງສຸດ.

2. ເອກະລາດ: ທຸກປະເທດກໍໄດ້ຮັບຮູ້ປະເທດລາວວ່າເປັນປະ ເທດເອກະລາດໂດຍສົມບູນ ແລະໄດ້ຮັບເອົາເຂົ້າເປັນສະມາຊິກສະຫະ ປະຊາຊາດແລ້ວ ເມື່ອບໍ່ເທົ່ງມານີ້ລັດຖະບານປັກກິ່ງ ກໍໄດ້ສົ່ງສານມາ ເຊີນລັດຖະບານລາວ ໃຫ້ໄປຢາມເປັນທາງສຳພັນທະໄມຕີລະຫວ່າງ ເພື່ອນບ້ານໃກ້ຄຽງກັນ ແລະລັດຖະບານກໍໄດ້ຕອບໄປແລ້ວວ່າຈະໄປ ຕາມຄຳເຊີນ ເຊິ່ງຈະໄດ້ກຽມການໄປໃນໄວໆນີ້.

ນອກຈາກນີ້ ລັດຖະບານໂຊວຽດກໍໄດ້ສົ່ງສານມາຮັບຮອງຄວາມ ເປັນເອກະລາດ ແລະເອກະພາບຂອງປະເທດລາວ ຄືກັນກັບນານາ ປະເທດທັງຫຼາຍທີ່ໄດ້ຮັບຮອງມາແລ້ວ ທັງຂໍຜູກສຳພັນທາງການທູດ ວັດທະນະທຳ ແລະການເສດຖະກິດອີກດ້ວຍ.

ສ່ວນຖານະທາງການເມືອງພາຍໃນປະເທດນັ້ນ ກໍມີຄວາມສະ

ຫງົບດີຢູ່ ທີ່ມີຄວາມຫຍຸ້ງຍາກຢູ່ລາງແຫ່ງກໍມີແຕ່ແຂວງຜົ້ງສາລີກັບ ແຂວງຊໍາເໜືອ ທ່ໍນັ້ນ ກ່ຽວກັບເລື່ອງນີ້ລັດຖະບານແຫ່ງລາຊະອານາ ຈັກ ກໍຈະໄດ້ເຈລະຈາກັບເຈົ້າສຸພານຸວົງ ໃນບ່ໍຊ້ານີ້ ເພ່ືອທໍາການຕົກລົງ ກັນໃນທາງສັນຕິວິທີ ໂດຍປະການທັງປວງ.

ດ້ວຍເຫດນີ້ ພວກຂ້າພຣະບາດທັງສອງຄະນະ ຈ່ຶງຂໍນ້ອມເກົ້າ ທູນເຝ້າ ພຣະບາດສະເດັດກັບຄືນປະເທດລາວ ເພ່ືອຕຸ້ມຫອມປະຊາຊົນ ພົນລະເມືອງລາວຕ່ໍໄປ.

ຄັນແລ້ວ ທ່ານບົງ ສຸວັນນະວົງ ຜູ້ແທນລາສະດອນ ຈ່ຶງໄດ້ຖວາຍ ເອກະສານຕ່າງໆ ຄ່ື:

1. ໜັງສືປະທານສະພາແຫ່ງຊາດ ແຕ່ງຕ້ັງຄະນະ
2. ສານຂອງພຣະຄູຄູນ ສັງຄະນາຍົກ ແຫ່ງລາຊະອານາຈັກລາວ
3. ສານຂອງປະທານສະພາຜູ້ແທນລາສະດອນ
4. ສານຂອງຄະນະຜູ້ແທນທ່ີມາເຊ່ີນ.

ເອກະສານຕ່າງໆເຫ່ົ່ານ້ີ ໄດ້ເອ້ົາອ່ານໃນທ່ີປະຊຸມຊ້ອງໜ້າຄະ ນະຜູ້ແທນແລ້ວເຈ້ົາເພັດຊະຣາດຈ່ຶງໄດ້ກ່າວຕອບຄະນະຜູ້ແທນໄປເຊ່ີນ ທັງສອງຄະນະ ມ້ີຂ້ໍຄວາມດັ່ງນ້ີ:

ຂ້າພະເຈ້ົາຂໍຂອບຄຸນຢ່າງລ້ົນເຫ່ືອ ຕ່ໍຄະນະຜູ້ແທນທັງສອງຄະ ນະທ່ີໄດ້ມາເຊ່ີນຂ້າພະເຈ້ົາໃຫ້ກັບຄືນສູ່ປະເທດລາວ ແລະຂໍສ່ົງຄວາມ ຂອບໃຈຂອງຂ້າພະເຈ້ົາໄປຍັງລັດຖະບານ ແລະຜູ່ແທນລາສະດອນທ່ີ ໄດ້ຮ່ວມເຫັນຊອບໃນການ ໃຫ້ມາເຊ່ີນຂ້າພະເຈ້ົາໃນໂອກາດນ້ີດ້ວຍ.

ການກູ້ເອກະລາດຂອງປະເທດລາວ ເປັນສ່ິງທ່ີຂ້າພະເຈ້ົາມ ີ ຄວາມຕ້ັງໃຈມາແຕ່ປ່າຍປ ີ 1913 ເຊ່ິງເປັນເວລາທ່ີຂ້າພະເຈ້ົາກັບມາ

ຈາກປະເທດຝຣັ່ງໃໝ່ໆບໍ່ແມ່ນວ່າ ຈະຕັ້ງປະສົງມາກູ້ເອກະລາດແຕ່ໃນ ປີ 1945 ນີ້ທໍ່ນັ້ນ ດັ່ງຂ້າພະເຈົ້າຈະເລົ່າເຫດການແຕ່ແຮກມາໃຫ້ພວກ ທ່ານໄດ້ຊາບໃນໂອກາດນີ້ ເພາະເປັນເລື່ອງທີ່ຂ້າພະເຈົ້າຍັງບໍ່ໄດ້ເປີດ ເຜີຍມາເລີຍຄືວ່າ ເມື່ອຂ້າພະເຈົ້າຮັບລາຊະການຢູ່ຫໍສະໝາມຫຼວງ ແຫ່ງລາຊະອານາຈັກຫຼວງພຣະບາງ ປີ1914 ນັ້ນ ເປັນປີແຮກ ທີ່ຝຣັ່ງ ຈັດຕັ້ງລະບຽບສຳຫຼັບຂ້າລາຊະການປະເທດລາວທັງໝົດ ນອກຈາກ ແຂວງຫຼວງພຣະບາງ ເຊິ່ງເປັນອານາຈັກຂອງພຣະເຈົ້າແຜ່ນດິນ. ລະບຽບດັ່ງກ່າວນັ້ນມີລັກສະນະສຳຄັນຢູ່ວ່າຂ້າລາຊະການເມືອງໃດ ກໍຕ້ອງເປັນ ຄົນທີ່ມີກຳເນີດຢູ່ເມືອງນັ້ນມາແຕ່ເດີມ ຈະຍ້າຍໄປປະຈຳຢູ່ ເມືອງອື່ນກັບຂ້າຫຼວງຝຣັ່ງປະຈຳແຂວງນັ້ນບໍ່ໄດ້.

ລະບຽບນີ້ ໄດ້ຈັດຂຶ້ນໂດຍຖືເອົາຕາມທຳນຽມການປົກຄອງຂອງ ເຮົາທີ່ໃຊ້ຢູ່ໃນເວລານັ້ນເປັນຫຼັກຄືປະຊາຊົນແຕ່ລະເມືອງເຂົ້າໃຈກັນວ່າ ປະເທດມາຕຸພູມຂອງຕົນ ມີອານາເຂດຈຳກັດຢູ່ຈຳເພາະເມືອງຂອງ ຕົນທໍ່ນັ້ນ ແລະຖືວ່າເມືອງອື່ນໆນັ້ນທໍ່ກັບເປັນປະເທດອື່ນໄປອັນນີ້ກໍຍ້ອນ ວ່າເມືອງອື່ນໆນອກຈາກແຂວງຫຼວງພຣະບາງແລ້ວ ເປັນເມືອງບໍ່ມີ ກະສັດປົກຄອງ ສະນັ້ນຕ່າງເມືອງຈຶ່ງຕ່າງຕັ້ງຕົນໄປເປັນອິດສະລະໄປ ຕາມລຳພັງ.

ເມື່ອເຖິງປີ 1917 ຜູ່ສຳເລັດລາຊະການຝຣັ່ງ ຊື່ກາດນິເຍ ໄດ້ໃຫ້ ທ່ານບັນເນມັງ ແກ້ໄຂລະບຽບຂ້າລາຊະການຝ່າຍປົກຄອງໃໝ່ແລະໄດ້ ຕັ້ງໃຫ້ຂ້າພະເຈົ້າເປັນທີ່ປຶກສາ ຂ້າພະເຈົ້າຈຶ່ງຖືໂອກາດໃຫ້ຫຍັບຍ້າຍ ຂ້າລາຊະການໃນແຕ່ລະແຂວງ ໄປປະຈຳຢູ່ຕາມເມືອງຕ່າງໆ ໃນ

ແຂວງອື່ນໆໄດ້ ທັງນີ້ໂດຍເອົາຕາມ ແບບຢ່າງແຂວງຫຼວງພຣະບາງ.

ການຫຍັບຍ້າຍແລະປ່ຽນແຂວງ ຂອງຂ້າລາຊະການແຕ່ລະ ເມືອງອອກໄປນອກຂອບເຂດເມືອງ ແລະແຂວງຂອງຕົນນັ້ນ ເປັນກ້າວ ໃໝ່ພາໃຫ້ຂ້າລາຊະການຝ່າຍປົກຄອງ ມີທູຕາກວ້າງຂວາງອອກໄປ ຫຼາຍ.

ເມື່ອໃຊ້ລະບຽບນີ້ໄດ້ 3 ປີ ຄື ເຖິງປີ 1920 ຂ້າພະເຈົ້າໄດ້ຂໍໃຫ້ ແກ້ໄຂອີກຄັ້ງໜຶ່ງ ເຊິ່ງມີລັກສະນະສຳຄັນຢູ່ວ່າ ລາຊະການມີອຳນາດ ຍ້າຍຂ້າລາຊະການປົກຄອງໃນເຂດແຂວງຂອງຕົນ ໄປປະຈຳຢູ່ໃນ ເຂດອື່ນ ຕາມຄວາມຕ້ອງການ ແລະໄດ້ຕັ້ງການສອບເສັງເອົາສະໝຽນ ຂຶ້ນຕະຫຼອດທົ່ວປະເທດ ແຕ່ສຳລັບລາຊະອານາຈັກຫຼວງພຣະບາງນັ້ນ ຄົງເປັນພຣະລາຊະໂອງການຂອງພຣະເຈົ້າແຜ່ນດິນຢູ່ຕາມເດີມ ແລະຂ້າລາຊະການທຸກຂັ້ນທຸກຜະແນກກໍໄດ້ປ່ຽນໜ້າທີ່ໄປຢູ່ທຸກແຂວງ ໂດຍບໍ່ເລືອກວ່າຈະເປັນລາວເໜືອລາວກາງ ຫຼືລາວໃຕ້ ເພື່ອໃຫ້ປະຊາ ຊົນຄົນລາວໄດ້ສັງຄົມຮູ້ຈັກຄຸ້ນເຄີຍກັນ ແລະມີຄວາມສາມັກຄີເປັນອັນ ໜຶ່ງອັນດຽວກັນ ແຕ່ເຖິງຢ່າງນັ້ນ ກໍຍັງມີຂ້າລາຊະການລາງຄົນທີ່ບໍ່ ເຫັນການໄກ ແລະ ບໍ່ເຂົ້າໃຈເຖິງຈຸດປະສົງຂອງຂ້າພະເຈົ້າ ເຂົ້າໃຈວ່າ ຂ້າພະເຈົ້າຄຽດຊັງຈຶ່ງໄດ້ຖືກຍ້າຍໄປໄກບ້ານເກີດເມືອງນອນຂອງ ຕົນ ແຕ່ຂ້າພະເຈົ້າກໍບໍ່ໄດ້ຫົວຊານຳຄວາມຕິຕຽນຂອງຂ້າລາຊະການ ເຫຼົ່ານັ້ນ.

ຕັ້ງແຕ່ນັ້ນເປັນຕົ້ນມາ ຄະນະຜູ່ປົກຄອງປະເທດໄດ້ຮູ້ຈັກກັນ ແລະ ສາມັກຄີ ກັນເປັນອັນດີຕະຫຼອດມາ ຕໍ່ມາເຖິງປີ 1928 ລັດຖະບານ

ຝຣັ່ງໄດ້ລົງມະຕິວ່າ ອານາເຂດປະເທດລາວທັງໝົດເປັນອານານິຄົມ ຂອງຝຣັ່ງ ແມ່ນແຕ່ອານາຈັກຫຼວງພຣະບາງກໍບໍ່ຍົກເວັ້ນ ໃນເລື່ອງນີ້ ຂ້າພະເຈົ້າຕໍ່ສູ້ຢ່າງສຸດຄວາມສາມາດ (ຄືບໍ່ຍິນຍອມໃຫ້ເອົາອານາຈັກ ຫຼວງພຣະບາງເປັນອານານິຄົມ) ລັດຖະບານ ຝຣັ່ງຈຶ່ງໄດ້ເລີກລົ້ມມະຕິ ນັ້ນເສຽ ແລະດ້ວຍເຫດນີ້ ສົມເດັດພຣະເຈົ້າແຜ່ນດິນ ຫຼວງພຣະບາງຈຶ່ງ ມີໂອກາດທວງທາວເອົາແຂວງຫົວພັນ (ຊຳເໜືອ) ເຊິ່ງຝຣັ່ງໄດ້ໂອນ ໃຫ້ແຄ້ວົນຕົ້ງແກ່ງແຕ່ປີ ຄ.ສ. 1895 ນັ້ນຄືນມາເປັນຂອງລາວ ແລະ ໄດ້ໂຮມ ເຂົ້າຢູ່ໃນອານາຈັກຫຼວງພຣະບາງ ເມື່ອປີ 1931 ຫຼື 1932 ນີ້ເອງ.

ເຖິງປີ ຄ.ສ. 1940 ເກີດກໍລະນີພິພາດລະຫວ່າງຝຣັ່ງກັບໄທເປັນ ຜົນໃຫ້ປະເທດລາວເສຽດິນແດນທີ່ຢູ່ຝັ່ງຂວາແມ່ນ້ຳຂອງ ໃຫ້ແກ່ໄທ ລັດຖະບານຝຣັ່ງເຫັນວ່າ ອານາຈັກຫຼວງພຣະບາງເສຽດິນແດນໄປ ດັ່ງນັ້ນເພື່ອບໍ່ໃຫ້ພຣະເຈົ້າສຣີສະຫວ່າງວົງເສຽພຣະໄທ ຈຶ່ງໄດ້ປຶກສາ ນຳຂ້າພະເຈົ້າວ່າຈະຍົກແຂວງຫົວຂອງແລະແຂວງພວນ ຖະຫວາຍ ພຣະອົງ ສ່ວນແຂວງວຽງຈັນລົງໄປ ຈະໃຫ້ຂ້າພະເຈົ້າປົກຄອງຕໍ່ໄປ ຕາມເດີມ ໂດຍໃຫ້ຂ້າພະເຈົ້າມີຕຳແໜ່ງເປັນວັງໜ້າ ຂ້າພະເຈົ້າບໍ່ເຫັນ ດີນຳ ຈຶ່ງຍອມໃຫ້ເອົາແຂວງວຽງຈັນເຂົ້າຢູ່ໃຕ້ພຣະລາຊະອຳນາດ ຂອງພຣະເຈົ້າແຜ່ນດິນຫຼວງພຣະບາງ ໂດຍຂ້າພຣະເຈົ້າເປັນອຸປະ ຣາດຂອງພຣະອົງ ການທີ່ຂ້າພະເຈົ້າເລືອກເອົາທາງນີ້ ກໍເພາະບໍ່ ຢາກຊ້ຳນະໂຍບາຍ ອັນຜິດພາດມາແລ້ວຂອງບັນພຣະບຸລຸດທີ່ໄດ້ແບ່ງ ປະເທດລ້ານຊ້າງຮິ່ມຂາວອອກເປັນ ລາຊະອານາຈັກຫຼວງພຣະບາງ ແລະລາຊະອານາຈັກວຽງຈັນ ແຕ່ປີ 1707 ອັນເປັນເຫດໃຫ້ປະເທດ ລາວເສຽເອກະລາດ ຕັ້ງແຕ່ນັ້ນມາເປັນເວລາເຫິງນານໄດ້ 133 ປີ

ມາແລ້ວ ເພາະຈະທຳໃຫ້ຊົ່ວລູກຊົ່ວຫຼານເປັນສັດຕູກັນຄືດັ່ງແຕ່ກ່ອນ. ສະນັ້ນນັບແຕ່ປີ 1940 ມາລາຊະອານາຈັກຫຼວງພຣະບາງຈຶ່ງມີ ຂອບເຂດເຖິງ 3 ແຂວງ ໃນໂອກາດດຽວກັນນັ້ນ ຂ້າພະເຈົ້າກໍຈັດໃຫ້ມີເຈົ້າແຂວງລາວຂຶ້ນ ສຳຫຼັບປົກຄອງເປັນຄູ່ກັນກັບຂ້າຫຼວງຝຣັ່ງປະຈຳອິນດູຈີນໂຮມມີ 4 ແຂວງ ຄື ແຂວງຄຳມ່ວນ ສະຫວັນນະເຂດ ສາຣະວັນ ແລະ ຈຳປາສັກ ແລະໄດ້ຮ້ອງຂໍຕໍ່ລັດຖະບານຝຣັ່ງ ໂຮມເອົາສີ່ແຂວງນີ້ເຂົ້າໄວ້ໃນອຳນາດ ຂອງອານາຈັກຫຼວງພຣະບາງ ເພື່ອໂຮມລາວທັງປະເທດໃຫ້ເປັນອັນໜຶ່ງອັນດຽວກັນ ຄືແຕ່ກ່ອນແຕ່ລັດຖະບານຝຣັ່ງກໍບໍ່ຍິນຍອມ ແຕ່ນັ້ນມາການຕໍ່ສູ້ເອົາເອກະລາດ ສຳຫຼັບປະເທດລາວແລະໂຮມປະເທດລາວເຂົ້າເປັນອັນໜຶ່ງອັນດຽວກັນ ກໍຍັງຝັງຢູ່ໃນຈິດໃຈຂອງຂ້າພະເຈົ້າຢ່າງໜັກແໜ້ນ. ໃນປີ 1941 ນັ້ນ ຝຣັ່ງໄດ້ທຳສັນຍາໄວ້ກັບພຣະເຈົ້າແຜ່ນດິນຫຼວງພຣະບາງວ່າ ຈະປ້ອງກັນອານາຈັກຫຼວງພຣະບາງ ບໍ່ໃຫ້ເປັນອັນຕະລາຍ.

ຄັນມາເຖິງເດືອນ ມີນາຄົມ ປີ 1945 ຍີ່ປຸ່ນໄດ້ເຂົ້າມາຍຶດເອົາປະເທດລາວແລະຂັບໄລ່ຝຣັ່ງອອກໄປ ຝຣັ່ງປ້ອງກັນລາຊະອານາຈັກຫຼວງພຣະບາງໄວ້ບໍ່ໄດ້ຕາມສັນຍາ ສົມເດັດພຣະເຈົ້າສຣິສະຫວ່າງວົງຈຶ່ງໄດ້ທົ່ງປະກາດໃຫ້ອານາຈັກຂອງພຣະອົງເປັນເອກະລາດ (ຢູ່ໃນວົງໄພບູນຂອງຍີ່ປຸ່ນ) ຕໍ່ມາເຖິງເດືອນສິງຫາປີດຽວກັນ ຍີ່ປຸ່ນເສຽໄຊໃນການສົງຄາມ ຝຣັ່ງຈຶ່ງກັບຄືນມາປົກຄອງປະເທດລາວຕາມເດີມອີກຂ້າພະເຈົ້າໃນຖານະເປັນນາຍົກລັດຖະມົນຕີແຫ່ງລາຊະອານາຈັກ ຫຼວງພຣະບາງ ບໍ່ຍອມປະຕິບັດຕາມຈົນກວ່າຈະມີສັນຍາສະບັບໃໝ່ກັບປະເທດຝຣັ່ງກ່ອນ ແລະໃນຂະນະດຽວກັນນີ້ ຂ້າພະເຈົ້າໄດ້ສົ່ງພະນະທ່ານໂງ່ນ

ຊະນະນິກອນ ເຊິ່ງນັ່ງຢູ່ທີ່ນີ້ໄປຕິດຕໍ່ກັບເຈົ້າແຂວງ ແລະຂ້າລາຊະການ ໃນ ແຂວງຄຳມ່ວນ ສະຫວັນນະເຂດ ສາຣະວັນ ແລະຈຳປາສັກ ໂດຍ ໃຫ້ຖາມປະຊາຊົນແຫ່ງແຂວງເຫຼົ່ານັ້ນວ່າ ຈະຍິນດີໂຮມເຂົ້າກັບລາຊະ ອານາຈັກຫຼວງພຣະບາງ ຫຼື ບໍ່ ແລະຂໍໃຫ້ເຈົ້າແຂວງໂທລະເລກຕອບ ມາໃຫ້ຂ້າພະເຈົ້າຊາບໂດຍດ່ວນ.

ເມື່ອໄດ້ຮັບຕອບວ່າ ທັງ 4 ແຂວງນັ້ນ ຍິນດີເຂົ້າຮ່ວມຢູ່ໃຕ້ມຸງ ກຸດຂອງພຣະເຈົ້າແຜ່ນດິນຫຼວງພຣະບາງແລ້ວ ຂ້າພະເຈົ້າກໍໄດ້ໂທ ຣະເລກຂຶ້ນຂາບທູນພຣະເຈົ້າແຜ່ນດິນ ຂໍໃຫ້ທ້ຽງອອກພຣະລາຊະໂອງ ການໃນເລື່ອງນີ້ (ວັນທີ 2 ກັນຍາ 1945).

ຄັນມາເຖິງວັນທີ 7 ກັນຍາ ກໍໄດ້ຮັບໂທລະເລກເປັນທາງການ ຈາກລັດຖະມົນຕີກະຊວງມະຫາດໄທ ບອກວ່າພຣະບາດສົມເດັດພຣະ ເຈົ້າມະຫາຊີວິດປະກາດວ່າ ລາຊະອານາຈັກຫຼວງພຣະບາງໄດ້ເຂົ້າ ໂຮມຢູ່ໃນຄວາມປົກຄອງຂອງຝຣັ່ງຕໍ່ໄປແລ້ວ ໂທລະເລກສະບັບນີ້ ຂ້າ ພະເຈົ້າໄດ້ເອົາເຊື່ອງໄວ້ເປັນຄວາມລັບຊົ່ວຄາວ ເພື່ອເວັ້ນຈາກການ ນອງເລືອດລະຫວ່າງປະຊາຊົນກັບພຣະກະສັດ ດ້ວຍການບໍ່ພໍໃຈທີ່ ພຣະກະສັດປະກາດຢູ່ໃນຄວາມປົກຄອງຂອງຝຣັ່ງອີກ ໂດຍບໍ່ຖືເອົາ ມະຕິຂອງປະຊາຊົນລາວທີ່ຕ້ອງການໃຫ້ເປັນເອກະລາດ ແລະໂຮມ ລາວໃຫ້ເປັນອັນໜຶ່ງອັນດຽວກັນ ໃນໂອກາດດຽວກັນນີ້ບັນດາຂ້າລາຊະ ການທີ່ມີພູມລຳເນົາຢູ່ໃນ 4 ແຂວງ ເຊິ່ງເຂົ້າມາຮັບລາຊະການຢູ່ໃນ ອຽງຈັນ ກໍໄດ້ພາກັນມາຮ້ອງຂໍຕໍ່ຂ້າພະເຈົ້າໃຫ້ຂ້າພຣະເຈົ້າຟ້າວຈັດ ການໃນເລື່ອງນີ້ ຄື ໃຫ້ໂຮມດິນລາວເຂົ້າເປັນອັນໜຶ່ງອັນດຽວກັນໂດຍ ດ່ວນ ເພາະວ່າເມື່ອຝຣັ່ງກັບຄືນມາປົກຄອງປະເທດລາວອີກ ເຂົາຈະຂັດ

ຂວາງໃນເລື່ອງນີ້ຕາມທີ່ເຄີຍໄດ້ຂັດຂວາງມາແລ້ວ ຂ້າພະເຈົ້າໄດ້ບອກ ວ່າລໍຄອຍຖ້າຟັງຄຳຕອບຂອງ ພຣະເຈົ້າແຜ່ນດິນ ຈົນເຖິງວັນທີ 15 ກັນຍາເສຽກ່ອນ ເມື່ອເລີຍກຳນົດນີ້ໄປແລ້ວ ຫາກບໍ່ໄດ້ຮັບຄຳຕອບໃນ ເລື່ອງນີ້ ຂ້າພະເຈົ້າກໍຈະປະກາດໂຮມ 4 ແຂວງນີ້ ເຂົ້າກັບ ອານາຈັກ ຫຼວງພຣະບາງ ໃນຖານະທີ່ຂ້າພະເຈົ້າເປັນມະຫາອຸປະຣາດ ແລະ ເປັນ ນາຍົກລັດຖະມົນຕີຂອງລັດຖະບານ.

ເມື່ອເຖິງວັນທີ 15 ເດືອນດຽວກັນນີ້ ບໍ່ເຫັນມີຄຳຕອບໃນເລື່ອງນີ້ ຂ້າພະເຈົ້າຈຶ່ງປະກາດເປັນທາງການ ໂຮມປະເທດລາວທັງໝົດ ເປັນ ອັນໜຶ່ງ ອັນດຽວກັນ ຕາມທີ່ໄດ້ໃຫ້ຄຳໝັ້ນສັນຍາໄວ້ດັ່ງກ່າວແລ້ວ.

ຄັນຕໍ່ມາ ເຖິງວັນທີ 10 ຕຸລາ ກໍໄດ້ຮັບໂທລະເລກເປັນທາງການ ຈາກລັດຖະມົນຕີກະຊວງມະຫາດໄທທີ່ຫຼວງພຣະບາງວ່າ ພຣະເຈົ້າ ແຜ່ນດິນໄດ້ປິດ ຂ້າພະເຈົ້າອອກຈາກຕຳແໜ່ງມະຫາອຸປະຣາດ ແລະ ນາຍົກລັດຖະມົນຕີແລ້ວ ໂດຍຂໍ້ຫາວ່າຂ້າພະເຈົ້າດຳເນີນນະໂຍບາຍ ທາງດ້ານການເມືອງ ບໍ່ຖືກຕ້ອງຕາມຄວາມປະສົງຂອງປະຊາຊົນ ລາວ ແລະບໍ່ໄດ້ການທູນປຶກສາກັບ ພຣະເຈົ້າແຜ່ນດິນກ່ອນ.

ເມື່ອໄດ້ຮັບປະກາດຂອງພຣະອົງດັ່ງນັ້ນ ຂ້າພະເຈົ້າກໍໂທລະ ເລກຂາບທູນຕອບວ່າ ຍອມຮັບປະຕິບັດຕາມຮັບສັ່ງຂອງພຣະອົງທຸກ ປະການ ແລ້ວຈຶ່ງເອົາໂທລະເລກກ່ຽວກັບເລື່ອງທີ່ພຣະເຈົ້າແຜ່ນດິນ ປະກາດໃຫ້ອານາຈັກຫຼວງພຣະບາງຢູ່ໃນຄວາມປົກຄອງຂອງຝຣັ່ງ ອີກ ພ້ອມກັບໂທລະເລກສັ່ງປົດຂ້າພະເຈົ້າ ອອກຈາກໜ້າທີ່ ມາສະເໜີ ໃຫ້ຂ້າລາຊະການລາວ ແລະປະຊາຊົນລາວຊາບທົ່ວກັນ ໂດຍຊີ້ແຈງ ວ່າຕັ້ງແຕ່ບັດນີ້ເປັນຕົ້ນໄປ ຂ້າພະເຈົ້າບໍ່ມີສ່ວນກ່ຽວຂ້ອງກັບກິດຈະ ການແຜ່ນດິນຕໍ່ໄປແລ້ວ.

ຂ້າລາຊະການ ແລະປະຊາຊົນຊາວວຽງຈັນ ກໍສະແດງຄວາມຕື່ນເຕັ້ນ ແລະເສຽໃຈເປັນຢ່າງຍິ່ງໃນເມື່ອເລື່ອງນີ້ໄດ້ເປີດເຜີຍອອກມາແລ້ວ ຈຶ່ງໄດ້ໂຮມກັນຈັດຕັ້ງລັດຖະບານລາວອິດສະລະຂຶ້ນຕ້ານຝຣັ່ງ ເພື່ອຮັກສາເອກະລາດ ແລະໂຮມປະເທດລາວເປັນອັນໜຶ່ງອັນດຽວກັນຕໍ່ໄປ.

ເມື່ອລັດຖະບານລາວອິດສະລະໄດ້ຕັ້ງຂຶ້ນແລ້ວ ໂດຍມີພະຍາຄໍາມ້າວ ເຊິ່ງໄດ້ມາຮ່ວມປະຊຸມກັນກັບເຮົາຢູ່ນີ້ເປັນນາຍົກລັດຖະມົນຕີກໍໄດ້ໂທລະເລກໄປຖວາຍ ພຣະບາດສົມເດັດພຣະເຈົ້າສຣີສະຫວ່າງວົງ ຂໍໃຫ້ຮັບເອົາລັດຖະບານລາວອິດສະລະນີ້ ເປັນລັດຖະບານຂອງພຣະອົງແລະຂໍໃຫ້ຕອບມາໃຫ້ຊາບພາຍໃນ 48 ຊົ່ວໂມງ ເມື່ອລັດຖະບານລາວອິດສະລະບໍ່ໄດ້ຮັບຄໍາຕອບໃນເລື່ອງນີ້ແລ້ວ ຈຶ່ງໄດ້ສົ່ງກອງທະຫານໂດຍທາງເຮືອໄປຫຼວງພຣະບາງ ເພື່ອທໍາຄວາມເຂົ້າໃຈກັບພຣະເຈົ້າແຜ່ນດິນ ແຕ່ທະຫານທີ່ສົ່ງໄປນັ້ນ ຍັງບໍ່ທັນເຖິງຫຼວງພຣະບາງ ປະຊາຊົນຊາວຫຼວງພຣະບາງ ກໍໄດ້ຈັດການຄວບຄຸມພຣະລາຊະວັງ ໄວ້ກ່ອນແລ້ວ.

ເຖິງຕົ້ນເດືອນມັງກອນ ປີ 1946 ຂ້າພະເຈົ້າກໍກັບຄືນໄປຢູ່ຫຼວງພຣະບາງ ຈົນເຖິງວັນທີ 4 ພຶດສະພາ ຈຶ່ງໄດ້ອົບພະຍົບເຂົ້າເຂດປະເທດໄທແລະເລີຍມາກຸງເທບ ສ່ວນຄະນະລັດຖະບານລາວອິດສະລະໄດ້ລ່ວງໜ້າມາຢູ່ກ່ອນເດືອນປາຍແລ້ວ.

ເມື່ອຂ້າພະເຈົ້າມາເຖິງກຸງເທບ ຄະນະລັດຖະບານອິດສະລະກໍມາເຊີນ ໃຫ້ຂ້າພະເຈົ້າເປັນປະມຸກແຫ່ງການກູ້ຊາດ ໂດຍອາໄສຊື່ສຽງແລະອິດທິພົນຂອງຂ້າພະເຈົ້າ ພ້ອມທັງຄວາມຈົງຮັກພັກດີຂອງຄົນລາວໃນທົ່ວປະເທດ ທີ່ໄດ້ມີຕໍ່ຂ້າພະເຈົ້າມາແຕ່ເຫິງນານ ຄັນເຖິງ

ເດືອນທັນວາ ຂ້າພະເຈົ້າຈຶ່ງຮັບຄຳເຊີນເປັນປະມຸກຂອງລັດຖະບານ ລາວອິດສະລະ ແລະໄດ້ຈັດການປັບປຸງກຳລັງທະຫານ ເພື່ອຕໍ່ສູ້ກັບ ຝຣັ່ງຕໍ່ໄປ ໂດຍໄດ້ຕັ້ງໃຫ້ເຈົ້າສຸພານຸວົງ ເປັນຜູ່ນຳການທະຫານສູງ ສຸດແຫ່ງກອງທັບລາວອິດສະລະ ຄັນມາເຖິງເດືອນຕຸລາ ຄ.ສ. 1949 ຄະນະລັດຖະບານລາວອິດສະລະໄດ້ໄປຕົກລົງກັບຝຣັ່ງ ຍິນຍອມກັບຄືນ ໄປປະເທດລາວຮ່ວມກັບລັດຖະບານ ຂອງສົມເດັດພຣະເຈົ້າສຣິສະ ຫວ່າງວົງ ໂດຍບໍ່ບອກໃຫ້ ຂ້າພະເຈົ້າຊາບລ່ວງໜ້າກ່ອນ ແຕ່ເມື່ອໄດ້ ຕົກລົງແລະຮັບຄຳເຊີນຂອງຝຣັ່ງແລ້ວ ຈຶ່ງບອກໃຫ້ຂ້າພະເຈົ້າຮູ້ ແລະ ຂໍໃຫ້ຂ້າພະເຈົ້າປະຕິບັດຕາມດ້ວຍ. ຂ້າພະເຈົ້າເຫັນວ່າການທີ່ຄະນະ ລັດຖະບານລາວອິດສະລະ ເຮັດແນວນັ້ນບໍ່ຖືກຕ້ອງຕາມລະບຽບ ຂ້າ ພະເຈົ້າຈຶ່ງບໍ່ຍອມຮັບປະຕິບັດຕາມທັງບໍ່ຍອມກັບຄືນ ແລະທະຫານ ສຽງສ່ວນຫຼາຍກໍບໍ່ຍອມດັ່ງດຽວກັນ ສະນັ້ນເຈົ້າສຸພານຸວົງ ຈຶ່ງໄດ້ພາ ທະຫານໜີເຂົ້າປ່າ ຄອຍຮົບກວນຝຣັ່ງຕໍ່ໄປ.

ສ່ວນຂ້າພະເຈົ້າ ເວລານັ້ນປ່ວຍເປັນພະຍາດກ່ຽວກັບກະເພາະ ອາຫານຈະໄດ້ທຳການຜ່າຕັດ ຈຶ່ງຕ້ອງປ່ອຍປະລະເລີຍຄະນະທັງສອງ ບໍ່ກ່ຽວຂ້ອງກັບການເມືອງຕັ້ງແຕ່ນັ້ນມາ ແລະເມື່ອຂ້າພະເຈົ້າຖືກປົ ດອອກຈາກການເມືອງມາເຖິງສອງຄັ້ງແລ້ວ ດັ່ງນັ້ນກໍເປັນທຳມະດາ ຢູ່ເອງ ທີ່ຂ້າພະເຈົ້າຈະຕ້ອງຄຶດວ່າ ການກັບບ້ານເມືອງນັ້ນ ຖ້າວ່າສະ ຖານະການທາງການເມືອງ ຂອງປະເທດເຮົາ ເປັນທີ່ຮຽບຮ້ອຍໄປໂດຍ ດີແລ້ວ ຂ້າພະເຈົ້າຈະບໍ່ຖືກປົດອອກອີກເໝືອນດັ່ງທີ່ເປັນ ມາແລ້ວນັ້ນບໍ ຫຼື ວ່າຈະບໍ່ຖືກປອງທຳຮ້າຍບໍ.

ເຖິງວ່າ ຫາກອະນາຄົດຈະເປັນຢ່າງນັ້ນກໍຕາມ ໃນເມື່ອປະຊາ ຊົນລາວທົ່ວປະເທດ ຮ້ອງຂໍໃຫ້ກັບຄືນສູ່ບ້ານເກີດເມືອງນອນໂດຍພ້ອມ

ພຽງກັບຄຳເຊີນຂອງລັດຖະບານແລະຫົວໜ້າຄະນະສົງ ແລະໂດຍ ຄວາມພໍພຣະໄທຂອງພຣະບາດ ສົມເດັດພຣະເຈົ້າຢູ່ຫົວແລ້ວດັ່ງນີ້ ຂ້າ ພະເຈົ້າກໍມີຄວາມຊື່ນຊົມຍິນດີ ແລະເຫັນໃຈຮັບຄຳເຊີນຂອງພວກທ່ານ ກັບຄືນສູ່ປະເທດລາວ ເພື່ອຊ່ອຍກັນສ້າງຄວາມຈະເລີນ ແລະກ້າວໜ້າ ຂອງປະເທດເຮົາ ໂດຍສະເພາະຢ່າງຍິ່ງ ທີ່ປະເທດລາວ ເຮົາຫາກໍຈະ ໂຮມກັນເປັນອັນໜຶ່ງອັນດຽວກັນ ແລະໄດ້ເອກະລາດກັບຄືນມາໃໝ່ໆ ພາຍຫຼັງທີ່ໄດ້ຖືກແບ່ງແຍກອອກເປັນສອງລາຊະອານາຈັກ ຄື ຫຼວງ ພຣະບາງແລະວຽງຈັນ ເພື່ອປະໂຫຍດສ່ວນຕົວໃນພຣະບໍຣົມວົງສານຸ ວົງ ເປັນເວລາ 240 ປີມາແລ້ວນັ້ນ ແລະພາຍຫຼັງທີ່ຊາດລາວເຮົາໄດ້ ເສຽເອກະລາດເປັນເວລານານແລ້ວ ຄືການແບ່ງປະເທດລ້ານຊ້າງ ໃນຄັ້ງບູຮານມາເປັນ 2 ລາຊະອານາຈັກ ເຊິ່ງເປັນເຫດໃຫ້ເສຽເອກະ ຣາດມານັ້ນ ໄດ້ເກີດຂຶ້ນເມື່ອປີ ຄ.ສ. 1707 ແລະເຮົາໄດ້ເອກະລາດ ຄືນມາ ທັງໄດ້ໂຮມກັນເປັນອັນໜຶ່ງອັນດຽວກັນອີກ ໃນປີ ຄ.ສ. 1947 ສະນັ້ນການທີ່ລາວເຮົາແຕກແຍກກັນ ແລະເສຽເອກະລາດນັ້ນກໍເປັນ ລະຍະເວລານານເຖິງ 240 ປີ ເຕັມພໍດີ ເຫັນວ່າ ຊາດລາວເປັນຊາດ ທີ່ເສຽເອກະລາດ ໄປນານກວ່າທຸກໆຊາດໃນໂລກ ເຖິງແມ່ນປະເທດ ໂປໂລຍ ເຊິ່ງຖືກເຢຍລະມັນ ລັດເຊຍ ແລະກຣີກ ແບ່ງກັນໄປເມື່ອປີ ຄ.ສ. 1776 ກໍເສຽເອກະລາດໄປບໍ່ນານຫໍ່ ປະເທດລາວ ເຂົ້າກໍໄດ້ເອກະລາດ ຄືນມາ ເມື່ອປີ ຄ.ສ. 1918 ຄືພາຍຫຼັງທີ່ ເສຽເອກະລາດໄປເປັນເວລາ ພຽງ 146 ປີຫໍ່ນັ້ນ.

ການທີ່ປະເທດລາວເຮົາ ໄດ້ກັບມາໂຮມເປັນອັນໜຶ່ງອັນດຽວກັນ ແລະໄດ້ເປັນເອກະລາດຫໍ່ທຽມກັບຕ່າງປະເທດດັ່ງນີ້ ເປັນຜົນໃຫ້ຂ້າ

ພະເຈົ້າມີຄວາມຊື່ນຊົມຍິນດີເຫຼືອລົ້ນ ຈົ່ງເຕັມໃຈຈະກັບຄືນບ້ານເກີດ ເມືອງນອນເພື່ອຊ່ວຍພວກທ່ານ ແລະຊາວລາວທັງປວງສຳຫຼັບສ້າງ ບ້ານເມືອງໃຫ້ຈຳເລີນກ້າວໜ້າຕໍ່ໄປ ຕາມອຳນາດແລະຕຳແໜ່ງທີ່ຈະ ໄດ້ຮັບໃນອະນາຄົດ ແຕ່ສ່ວນວ່າຈະກັບໃນເວລາໃດນັ້ນແລ້ວແຕ່ການ ຈະຕົກລົງກັນໄດ້ໃນເລື່ອງປີກຍ່ອຍ ເຊິ່ງຂ້າພະເຈົ້າຂໍເຊີນທ່ານທັງຫຼາຍ ມາພິຈາລະນາແລະປຶກສາກັນໃນມື້ອື່ນນີ້ ແນວໃດກໍດີຂ້າພະເຈົ້າຂໍ ຮຽນໃຫ້ພວກທ່ານໄວ້ແຕ່ດຽວນີ້ວ່າ ການກັບຄືນສູ່ປະເທດລາວນັ້ນຈະ ເປັນໄປໄດ້ ກໍຕໍ່ເມື່ອພຣະບາດສົມເດັດພະເຈົ້າສຣີສະຫວ່າງວົງສະເດັດ ກັບຈາກປະເທດຝຣັ່ງ ມາຍັງແຜ່ນດິນຂອງພຣະອົງເສຽກ່ອນ.

ບັນທຶກບັນຫາຂໍ້ປີກຍ່ອຍ ທີ່ໄດ້ສືບຕໍ່ປຶກສາ ລະຫວ່າງ ເຈົ້າເພັດຊະຣາດ ກັບຄະນະຜູ້ແທນລາສະດອນ ແລະ ຄະນະລັດຖະບານ ໃນ ວັນທີ 16 ກໍລະກົດ 1956

1. ບັນຫາປະເທດລາວ:

ສົມເດັດເຈົ້າເພັດຊະຣາດກ່າວວ່າ: "ການກັບຄືນ ສູປະເທດລາວ ຂອງຂ້າພະເຈົ້າ ກໍຍັງບໍ່ສຳຄັນທໍ່ຊີວິດຂອງປະຊາຊົນລາວທັງປະເທດ ທີ່ໄດ້ຮັບເຄາະຮ້າຍ ຈາກການຈະລາຈົນຕ່າງໆທົ່ວປະເທດມາຕັ້ງສິບ ກວ່າປີແລ້ວສະນັ້ນຂໍທາງລັດຖະບານແຫ່ງລາ ຊະອານາຈັກກັບຄະນະ ປະເທດລາວ ຈົ່ງໄດ້ທຳການຕົກລົງກັນເສຽ ໃນໄວໆນີ້ ເພື່ອໃຫ້ລາວທັງ ປະເທດເປັນອັນໜຶ່ງອັນດຽວກັນ ເພື່ອໃຫ້ມີການຢູ່ດີກິນດີຕໍ່ໄປ."

ຄະນະໄດ້ກ່າວຕອບວ່າ: "ການເຈລະຈາກັບຄະນະປະເທດລາວ ຈະໄດ້ລົງມືທຳກັນໃນໄວໆນີ້ ຄອຍຖ້າແຕ່ການຕົກລົງໃນເລື່ອງສະຖານ

ທີ່ ໃນການເຈລະຈາຫໍ່ນັ້ນ."

ເຈົ້າເຟັດຊະຣາດກ່າວຕອບວ່າ: "ຕາມຂ່າວທີ່ໄດ້ຮັບຊາບຈະມີການເຈລະຈາກັນທີ່ຫຼວງພຣະບາງ ເຖິງແນວໃດກໍດີ ຖ້າທັງສອງຝ່າຍຮ້ອງຂໍຂ້າພະເຈົ້າ ກໍຍິນດີຮັບເປັນປະທານໃນການເຈລະຈາໃຫ້."

2. ການຈະກັບຄືນປະເທດລາວນັ້ນ ຂ້າພະເຈົ້າຈະຄອຍໃຫ້ສົມເດັດພຣະເຈົ້າສຣີສະຫວ່າງວົງສະເດັດກັບຈາກປະເທດຝຣັ່ງເສຽກ່ອນ ທັງນີ້ ເພື່ອປ້ອງກັນຄວາມເຂົ້າໃຈຜິດຂອງບຸກຄົນບາງຈຳພວກ ທີ່ຫາວ່າຂ້າພະເຈົ້າຈະແຍ່ງລາຊະບັນລັງ ກ່ຽວກັບເລື່ອງນີ້ ຂ້າພະເຈົ້າກໍໄດ້ປະກາດຫຼາຍຄັ້ງຫຼາຍຄາວແລ້ວ ເມື່ອວັນທີ 13 ພຶດສະຈິກາ ຄ.ສ. 1947 ກໍໄດ້ປະກາດວ່າ ຂ້າພະເຈົ້າກູ້ເອກະລາດ ສຳຫຼັບປະເທດລາວໂດຍບໍ່ໄດ້ຫວັງປະໂຫຍດໃນການທີ່ຢາກເປັນພຣະເຈົ້າແຜ່ນດິນແຕ່ປະການໃດເລີຍ ຄວາມປາຖະໜາຂອງຂ້າພະເຈົ້າໃນເລື່ອງນີ້ ແມ່ນການກະທຳໄປໂດຍມະຕິມະຫາຊົນທົ່ວປະເທດ ດັ່ງນັ້ນຂ້າພະເຈົ້າຈຶ່ງປະກາດໂຮມລາວໃຕ້ ລາວກາງ ລາວເໜືອ ໃຫ້ເປັນອັນໜຶ່ງອັນດຽວກັນຕາມທີ່ໄດ້ກ່າວມາແລ້ວ ໃນໂອກາດນີ້ ຂ້າພະເຈົ້າຂໍຢ້ຳອີກຄັ້ງໜຶ່ງວ່າ ເຖິງແມ່ນວ່າປະຊາຊົນບາງພວກຈະໄດ້ຂໍຮ້ອງໃຫ້ຂ້າພະເຈົ້າ ຮັບເປັນພຣະເຈົ້າແຜ່ນດິນແຫ່ງປະເທດລາວຕໍ່ໄປ ຂ້າພະເຈົ້າກໍປະຕິເສດຢ່າງເດັດຂາດ ສຳຫຼັບເລື່ອງນີ້ນະທີ່ນີ້ອີກ ຈົນກວ່າຂ້າພະເຈົ້າຈະສ້ຽງຊີບໄປ.

3. ສົມເດັດພຣະເຈົ້າເຟັດຊະຣາດກ່າວວ່າ "ເມື່ອໄດ້ຊາບຕາມເອກະສານທີ່ໄດ້ຮັບຈາກທັງສອງຄະນະ ຂໍ້ຄວາມທີ່ກ່ຽວກັບການຄືນນາມະຍົດ ເຈົ້າມະຫາ ອຸປະຣາດ ແລະກ່ຽວກັບການຈະພິຈາລະນາຖານະອັນຄວນແກ່ຂ້າພະເຈົ້າແລ້ວ ຂ້າພະເຈົ້າຍິນດີກັບຄືນສູ່ປະເທດລາວ

ຕາມຄຳເຊີນຂອງພວກທ່ານທັງຫຼາຍ ໃນຖານະເປັນພົນລະເມືອງຜູ່ ໜຶ່ງ ໂດຍບໍ່ໄດ້ຮັບນາມະຍົດເຈົ້າມະຫາອຸປະຣາດຄົນກ່ອນ ຂ້າພະເຈົ້າຂໍ ສົ່ງດຽວ (ຄືວ່າ) ເມື່ອກັບແລ້ວກໍຂໍໃຫ້ລັດຖະບານ ແລະສະພາຈົ່ງຮັບພິ ຈາລະນາໄວ້ກ່ອນ ຈະເປັນພຣະລາຊະໂອງການ ຫຼື ກົດໝາຍກໍສຸດແລ້ວ ແຕ່ຂໍໃຫ້ໃຊ້ໄດ້ເລີຍ ນັບແຕ່ວັນທີ່ຂ້າພະເຈົ້າເຂົ້າສູ່ປະເທດລາວ.

ຄະນະຜູ່ແທນລັດຖະບານ ແລະຄະນະຜູ່ແທນລາສະດອນຂໍຮັບ ຮອງເປັນເອກະສັນໃນເລື່ອງນີ້ ແລະຂໍສະແດງຄວາມດີໃຈ ແລະຂອບ ໃຈພຣະເດດພຣະຄຸນເປັນຢ່າງຍິ່ງທີ່ໄດ້ຍິນໄດ້ຟັງ ສະເດັດກ່າວດັ່ງນີ້ ກັບ ສະແດງໃຫ້ຄະນະເຫັນວ່າ ສະເດັດເສຽສະຫຼະວຽກສ່ວນຕົວອີກຄັ້ງໜຶ່ງ.

4. ເມື່ອຄະນະລັດຖະບານ ແລະຄະນະຜູ່ແທນລາສະດອນຫາກ ໄດ້ຈັດການເລື່ອງເຫຼົ່ານີ້ເປັນທີ່ຮຽບຮ້ອຍແລ້ວ ຂ້າພະເຈົ້າຈົ່ງຈະກຳ ນົດວັນເວລາຈະກັບເຂົ້າປະເທດລາວໄດ້ ເພາະກ່ອນຈະອອກຈາກປະ ເທດໄທ ຈະຕ້ອງມີເວລາຕິດຕໍ່ກັບເຈົ້າໜີ້ສິນຫຼາຍສິບຄົນເພື່ອທຳຄວາມ ເຂົ້າໃຈກັນກ່ອນ ຖ້າບໍ່ເຮັດຢ່າງນັ້ນ ຍ່ອມຈະເປັນການເສຽຊື່ສຽງ ສ່ວນ ໜີ້ສິນເຫຼົ່ານີ້ໄດ້ກູ້ຢືມມາເພື່ອຄວາມຕ້ອງການຂອງທະຫານລາວອິດ ສະຣະສຳຫຼັບການກູ້ຊາດ ແລະຊ່ອຍເຫຼືອລ້ຽງດູ ພວກລາວອົບພະຍົບ ນຳກັນ ອັນມີຄະນະລັດຖະບານລາວອິດສະລະເປັນຕົ້ນ.

ຄະນະຜູ່ແທນ ຂໍຊາບຈຳນວນໜີ້ສິນທີ່ກ່າວນີ້ ເຈົ້າເພັດຊະຣາດ ຕອບວ່າ ຈຳນວນໜີ້ສິນນີ້ ມີປະມານ 6 ແສນກວ່າບາດ.

ຄະນະຜູ່ແທນຂໍຮັບຮອງເປັນເອກະສັນກັນວ່າ ຈະພິຈາລະນາໃຊ້ ແທນໜີ້ສິນຈຳນວນນີ້ເຊິ່ງເປັນໜີ້ສິນຂອງສ່ວນໂຮມສຳຫຼັບກູ້ເອກະ ລາດຂອງຊາດ.

5. ເຈົ້າເພັດຊະຣາດ ຂໍໃຫ້ລັດຖະບານຈັດການຊ່ອຍເຫຼືອພວກ

ຊາວລາວທຸກໆຊັ້ນ ຕັ້ງແຕ່ລາສະດອນສາມັນຈົນເຖິງຂ້າລາຊະການ ເພື່ອເປັນການສົ່ງເສີມໃຫ້ເອົາເຫຼົ່ານັ້ນກັບຄືນປະເທດລາວ ແລະເປັນກຳລັງໃນການສ້າງຄວາມຈະເລີນຂອງບ້ານເມືອງຊ່ອຍກັນ.

ຄະນະຂໍຮັບຮອງຈະເອົາໃຈໃສ່ໃນເລື່ອງນີ້ ອັນເປັນຄວາມປະສົງຂອງລັດຖະບານແລະສະພາຄືກັນ ນອກຈາກນີ້ຄະນະຜູ່ແທນຂໍຮັບຮອງວ່າຈະສ້ອມແປງວັງຊຽງແກ້ວຖວາຍ ແລະຈະຖວາຍວັງອັນສົມກຽດແກ່ສະເດັດຢູ່ທີ່ວຽງຈັນອີກ.

ເຈົ້າເພັດຊະຣາດກ່າວຕອບວ່າ "ສຸດແລ້ວແຕ່ລັດຖະບານຈະເຫັນສົມຄວນ ເພື່ອໃຫ້ງາມໜ້າງາມຕາແກ່ທຸກຄົນ ແລະບ້ານເມືອງດ້ວຍ"

ບັນທຶກສະບັບນີ້ ເຮັດເປັນພາສາລາວແລະພາສາຝຣັ່ງ ທີ່ກຸງເທບ ໃນວັນອັງຄານ 17 ກໍລະກົດ ພ.ສ. 2499.

ເມື່ອໄດ້ທຳບັນທຶກຂໍ້ຕົກລົງຕ່າງໆ ດັ່ງກ່າວມານີ້ແລ້ວ ຄະນະທູດພິເສດຂອງສະພາຜູ່ແທນ ແລະລັດຖະບານແຫ່ງລາຊະອານາຈັກລາວ ຈຶ່ງໄດ້ອອກຖະແຫຼງການ ດັ່ງຕໍ່ໄປນີ້:

ຖະແຫຼງການ ສະບັບທີ 7

"ຄະນະທູດພິເສດ ເຊິ່ງປະກອບດ້ວຍຜູ່ແທນລາສະດອນ ແລະລັດຖະມົນຕີລາວໄດ້ຮັບສິດທີ່ຖືກຕ້ອງຕາມທາງການ ໄດ້ມາເຖິງກຸງເທບໃນວັນເສົາທີ່ແລ້ວມານີ້ ເພື່ອພົບພໍ້ກັບເຈົ້າເພັດຊະຣາດ ອະດີດເຈົ້າມະຫາອຸປະຣາດແຫ່ງ ພຣະລາຊະອານາຈັກຫຼວງພຣະບາງ ເຊິ່ງເປັນປະມຸກແຫ່ງການຕໍ່ຕ້ານເພື່ອກອບກູ້ເອກະພາບ ແລະເອກະລາດລາວແລະໄດ້ພາກຖິ່ນ ໂດຍມາຢູ່ໃນນະຄອນຫຼວງຂອງປະເທດໄທ ຕັ້ງແຕ່ປີ ຄ.ສ. 1946.

ເມື່ອໄດ້ກ່າວຂາບທູນ ສົມເດັດເຈົ້າເພັດຊະຣາດ ເຖິງສະຖານະ

ການປັດຈຸບັນຂອງລາຊະອານາຈັກລາວ ເຊິ່ງມີເອກະລາດແລະເອກະພາບອັນສົມບູນ ທັງໄດ້ເຂົ້າເປັນສະມາຊິກຂອງສະຫະປະຊາຊາດແລ້ວ ຄະນະທູດພິເສດໄດ້ຂາບທູນ ໃນນາມຂອງສະພາຜູ່ແທນລາສະດອນ ແລະໃນນາມຂອງລັດຖະບານ ຂໍໃຫ້ສົມເດັດເຈົ້າເພັດຊະຣາດສະເດັດ ກັບຄືນສູ່ປະເທດລາວ ເພື່ອຈະໄດ້ຊ່ອຍດຳເນີນກິດຈະການອັນຈະນຳມາ ເຊິ່ງຄວາມຮົ່ມເຢັນເປັນສຸກຂອງປະຊາຊົນ ທີ່ໄດ້ຄອງຄອຍສະເດັດກັບ ຢູ່ທຸກເວລາ ແຕ່ເໜືອຈົນຕະຫຼອດເຖິງທາງໃຕ້ ຂອງປະເທດລາວ.

ອັນໜຶ່ງ ເມື່ອສົມເດັດເຫັນວ່າ ຖານະເອກະພາບແລະເອກະລາດ ອັນສົມບູນຂອງປະເທດລາວ ໄດ້ມາຕາມຄວາມປາຖະໜາຂອງພຣະ ອົງທຸກປະການ ແລ້ວແລະອີກປະການໜຶ່ງເມື່ອເຫັນວ່າປະຊາຊົນລາວ ທຸກຊັ້ນຍັງມີຄວາມຈົງຮັກພັກດີ ແລະນຶກເຖິງໃນຕົວພຣະອົງຢູ່ ດັ່ງນີ້ ສົມເດັດເຈົ້າເພັດຊະຣາດຮູ້ສຶກພໍພຣະໄທເປັນຢ່າງຍິ່ງ ແລະຍິນດີຮັບຈະ ກັບຄືນສູ່ປະເທດລາວ.

ວັນທີ ເຊິ່ງສົມເດັດເຈົ້າເພັດຊະຣາດ ຈະກັບຄືນສູ່ປະເທດລາວນັ້ນ ຍັງບໍ່ໄດ້ກຳນົດແນ່ນອນ. ແຕ່ວ່າ ເຈົ້າເພັດຊະຣາດ ໄດ້ຖະແຫຼງການ ດັ່ງນີ້:

ຖະແຫຼງການຂອງເຈົ້າເພັດຊະຣາດ

ຂ້າພະເຈົ້າ ເຈົ້າເພັດຊະຣາດ ຂໍປະກາດໃຫ້ພີ່ນ້ອງຊາວລາວທົ່ວ ພຣະລາຊະອານາຈັກຊາບວ່າ ຂ້າພະເຈົ້າໄດ້ອົບພະຍົບມາຈາກບ້ານ ເກີດເມືອງນອນ ມາເພິ່ງໂພທິສົມພານຂອງປະເທດໄທ ເປັນເວລາ ເກືອບ11 ປີ ມາແລ້ວ ມາບັດນີ້ ຄະນະຜູ່ແທນລັດຖະບານແລະຄະນະຜູ່ ແທນພີ່ນ້ອງຊາວລາວ ທັງປະເທດໄດ້ພ້ອມກັນມາເຊີນຂ້າພະເຈົ້າກັບ ຄືນສູ່ປະເທດ ເພື່ອຮ່ວມໄມ້ຮ່ວມມືກັບພີ່ນ້ອງຊາວລາວທັງປວງ ຊ່ອຍ

ກັນສ້າງປະເທດຊາດໃຫ້ວັດທະນາຖາວອນຕໍ່ໄປ ເຊິ່ງເປັນຄວາມປາຖະໜາຂອງຂ້າພະເຈົ້າ ມາແຕ່ດັ້ງເດີມ.

ໂດຍສະເພາະຢ່າງຍິ່ງ ໃນຂະນະນີ້ປະເທດລາວຂອງພວກເຮົາ ເປັນປະເທດທີ່ນັບວ່າພວມກໍ່ຮ່າງສ້າງຕົວຂຶ້ນໃໝ່ ເພື່ອໃຫ້ເກີດການຕ່າງໆ ອັນຈະນຳມາເຊິ່ງຄວາມຈະເລີນກ້າວໜ້າວັດທະນາຖາວອນຕໍ່ໄປ ດັ່ງນີ້ຂ້າພະເຈົ້າຮູ້ສຶກຍິນດີທີ່ຈະໄດ້ໄປຮັບໃຊ້ປະເທດຊາດອີກຢ່າງເຕັມໄມ້ເຕັມມື ແລະຮ່ວມໄມ້ຮ່ວມມືກັບປະຊາຊົນລາວທຸກຖ້ວນໜ້າຢ່າງສຸດຄວາມສາມາດແລະບໍລິສຸດໃຈ ດ້ວຍວັດຖຸປະສົງດັ່ງກ່າວແລ້ວ ຂ້າພະເຈົ້າຈຶ່ງໄດ້ຮັບຄຳເຊີນຂອງຄະນະຜູ້ແທນລາສະດອນ ກັບສູ່ປະເທດລາວດັ່ງເດີມ ເພື່ອດຳລົງໄວ້ເຊິ່ງຄວາມເປັນເອກະລາດແລະປະຊາທິປະໄຕ ກັບເພື່ອນພີ່ນ້ອງຊາວລາວທົ່ວພຣະລາຊະອານາຈັກ ໃຫ້ໝັ້ນຄົງຖາວອນຕໍ່ໄປ.

ດັ່ງນີ້ ຂ້າພະເຈົ້າຈຶ່ງຂໍປະກາດມາຍັງພີ່ນ້ອງຊາວລາວທົ່ວກັນໄວ້ ໃນໂອກາດນີ້ດ້ວຍ ແຕ່ການຈະກັບມານັ້ນຂ້າພະເຈົ້າຍັງຕ້ອງຄອຍຖ້າໃຫ້ສົມເດັດ ພຣະເຈົ້າສຣີສະຫວ່າງວົງ ສະເດັດກັບຈາກປະເທດຝຣັ່ງຄືນມາປະເທດລາວເສຽກ່ອນ ແລະເມື່ອໃດຫາກຂ້າພະເຈົ້າໄດ້ກຳນົດວັນທີ່ຈະກັບສູ່ປະເທດລາວແນ່ນອນແລ້ວ ຂ້າພະເຈົ້າກໍຈະປະກາດວັນທີ່ຈະອອກຈາກປະເທດໄທໃຫ້ແກ່ພີ່ນ້ອງຊາວລາວ ຊາບລ່ວງໜ້າອີກຄັ້ງໜຶ່ງ.

ໃນທີ່ສຸດ ຂ້າພະເຈົ້າຂໍອຳນວຍພອນແກ່ພີ່ນ້ອງປະຊາຊົນລາວທົ່ວທຸກແຫ່ງຫົນຕຳບົນເໜືອໃຕ້ ຈົ່ງມີຄວາມສຸກວັດທະນາຖາວອນຕະຫຼອດທິພາລາຕິການເຖີ້ນ.

ກຸງເທບ ວັນທີ 21 ກໍລະກົດ 1956
ເຈົ້າເພັດຊະຣາດ

ໃນການທີ່ລັດຖະບານ ແລະສະພາຜູ່ແທນໃນນາມປະຊາຊົນໄດ້ໄປເຊີນ ເຈົ້າເພັດຊະຣາດກັບຄືນມານີ້ ຝ່າຍລັດຖະບານກໍໄດ້ນຳສະເໜີຕໍ່ສະພາຜູ່ແທນລາສະດອນໃນການປະຊຸມສະພາກ່ຽວກັບເລື່ອງນີ້ ໄດ້ເຫັນພ້ອງຕ້ອງກັນເປັນເອກະສັນ ໂດຍບໍ່ມີສຽງຄັດຄ້ານເລີຍແມ່ນແຕ່ສຽງດຽວ.

ຕໍ່ມາ ລັດຖະບານແຫ່ງລາຊະອານາຈັກລາວອັນມີ ສະເດັດເຈົ້າສຸວັນນະພູມາ ເປັນນາຍົກ ກໍໄດ້ທຳການຕິດຕໍ່ເຈລະຈາກັບເຈົ້າສຸພານຸວົງຫົວໜ້າຄະນະປະເທດລາວ ເພື່ອໂຮມລາວທັງສອງຝ່າຍເຂົ້າກັນ ແລະອອກຖະແຫຼງການຮ່ວມກັນ ເມື່ອວັນທີ 5 ສິງຫາ ພ.ສ. 2499 (ຄ.ສ 1956) ດັ່ງທີ່ ຂໍ້ຄວາມຕໍ່ໄປນີ້:

ຖະແຫຼງການຮ່ວມ ຄະນະຜູ່ແທນລັດຖະບານ
ພຣະລາຊະອານາຈັກ ແລະ ຄະນະຜູ່ແທນ
ບັນດາກຳລັງປະເທດລາວ

ຄະນະຜູ່ແທນ ລັດຖະບານພຣະລາຊະອານາຈັກລາວອັນມີ ເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີເປັນຫົວໜ້າ ພະນະທ່ານໂງ່ນ ຊະນະນິກອນ ພະນະທ່ານ ອຸດົມ ສຸວັນນະວົງ ພະນະທ່ານທົງ ສຸດທິວົງນໍຣາດ ພະນະທ່ານໝູອີ້ງ ຣັດຕະນະວົງ ເຈົ້າສົມສະໜິດ ໜໍ່ຄຳ ນາຍພັນເອກ ອ້ວນ ຣາທິກຸນ ພັນໂທພູມີ ໜໍ່ສະຫວັນ ພັນຕີກຸປະສິດ ອະໄພ ແລະ ທ່ານສີສຸກ ເປັນກຳມະການ.

ແລະຜູ່ແທນບັນດາກຳລັງປະເທດລາວ ອັນມີ ເຈົ້າສຸພານຸວົງ

ເປັນຫົວໜ້າ ທ່ານພູມີ ວົງວິຈິດ ທ່ານໜູຮັກ ພູມສະຫວັນ ແລະ ທ່ານມາ ເປັນກຳມະການ.

ໄດ້ຮ່ວມປະຊຸມກັນ ແຕ່ວັນທີ 1 ເຖິງວັນທີ 5 ສິງຫາ ພ.ສ. 2499 ທີ່ນະຄອນວຽງຈັນ ເພື່ອຫາວິທີການແກ້ໄຂບັນຫາ ທີ່ພົວພັນລະຫວ່າງທັງສອງຝ່າຍ ຕາມສັນຍາເຊີແນວ ເພື່ອຍັງຜົນໃຫ້ປະເທດລາວ ມີສັນຕິພາບ ປະຊາທິປະໄຕ ເອກະພາບ ແລະ ໃຫ້ເອກະລາດຂອງຊາດ ໝັ້ນຄົງຍິ່ງຂຶ້ນໄປ.

ຕະຫຼອດລະຍະເວລາ 5 ວັນ ທີ່ຜ່ານມາ ການພົບປະເຈລະຈາ ໄດ້ເປັນໄປດ້ວຍຄວາມສະໜິດສະໜົມເປັນກັນເອງຢ່າງດີຍິ່ງ ແລະເຂົ້າ ໃຈກັນເປັນຢ່າງດີ ຫົວໜ້າແລະຄະນະຜູ້ແທນທັງສອງຝ່າຍໄດ້ແລກ ປ່ຽນຄວາມຄິດຄວາມເຫັນກັນວ່າ ໃນໄລຍະນີ້ສະຖານະການຂອງໂລກ ກໍໄດ້ລົດຢ່ອນຜ່ອນຄວາມເຄັ່ງຕຶງລົງແລ້ວ ແລະສະຖານະການພາຍ ໃນປະເທດ ກໍໄດ້ຜ່ອນເບົາລົງຄັ່ງດຽວກັນ.

ເນື່ອງມາຈາກສະຖານນະການພາຍໃນ ແລະພາຍນອກປະເທດ ຄັ່ງກ່າວມາແລ້ວຂ້າງເທິງນີ້ ທັງສອງຝ່າຍເຫັນພ້ອມຕາມນະໂຍບາຍ ຕ່າງປະເທດທີ່ສະເດັດອົງມຸງກຸດລາຊະກຸມມ່ານ ແລະສະເດັດເຈົ້າສຸວັນ ນະພູມາ ນາຍົກລັດຖະມົນຕີໄດ້ທົ່ງປະກາດມາແລ້ວຫຼາຍຄັ້ງວ່າ ທາງ ລັດຖະບານພຣະລາຊະອານາຈັກ ຈະເດັດດ່ຽວເດີນຕາມເສັ້ນທາງສັນ ຕິພາບ ເປັນກາງ ແລະຈະປະຕິບັດຕາມດ້ວຍຄວາມຈິງໃຈ ຕາມຫຼັກ 5 ປະການ ຂອງການຢູ່ຮ່ວມກັນໂດຍສັນຕິ ຕາມແບບຢ່າງຂອງທ່ານເນຮູ ແລະຈະສ້າງສາຍສຳພັນອັນດີກັບນາໆປະເທດ ເປັນຕົ້ນວ່າ ບັນດາປະ ເທດເພື່ອນບ້ານໃກ້ຄຽງ ບໍ່ເຂົ້າຮ່ວມກຸ່ມສຳພັນທະຫານໃດໆ ແລະບໍ່ ໃຫ້ປະເທດໃດມາຕັ້ງຖານທັບໃນດິນແດນລາວ ນອກເໜືອໄປຈາກທີ່ໄດ້

ລະບຸໄວ້ໃນສັນຍາເຊີແນວ ການທີ່ກະທຳເຊັ່ນນັ້ນກໍເພື່ອປ້ອງກັນຜົນ ປະໂຫຍດຂອງປວງຊົນທັງຊາດ ເພື່ອສ້າງບັນຍາກາດອັນດີໃຫ້ແກ່ ການເຈລະຈາ ແລະສ້າງເງື່ອນໄຂອັນສະດວກໃຫ້ແກ່ການທ້ອນໂຮມ ພົນລະເມືອງລາວ ເຂົ້າຮ່ວມວົງສາຄະນາຍາດແຫ່ງຊາດນັ້ນທັງສອງ ຝ່າຍພ້ອມກັນເຫັນດີວ່າ ຈຳເປັນຕ້ອງຢຸດການກະທຳທຸກຢ່າງເຊິ່ງກໍ່ ໃຫ້ເກີດການຜິດກັນແລະກັນຢູ່ໃນສອງແຂວງ ຊຳເໜືອແລະຝ່ຶງສາລີ ກອງທະຫານຝ່າຍໃດຢູ່ບ່ອນໃດ ເພື່ອລໍຄອຍການແກ້ໄຂບັນດາບັນຫາ ທີ່ພົວພັນທັງສອງຝ່າຍແລະໃນລະຫວ່າງການຄອຍຖ້ານີ້ ບ່ໃຫ້ຝ່າຍ ໃດຜິດແລະບຸກຮຸກກັນບ່ໃຫ້ຝ່າຍໃດຕື່ມກຳລັງທະຫານ ຫຼື ອາວຸດຍຸດໂທ ປະກອນ ເຂົ້າໄປໃນເຂດຂອງສອງແຂວງນັ້ນ.

ຄະນະຜູ່ແທນລັດຖະບານພຣະລາຊະອານາຈັກ ຮັບຮອງຕ່ໍຄະ ນະຜູ່ແທນຄະນະປະເທດລາວວ່າ ຈະປະກາດເປັນທາງການອີກຄັ້ງໜຶ່ງ ໃຫ້ປະຊາຊົນຊາບທ່ົວກັນວ່າ ປະຊາຊົນລາວມີສິດເສລີພາບປະຊາທິປະ ໄຕເຊັ່ນ ເສລີພາບໃນການເວົ້າ ການຂຽນ ການໂຄສະນາ ການສັນ ຈອນໄປມາ ການຕັ້ງສະມາຄົມ ແລະອື່ນໆ ເຫັນດີວ່າພົນລະເມືອງ ລາວທຸກຄົນ ທັງຍິງແລະຊາຍມີສິດເລືອກ ແລະຮັບເລືອກຕັ້ງແລະວ່າ ທາງການຈະເລີກລະບອບການເກນແຮງງານ ເຊິ່ງເຄີຍມີໃນສະໄໝ ເປັນເມືອງຂຶ້ນ ເພື່ອໃຫ້ທຸກຄົນໄດ້ມີໂອກາດ ປະກອບອາຊີບຂອງຕົນເອງ ຕາມຄວາມຕ້ອງການ ແລະຕາມຕົວບົດກົດໝາຍຂອງພຣະລາຊະອາ ນາຈັກ ທັງສອງຝ່າຍພ້ອມກັນເຫັນດີວ່າໃຫ້ບັນດາອົງການການເມືອງ ຝ່າຍປະເທດລາວເຊັ່ນ ແນວລາວຮັກຊາດ ແລະການຈັດຕັ້ງສະມາຄົມ ຊາຍໜຸ່ມຍິງສາວຊາວນາ ແລະອື່ນໆ ດຳເນີນງານຕາມກົດໝາຍແຫ່ງ ພຣະລາຊະອານາຈັກໄດ້ ຄືພັກການເມືອງອື່ນໆ ທັງໃຫ້ພົນລະເມືອງ

ຝ່າຍປະເທດລາວ ແລະບຸກຄົນທີ່ໄດ້ຕໍ່ຕ້ານມາກ່ອນໄດ້ຮັບສິດ ແລະບໍ່ມີ ການຈຳກັດສິດທິຕໍ່ບຸກຄົນຈຳພວກນີ້ ໃຫ້ພະນັກງານ ຝ່າຍປະເທດລາວ ແລະບຸກຄົນພວກທີ່ໄດ້ກະທຳການຕໍ່ຕ້ານມາແຕ່ກ່ອນ ໄດ້ເຂົ້າຮ່ວມໃນ ການປົກຄອງ ແລະໃນຜະແນກການ ໂດຍສະເພາະໃນທຸກຊັ້ນຕາມ ຄວາມສາມາດຂອງແຕ່ລະບຸກຄົນ ແລະຕາມການຕົກລົງຜ່ອນສັ້ນ ຜ່ອນຍາວໃຫ້ແກ່ກັນລະຫວ່າງທັງສອງຝ່າຍ.

ກ່ຽວກັບບັນຫາການເລືອກຕັ້ງ ແລະການຈັດຕັ້ງລັດຖະບານປະ ສົມນັ້ນ ຄວາມເຫັນທັງສອງຝ່າຍຍັງພິຈາລະນາກັນຢູ່.

ກ່ຽວກັບການແກ້ໄຂບັນຫາສັນຕິພາບນັ້ນ ທັງສອງຝ່າຍໄດ້ ພ້ອມກັນເຫັນວ່າ ທາງດ້ານການປົກຄອງໃຫ້ທັງສອງແຂວງເຂົ້າຮ່ວມ ຢູ່ພາຍໃຕ້ອຳນາດ ສູງສຸດຂອງລັດຖະບານພຣະລາຊະອານາຈັກ ແລະ ໃຫ້ປ່ຽນຮູບການປົກຄອງຂອງແຂວງ ໄປຕາມຮູບການປົກຄອງຂອງ ພຣະລາຊະອານາຈັກໃນທົ່ວປະເທດ ທາງການທະຫານໃຫ້ກອງທະ ຫານປະເທດລາວຂຶ້ນກັບການບັງຄັບບັນຊາສູງສຸດຂອງລັດຖະບານ ລາຊະອານາຈັກ ແລະຈັດຕັ້ງຕາມຮູບກອງທັບຂອງພຣະລາຊະອານາ ຈັກ ນອກຈາກນີ້ຍັງມີຂໍ້ປີກຍ່ອຍອີກ ເຊິ່ງທັງສອງຝ່າຍກຳລັງພິຈາລະ ນາຄວາມເຫັນຂອງກັນແລະກັນຢູ່.

ທັງສອງຝ່າຍພ້ອມກັນເຫັນດີ ໃຫ້ຈັດຕັ້ງຄະນະກຳມະການຜະ ສົມການເມືອງ ແລະການທະຫານຂຶ້ນ ເພື່ອຊອກຫາຊ່ອງທາງພິຈາຣະ ນາແກ້ໄຂບັນດາບັນຫາ ທີ່ຍັງຄ້າງຢູ່ ແລະວິທີປະຕິບັດຕາມສິ່ງທີ່ຕົກ ລົງກັນແລ້ວໃຫ້ປາກົດຜົນຂຶ້ນ ເມື່ອເຫັນມີຄວາມຈຳເປັນ ສະເດັດນາຍ ຍົກລັດຖະມົນຕີ ເຈົ້າສຸວັນນະພູມາ ແລະສະເດັດເຈົ້າສຸພານຸວົງ ກໍຈະໄດ້ ນັດພົບກັນອີກ ເພື່ອພະຍາຍາມແກ້ໄຂບັນຫາເຫຼົ່ານັ້ນ ໃຫ້ເປັນທີ່ຮຽບ

ຮ້ອຍຈົນໄດ້.

ທັງສອງຝ່າຍພ້ອມກັນເຫັນດີວ່າ ການພົບປະເຈລະຈາກັນໃນ ຄັ້ງນີ້ໄດ້ຮັບຜົນເປັນຢ່າງດີ ຄືທຳໃຫ້ທັງສອງຝ່າຍເຂົ້າໃຈກັນແລະກັນ ເປັນເອກະສັນກັນໄດ້ຫຼາຍຂໍ້ແລ້ວ ຍ່ອມສະແດງເຖິງໄຊຊະນະທີ່ສຳຄັນ ຊັ້ນໜຶ່ງຂອງຜູ່ທີ່ໄຝ່ຝັນໃນສັນຕິພາບ ແລະເອກະລາດຂອງປວງຊົນ ຊາວລາວ ຂອງລັດຖະບານພຣະລາຊະອານາຈັກ ແລະຂອງບັນດາກຳ ລັງປະເທດລາວ.

ທັງສອງຝ່າຍ ພ້ອມກັນພໍໃຈໃນການທີ່ຄະນະກຳມະການສາກົນ ກວດຄັນ ຄວບຄຸມຢຸດຮົບປະຈຳປະເທດລາວ ເປັນຕົ້ນວ່າ ທ່ານປະທານ ສະມາກເວັນ ທີ່ໄດ້ໃຊ້ຄວາມພະຍາຍາມຢ່າງໃຫຍ່ຫຼວງເພື່ອຊ່ວຍເຫຼືອ ທັງສອງຝ່າຍມາຈົນເຖິງບັດນີ້ ແລະພ້ອມກັນຫວັງວ່າຕໍ່ໄປໃນພາຍໜ້າ ຄະນະກຳມາທິການສາກົນ ກໍຈະດຳເນີນການຊ່ວຍເຫຼືອຕໍ່ໄປ ຈົນກວ່າ ບັນຫາທຸກໆຂໍ້ຕາມໃຈຄວາມໃນສັນຍາເຊີແນວ ຈະໝົດສ້ຽງໄປ.

ທີ່ ນະຄອນວຽງຈັນ, ວັນທີ 5 ສິງຫາ ພ.ສ 2499 (ຄ.ສ1956)

ຫົວໜ້າຄະນະຜູ່ແທນຝ່າຍພຣະລາຊະອານາຈັກ
ລົງນາມ ເຈົ້າສຸວັນນະພູມາ
ຫົວໜ້າຄະນະຜູ່ແທນຝ່າຍປະເທດລາວ
ລົງນາມ ເຈົ້າສຸພານຸວົງ

ປົດມ້ອນທ້າຍ

ໂດຍ ດວງເດືອນ ວີຣະວົງສ໌ ບຸນຍາວົງ

ຊີວະປະຫວັດຂອງ ເຈົ້າມະຫາອຸປະຣາດເພັດຊະຣາດ ທີ່ທ່ານອາຈານ ມະຫາສິລາ ວີຣະວົງສ໌ ຂຽນໄວ້ ສຸດລົງບ່ອນການເຊີນສະເດັດກັບຄືນປະເທດລາວ ແຕ່ບໍ່ກ່າວເຖິງວັນເວລາຂອງການກັບມາ ແລະຊີວິດໃນບັ້ນປາຍຂອງເພິ່ນທັງນີ້ ເພາະວ່າ ທ່ານມະຫາສິລາຂຽນເລື່ອງນີ້ຂຶ້ນ ພາຍຫຼັງທີ່ຄະນະຜູ່ແທນເດີນທາງໄປກຸງເທບ ເພື່ອເຊື້ອເຊີນພະອົງສະເດັດກັບຄືນ ແລະ ເມື່ອໄດ້ຮັບປຶ້ມເລື່ອງ "ບຸຣຸດເຫຼັກແຫ່ງພຣະຣາຊະອານາຈັກລາວ: ເຈົ້າເພັຊຣາຊ ຣັຕນະວົງສາ" ຂຽນໂດຍ "3349" ພິມເປັນພາສາໄທຢູ່ກຸງເທບ ປີ 1956, ຊຶ່ງມີເນື້ອໃນສຸດລົງຕອນນີ້ເອງ.

ສາເຫດທີ່ ມະຫາສິລາ ບໍ່ຂຽນຕໍ່ ອາດເປັນຍ້ອນຮູ້ສຶກກະທົບກະເທືອນໃຈທີ່ເຫັນເຈົ້າເພັດຊະຣາດ ສ້ຽງພະຊົນແບບກະທັນຫັນ ຖ້າມກາງເຫດການອຸ່ນວາຍຂອງບ້ານເມືອງອັນເປັນສິ່ງບົ່ງຊີ້ວ່າ ຄວາມຫວັງຂອງທັງສອງຄົນເພິ່ນໃນການທີ່ຈະເຫັນປະເທດຊາດເປັນເອກະພາບແລະຢູ່ເຢັນເປັນສຸກ ພັງທະລາຍລົງກັບຕາ.

ແມ່ນແຕ່ບົດຂຽນນີ້ ກໍຖືກປະຖິ້ມໄວ້ຕະຫຼອດເວລາຜ່ານມາ ຂ້າພະເຈົ້າ (ຜູ່ຂຽນ: ດວງເດືອນ) ບໍ່ເຄີຍໄດ້ຍິນເພິ່ນເວົ້າຮອດຈັກເທື່ອຈົນເມື່ອພາຍຫຼັງ ການມໍລະນະກຳຂອງເພິ່ນຈຶ່ງເຫັນ ແລ້ວນຳອອກມາເຜີຍແຜ່ດັ່ງເປັນຢູ່ໃນປັດຈຸບັນ.

ເຈົ້າເພັດຊະຣາດ ໄດ້ເດີນທາງກັບຄືນປະເທດລາວ ໃນເດືອນ ເມສາ (04) 1957 ແລະດຳລົງຊີວິດແບບສາມັນຊົນ ຢູ່ທີ່ຫຼວງພຣະບາງ ຖ້າມກາງມໍລະສຸມປັ່ນປ່ວນຂອງການເມືອງລາວ ອັນເປັນສາເຫດໃຫ້ ພະອົງສ້ຽງພະຊົນ ດ້ວຍໂລກອຳມະພາດ ເສັ້ນເລືອດໃນສະໝອງແຕກ ໃນຄ່ຳຄືນຂອງວັນພຸດ ທີ 14 ຕຸລາ ພ.ສ. 2502 (14/10/1959) ກົງກັບ ວັນຂຶ້ນ 12 ຄ່ຳ ເດືອນ 11 (ລາວ) ປີກັດໄຄ້ ຈ.ສ. 1321 ເວລາ 5.30 ໂມງ ເຊົ້າ ໂຮມສີຣິພະຊົນມາຍຸ ໄດ້ 70 ພັນສາ ພະອົງໄດ້ມາໃຊ້ຊີວິດບັ້ນທ້າຍ ຢູ່ໃນດິນແດນມາຕຸພູມ ແຕ່ພຽງ 2 ປີກວ່າເທົ່ານັ້ນ ພາຍຫຼັງທີ່ຕ້ອງພັດ ພາກຈາກໄປຕັ້ງ10 ກວ່າປີ.

ເພື່ອໃຫ້ເຂົ້າໃຈເຖິງສະພາບເຫດການບ້ານເມືອງ ທີ່ມີສ່ວນພົວ ພັນ ແລະສຳຄັນຕໍ່ຊີວິດການເຄື່ອນໄຫວຂອງເຈົ້າເພັດຊະຣາດ ຂ້າພະ ເຈົ້າ ຈຶ່ງໄດ້ສັງລວມເຫດການຕ່າງໆ ແຕ່ປີ 1945 ເຖິງ 1960 ໄວ້ດັ່ງ ລຸ່ມນີ້:

ລຳດັບເຫດການແຕ່ ຄ.ສ. 1945 - 1960

10 ມີນາ 1945:
ກອງທັບຍີ່ປຸ່ນບຸກເຂົ້າລາວແລະຍຶດເອົາອຽງຈັນໄດ້ໃນຄືນວັນດຽວ ກັນນີ້.

15 ມີນາ 1945: ກອງທັບຍີ່ປຸ່ນເຂົ້າຍຶດເຖິງ ເມືອງຫຼວງພະບາງ.
10 ຕຸລາ1945: ໂທລະເລກຈາກຫຼວງພະບາງສັ່ງປົດເຈົ້າເພັດຊະຣາດ

ອອກຈາກຕຳແໜ່ງນາຍົກລັດຖະມົນຕີແຫ່ງລາຊະອານາຈັກຫຼວງພະ
ບາງ.

12 ຕຸລາ1945:
- ປະກາດສ້າງຕັ້ງລັດຖະບານລາວອິດສະລະ ທີ່ວຽງຈັນ ໂດຍມີພະຍາ
ຄຳມ້າວ ເປັນນາຍົກ,
- ປັບປຸງກຳລັງທະຫານ ເພື່ອສູ້ຮົບກັບກອງທະຫານຝຣັ່ງ ໂດຍແມ່ນ
ເຈົ້າສຸພານຸວົງ ເປັນຜູ່ບັນຊາການທະຫານສູງສຸດ.

ທ້າຍເດືອນ ຕຸລາ 1945:
ສະມາຊິກແນວໂຮມລາວເປັນລາວ (ລ.ປ.ລ.)
- ໂຄ່ນລົ້ມລະບອບສັກດິນາຢູ່ຫຼວງພະບາງ ປົດເຈົ້າແຂວງເກົ່າ ແລະ
ແຕ່ງຕັ້ງເຈົ້າບຸນຍະວັດເປັນເຈົ້າແຂວງຄົນໃໝ່. ຄວບຄຸມລາຊະວັງ
ຫຼວງພະບາງ ແລະຍຶດເອົາສັດຕາອາວຸດຈາກລາຊະວັງ.

ພະຈິກ 1945:
- ຄະນະຜູ່ແທນລັດຖະບານລາວອິດສະລະ ເດີນທາງຂຶ້ນໄປຫຼວງພະ
ບາງ ສະເໜີໃຫ້ເຈົ້າສຣິສະຫວ່າງວົງ ເຊັນຮັບເອົາກົດໝາຍລັດຖະ
ທຳມະນູນສະບັບໃໝ່.

ມັງກອນ 1946:

- ເຈົ້າເພັດຊະຣາດ ແລະພະຍາຄຳມ້າວພ້ອມ ດ້ວຍ ຄະນະ ລັດຖະບານລາວອິດສະລະຈຳນວນໜຶ່ງ ເດີນທາງຂຶ້ນໄປຫຼວງ ພະບາງເພື່ອເຈລະຈາຕົກລົງ ກັບເຈົ້າສຣິສະຫວ່າງວົງ ເລື່ອງ ເອກະລາດຂອງລາວ.

24 ເມສາ1946:

- ກອງທັບຝຣັ່ງ ຍຶດເອົາວຽງຈັນຄືນໄດ້

3 ພຶດສະພາ 1946:

- ເຈົ້າເພັດຊະຣາດອົບພະຍົບຫຼົບໄພໄປຢູ່ປະເທດໄທ ເດີນທາງຜ່ານ ເມືອງຕ່າງໆ10 ກວ່າວັນ ກ່ອນໜ້ານີ້ ສະມາຊິກຄະນະລັດຖະບານຈຳ ນວນໜຶ່ງໄດ້ເດີນທາງລ່ວງໜ້າໄປກ່ອນແລ້ວ.

1 ທັນວາ 1946:

- ເຈົ້າເພັດຊະຣາດຮັບເຊີນເປັນປະມຸກໃຫ້ຂະບວນການລາວອິດ ສະລະພັດຖິ່ນ ຫຼື ຄະນະກູ້ຊາດ ເຈົ້າສຸພານຸວົງ ເປັນຜູ່ບັນຊາການ ທະຫານ.

ຕຸລາ 1949:

- ລັດຖະບານໄທ ຊຶ່ງມີຈອມພົນ ປ. ພິບູນສົງຄາມເປັນນາຍົກ ດຳເນີນ

ນະໂຍບາຍໃໝ່, ບໍ່ສະໜັບສະໜູນຄະນະກູ້ຊາດລາວ ພັດຖິ່ນອີກ ຈຶ່ງບີບ
ບັງຄັບໃຫ້ຄະນະກູ້ຊາດອອກໜີຈາກແຜ່ນດິນໄທ, ຄະນະລັດຖະບານ
ລາວອິດສະລະໄດ້ຕົກລົງກັບຝຣັ່ງກັບຄືນລາວ ຮ່ວມມືກັບລັດຖະບານ
ເຈົ້າຊີວິດສຣິສະຫວ່າງວົງໂດຍບໍ່ໄດ້ປຶກສາຫາລື ແລະໄດ້ຮັບຄວາມ
ເຫັນດີຈາກເຈົ້າເພັດຊະຣາດ ຊຶ່ງເປັນປະມຸກຂອງ ຄະນະ ເຈົ້າສຸພາ
ນຸວົງ ຊຶ່ງເປັນຜູ້ບັນຊາການທະຫານບໍ່ເຫັນດີນຳ, ໄດ້ພາກອງທະຫານ
ຈຳນວນໜຶ່ງຂ້າມກັບມາຮ່ວມກັບ ພວກກອງຫຼອນ ຕໍ່ຕ້ານໃນດິນລາວ
ແລະເຕົ້າໂຮມກຳລັງ ສືບຕໍ່ໂຈມຕີທະຫານຝຣັ່ງເລື້ອຍມາ. ນັບແຕ່
ນັ້ນມາ ກອງທະຫານແບບກອງຫຼອນພາຍໃຕ້ການຊີ້ນຳຂອງເຈົ້າ
ສຸພານຸວົງ ກໍຂະຫຍາຍຕົວສ້າງເຂດທີ່ໝັ້ນໄວ້ຫຼາຍບ່ອນ.

13 ສິງຫາ 1950:

- ເຈົ້າສຸພານຸວົງ ເປັນປະທານກອງປະຊຸມໃຫຍ່ຜູ້ແທນແນວລາວ
ຕໍ່ຕ້ານ ທົ່ວປະເທດຈຳນວນ 150 ຄົນ. ກອງປະຊຸມຄັ້ງນີ້ ໄດ້ຕົກລົງ
ສ້າງຕັ້ງແນວໂຮມແຫ່ງຊາດຊື່ວ່າ "ແນວລາວ ອິດສະລະ" ໂດຍມີເຈົ້າ
ສຸພານຸວົງ ເປັນປະທານ ນັບແຕ່ນີ້ມາ ການຕໍ່ສູ້ດ້ວຍກຳລັງອາວຸດລະ
ຫວ່າງກອງທະຫານຝຣັ່ງກັບຝ່າຍຕໍ່ຕ້ານກໍດຳເນີນໄປຢ່າງຂ້ຽວຂາດ.

7 ພຶດສະພາ 1954:

- ກອງທັບຝຣັ່ງເສຽໄຊແກ່ກອງທັບຫວຽດມິນ, ດຽນບຽນຟູແຕກ.

21 ກໍລະກົດ 1954:

- ຝຣັ່ງຕົກລົງເຊັນສັນຍາທີ່ເຊີ້ນວ່າດ້ວຍອິນດູຈີນ, "ເນວລາວອິດສະລະ" ສົ່ງຕົວແທນເຂົ້າຮ່ວມກອງປະຊຸມ ແຕ່ຖືກຄະນະຜູ່ແທນລັດຖະບານລາຊະອານາຈັກລາວ (ຊຶ່ງມີ ຜຸຍ ຊະນະນິກອນ ເປັນຫົວໜ້າ) ຄັດຄ້ານ. ກອງປະຊຸມນີ້ຕົກລົງໃຫ້ກຳລັງ "ເນວລາວອິດສະລະ ຫຼື ປະເທດລາວໄປເຕົ້າໂຮມກັນຢູ່ 2 ແຂວງ ຄື ຜົ້ງສາລີແລະຫົວພັນ (ຊຳເໜືອ) ເພື່ອກຽມຕົວເຂົ້າຮ່ວມໃນລັດຖະບານປະສົມ.

6 ມັງກອນ 1955:

ເຈລະຈາ 2 ຝ່າຍ. ເວລານັ້ນ ທ.ກະຕ່າຍ ໂດນສະໂສຣິດ ເປັນນາຍົກ ຂອງລັດຖະບານລາຊະອານາຈັກ, ຕົກລົງອອກຖະແຫຼງການຮ່ວມກັນ ໄດ້ 1 ສະບັບ.

ພຶດສະພາ1955:

ຄະນະຜູ່ແທນຝ່າຍປະເທດລາວ ມາສືບຕໍ່ເຈລະຈາຢູ່ວຽງຈັນ.

25 ທັນວາ 1955:

- ລັດຖະບານວຽງຈັນຈັດເລືອກຕັ້ງຜູ່ແທນລາສະດອນ ແຕ່ຖືກຫາງສຽງປະຊາຊົນຊາວໜຸ່ມຄັດຄ້ານ, ມີການເດີນຂະບວນ ປະທ້ວງຜົນການເລືອກຕັ້ງເຮັດໃຫ້ ທ. ກະຕ່າຍ ຕົກຈາກຕຳແໜ່ງນາຍົກ.

ກຸມພາ 1956:

- ພວກສະໜັບສະໜູນສັນຕິພາບ ສະເໜີເຈົ້າສຸວັນນະພູມມາເປັນ ນາຍົກ.
- ເຈົ້າສຸວັນນະພູມມາ ໄດ້ຮັບເລືອກເປັນນາຍົກ ສະເໜີຜູ່ແທນລັດຖະ ບານ ໄປເຊື້ອເຊີນເອົາເຈົ້າເພັດຊະຣາດ ກັບມາແຕ່ໄທ. ແຕ່ພະອົງປະ ຕິເສດເພາະເຫັນວ່າ ບໍ່ແມ່ນຄວາມເຫັນຂອງທົ່ວປວງຊົນ

11 ກໍລະກົດ 1956:

- ລັດຖະບານ ສຸວັນນະພູມມາ ສະເໜີສະພາຜູ່ແທນລົງມະຕິເຫັນ ຊອບ ແຕ່ງຕັ້ງ ຄະນະກຳມະການແຫ່ງຊາດໄປເຊື້ອເຊີນເຈົ້າເພັດ ຊະຣາດ.

24 / VII

15 ກໍລະກົດ 1956: - ຄະນະຜູ່ແທນ ເດີນທາງເຖິງກຸງເທບ

16 ກໍລະກົດ 1956: - ຄະນະຜູ່ແທນ ເຂົ້າພົບເຈລະຈາກັບ ເຈົ້າເພັດຊະຣາດ

ห้ามจำหน่าย

17 ກໍລະກົດ 1956:

- ເຊັນບົດບັນທຶກການເຈລະຈາ ແລະຂໍ້ຕົກລົງລະຫວ່າງເຈົ້າເພັດຊະ ຣາດ ກັບຄະນະຜູ່ແທນ.

21 ກໍລະກົດ 1956:

- ເຈົ້າເພັດຊະຣາດ ອອກຖະແຫຼງການວ່າດ້ວຍການກັບຄືນປະເທດ

ລາວຂອງພະອົງ, ເນື້ອໃນສຳຄັນຂອງຖະແຫຼງການ ແມ່ນເນັ້ນໃຫ້ລັດ ຖະບານຝ່າຍລາຊະອານາຈັກ (ເຈົ້າສຸວັນນະພູມມາ ເປັນນາຍົກ) ເຈລະຈາຕົກລົງ ກັບກຳລັງປະເທດລາວ ໂດຍດ່ວນເພື່ອສ້າງສັນຕິ ພາບ ແລະເຮັດໃຫ້ປະເທດເປັນອັນໜຶ່ງອັນດຽວກັນ ແລະບອກວ່າ ພະອົງຈະກຳນົດວັນເວລາກັບໄດ້ກໍຕໍ່ເມື່ອ ພຣະເຈົ້າຊີວົດສຣິສະຫວ່າງ ວົງໄດ້ສະເດັດກັບປະເທດລາວແລ້ວຄືກັນ ເວລານັ້ນພຣະເຈົ້າ ສຣິສະ ຫວ່າງວົງ ໄປປິ່ນປົວສຸຂະພາບຢູ່ປະເທດຝຣັ່ງ.

5 ສິງຫາ 1956:
ລັດຖະບານແຫ່ງລາຊະອານາຈັກ ໂດຍມີເຈົ້າສຸວັນນະພູມມາ ເປັນນາ ຍົກກັບຄະນະປະເທດລາວ ອັນມີ ເຈົ້າສຸພານຸວົງ ເປັນຜູ່ນຳ ອອກຖະ ແຫຼງການຮ່ວມສະບັບໜຶ່ງ ພາຍຫຼັງການເຈລະຈາແຕ່ວັນທີ1-5 ສິງຫາ ທີ່ວຽງຈັນ ເນື້ອໃນຕົ້ນຕໍ ແມ່ນຕົກລົງແກ້ໄຂບັນຫາຕາມຂໍ້ ສັນຍາເຊີແນວ 1954.

- ຕົກລົງເຕົ້າໂຮມເອົາສອງແຂວງທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງກຳ ລັງປະເທດລາວ ເຂົ້າຢູ່ພາຍໃຕ້ລັດຖະບານປະສົມດຽວກັນ.

22 ມີນາ 1957:
- ເຈົ້າເພັດຊະຣາດ ເດີນທາງກັບປະເທດລາວໂດຍລົດໄຟ ແຕ່ກຸງເທບ ເຖິງໜອງຄາຍ, ຂ້າມທີ່ທ່າສະເດັດ ປະຊາຊົນຊາວນະຄອນວຽງຈັນ

ອອກໄປຮັບຕ້ອນຢ່າງຫຼວງຫຼາຍ.

ເມສາ-ມິຖຸນາ 1 957:
- ເຈົ້າເພັດຊະຣາດ ເດີນທາງໄປຢ້ຽມຢາມ 2 ແຂວງຄື: ຜົ້ງສາລີ ແລະຊໍາເໜືອຊຶ່ງເປັນເຂດຢູ່ ໃນຄວາມຄຸ້ມຄອງຂອງ ຝ່າຍກໍາລັງແນວ ລາວຮັກຊາດ ເຈົ້າເພັດຊະຣາດໄປພົບກັບເຈົ້າສຸພານຸວົງ ແລະຮຽກ ຮ້ອງໃຫ້ຝ່າຍກໍາລັງປະເທດລາວ ເຂົ້າຮ່ວມຈັດຕັ້ງລັດຖະບານປະສົມ. ນັບແຕ່ນັ້ນມາ ເຈົ້າເພັດຊະຣາດກໍປະທັບ ຢູ່ໂຮງຊຽງແກ້ວ ແຂວງ ຫຼວງພະບາງ.

ພະຈິກ 1957:
- ພິທີມອບແຂວງຜົ້ງສາລີ ແລະແຂວງຊໍາເໜືອ ຖວາຍເຈົ້າຊີວິດສຣິ ສະຫວ່າງວົງ ໂດຍແມ່ນເຈົ້າສຣິສະຫວ່າງວັດທະນາ ເປັນຕົວແທນຮັບ ມອບຢູ່ວຽງຈັນ.
ໃນພິທີອັນສໍາຄັນນີ້ ເຈົ້າເພັດຊະຣາດບໍ່ໄດ້ຮັບເຊີນເຂົ້າ ຮ່ວມທັງໆທີ່ວ່າ ພະອົງເປັນຜູ່ມີສ່ວນຊຸກຍູ້ໃຫ້ເກີດເຫດການນີ້.

19 ພະຈິກ 1957:
- ຈັດຕັ້ງລັດຖະບານປະສົມຊຸດທໍາອິດໂດຍມີ ເຈົ້າສຸວັນນະພູມມາ ເປັນນາຍົກ, ເຈົ້າສຸພານຸວົງ ເປັນລັດຖະມຸນຕີກະຊວງແຜນຜັງ ແລະ

ທ່ານພູມີ ວົງວິຈິດ ເປັນລັດຖະມຸນຕີກະຊວງ ທຳມະການ ແລະ ສິລະປະກຳ.

4 ພຶດສະພາ 1958:

- ເລືອກຕັ້ງເອົາສະມາຊິກສະພາຜູ່ແທນລາສະດອນຕື່ມ 21 ຄົນ (ມີຢູ່ແຕ່ ເກົ່າແລ້ວ 39 ຄົນ) ຜົນການເລືອກຕັ້ງ ຝ່າຍປະເທດລາວໄດ້ 9 ຕັ່ງ ພວກສະໜັບສະໜູນສັນຕິພາບໄດ້ 4 ໂຮມເປັນ 12 ຊຶ່ງເປັນຈຳນວນກາຍເຄິ່ງຈຳນວນເລືອກໃໝ່(21).

22 ກໍລະກົດ 1958:

- ລັດຖະບານປະສົມ ສຸວັນນະພູມມາ ຖືກໂຄ່ນລົ້ມ.

ຕົ້ນປີ 1959:

- ຫຼັງຈາກຕັ້ງລັດຖະບານປະສົມໄດ້ 5 ເດືອນ ແລະເລືອກສະມາຊິກສະພາຜູ່ແທນໄດ້ແລ້ວ, ຄະນະລັດຖະບານປະສົມ ກໍລາອອກເພື່ອໃຫ້ສະພາຮັບຮອງເອົາລັດຖະບານຊຸດໃໝ່. ເຈົ້າຊີວິດສຣິສະຫວ່າງວົງ ບ່ຽງໃຫ້ເຈົ້າສຸວັນນະພູມມາ ຈັດຕັ້ງລັດຖະບານປະສົມ ແຕ່ດ້ວຍການກົດດັນ ຂອງອຳນາດຝ່າຍຂວາເຮັດໃຫ້ເຈົ້າສຸວັນນະພູມມາ ບໍ່ໄດ້ຮັບສຽງສະໜັບສະໜູນພຽງພໍຈາກສະພາ ເຈົ້າຊີວິດຈຶ່ງໃຫ້ ທ.ໝຸຍ ຊະນະນິກອນ ປະກອບຄະນະລັດຖະບານ ຊຶ່ງໄດ້ຮັບສຽງສະໜັບສະໜູນຈາກສະພາ. ໃນລັດຖະບານຊຸດນີ້ ເຈົ້າສຸພານຸວົງ ຫຼື ຕົວແທນຂອງຝ່າຍ

ແມວລາວຮັກຊາດ ບໍ່ໄດ້ເຂົ້າຮ່ວມນຳຈັກຄົນ. ເຈົ້າສຸວັນນະພູມມາ ກໍຖືກສົ່ງໃຫ້ໄປເປັນທູດຢູ່ຝຣັ່ງ.

28 ກໍລະກົດ 1959:

- ລັດຖະບານ ຜຸຍ ຊະນະນິກອນ ອອກຄຳສັ່ງໃຫ້ຄວບຄຸມຕົວ ແລະ ຈັບຜູ່ຕາງໜ້າຄະນະປະເທດລາວ 16 ຄົນໃສ່ ຄຸກຢູ່ຄ້າຍໂພນເຄັງ ໃນນັ້ນຮວມທັງ ເຈົ້າສຸພານຸວົງນຳ.

ເຫດການບ້ານເມືອງລະຫວ່າງນີ້ມີສ່ວນກະທົບກະເທືອນຄວາມ ຮູ້ສຶກຂອງ ເຈົ້າເພັດຊະຣາດບໍ່ໜ້ອຍ, ໂດຍສະເພາະເມື່ອເຈົ້າໜ້າທີ່ຂອງ ລັດຖະບານ ຜຸຍ ຊະນະນິກອນ ໄດ້ໄປບຸກຮຸກຍຶກຍ້າຍເຂົ້າຂອງສົມບັດ ສ່ວນພຣະອົງອອກຈາກ ໂຮງວຮຽງຈັນ ຂຶ້ນໃສ່ເຮືອໄປຫຼວງພະບາງ ໂດຍ ບໍ່ບອກໃຫ້ພຣະອົງ ຮູ້ລ່ວງໜ້າ ຜູ່ເຫັນເຫດການຄົນໜຶ່ງເລົ່າວ່າ ເມື່ອ ເຈົ້າເພັດຊະຣາດ ຮູ້ຂ່າວວ່າ ເຮືອຂົນເຄື່ອງຂອງພະອົງ ໄປຮອດທ່າຈຶ່ງ ຟ້າວອອກມາເບິ່ງ ແລະເຫັນຮູບປັ້ນຂອງພຣະອົງຖືກວາງຢອງຕາກ ແດດຢູ່ເທິງຫຼັງຄາເຮືອ ກໍແຄ້ນເຄືອງຈົນນ້ຳຕາໄຫຼ ດ້ວຍຮູ້ສຶກຖືກໝິ່ນ ພະກຽດເປັນທີ່ສຸດ. ຂ່າວຄາວຄວາມວຸ່ນວາຍຂອງບ້ານເມືອງ ຄື ເຈົ້າສຸ ພານຸວົງ (ພະອະນຸຊາອົງນ້ອຍ) ຖືກຈັບກຸມຄຸມຂັງ ອົງທີສອງຖືກສົ່ງໄປ ເປັນທູດຢູ່ຕ່າງປະເທດ ເພື່ອໃຫ້ໝົດອຳນາດການເມືອງ ທັງໝົດເຫຼົ່ານີ້ ເຮັດໃຫ້ເຈົ້າເພັດຊະຣາດຜູ່ຊຶ່ງໄດ້ຕໍ່ສູ້ນຳພາ ຕັ້ງຄວາມຫວັງວ່າ ພະອົງ ຈະໄດ້ເຫັນລາວເປັນເອກະລາດ ມີຄວາມສາມັກຄີປອງດອງໃນຂັ້ນສຸດ ທ້າຍນັ້ນ ມາພັງທະລາຍກັບຕາ, ເຈົ້າເພັດຊະຣາດ ຊຶ່ງເຈັບປ່ວຍມາ

ແຕ່ເດີມ ດ້ວຍໂລກຫລາຍຂະນິດ ກໍມີອາການຂຸດໂຊມຢ່າງໄວວາ ດ້ວຍອາການຄວາມດັນເລືອດສູງ ແລ້ວເປັນອຳມະພາດ ພຣະອົງຈຶ່ງສະເດັດທິວົງຄົດ ໃນຄ່ຳຄືນຂອງວັນພຸດ ທີ 14 ຕຸລາ 1959 ກົງກັບວັນຂຶ້ນ 12 ຄ່ຳ ເດືອນ 11 ພ.ສ. 2502 ຄ.ສ. 1959 ຮວມ ອາຍຸໄດ້70 ປີ ທີ່ໂຮງຊຽງແກ້ວ ໃນເດືອນດຽວ ແລະປີດຽວກັນນີ້ ເຈົ້າຊີວິດສຣິສະຫວ່າງວົງ ກໍໄດ້ສະເດັດສະຫວັນນະຄົດດັ່ງດຽວກັນ.

ລັດຖະບານ ຜຸຍ ຊະນະນິກອນ ເປັນເຈົ້າພາບຈັດງານສົ່ງສະການໃຫ້ແກ່ສອງພະອົງທ່ານຢ່າງສົມກຽດ, ຜູ່ໄປຮ່ວມພິທີສົ່ງສະການເຈົ້າເພັດຊະຣາດເລົ່າວ່າ ຜູ່ຄົນປະຊາຊົນໄປເຝົ້າລໍຄອຍເກັບດູກເອົາຝຸ່ນອັດຖິຂອງພະອົງນັ້ນ ມີມາກມາຍຈົນມືດໄປໝົດ ຄວາມອາໄລຮັກແລະຄວາມນັບຖືເຊື່ອໝັ້ນວ່າເພິ່ນມີເວດມົນ ຄາຖາປາບປາມວິນຍານຮ້າຍ ຫຼື ຊ່ອຍປົກປ້ອງຄຸ້ມຄອງປ້ອງກັນໄພໄດ້ນັ້ນຍັງຄົງຍືນຍົງຄົງຢູ່ເທົ້າທຸກວັນນີ້ ຜູ່ເຖົ້າຜູ່ແກ່ຍຸກກ່ອນເລົ່າວ່າ ປີໃດເກີດເຫດຮ້າຍ ເປັນອະຫິວາຖອກທ້ອງລະບາດຜູ່ຄົນລົ້ມຕາຍຫຼາຍ ກໍຈະມີພິທີອັນເຊີນຮູບຖ່າຍຂອງພຣະອົງຂຶ້ນໄປຕິດຕາມຝາປະຕູ ຫຼື ຕິດກົ້ນໝໍ້ໜຶ້ງເພື່ອຂັບໄລ່ຜີຮ້າຍໄປ.

ເຈົ້າເພັດຊະຣາດຜູ່ຊຶ່ງເປັນລັດຖະບຸຣຸດ ຍຸກຕົ້ນສະຕະວັດທີ 20 ດ້ວຍການເຄື່ອນໄຫວຕໍ່ສູ້ປົກປັກຮັກສາເອກະລາດຂອງຊາດ ກອບກູ້ສິລະປະວັດທະນະທຳ ລາວມາຕະຫຼອດຊີວິດຂອງພຣະອົງ ໄດ້ລາຈາກໄປແຕ່ກາງເຄິ່ງສະຕະວັດນີ້ ແຕ່ຄຸນງາມຄວາມດີເລື່ອງລາວອັນໜ້າອັດສະຈັນຂອງເພິ່ນ ຍັງຄົງເປັນທີ່ຈົດຈຳກັນດີ. ປັດຈຸບັນຊາວໜຸ່ມລູກຫຼານ

ເຊື້ອສາຍລາວຈຳນວນໜຶ່ງ ຍັງມີຈິດໃຈຜູກພັນເຊື່ອໝັ້ນນຳວິລະກຳ ຂອງເພີ່ນ ເຂົ້າເຈົ້າຍັງຊອກສະແຫວງຫາຫຼຽນຮູບຂອງພຣະອົງ ມາ ຫ້ອຍສາຍຄໍ ແລະຢູ່ຕາມບ້ານເຮືອນປະຊາຊົນລາວໃນຊົນນະບົດ ຮູບ ຖ່າຍຂອງເພີ່ນ ກໍຍັງຫ້ອຍຝາປາກົດໃຫ້ເຫັນຢູ່ທົ່ວໄປ.

ເຖິງຈະເຊື່ອຫຼືບໍ່ເຊື່ອໃນເຫດການອັນໜ້າອັດສະຈັນຕ່າງໆທີ່ເກີດ ຂຶ້ນນັ້ນກໍຕາມ ແຕ່ພວກເຮົາເຊື່ອແນ່ວ່າວິຣະກຳຂອງເຈົ້າມະຫາອຸປະ ຣາດເພັດຊະຣາດໃນເລື່ອງອື່ນໆຈະເປັນແວ່ນແຍງແລະໃຫ້ບົດຮຽນສູງ ຄ່າແກ່ລູກຫຼານລາວສືບຕໍ່ໄປ.

ວຽງຈັນ, 15 ມີນາ 1992

ດວງເດືອນ ວິຣະວົງສ໌ ບຸນຍາວົງ



ກ່ຽວກັບ ມະຫາສີລາ ວິຣະວົງສ໌

ຊາຕະ : 01 ສິງຫາ 1904

ມໍຣະນະ: 18 ກຸມພາ 1987

ກ່ອນເສຽຊີວິດ ໃນເດືອນກຸມພາ 1987 ມະຫາສີລາ ວິຣະວົງສ໌ ເປັນທີ່ເປີກສາຜູ່ຊ່ຽວຊານຢູ່ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ກະຊວງສຶກສາທິການ ທ່ານເປັນຜູ່ຊົ່ງຄຸນວຸດທິທີ່ໃຫ້ຄຳປຶກສາຫຼາຍດ້ານ ຢູ່ໃນສະຖາບັນ ເຊັ່ນ ປະຫວັດສາດ ພາສາ-ວັນນະຄະດີ ອັກສອນສາດ ໂຫຣາສາດ. ໃນພິທີສົ່ງສະການຂອງ ທ່ານ ມີແຂກຜູ່ມີກຽດທັ່ງລາວ ແລະຕ່າງປະເທດໄປຮ່ວມສະແດງຄວາມເຄົາຣົບ ແລະໄວ້ອາໄລແດ່ ທ່ານ ເປັນຈຳນວນມາກ.

ຕະຫຼອດຊີວິດ ທ່ານມະຫາສີລາ ວິຣະວົງສ໌ ອຸທິດຕົນ ເພື່ອການຟື້ນຟູພາສາ-ວັນນະຄະດີແລະອັກສອນສາດລາວ ໄດ້ຕໍ່ສູ້ຕ້ານກັບພວກທີ່ຢາກເອົາອັກສອນລາແຕງ (Latin) ໃຊ້ແທນອັກສອນລາວ ໃນຕົ້ນຊຸມປີ 1930 ແລະເມື່ອມີມະຕິຕົກລົງໃຫ້ໃຊ້ອັກສອນລາວຂຽນພາສາລາວແລ້ວ ທ່ານກໍໄດ້ພະຍາຍາມເສີມຂະຫຍາຍອັກສອນລາວ ໃຫ້ທັນສະໄໝຂຶ້ນໂດຍເພີ່ມວັນນະຍຸດເຂົ້າ ເພື່ອໃຫ້ອ່ານໜັງສືລາວງ່າຍຂຶ້ນ ແຕ່ງຫຼັກໄວຍາກອນລາວເພື່ອໃຫ້ການຂຽນໜັງສືລາວ ເປັນລະບຽບ

ຖືກຕ້ອງຕາມຫຼັກເກນແຕ່ງວັດຈະນານຸກົມພາສາລາວ, ປະລິວັດແລະ ລິຈະນາໜັງສືວັນນະຄະດີບູຮານມາເປັນອັກສອນສະໄໝໃໝ່ ດັ່ງທີ່ເຮົາ ໄດ້ອ່ານກັນຢູ່ທຸກວັນນີ້ ເຊັ່ນເລື່ອງ: ສັງສິນໄຊ, ນາງຕັນໄຕ, ສຽວສະ ຫວາດ ເວດສັນດອນຊາດົກ ທ້າວຮຸ່ງ-ທ້າວເຈືອງ ແລະອື່ນໆ.

ໃນດ້ານພຸດທະສາສະໜາ ມະຫາສິລາ ເປັນອາຈານສອນພາ ສາບາລີຢູ່ໃນໂຮງຮຽນສົງ ຊຶ່ງຂຶ້ນກັບພຸດທະບັນດິດຕະສະພາຈັນທະບູ ຣີອັນເປັນສະຖາບັນ ແຫ່ງທຳອິດຂອງປະເທດລາວໃນຕົ້ນຊຸມປີ 1930 ທ່ານໄດ້ຂຽນຕຳລາຮຽນພາສາບາລີ ຊຳລະແກ້ໄຂໜັງສືສູດມົນ ແລະ ຕຳລາຕ່າງໆສຳຫຼັບໃຊ້ໃນໂຮງຮຽນ ດັ່ງກ່າວນີ້ ນອກນັ້ນຍັງໄດ້ຄຳນວນ ປະຕິທິນລາວອອກມາຮັບໃຊ້ເປັນເທື່ອທຳອິດ ຄຽງຄູ່ກັບປະຕິທິນສາ ກົນ.

ໃນດ້ານປະຫວັດສາດ ທ່ານໄດ້ແຕ່ງປຶ້ມພົງສາວະດານລາວ ຫົວທຳອິດຂຶ້ນພິມໂດຍກະຊວງສຶກສາທິການ. ໃນຖານະທີ່ທ່ານເອງກໍ ເປັນນັກເຄື່ອນໄຫວຢູ່ໃນຂະບວນລາວອິດສະລະ ທ່ານຈຶ່ງມີສ່ວນຮ່ວມ ໃນການປະກາດເອກະລາດລາວ ໃນວັນທີ 12 ຕຸລາ 1945 ທັງໄດ້ຮັບ ກຽດເປັນທີ່ປຶກສາຂອງລັດຖະບານາອິດສະລະ ແລະເປັນຜູ່ໜຶ່ງທີ່ຮ່ວມ ອອກແບບທຸງພະຈັນເພັງອັນກາຍມາເປັນທຸງຊາດ ໃນປັດຈຸບັນ.

ມະຫາສິລາ ເກີດທີ່ບ້ານໜອງໜິ່ນຖ່ານ ແຂວງຮ້ອຍເອັດປະເທດ ໄທ ຈາກຄອບຄົວຊາວນາທີ່ສືບເຊື້ອສາຍມາຈາກຈຳປາສັກ ແລະວຽງ ຈັນ ຕັ້ງແຮກຮຽນໜັງສືດ້ວຍການເປັນສັງກະລີວັດ ແລະບວດເປັນຈົວ

ນ້ອຍ, ພ້ອມດຽວກັນ ພໍ່ເຖົ້າ (ພໍ່ຂອງແມ່) ກໍໄດ້ສອນໜັງສືລາວໃຫ້ ໂດຍ ອີງຕາມໜັງສືໃບລານອັນມີທັງນິທານ ແລະໜັງສືພື້ນກ່ຽວກັບເຈົ້າຣາ ຊະວົງທີ່ທຳການສູ້ຣົບກັບໄທ ຈົນທ່ານມະຫາສິລາເກີດມີຄວາມຄິດຮັກ ຊາດຢ່າງແຮງກ້າ ແລະເມື່ອສອບເສັງໄດ້ມະຫາທ້າປະໂຫຍກທີ່ບາງ ກອກແລ້ວກໍເດີນທາງມາວຽງຈັນ ໃນປີ1930 ແລະເຂົ້າເຮັດວຽກເປັນ ເລຂານຸການຂອງເຈົ້າເພັດຊະຣາດ ມີໂອກາດໄດ້ປະກອບພາລະກິດຟື້ນ ຟູການສຶກສາ ພຣະພຸດສາສະໜາ ພາສາລາວ ແລະວັນນະຄະດີລາວ ແລະອື່ນໆ.

ພາຍຫຼັງການປົດປ່ອຍໃນປີ 1975 ມະຫາສິລາ ໄດ້ສະໜອງ ຕອບຄຳຮຽກຮ້ອງຂອງກະຊວງສຶກສາທິການ ໂດຍຮັບໜ້າທີ່ເປັນພະ ນັກງານຊ່ຽວຊານ ທັງທີ່ທ່ານໄດ້ອອກກິນເບ້ຽບຳນານມາແຕ່ປີ 1963 ແລ້ວ ຍ້ອນຄວາມເປັນຫ່ວງເປັນໃຍນຳພາສາ-ວັນນະຄະດີລາວ ທີ່ເປັນ ເອກະລັກທາງວັດທະນະທຳລາວ ທ່ານໄດ້ ເຮັດວຽກຄົ້ນຄວ້າ ລິດຈະນາ ໜັງສືບູຮານຈົນເຖິງວາລະສຸດທ້າຍຂອງຊີວິດ ແລະປະຜົນງານອັນ ເປັນມໍລະດົກທາງວັດທະນະທຳ ໄວ້ໃຫ້ອະນຸຊົນຮຸ່ນຫຼັງໄດ້ສຶບທອດຢ່າງ ຫຼວງຫຼາຍ.

ໃນດ້ານຄອບຄົວ ມະຫາສິລາ ແຕ່ງດອງຄັ້ງທີ 1 ກັບນາງແກ້ວ ຕາຄົນບ້ານໜອງປາໄມ ມີລູກຮ່ວມກັນ 3 ຄົນ ແລະຄັ້ງທີ 2 ກັບນາງ ມາລີຄົນບ້ານອຸບມຸງຕາແສງສີຖານເໜືອເມືອງສີໂຄຕະບອງ ກຳແພງ ນະຄອນວຽງຈັນ ແລະມີລູກນຳກັນ 14 ຄົນ, ເຮືອນປຸກຢູ່ທີ່ຄຸ້ມນາຄຳ ທົ່ງແມ່ນ ທີ່ພັກພິງບ່ອນສຸດທ້າຍ. ຊັບສົມບັດສ່ວນຕົວທີ່ຝາກໄວ້ແກ່ລູກ

ຫຼານ ກໍມີທັງຜົນງານການຄົ້ນຄວ້າການແຕ່ງ ທັງທີ່ໄດ້ພິມແລະບໍ່ທັນ
ໄດ້ພິມກວ່າ 200 ເລື່ອງ ແລະເອກະສານ ເກົ່າແກ່ທີ່ເພິ່ນມ້ຽນສະສົມ
ແລະຊົມໃຊ້ເປັນຄູ່ມືຄົ້ນຄວ້າ.